# ຄຳແນະນຳອາຊຽນກ່ຽວກັບການ
# ຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ
# ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກ
# ການຄ້າມະນຸດ



2025

ຈັດພິມໂດຍ ກອງເລຂາອາຊຽນ, ໄດ້ຮັບການສະໜັບສະໜູນໂດຍ ລັດຖະບານອົດສະຕາລີ ຜ່ານແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ

© 2025, ກອງເລຂາອາຊຽນ ແລະ ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ

ກອງເລຂາອາຊຽນ

ພະແນກປະຊາສຳພັນ (CRD)
70 ຈາລານ ສີສິງອາມັນງາຣາຈາ (Jalan Sisingamangaraja) ຈັກກາຕ້າ 12110, ອິນໂດເນເຊຍ
ເບີໂທ : (62 21) 724-3372, 726-2991
ແຟັກ : (62 21) 739-8234, 724-3504
ອີເມວ : public@asean.org

ອ້າງອີງຈາກ: ຄຳແນະນຳອາຊຽນ ກ່ຽວກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ອາຊຽນ, 2025.

ຂໍສະຫງວນສິດ. ເນື້ອໃນຂອງເອກະສານສະບັບນີ້ອາດຈະຖືກນຳໃຊ້ ແລະ ສຳເນົາໄດ້ຢ່າງອິດສະຫຼະ ເພື່ອຈຸດປະສົງດ້ານການສຶກສາ ແລະ ທີ່ບໍ່ແມ່ນຈຸດປະສົງດ້ານການຄ້າອື່ນໆ, ສາມາດດຳເນີນການຈັດພິມຊ້ຳໄດ້ ໂດຍໄດ້ຮັບການເຫັນດີຈາກຂອງກອງເລຂາອາຊຽນ.

ໝາຍເຫດ/ຂໍ້ຄວາມປະຕິເສດຄວາມຮັບຜິດຊອບ: ຄຳແນະນຳສະບັບນີ້ສ້າງຂຶ້ນມາ ໂດຍ ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດ (SOMTC) ແລະ ຄະນະກຳມະທິການລະຫວ່າງລັດຖະບານອາຊຽນ ວ່າດ້ວຍສິດທິມະນຸດ (AICHR) ໂດຍໄດ້ຮັບທຶນສະໜັບສະໜູນຈາກລັດຖະບານອົດສະຕຣາລີ ຜ່ານແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ. ທັດສະນະທີ່ໄດ້ສະແດງອອກໃນຄຳແນະນຳສະບັບນີ້ ເປັນຂອງຜູ້ຂຽນແຕ່ພຽງຜູ້ດຽວ ແລະ ບໍ່ແມ່ນທັດສະນະຂອງລັດຖະບານອົດສະຕຣາລີ.

# ຄຳແນະນຳອາຊຽນກ່ຽວກັບການຈັດຕັ້ງປະຕິບັດ
# ຫຼັກການບໍ່ລົງໂທດ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍ
# ຈາກການຄ້າມະນຸດ

# ສາລະບານ


**ຄຳແນະນຳໂດຍຫຍໍ້ ........ 7**

**ຕົວຫຍໍ້ ........ 11**

**ອະທິບາຍຄຳສັບ ........ 12**

**ຄຳນຳ ຈາກຄະນະກຳມາທິການລະຫວ່າງລັດຖະບານອາຊຽນ ວ່າດ້ວຍສິດທິມະນຸດ (AICHR) ........ 14**

**ຄຳນຳ ຈາກກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດ (SOMTC) – ຟີລິບປິນ/ຫົວໜ້າຮັບຜິດຊອບຂົງເຂດວຽກງານຕ້ານການຄ້າມະນຸດທີ່ເປັນບູລິມະສິດ ........ 16**

**ຄຳນຳ ຈາກທ່ານເອກອັກຄະລັດສະທູດອິດສະຕຣາລີ ປະຈຳອາຊຽນ ແລະ ທ່ານເອກອັກຄະລັດສະທູດອິດສະຕຣາລີ ປະຈຳວຽກງານຕ້ານການເປັນຂ້າທາດສະໄໝໃໝ່, ການລັກລອບຂົນສົ່ງຄົນເຂົ້າ-ອອກເມືອງ ແລະ ຕ້ານການຄ້າມະນຸດ ........ 18**

**ຄຳຂອບໃຈ ........ 19**

**ພາກສະເໜີ ........ 20**

**ພາກທີ 1. ຄວາມເຂົ້າໃຈຕໍ່ກັບຫຼັກການບໍ່ລົງໂທດ ........ 22**

ຫຼັກການບໍ່ລົງໂທດແມ່ນຫຍັງ? ........ 22

ເປັນຫຍັງຫຼັກການບໍ່ລົງໂທດຈຶ່ງມີຄວາມສຳຄັນ? ........ 24

ຫຼັກການບໍ່ລົງໂທດມາຈາກໃສ? ........ 27

ເມື່ອໃດທີ່ຄວນນຳໃຊ້ຫຼັກການບໍ່ລົງໂທດ? ........ 29

ໃຜມີໜ້າທີ່ຮັບຜິດຊອບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ? ........ 32

**ພາກທີ 2. ການສ້າງຄວາມເຂັ້ມແຂງດ້ານນິຕິກຳ ເພື່ອຍຶດໝັ້ນຫຼັກການບໍ່ລົງໂທດ ........ 36**

[1] ສ້າງຄວາມເຂັ້ມແຂງໃຫ້ແກ່ນິຕິກຳກ່ຽວກັບການຕ້ານການຄ້າມະນຸດ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍ ຈາກການລົງໂທດ ........ 36

[2] ສ້າງຄວາມເຂັ້ມແຂງ ຕໍ່ກັບນິຕິກຳອື່ນ (ທີ່ບໍ່ແມ່ນການຄ້າມະນຸດ) ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການ ລົງໂທດ ........ 45

**ພາກທີ 3: ການນຳໃຊ້ຫຼັກການບໍ່ລົງໂທດໃນການກັ່ນກອງເບື້ອງຕົ້ນ ແລະ ກຳນົດຕົວ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ........ 48**

[3] ສ້າງຄວາມອາດສາມາດໃຫ້ເຈົ້າໜ້າທີ່ດ່ານໜ້າ ເພື່ອກຳນົດຕົວຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈາກກຸ່ມຄົນທີ່ເຂົາເຈົ້າໄດ້ພົບເຫັນໃນຖານະຜູ້ກະທຳຜິດ ........ 49

[4] ສ້າງໃຫ້ເຈົ້າໜ້າທີ່ດ່ານໜ້າມີຄວາມສາມາດເຕັມສ່ວນຕໍ່ກັບຕົວຊີ້ວັດ ໃນການກັ່ນກອງ ແລະ ກຳນົດຕົວຜູ້ຖືກເຄາະຮ້າຍ ........ 54

[5] ສ້າງຄວາມເຂັ້ມແຂງໃຫ້ແກ່ເຈົ້າໜ້າທີ່ ທີ່ມີໜ້າທີ່ຈັບຕົວ ໃນການນຳໃຊ້ຫຼັກການບໍ່ລົງໂທດ ........ 57

[6] ຮັບປະກັນວ່າເຈົ້າໜ້າທີ່ ທີ່ມີໜ້າທີ່ຈັບຕົວ ປະຕິບັດໜ້າທີ່ຂອງຕົນໃນການຈັບຕົວບຸກຄົນ ........ 61

[7] ການຮັບຮູ້ສະຖານະຂອງຜູ້ຖືກເຄາະຮ້າຍ ທີ່ໄດ້ຮັບການກຳນົດຕົວໃນບັນດາປະເທດສະມາຊິກອາຊຽນອື່ນໆ ........ 62

**ພາກທີ 4: ການນຳໃຊ້ຫຼັກການບໍ່ລົງໂທດ ໃນເວລາຜູ້ຖືກເຄາະຮ້າຍເຂົ້າສູ່ການພິຈາລະນາຄະດີ ..... 65**

[8] ເສີມສ້າງຄວາມສາມາດໃຫ້ພະນັກງານໄອຍະການ ເພື່ອນຳໃຊ້ຫຼັກການບໍ່ລົງໂທດ ..... 65

[9] ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ທະນາຍຄວາມທີ່ໃຫ້ການປົກປ້ອງ ເພື່ອນຳໃຊ້ຫຼັກການບໍ່ລົງໂທດດ ..... 70

[10] ສ້າງຄວາມອາດສາມາດໃຫ້ແກ່ສະມາຊິກຕຸລາການ ເພື່ອນຳໃຊ້ຫຼັກການບໍ່ລົງໂທດ ..... 73

[11] ນຳໃຊ້ຮູບແບບການຟື້ນຟູ ແທນທີ່ ການລົງໂທດທາງອາຍາ ແກ່ຜູ້ຖືກເຄາະຮ້າຍ–ຜູ້ກະທຳຜິດ ..... 75

**ພາກທີ 5. ການນຳໃຊ້ຫຼັກການບໍ່ລົງໂທດ ໃນເວລາທີ່ຜູ້ຖືກເຄາະຮ້າຍຖືກຕັດສິນລົງໂທດ ..... 80**

[12] ຫຼີກລ້ຽງ ຫຼື ຫຼຸດຜ່ອນການຕັດສິນລົງໂທດ ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ..... 80

[13] ສະໜອງການປຽວຢາແກ່ຜູ້ຖືກເຄາະຮ້າຍ ຕໍ່ກັບການລົງໂທດທີ່ບໍ່ຖືກຕ້ອງ ..... 81

**ພາກທີ 6. ການຕິດຕາມ ແລະ ການລາຍງານການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ..... 86**

[14] ເຊື່ອມສານເອົາການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ເຂົ້າໃນກົນໄກການຕິດຕາມລະດັບຊາດ ..... 86

[15] ການລາຍງານການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ..... 88

**ເອກະສານຊ້ອນທ້າຍ ..... 90**

ເອກະສານຊ້ອນທ້າຍ 1: ຂໍ້ກຳນົດທາງກົດໝາຍກ່ຽວກັບການບໍ່ລົງໂທດໃນລັດສະມາຊິກອາຊຽນ ..... 90

ເອກະສານຊ້ອນທ້າຍ 2: ຂໍ້ກຳນົດດ້ານນະໂຍບາຍກ່ຽວກັບຫຼັກການບໍ່ລົງໂທດ ໃນບັນດາປະເທດສະມາຊິກອາຊຽນ ..... 92

ເອກະສານຊ້ອນທ້າຍ 3: ຂໍ້ຕົກລົງສອງຝ່າຍ ແລະ ຂໍ້ຕົກລົງໃນລະດັບພາກພື້ນທີ່ກ່ຽວຂ້ອງກັບການບໍ່ລົງໂທດ ..... 94

ເອກະສານຊ້ອນທ້າຍ 4: ຄູ່ມືການປະຕິບັດທີ່ເປັນຕົວແບບທີ່ດີຂອງສາກົນ ..... 97

ເອກະສານຊ້ອນທ້າຍ 5: ຕົວຢ່າງຂອງຄວາມຜິດ ທີ່ມີການນຳໃຊ້ຫຼັກການບໍ່ລົງໂທດ ..... 104

ສະຖານະຄວາມຜິດ (ຄວາມຜິດທາງບໍລິຫານ ແລະ ຄວາມຜິດທາງອາຍາ) ..... 104

ຄວາມຜິດທາງອາຍາອື່ນໆ ..... 104

# ຄຳແນະນຳໂດຍຫຍໍ້

| ຄຳແນະນຳ | ວິທີການທີ່ຈະບັນລຸຄຳແນະນຳໃນພາກປະຕິບັດ |
|---|---|
| **ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ** | |
| **… ໃນນິຕິກຳ** | |
| ຄຳແນະນຳ [1]<br>ສ້າງຄວາມເຂັ້ມແຂງດ້ານນິຕິກຳທີ່ກ່ຽວກັບການຕ້ານການຄ້າມະນຸດ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ | • ສຳຫຼວດ/ສຶກສາ ການປັບປຸງຄຳນິຍາມການຄ້າມະນຸດ ເພື່ອລວມເອົາການຂູດຮີດໃນກິດຈະກຳທາງອາຍາ<br>• ຮ່າງ ຫຼື ປັບປຸງບົດບັນຍັດທາງດ້ານການປ້ອງກັນໃຫ້ມີ ຄວາມຊັດເຈນຂຶ້ນ<br>• ຊີ້ແຈງການເຊື່ອມໂຍງທີ່ຈຳເປັນ ລະຫວ່າງ ການຄ້າມະ ນຸດ ແລະ ການກະທຳທີ່ຜິດກົດໝາຍຂອງຜູ້ຖືກເຄາະ ຮ້າຍ<br>• ຊີ້ແຈງພາລະ ແລະ ມາດຕະຖານທີ່ຈຳເປັນໃນການພິສູດ |
| ຄຳແນະນຳ [2]<br>ສ້າງຄວາມເຂັ້ມແຂງໃນນິຕິກຳອື່ນ (ທີ່ບໍ່ແມ່ນການຄ້າມະນຸດ) ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ | • ສຶກສາ/ສຳຫຼວດ ການປັບປຸງຂໍ້ກຳນົດທາງອາຍາ ແລະ ທາງບໍລິຫານ ເພື່ອຫຼຸດຜ່ອນຄວາມສ່ຽງທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຈະຖືກດຳເນີນຄະດີ<br>• ກຳນົດອາຍຸຕ່ຳສຸດທີ່ເໝາະສົມ ຕໍ່ກັບຄວາມຮັບຜິດ ຊອບທາງອາຍາ<br>• ສຶກສາ/ສຳຫຼວດ ການປັບປຸງ ຫຼື ອອກນິຕິກຳ ທີ່ອະນຸ ຍາດໃຫ້ມີການຖອນ, ລຶບລ້າງ ແລະ ປິດ ການບັນທຶກ ທາງອາຍາຂອງຜູ້ຖືກເຄາະຮ້າຍ |
| **…ໃນການກັ່ນກອງເບື້ອງຕົ້ນ ແລະ ກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ** | |
| ຄຳແນະນຳ [3]<br>ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດໃຫ້ແກ່ເຈົ້າໜ້າທີ່ດ່ານໜ້າ ເພື່ອກຳນົດຕົວ ບຸກຄົນທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ ທີ່ເຂົາເຈົ້າໄດ້ພົບເຫັນ ໃນຖານະຜູ້ກະທຳຜິດ | • ສ້າງຄວາມເຂັ້ມແຂງຕໍ່ກັບຄວາມເຂົ້າໃຈກ່ຽວກັບອົງປະກອບຂອງການຄ້າມະນຸດ<br>• ສ້າງຄວາມເຂັ້ມແຂງຕໍ່ກັບຄວາມເຂົ້າໃຈ ໃນມິຕິຕ່າງໆ ທີ່ມີຄວາມທັບຊ້ອນກັນໃນການຄ້າມະນຸດ<br>• ສ້າງຄວາມສາມາດໃຫ້ແກ່ເຈົ້າໜ້າທີ່ ເພື່ອນຳໃຊ້ຂໍ້ສົມ ມຸດຕິຖານ ການຕົກເປັນຜູ້ຖືກເຄາະຮ້າຍ ແລະ ກຸ່ມຄົນ ດ້ອຍຜູ້ໂອກາດ<br>• ທ້າທາຍຕໍ່ກັບຄວາມເຂົ້າໃຈຜິດ ແລະ ອັກຄະຕິທີ່ເກີດ ຂຶ້ນໂດຍບໍ່ຮູ້ຕົວຕໍ່ກັບການຄ້າມະນຸດ ແລະ ການເປັນຜູ້ ຖືກເຄາະຮ້າຍຈາກການຄ້າມະນຸດ<br>• ສົ່ງເສີມຫຼັກການບໍ່ຈຳແນກ ໃນຂະບວນການກັ່ນກອງ ແລະ ການກຳນົດຕົວ<br>• ສົ່ງເສີມການເປັນມິດກັບເດັກ, ຄວາມລະອຽດອ່ອນ ດ້ານເພດພາວະ, ຄຳນຶງເຖິງຄວາມບອບຊ້ຳດ້ານຈິດໃຈ ແລະ ການມີທັກສະໃນການກັ່ນກອງ ແລະ ການກຳນົດ ຕົວ<br>• ທ້າທາຍຕໍ່ກັບນະໂຍບາຍຂອງລັດ ທີ່ເຮັດໃຫ້ມີ ຄວາມ ສ່ຽງຕໍ່ກັບການລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ |

| | |
|---|---|
| **ຄຳແນະນຳ [4]**<br>ສ້າງໃຫ້ເຈົ້າໜ້າທີ່ດ່ານໜ້າ ໂດຍມີຕົວຊີ້ວັດ ເພື່ອກັ່ນກອງ ແລະ ກຳນົດຕົວຜູ້ຖືກເຄາະຮ້າຍ | • ສັງລວມ, ທົບທວນ ແລະ ປັບປຸງຕົວຊີ້ວັດທີ່ມີຢູ່ໃຫ້ເຂົ້າ ກັບບໍລິບົດ/ສະພາບການ<br>• ຮັບປະກັນວ່າຕົວຊີ້ວັດຕ່າງໆ ບໍ່ໄດ້ຕັດ ຜູ້ທີ່ອາດຈະເປັນ ຜູ້ຖືກເຄາະຮ້າຍອອກ<br>• ມີການອັບເດດ ຕົວຊີ້ວັດຕ່າງໆຢ່າງເປັນປົກກະຕິ<br>• ເຜີຍແຜ່ຕົວຊີ້ວັດຕ່າງໆໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ທີ່ອາດຈະໄດ້ພົບກັບຜູ້ຖືກເຄາະຮ້າຍ<br>• ກະຕຸ້ນໃຫ້ຜູ້ປະຕິບັດຕົວຈິງ ນຳໃຊ້ວິທີການນຳໃຊ້ຕົວຊີ້ ວັດເຂົ້າໃນພາກປະຕິບັດ<br>• ສະໜັບສະໜູນການນຳໃຊ້ຕົວຊີ້ວັດທີ່ກົມກຽວກັນໃນ ທົ່ວພາກພື້ນອາຊຽນ |
| **ຄຳແນະນຳ [5]**<br>ສົ່ງເສີມໃຫ້ເຈົ້າໜ້າທີ່ ທີ່ມີໜ້າທີ່ຈັບຕົວ ນຳໃຊ້ຂໍ້ກຳນົດການບໍ່ລົງໂທດ | • ຮັບປະກັນວ່າເຈົ້າໜ້າທີ່ດ່ານໜ້າ ມີຄວາມເຂົ້າໃຈ ແລະ ຮູ້ນຳໃຊ້ດຸນພິນິດຂອງຕົນເອງ<br>• ສົ່ງເສີມພັນທະໃນການສືບສວນ-ສອບສວນການຄ້າມະ ນຸດຢ່າງຕັ້ງໜ້າ<br>• ສ້າງເຄືອຂ່າຍຜູ້ປະຕິບັດຕົວຈິງ ເພື່ອສະໜັບສະໜູນການກັ່ນກອງ ແລະ ການກຳນົດຕົວຜູ້ຖືກເຄາະຮ້າຍ<br>• ນຳເອົາສິ່ງທີ່ບໍ່ແມ່ນແຮງຈູງໃຈອອກ ແລະ ສ້າງແຮງຈູງ ໃຈໃນການນຳໃຊ້ຫຼັກການບໍ່ລົງໂທດ<br>• ຮັບປະກັນວ່າເຈົ້າໜ້າທີ່ຮູ້ວິທີການທີ່ຈະສົ່ງຕໍ່ຜູ້ຖືກເຄາະ ຮ້າຍໄປສູ່ຊ່ອງທາງການປົກປ້ອງ |
| **ຄຳແນະນຳ [6]**<br>ຮັບປະກັນວ່າເຈົ້າໜ້າທີ່ ທີ່ມີໜ້າທີ່ຈັບຕົວ ປະຕິບັດພັນທະຂອງຕົນ ຕໍ່ກັບຜູ້ທີ່ຖືກຈັບຕົວ | • ກະຕຸ້ນເຈົ້າໜ້າທີ່ດ່ານໜ້າ ຕໍ່ກັບຜົນກະທົບໃນການຈັບ ຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ<br>• ຮັບປະກັນວ່າເຈົ້າໜ້າທີ່ ທີ່ມີໜ້າທີ່ຈັບຕົວ ຄຳນຶງເຖິງ ສິດຂອງຜູ້ທີ່ຖືກຈັບຕົວ ໃນການເຂົ້າເຖິງຂໍ້ມູນຂ່າວສານ |
| **Guideline [7]**<br>ຮັບຮູ້ສະຖານະຂອງຜູ້ຖືກເຄາະຮ້າຍ ທີ່ໄດ້ຖືກກຳນົດຕົວໃນບັນດາປະເທດສະມາຊິກອື່ນໆໃນອາຊຽນ | • ສຶກສາ/ສຳຫຼວດ ການປັບປຸງຂໍ້ຕົກລົງສອງຝ່າຍ ເພື່ອສ້າງຄວາມເຂັ້ມແຂງໃນການນຳໃຊ້ຫຼັກການບໍ່ລົງໂທດ<br>• ຈັດຕັ້ງປະຕິບັດຂໍ້ຕົກລົງຕ່າງໆທີ່ມີຢູ່ ທີ່ກ່ຽວຂ້ອງກັບຫຼັກການບໍ່ລົງໂທດ |
| **… ໃນເວລາທີ່ຜູ້ຖືກເຄາະຮ້າຍ ປະເຊີນໜ້າກັບການໄຕ່ສວນໃນທີ່ປະຊຸມສານ** | |
| **ຄຳແນະນຳ [8]**<br>ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດໃຫ້ແກ່ພະນັກງານໄອຍະການໃຫ້ນຳໃຊ້ຫຼັກການບໍ່ລົງໂທດ | • ຊີ້ແຈ້ງຄວາມສຳພັນລະຫວ່າງ ສະຖານະຂອງຜູ້ຖືກເຄາະຮ້າຍ ແລະ ການບໍ່ດຳເນີນຄະດີ<br>• ຮັບປະກັນວ່າພະນັກງານໄອຍະການ ມີຄວາມເຂົ້າໃຈກ່ຽວກັບດຸນພິນິດຂອງຕົນເອງ ແລະ ຮູ້ນຳໃຊ້ດຸນພິນິດດັ່ງກ່າວ<br>• ຮຽກຮ້ອງໃຫ້ ພະນັກງານໄອຍະການ ກວດສອບອົງປະກອບຂອງການກະທຳຜິດ (mens rea) ຂອງຜູ້ຖືກເຄາະຮ້າຍທີ່ຖືກກ່າວຫາວ່າກະທຳຜິດ<br>• ສະໜັບສະໜູນພະນັກງານໄອຍະການ ໃຫ້ໃຊ້ເຫດຜົນ ໂດຍຜ່ານການຕັດສິນໃຈຂອງເຂົາເຈົ້າວ່າຈະດຳເນີນຄະ ດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ບໍ່.<br>• ຮັບປະກັນວ່າໄດ້ມີການສະໜອງຂໍ້ມູນແກ່ໃຫ້ຜູ້ຖືກ ເຄາະຮ້າຍ ກ່ຽວກັບການຕັດສິນໃຈໃນການດຳເນີນຄະ ດີເຂົາເຈົ້າ |

| | |
|---|---|
| ຄໍາແນະນໍາ [9]<br>ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດແກ່ທະນາຍຄວາມຜູ້ທີ່ໃຫ້ປົກປ້ອງ ໃນການນໍາໃຊ້ຫຼັກການບໍ່ລົງໂທດ | • ຮັບປະກັນວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ປະເຊີນໜ້າກັບການລົງໂທດ ໄດ້ຮັບການຊ່ວຍເຫຼືອທາງ ດ້ານກົດໝາຍ<br>• ຮັບປະກັນວ່າທະນາຍຄວາມຜູ້ທີ່ໃຫ້ການປົກປ້ອງ ຮູ້ນໍາ ໃຊ້ວິທີການປ້ອງກັນ ຕາມທີ່ກໍານົດໄວ້ໃນນິຕິກໍາພາຍ ໃນ ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ<br>• ສົ່ງເສີມການຕີຄວາມໝາຍທີ່ກວ້າງຂວາງ ແລະ ນໍາໃຊ້ການປ້ອງກັນໃນສະພາບການຂອງການຄ້າມະນຸດ<br>• ຮັບປະກັນວ່າທະນາຍຄວາມຜູ້ທີ່ໃຫ້ການປົກປ້ອງ ມີຄວາມເຂົ້າໃຈ ກ່ຽວກັບຄວາມບໍ່ກ່ຽວຂ້ອງຂອງການຍິນຍອມ ເຊິ່ງເປັນການປ້ອງກັນໃນການຄ້າມະນຸດ |
| ຄໍາແນະນໍາ [10]<br>ສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດ ໃຫ້ແກ່ສະມາຊິກຕຸລາການໃນການນໍາໃຊ້ຫຼັກການບໍ່ລົງໂທດ | • ກະຕຸ້ນຜູ້ພິພາກສາ ກ່ຽວກັບອົງປະກອບຂອງການຄ້າ ມະນຸດ ແລະ ການນໍາໃຊ້ຫຼັກການບໍ່ລົງໂທດ<br>• ຮັບປະກັນວ່າຜູ້ພິພາກສາ ເຂົ້າໃຈບົດບາດ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າຕໍ່ກັບຜູ້ຖືກເຄາະຮ້າຍທີ່ຖືກກັກຕົວ<br>• ກະຕຸ້ນຜູ້ພິພາກສາ ກ່ຽວກັບສິດທິໃນການພິຈາລະນາຄະ ດີທີ່ເປັນທໍາ ໄດ້ສະໜັບສະໜູນຫຼັກການບໍ່ລົງໂທດແນວໃດ |
| ຄໍາແນະນໍາ [11]<br>ນໍາໃຊ້ການຟື້ນຟູ ແທນການຕອບໂຕ້ດ້ານຍຸຕິທໍາ ແກ່ຜູ້ຖືກເຄາະຮ້າຍທີ່ເປັນຜູ້ກະທໍາຜິດ | • ສຶກສາ/ສໍາຫຼວດ ໂອກາດໃນການນໍາໃຊ້ຮູບແບບການ ຟື້ນຟູດ້ານຄວາມຍຸຕິທໍາ ຕໍ່ກັບຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ ໃນການພິຈາລະນາຄະດີ<br>• ຮັບປະກັນວ່າ ວິທີການຟື້ນຟູດ້ານຍຸຕິທໍາຕໍ່ກັບເດັກທີ່ກະ ທໍາຜິດທາງອາຍາ |
| … ເວລາທີ່ຜູ້ຖືກເຄາະຮ້າຍ ຖືກຕັດສິນວ່າກະທໍາຜິດ | |
| ຄໍາແນະນໍາ [12]<br>ຫຼີກລ້ຽງ ຫຼື ຫຼຸດຜ່ອນໂທດ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຖືກຕັດສິນວ່າກະທໍາຜິດ | • ພິຈາລະນາວ່າ ລະບຽບການທີ່ກ່ຽວຂ້ອງໃນການຫຼຸດ ຜ່ອນໂທດ ເພື່ອໃຫ້ສາມາດບັນເທົາ ຈາກການລົງໂທດ ໄດ້<br>• ຮັບປະກັນວ່າການລົງໂທດນັ້ນ ສະທ້ອນເຖິງການກະທໍາ ຜິດຂອງຜູ້ຖືກເຄາະຮ້າຍ ທີ່ເປັນຜູ້ກະທໍາຜິດ |
| ຄໍາແນະນໍາ [13]<br>ສະໜອງການປິ່ນປົວໃຫ້ແກ່ຜູ້ຖືກເຄາະຮ້າຍ ຈາກການການລົງໂທດທີ່ບໍ່ຖືກຕ້ອງ | • ສຶກສາ/ສໍາຫຼວດໂອກາດທີ່ມີຢູ່ ສໍາລັບຜູ້ຖືກເຄາະຮ້າຍ ທີ່ຊອກຫາການປິ່ນປົວທີ່ເກີດການການລົງໂທດທີ່ບໍ່ ຖືກຕ້ອງ<br>• ສຶກສາ/ສໍາຫຼວດ ໂອກາດໃນການຍົກເລີກ, ລຶບລ້າງ ຫຼື ປິດການລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ<br>• ກໍານົດ ແລະ ແກ້ໄຂອຸປະສັກຕ່າງໆ ທີ່ຜູ້ຖືກເຄາະຮ້າຍປະເຊີນໃນການລຶບລ້າງຄໍາຕັດສິນ |

| ... ໃນເວລາມີການຕິດຕາມ ແລະ ລາຍງານ | |
|---|---|
| ຄໍາແນະນໍາ [14]<br>ເຊື່ອມສານເອົາການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດເຂົ້າໃນກົນໄກການຕິດຕາມລະດັບຊາດ | • ພັດທະນາຕົວຊີ້ວັດ ເພື່ອວັດແທກ ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ<br>• ເກັບກໍາ, ປົກປ້ອງ, ສັງລວມ ແລະ ວິເຄາະຂໍ້ມູນ ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ<br>• ນໍາໃຊ້ວິທີການ ຄູ່ຮ່ວມງານຈາກຫຼາຍພາກສ່ວນ ໃນການຈັດຕັ້ງປະຕິບັດການຕິດຕາມ |
| ຄໍາແນະນໍາ [15]<br>ລາຍງານ ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ | • ລາຍງານການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດໃຫ້ແກ່ SOMTC<br>• ພັດທະນາ ແລະ ນໍາໃຊ້ວິທີການທີ່ເປັນມາດຕະຖານ ໃນການລາຍງານ ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ<br>• ເຜີຍແຜ່ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດຫຼັກ ການບໍ່ລົງໂທດ |

# ຕົວຫຍໍ້

| | |
|---|---|
| ACTIP | ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ |
| AICHR | ຄະນະກຳມາທິການລະຫວ່າງລັດຖະບານອາຊຽນ ວ່າດ້ວຍສິດທິມະນຸດ (AICHR) |
| AMMTC | ກອງປະຊຸມລັດຖະມົນຕີອາຊຽນ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດ |
| ASEAN | ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ |
| ASEAN-ACT | ແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ |
| CSO | ອົງການຈັດຕັ້ງທາງສັງຄົມ |
| EU | ສະຫະພາບເອີຣົບ |
| IO | ອົງການຈັດຕັ້ງສາກົນ |
| NGO | ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ |
| OHCHR | ສຳນັກງານຂ້າຫຼວງໃຫຍ່ດ້ານສິດທິມະນຸດຂອງອົງການສະຫະປະຊາຊາດ |
| SOMTC | ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດ |
| TIP | ການຄ້າມະນຸດ |
| UN | ອົງການສະຫະປະຊາຊາດ |
| UNTOC | ສົນທິສັນຍາຂອງອົງການສະຫະປະຊາຊາດ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດແບບມີການຈັດຕັ້ງ |

# ອະທິບາຍຄໍາສັບ

| | |
|---|---|
| ເດັກ | ສໍາລັບຈຸດປະສົງຂອງຄໍາແນະນໍາສະບັບນີ້, ເດັກ ແມ່ນບຸກຄົນທີ່ມີອາ ຍຸຕໍ່າກວ່າ ສິບແປດປີ.[1] |
| ຜູ້ປະຕິບັດງານຕົວຈິງໃນການຕ້ານການຄ້າ ມະນຸດ | ສໍາລັບຈຸດປະສົງຂອງຄໍາແນະນໍາສະບັບນີ້, ຜູ້ປະຕິບັດງານຕົວຈິງໃນ ການຕ້ານ ການຄ້າມະນຸດ ແມ່ນໜ່ວຍງານຂອງລັດ ມີໜ້າທີ່ໃນການແກ້ໄຂບັນຫາການຄ້າ ມະນຸດ. ຜູ້ປະຕິບັດຕົວຈິງໃນການຕ້ານການຄ້າ ມະນຸດຂອງລັດ ອາດຈະລວມເອົາ ໜ່ວຍງານທີ່ບໍ່ຂຶ້ນກັບລັດ ຜູ້ທີ່ມີ ສ່ວນຮ່ວມໃນການສົ່ງເສີມລັດ ໃນການຕອບໂຕ້ ຕໍ່ກັບການຄ້າມະນຸດ ໂດຍສອງຄ່ອງກັບກົດໝາຍສາກົນ ແລະ ກົດໝາຍພາກພື້ນ. |
| ຫຼັກການບໍ່ລົງໂທດ | ສໍາລັບຈຸດປະສົງຂອງຄໍາແນະນໍາສະບັບນີ້, ຫຼັກການບໍ່ລົງໂທດ ໝາຍເຖິງ ຫຼັກການທີ່ອາຊຽນຮັບຮູ້ ວ່າ ແຕ່ລະລັດພາຄີ, ອີງຕາມກົດ ໝາຍ, ລະບຽບການ, ນິຕິກໍາ ແລະ ນະໂຍບາຍພາຍໃນຂອງຕົນ ແລະ ໃນກໍລະນີທີ່ ເໝາະສົມ, ຈະຕ້ອງພິຈາລະນາ ບໍ່ໃຫ້ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ມີ ຄວາມຮັບຜິດຊອບທາງອາຍາ ຫຼື ທາງບໍລິ ຫານ ຕໍ່ກັບການກະທໍາທີ່ຜິດກົດໝາຍ ທີ່ເຂົາເຈົ້າໄດ້ກະທໍາ ຖ້າຫາກ ການກະທໍາດັ່ງກ່າວ ແມ່ນພົວພັນໂດຍກົງກັບການຄ້າ ມະນຸດ.” [2] |
| ການສັນນິຖານ / ຜູ້ທີ່ອາດຈະເປັນຜູ້ຖືກ ເຄາະຮ້າຍ | ສໍາລັບຈຸດປະສົງຂອງຄໍາແນະນໍາສະບັບນີ້, ການສັນນິຖານຜູ້ທີ່ເປັນຜູ້ ຖືກເຄາະ ຮ້າຍ ຫຼື ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະ ນຸດ ແມ່ນບຸກຄົນທີ່ ຖືກສົງໄສ ໂດຍມີຄວາມໜ້າເຊື່ອຖືຈາກເຈົ້າໜ້າ ທີ່ດ່ານໜ້າ ວ່າເປັນເປົ້າໝາຍຂອງ ການຖືກຄ້າມະນຸດ ເຊິ່ງບຸກຄົນດັ່ງ ກ່າວ ຍັງບໍ່ທັນໄດ້ຖືກກໍານົດຕົວວ່າເປັນຜູ້ຖືກ ເຄາະຮ້າຍ. |
| ການຄ້າມະນຸດ ທີ່ບັງຄັບໃຫ້ກະທໍາຜິດ ທາງອາຍາ (ຫຼື ການຂູດຮີດທາງອາຍາ / ກະທໍາຜິດກົດໝາຍ / ກິດຈະກໍາທີ່ ຜິດກົດໝາຍ) | ສໍາລັບຈຸດປະສົງຂອງຄໍາແນະນໍາສະບັບນີ້, ການຄ້າມະນຸດ ທີ່ບັງຄັບ ໃຫ້ກະທໍາຜິດ ທາງອາຍາ (ຫຼື ການຂູດຮີດທາງອາຍາ / ກະທໍາຜິດກົດ ໝາຍ / ກິດຈະກໍາທີ່ ຜິດກົດໝາຍ) ແມ່ນເປັນຄໍາສັບທີ່ສາມາດໃຊ້ ແທນກັນໄດ້ ເຊິ່ງສາມາດເຂົ້າໃຈໄດ້ ວ່າ ການຄ້າມະນຸດ ເພື່ອຈຸດປະ ສົງຂອງການຂູດຮີດຜູ້ຖືກເຄາະຮ້າຍ ໂດຍຜ່ານ ການບັງຄັບ ຫຼື ບັງ ຄັບເຂົາເຈົ້າໃຫ້ກະທໍາຜິດທາງອາຍາ ເພື່ອຜົນປະໂຫຍດທາງ ເສດຖະ ກິດ ຫຼື ຜົນປະໂຫຍດອື່ນໆ ຫຼື ການຂູດຮີດອື່ນໆ.[3] |

1 ມາດຕາ 3(d) ອານຸສັນຍາວ່າດ້ວຍການປ້ອງກັນ, ປາບປາມ ແລະ ລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ເພີ່ມເຕີມໃຫ້ແກ່ສົນທິສັນຍາສະຫະປະຊາຊາດ ວ່າດ້ວຍການຕ້ານອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ (ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ) ແລະ ມາດຕາ 2(d) ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກ (ສົນທິສັນຍາ ACTIP)

2 ມາດຕ 14(7), ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກ (ສົນທິສັນຍາ ACTIP)

3 ແຫຼ່ງຂໍ້ມູນ: ດັດແປງຈາກ ຄາຊີໂນ, ການສໍ້ໂກງທາງອິນເຕີເນັດ ແລະ ການຄ້າມະນຸດ ເພື່ອການບັງຄັບໃຫ້ກະທໍາຜິດທາງອາຍາ ໃນອາຊີຕາເວັນອອກສ່ຽງໃຕ້: ບົດລາຍງານດ້ານນະໂຍບາຍ (UNODC, ເດືອນ ກັນຍາ 2023) ໜ້າ 1

| | |
|---|---|
| ການຄ້າມະນຸດ | **ການຄ້າມະນຸດ** ໄດ້ຖືກນິຍາມໄວ້ໃນສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍການຕ້ານການຄ້າມະນຸດ ເຊິ່ງເປັນອາຍຸສັນຍາເພີ່ມເຕີມໃຫ້ ແກ່ UNTOC ແລະ ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການ ຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ດັ່ງລຸ່ມນີ້:<br><br>(a) "ການຄ້າມະນຸດ" ໝາຍເຖິງການຊອກຫາ, ການຂົນສົ່ງ, ການ ສົ່ງຕໍ່, ການໃຫ້ບ່ອນພັກເຊົາ ຫຼື ການຮັບເອົາບຸກຄົນອື່ນ ດ້ວຍວິທີການຂົ່ມຂູ່ ຫຼື ຮູບແບບການບັງຄັບ ຫຼື ຮູບແບບ ຕົວະຍົວະຫຼອກລວງ, ການລັກພາຕົວ, ສໍ້ໂກງ, ຫຼອກລວງ, ນໍາໃຊ້ອໍານາດ ຫຼື ສະຖານະທີ່ອ່ອນແອກວ່າ ຫຼື ຈອບອອຍ ຫຼື ໃຫ້ເງິນ ຫຼື ຜົນປະໂຫຍດອື່ນ ເພື່ອໃຫ້ບຸກຄົນອື່ນຍິນຍອມ ເພື່ອຄວບຄຸມບຸກຄົນອື່ນ ເພື່ອຈຸດປະສົງຂອງການຂູດຮີດ. ການຂູດຮີດຢ່າງນ້ອຍທີ່ສຸດ ລວມມີ ການຂູດຮີດໃຫ້ເປັນໂສ ເພນີ ຫຼື ຮູບແບບການຂູດຮີດທາງເພດອື່ນໆ, ບັງຄັບໃຊ້ແຮງ ງານ ຫຼື ການບໍລິການ, ການເປັນຂ້າທາດ ຫຼື ປະຕິບັດຄ້າຍຄືກັບຂ້າທາດ, ການເປັນທາດ ຫຼື ຕັດອະໄວຍະວະຂອງຮ່າງ ກາຍ.<br><br>(b) ຄວາມຍິນຍອມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອ ຈຸດປະສົງຂອງການຂູດຮີດຕາມທີ່ກໍານົດໄວ້ໃນວັກຍ່ອຍ (a) ຂອງມາດຕານີ້ ຈະບໍ່ມີຄວາມກ່ຽວຂ້ອງກັນ ໃນກໍລະນີທີ່ ວິທີ ການທີ່ຖືກນໍາໃຊ້ ຕາມທີ່ກໍານົດໄວ້ໃນວັກຍ່ອຍ (a);<br><br>(c) ການຊອກຫາ, ການຂົນສົ່ງ, ການສົ່ງຕໍ່, ການໃຫ້ບ່ອນລີ້ ຊ່ອນ ຫຼື ຮັບເອົາເດັກ ເພື່ອຈຸດປະສົງຂອງການຂູດຮີດ ຈະພິ ຈາລະນາວ່າເປັນ "ການຄ້າມະນຸດ" ເຖິງວ່າ ບໍ່ມີວິທີການໃດໆ ທີ່ກ່ຽວຂ້ອງຕາມທີ່ກໍານົດໄວ້ໃນວັກຍ່ອຍ (a) ຂອງມາດຕາ ນີ້.<br><br>(d) "ເດັກ" ໝາຍເຖິງບຸກຄົນທີ່ມີອາຍຸຕໍ່າກວ່າສິບແປດປີ. |
| ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ | ສໍາລັບຈຸດປະສົງຂອງຄໍາແນະນໍາສະບັບນີ້, ຜູ້ຖືກເຄາະຮ້າຍ ໝາຍເຖິງ ບຸກຄົນທົ່ວໄປ ທີ່ຖືກກະທໍາໃນການຄ້າມະນຸດ ຕາມທີ່ຖືກນິຍາມໄວ້ ໃນສົນທິສັນຍາອາຊຽນ ວ່າດ້ວຍການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ.[4] |
| ຜູ້ຖືກເຄາະຮ້າຍ ທີ່ເປັນຜູ້ກະທໍາຜິດ | ສໍາລັບຈຸດປະສົງຂອງຄໍາແນະນໍາສະບັບນີ້, ຜູ້ຖືກເຄາະຮ້າຍ ທີ່ເປັນຜູ້ ກະທໍາຜິດ ແມ່ນບຸກຄົນທີ່ຖືກສັນນິຖານວ່າ ເປັນຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ມີສ່ວນກ່ຽວຂ້ອງກັບການກະ ທໍາທີ່ຜິດກົດໝາຍ ທີ່ເຂົາເຈົ້າໄດ້ກະທໍາ ເຊິ່ງການກະທໍາດັ່ງກ່າວ ກ່ຽວຂ້ອງໂດຍກົງກັບການ ຄ້າມະນຸດ. |

4 ມາດຕາ 2(e), ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ

# ຄຳນຳ ຈາກຄະນະກຳມາທິການລະຫວ່າງລັດຖະບານອາຊຽນ ວ່າດ້ວຍສິດທິມະນຸດ (AICHR)

ການຄ້າມະນຸດ ຍັງສືບຕໍ່ເປັນໜຶ່ງໃນສິ່ງທີ່ທ້າທ້າຍ ແລະ ໜັກໜ່ວງທີ່ສຸດໃນຍຸກຂອງພວກເຮົາ, ທີ່ເປັນທຳລາຍກຽດສັກສີ ແລະ ອິດສະລະພາບຂອງບຸກຄົນ ແລະ ຍັງກີດກັ້ນໂຄງສ້າງຂອງສັງຄົມ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມັກຈະປະເຊີນໜ້າ ບໍ່ສະເພາະແຕ່ການຂູດຮີດເທົ່ານັ້ນ ແຕ່ຍັງປະເຊີນໜ້າກັບ ຄວາມລັງກຽດຂອງຄວາມບໍ່ຍຸຕິທຳ, ການຖືກລົງໂທດທາງ ອາຍາ ແລະ ຂາດການເຂົ້າເຖິງຄວາມຍຸຕິທຳ.

ໃນຖານະເປັນຜູ້ຕາງໜ້າຂອງປະເທດອິນໂດເນເຊຍ ປະຈຳຄະນະກຳມາທິການລະຫວ່າງລັດຖະບານອາຊຽນ ວ່າດ້ວຍສິດທິ ມະນຸດ (AICHR) ນັບແຕ່ປີ 2019-2024, ຂ້າພະເຈົ້າ ຮູ້ສຶກເປັນກຽດທີ່ໄດ້ເຫັນຄຳໝາຍໝັ້ນອັນເຕີບໃຫຍ່ ຂອງອາຊຽນ ໃນການແກ້ໄຂບັນຫາການຄ້າມະນຸດທີ່ມີຄວາມສະລັບຊັບຊ້ອນນີ້.

ຄຳແນະນຳຂອງອາຊຽນ ວ່າດ້ວຍການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສະແດງໃຫ້ເຫັນເຖິງບາດກ້າວອັນສຳຄັນໃນການຕໍ່ສູ້ຮ່ວມກັນ ເພື່ອແກ້ໄຂບັນຫາຄວາມບໍ່ຍຸຕິທຳເຫຼົ່ານີ້, ເນັ້ນຢ້ຳເຖິງຄຳ ໝາຍໝັ້ນຂອງອາຊຽນ ໃນການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ຮັບປະກັນສິດທິຂອງເຂົາເຈົ້າ. ຄຳແນະນຳນີ້ ຍັງເນັ້ນຢ້ຳ ໃຫ້ເຫັນວ່າຫຼັກການນີ້ ເປັນການປົກປ້ອງຜູ້ຖືກເຄາະຮ້າຍ ບໍ່ສະເພາະແຕ່ພັນທະທາງດ້ານກົດໝາຍເທົ່ານັ້ນ ແຕ່ຍັງໝາຍເຖິງ ພັນທະດ້ານສິນລະທຳ ແລະ ມະນຸດສະທຳອີກດ້ວຍ.

ຄຳແນະນຳນີ້ ເປັນຜົນມາຈາກການຮ່ວມມືກັນໂດຍບໍ່ມີຄວາມອິດເມື່ອຍ, ສະທ້ອນໃຫ້ເຫັນເຖິງຄວາມພະຍາຍາມຮ່ວມກັນ ຂອງຫຼາຍພາກສ່ວນໃນທົ່ວອາຊຽນ. ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຢ່າງສູງມາຍັງ ບັນດາຜູ້ຕາງໜ້າຂອງ AICHR, ກອງປະຊຸມເຈົ້າໜ້າທີ່ອາວຸໂສ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດ (SOMTC), ແລະ ໜ່ວຍງານຕ່າງໆຂອງອາຊຽນ. ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈມາຍັງບັນດາຊ່ຽວຊານ ແລະ ອົງການຈັດຕັ້ງທາງສັງຄົມ ທີ່ໄດ້ສະຫຼະເວລາ, ຄວາມຊ່ຽວ ຊານ ແລະ ຄວາມມຸ້ງໝັ້ນ ໃນການສ້າງເອກະສານທີ່ສຳຄັນນີ້.

ຄຳແນະນຳນີ້ ສະທ້ອນໃຫ້ເຫັນເຖິງຄຳໝາຍໝັ້ນຂອງບັນດາປະເທດບັນດາປະເທດສະມາຊິກອາຊຽນ ຕໍ່ກັບຫຼັກການທີ່ກຳ ນົດໄວ້ໃນສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ACTIP), ແລະ ສ້າງພື້ນຖານໃຫ້ແກ່ແຜນປະຕິບັດງານຫຼາຍພາກສ່ວນຂອງອາຊຽນວ່າດ້ວຍການຕ້ານການຄ້າມະນຸດ (ແຜນວຽກ ໂບໂຮ ວ່າດ້ວຍການຕ້ານການຄ້າມະນຸດ ສະບັບ 2.0).

ຄຳແນະນຳນີ້ ຍັງຖືວ່າເປັນພືໄນກຳທາງດ້ານກົດໝາຍ ທີ່ຖືກຮັບຮູ້ໃນລະດັບພາກພື້ນທີ່ວ່າ ຫຼັກການບໍ່ລົງໂທດບໍ່ພຽງແຕ່ ເປັນຂໍ້ຜູກມັດທາງດ້ານກົດໝາຍເທົ່ານັ້ນ ແຕ່ມັນຍັງຈຳເປັນດ້ານສິນລະທຳ. ໂດຍການປ້ອງກັນການລົງໂທດທາງອາຍາ ຕໍ່ ກັບຜູ້ຖືກເຄາະຮ້າຍ, ພວກເຮົາຢືນຢັນວ່າກຽດສັກສີ ແລະ ການເພີ່ມທະວີຄວາມພະຍາຍາມທີ່ມີປະສິດທິພາບໃນການດຳ ເນີນຄະດີຕໍ່ຜູ້ຄ້າມະນຸດ ແລະ ທຳລາຍເຄືອຂ່າຍຂອງອາຊະຍາກຳ.

ຂ້າພະເຈົ້າຍັງຂໍສະແດງຄວາມຂອບໃຈຢ່າງຈິງໃຈມາຍັງ ທີມງານຂອງແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານ ການຄ້າມະ ນຸດ ແລະ ດຣ. ມາຣີກາ ແມັກອາດຳ ເຊິ່ງຖ້າຫາກບໍ່ມີເຂົາເຈົ້າ, ຄຳແນະນຳສະບັບນີ້ ຄົງຈະບໍ່ປະກົດຜົນເປັນຈິງໄດ້. ເຂົາເຈົ້າມີບົດບາດທີ່ສຳຄັນໃນການຮັບປະກັນວ່າການພັດທະນາຄຳແນະນຳນີ້ ມີຄວາມຄົບຖ້ວນ, ຮອບດ້ານ ແລະ ຍຶດໝັ້ນໃນຫຼັກ ການປະຕິບັດທີ່ດີຂອງສາກົນ.

ຄຳແນະນຳດັ່ງກ່າວ ສະແດງໃຫ້ເຫັນເຖິງການແກ້ໄຂຮ່ວມກັນຂອງອາຊຽນ ເພື່ອຮັບປະກັນວ່າຜູ້ຖືກເຄາະຮ້າຍຈາກການຄ້າ ມະນຸດ ຈະບໍ່ຖືກລົງໂທດເດັດຂາດຈາກອາຊະຍາກຳທີ່ເຂົາເຈົ້າຖືກບັງຄັບໃຫ້ກະທຳ ເຊິ່ງເປັນຜົນໂດຍກົງມາຈາກການຖືກ ຂູດຮີດ. ຄຳແນະນຳນີ້ ສະເໜີຂັ້ນຕອນ ແລະ ການປະຕິບັດຕົວຈິງ ໃຫ້ແກ່ຜູ້ສ້າງກົດໝາຍ, ໜ່ວຍງານບັງຄັບໃຊ້ກົດໝາຍ, ໜ່ວຍງານຕຸລາການ ແລະ ພາກສ່ວນອື່ນໃນທົ່ວປະເທດ ບັນດາປະເທດສະມາຊິກອາຊຽນໃນການຈັດຕັ້ງປະຕິບັດຫຼັກການ ບໍ່ລົງໂທດ.

ນອກເໜືອຈາກກອບວຽກດ້ານກົດໝາຍ, ກໍ່ຍັງຮຽກຮ້ອງໃຫ້ມີການປ່ຽນຈາກຄວາມຄິດ ໄປສູ່ການໃຫ້ຄວາມສຳຄັນທີ່ ເອົາຜູ້ຖືກເຄາະຮ້າຍເປັນໃຈກາງ, ສົ່ງເສີມການຮ່ວມມືລະຫວ່າງໜ່ວຍງານຕ່າງໆ ແລະ ເຮັດໃຫ້ວິທີການດັ່ງກ່າວສອດຄ່ອງ ກັບຄວາມພະຍາຍາມໃນລະດັບຊາດຕໍ່ກັບສົນທິສັນຍາ ACTIP.

ຍັງມີການຮຽກຮ້ອງໃຫ້ມີການກະທຳ ເນື່ອງຈາກເປັນການທ້າທາຍຕໍ່ພວກເຮົາ ໃນການທຳລາຍອຸປະສັກຕ່າງໆໃນລະບົບ, ສ້າງສະພາບແວດລ້ອມທີ່ເຮັດໃຫ້ຜູ້ຖືກເຄາະຮ້າຍສາມາດຂໍການປົກປ້ອງ ໂດຍບໍ່ມີຄວາມຢ້ານກົວຈາກການຖືກແກ້ແຄ້ນ ແລະ ສົ່ງເສີມຄວາມສາມາດຮ່ວມກັນໃນລະດັບພາກພື້ນ ເພື່ອຕໍ່ສູ້ກັບການຄ້າມະນຸດ. ສາມາດປະສົບຜົນສຳເລັດໄດ້, ແຕ່ກໍ່ຂຶ້ນກັບພວກເຮົາທຸກຄົນ, ຂຶ້ນກັບຄວາມໝາຍໝັ້ນຂອງລັດຖະບານໃນການຮັບຮອງ ແລະ ບັງຄັບໃຊ້ໃນພາກປະຕິບັດ ຕົວຈິງ, ຊຸກຍູ້ໃຫ້ອົງການຈັດຕັ້ງທາງສັງຄົມໃນການໂຄສະນາ ເພື່ອໃຫ້ເກີດການປ່ຽນແປງ ແລະ ກໍຂຶ້ນກັບຄວາມອົດທົນ ພາກພຽນຂອງທຸກຄົນ ທີ່ອຸທິດເພື່ອກໍ່ໃຫ້ເກີດມີຄວາມຍຸຕິທຳນີ້.

ຄຳແນະນຳນີ້ ຍັງເຕືອນພວກເຮົາວ່າ ທຸກສິ່ງເປັນໄປໄດ້ຖ້າພວກເຮົາເຮັດວຽກຮ່ວມກັນ. ເຊິ່ງເປັນພະລັງຂອງການເຮັດວຽກ ຮ່ວມກັນລະຫວ່າງລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ກົນໄກລະດັບພາກພື້ນ, ສະແດງໃຫ້ເຫັນວ່າ ເມື່ອພວກເຮົາ ເສີມສ້າງຄວາມເຂັ້ມແຂງຮ່ວມກັນ, ພວກເຮົາສາມາດທຳລາຍລະບົບການຂູດຮີດ ແລະ ສ້າງເສັ້ນທາງໄປສູ່ຄວາມຍຸຕິທຳ ແລະ ເສີມສ້າງຄວາມເຂັ້ມແຂງໄດ້. ຂ້າພະເຈົ້າ ຮູ້ສຶກເປັນກຽດທີ່ໄດ້ເປັນສ່ວນໜຶ່ງໃນເສັ້ນທາງຂອງອາຊຽນ ເພື່ອກ້າວໄປ ເຖິງຈຸດໝາຍອັນສຳຄັນນີ້.

ຂໍໃຫ້ພວກເຮົານຳເອົາຄຳແນະນຳສະບັບນີ້ ມານຳໃຊ້ບໍ່ສະເພາະແຕ່ເປັນເຄື່ອງມືເທົ່ານັ້ນ ແຕ່ໃຫ້ຖືເປັນໂອກາດໃນການຢືນ ຢັນອີກຄັ້ງວ່າ ພວກເຮົາແບ່ງປັນຄຸນຄ່າດ້ານສິດທິມະນຸດ, ຄວາມຍຸຕິທຳ ແລະ ຄວາມເທົ່າທຽມ ຮ່ວມກັນ. ໂດຍການຮ່ວມ ມືກັນ ພວກເຮົາສາມາດຫັນປ່ຽນວິໄສທັດນີ້ໄປສູ່ຄວາມເປັນຈິງໄດ້, ຮັບປະກັນວ່າຜູ້ຖືກເຄາະຮ້າຍ ໄດ້ຮັບການສະໜັບສະ ໜູນ, ສ້າງຄວາມເຂັ້ມແຂງ ແລະ ໄດ້ຮັບການປົກປ້ອງ.

ການກະທຳດັ່ງກ່າວນີ້, ພວກເຮົາ ບໍ່ໄດ້ສ້າງຄວາມເຂັ້ມແຂງສະເພາະລະບົບເທົ່ານັ້ນ ແຕ່ຍັງສ້າງຄວາມເຂັ້ມແຂງໃຫ້ແກ່ໂຄງ ສ້າງຂອງປະຊາຄົມອາຊຽນ - ເປັນຮາກຖານຂອງຄວາມເຫັນອົກເຫັນໃຈ, ຄວາມຢືດຢຸ່ນ ແລະ ຄວາມເຊື່ອໝັ້ນທີ່ໝັ້ນຄົງ ຕໍ່ກັບກຽດສັກສີຂອງທຸກໆຄົນ.

**ທ່ານ ນາງ Yuyun Wahyuningrum**
ຜູ້ຕາງໜ້າຂອງປະເທດອິນໂດເນເຊຍ ປະຈຳ AICHR (2019–2024)

# ຄຳນຳ ຈາກກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດ (SOMTC) – ຟິລິບປິນ/ຫົວໜ້າຮັບຜິດຊອບຂົງເຂດວຽກງານຕ້ານການຄ້າມະນຸດທີ່ເປັນບູລິມະສິດ

ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ວ່າດ້ວຍອາຊະຍາກຳຂ້າມຊາດ (SOMTC)-ຟິລິບປິນ ຍັງຄົງໝັ້ນຄົງໃນຄຳໝັ້ນສັນ ຍາຂອງຕົນໃນການຕ້ານການຄ້າມະນຸດໂດຍມີວິທີການທີ່ຮອບດ້ານ ແລະ ຖືເອົາຜູ້ຖືກເຄາະຮ້າຍເປັນໃຈກາງ. ຂໍ້ລິເລີ່ມທີ່ສຳຄັນໃນຄວາມພະຍາຍາມນີ້ ແມ່ນຄຳແນະນຳອາຊຽນ ກ່ຽວກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊິ່ງເປັນຫຼັກຖານສະແດງເຖິງການອຸທິດເພື່ອສ່ວນລວມຂອງພວກເຮົາ ໃນການຮັບປະກັນທັງການປ້ອງກັນ ແລະ ປົກປ້ອງຜູ້ຖືກເຄາະຮ້າຍທັງໝົດ. ຂໍ້ລິເລີ່ມນີ້, ເປັນຜະລິດຕະພັນຂອງການຮ່ວມມືຢ່າງໃກ້ຊິດລະຫວ່າງ SOMTC ແລະ ຄະນະກຳມະທິການລະຫວ່າງລັດຖະບານອາຊຽນ ວ່າດ້ວຍສິດທິມະນຸດ (AICHR), ສະແດງໃຫ້ເຫັນເຖິງຄວາມສຳຄັນຂອງເຊື່ອມສານລະຫວ່າງຂະແໜງ ເພື່ອຕອບໂຕ້ຕໍ່ການຄ້າມະນຸດ.

ດັ່ງທີ່ຂ້າພະເຈົ້າສະທ້ອນໃຫ້ເຫັນເຖິງຄວາມພະຍາຍາມລວມຂອງພວກເຮົາ, ເຫັນໄດ້ວ່າ ແຜນວຽກງານຫຼາຍຂະແໜງຂອງອາຊຽນ ວ່າດ້ວຍການຄ້າມະນຸດ (2023-2028) ສະແດງໃຫ້ເຫັນເຖິງຂີດໝາຍອັນສຳຄັນໃນແນວທາງຂອງພວກເຮົາ ທີ່ເປັນການສົ່ງເສີມການຮ່ວມມືໃນຫຼາຍຂະແໜງການຢ່າງເປັນເອກະພາບໃນພາກພື້ນຂອງພວກເຮົາ ໃນການຕ້ານອາຊະຍາກຳອັນຮ້າຍແຮງນີ້.

ໃນຖານະທີ່ເປັນຫົວໜ້າຮັບຜິດຊອບໃນຂົງເຂດການຕ້ານການຄ້າມະນຸດທີ່ເປັນບູລິມະສິດ, ຟິລິບປິນໄດ້ຮັບຮູ້ເຖິງຄວາມສຳ ຄັນຂອງການສົ່ງເສີມການຮ່ວມມືລະຫວ່າງບັນດາ ຂະແໜງການຂອງອາຊຽນ. ການພັດທະນາຄຳແນະນຳນີ້ສາມາດເປັນໄປໄດ້ ໂດຍຜ່ານການປຶກສາຫາລືທີ່ສ້າງສັນ ແລະ ແບ່ງປັນຄວາມຊ່ຽວຊານລະຫວ່າງພາກສ່ວນທີ່ກ່ຽວຂ້ອງ. ການຮ່ວມມືທີ່ເຂັ້ມແຂງນີ້ ຊີ້ໃຫ້ເຫັນເຖິງເຈດຈຳນົງອັນລວມສູນຂອງພາກພື້ນພວກເຮົາ ເພື່ອເພີ່ມທະວີການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ປ້ອງກັນການຕົກເປັນຜູ້ຖືກເຄາະຮ້າຍຊ້ຳຕື່ມອີກ.

ຫຼັກການບໍ່ລົງໂທດແມ່ນເປັນສ່ວນໜຶ່ງໃນຄວາມພະຍາຍາມທີ່ກວ້າງຂວາງຂຶ້ນຂອງອາຊຽນ ໃນການຕ້ານອາດຊະຍາກຳຂ້າມຊາດ ພ້ອມທັງເປັນການປົກປ້ອງສິດທິມະນຸດ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດມັກຈະຖືກຂູດຮີດຢ່າງຮ້າຍແຮງ, ແລະ ເປັນໜ້າທີ່ຂອງພວກເຮົາທີ່ຈະຮັບປະກັນວ່າເຂົາເຈົ້າໄດ້ຮັບການປົກປ້ອງຫຼາຍກວ່າທີ່ຈະຖືກດຳເນີນຄະດີ. ຄຳແນະນຳອາຊຽນນີ້ ສະໜອງວິທີການທີ່ມີໂຄງສ້າງສຳລັບບັນດາປະເທດສະມາຊິກອາຊຽນ ຮວມເອົາຫຼັກການນີ້ເຂົ້າໃນກອບວຽກລະ ດັບຊາດ, ພ້ອມທັງສອດຄ່ອງກັບລະບົບກົດໝາຍຂອງຕົນ. ວິທີການນີ້ກໍ່ສອດຄ່ອງກັບການປະຕິບັດທີ່ດີຂອງສາກົນ ແລະ ເສີມຂະຫຍາຍວິໄສທັດຂອງອາຊຽນໃນການເປັນປະຊາຄົມທີ່ມີຄວາມຍຸຕິທຳ ແລະ ເປັນເອກະພາບກັນ.

SOMTC-ຟິລິບປິນ ຮັບຮູ້ວ່າ ການແກ້ໄຂການຄ້າມະນຸດ ຮຽກຮ້ອງໃຫ້ມີຍຸດທະສາດຫຼາຍດ້ານ ເຊິ່ງລວມມີ ການປ້ອງກັນ, ການປົກປ້ອງ, ການດຳເນີນຄະດີ, ນະໂຍບາຍ ແລະ ນິຕິກຳ, ການສ້າງຂີດຄວາມສາມາດ ແລະ ການຮ່ວມມືສາກົນ. ຄຳແນະນຳນີ້ ເຮັດຫນ້າທີ່ເປັນບ່ອນອີງໃນພາກປະຕິບັດ ສຳລັບເຈົ້າຫນ້າບັງຄັບໃຊ້ກົດໝາຍ, ເຈົ້າຫນ້າທີ່ຕຸລາການ, ແລະ ຜູ້ວາງນະໂຍບາຍ ທີ່ໃຊ້ເປັນແນວທາງແກ້ໄຂຄວາມຊັບຊ້ອນໃນການປະຕິບັດຫຼັກການບໍ່ລົງໂທດ. ຍິ່ງໄປກວ່ານັ້ນ, ການຮ່ວມມືລະຫວ່າງ SOMTC ແລະ AICHR ໃນການພັດທະນາບົດແນະນຳສະບັບນີ້ໄດ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງວິທີການທີ່ອີງໃສ່ສິດທິມະນຸດໃນການແກ້ໄຂບັນຫາການຄ້າມະນຸດ. ການພິຈາລະນາຄວາມກ່ຽວພັນຂອງຄວາມປອດໄພ ແລະ ສິດທິມະນຸດ ແມ່ນມີຄວາມສຳຄັນໃນການແກ້ໄຂຕົ້ນຕໍ ແລະ ຜົນສະທ້ອນຂອງການຄ້າມະນຸດ. ຜູ້ຖືກເຄາະຮ້າຍຕ້ອງໄດ້ຮັບການປະຕິບັດຢ່າງມີກຽດສັກສີ ແລະ ສະໜອງການສະໜັບສະໜູນທີ່ຈຳເປັນ ເພື່ອສ້າງຊີວິດຄືນໃໝ່.

ເນື່ອງຈາກເປັນເຄື່ອງມືທີ່ບໍ່ມີການຜູກມັດທາງດ້ານນິຕິກຳ, ຄຳແນະນຳນີ້ ໄດ້ຖືກອອກແບບເພື່ອເສີມສ້າງຂໍ້ລິເລີ່ມໃນລະດັບຊາດ ແລະ ພາກພື້ນທີ່ມີຢູ່ ເພື່ອສະກັດກັ້ນການຄ້າມະນຸດ. ບັນດາປະເທດສະມາຊິກອາຊຽນ ຍັງຄົງມີຄວາມຢືດຢຸ່ນໃນການປະຕິບັດຂໍ້ແນະນຳນີ້ ເພື່ອໃຫ້ສອດຄ່ອງກັບກອບນິຕິກຳພາຍໃນປະເທດ ແລະ ພັນທະສາກົນ.

ໃນສະພາບການດັ່ງກ່າວ, ການຮັບຮອງເອົາຫຼັກການບໍ່ລົງໂທດແມ່ນບາດກ້າວອັນໜຶ່ງ ເພື່ອສ້າງຄວາມເຂັ້ມແຂງໃຫ້ບັນດາປະເທດສະມາຊິກອາຊຽນ ໃນການເຊື່ອມສານເຂົ້າກັບບັນດານະໂຍບາຍ ແລະ ກອບວຽກຂອງປະເທດຕົນ. SOMTC ຮັບຮູ້ວ່າການປະຕິບັດຫຼັກການບໍ່ລົງໂທດໃຫ້ສຳເລັດຜົນນັ້ນ ຮຽກຮ້ອງໃຫ້ມີການສ້າງຄວາມສາມາດ ແລະ ການແບ່ງປັນຄວາມຮູ້ຢ່າງຕໍ່ເນື່ອງ ລະຫວ່າງບັນດາປະເທດສະມາຊິກອາຊຽນ. ການແລກປ່ຽນການປະຕິບັດທີ່ດີ ແລະ ປະສົບການນັ້ນ ຈະປະກອບສ່ວນ ແລະ ຊຸກຍູ້ການປະຕິບັດຫຼັກການນີ້ໃຫ້ເປັນເອກະພາບກັນໃນທົ່ວພາກພື້ນ.

ໃນຂະນະທີ່ພວກເຮົາກ້າວໄປຂ້າງໜ້າ, ອາຊຽນ ຍັງຄົງຕ້ອງຄົງຄ່ອງແຄ້ວວ່ອງໄວ ແລະ ຕອບສະໜອງ ຕໍ່ສິ່ງທ້າທາຍຂອງອາຊະຍາກຳຂ້າມຊາດ, ໂດຍສະເພາະແມ່ນການຄ້າມະນຸດ. ລັກສະນະການເຄື່ອນໄຫວຂອງບັນຫານີ້ ຮຽກຮ້ອງໃຫ້ມີມາດຕະ ການທີ່ສາມາດດັດປັບໄດ້ ແລະ ມີວິໄສທັດ ເພື່ອຮັບປະກັນວ່າຜູ້ຖືກເຄາະຮ້າຍໄດ້ຮັບການປົກປ້ອງທີ່ເຂົາເຈົ້າສົມຄວນໄດ້ຮັບ.

SOMTC-ຟີລິບປິນ ຂໍສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ AICHR-ອິນໂດເນເຊຍ ແລະ ຄູ່ຮ່ວມງານທັງໝົດ ທີ່ໄດ້ປະກອບສ່ວນອັນລ້ຳຄ່າໃນການພັດທະນາຄຳແນະນຳອາຊຽນນີ້. ຄວາມພະຍາຍາມຮ່ວມກັນນີ້ ເພື່ອຮັບປະກັນໃຫ້ຄຳແນະນຳດັ່ງກ່າວເປັນຊັບພະຍາກອນທີ່ເຂັ້ມແຂງ ແລະ ສາມາດນຳໃຊ້ໃນການປະຕິບັດໄດ້ ສຳລັບບັນດາປະເທດສະມາຊິກອາຊຽນ ໃນການຕ້ານການຄ້າມະນຸດ ແລະ ອາຊະຍາກຳຂ້າມຊາດອື່ນໆ, ພ້ອມທັງເນັ້ນຢ້ຳຄຳໝັ້ນສັນຍາອັນລວມສູນຂອງພວກເຮົາຕໍ່ກັບຄວາມຍຸຕິທຳ, ສິດທິມະນຸດ ແລະ ຄວາມສະຖຽນລະພາບຂອງພາກພື້ນ.

ທ່ານ NESTOR B SANARES
ຫົວໜ້າ SOMTC ອາຊຽນ ປະຈຳຟີລິບປິນ
ຫົວໜ້າຮັບຜິດຊອບຂົງເຂດວຽກງານຕ້ານການຄ້າມະນຸດທີ່ເປັນບູລິມະສິດ ປະຈຳອາຊຽນ (ASEAN Voluntary Lead Shepherd on Trafficking-in-Persons Priority Area)

# ຄຳນຳ ຈາກທ່ານເອກອັກຄະລັດສະທູດອິດສະຕຣາລີ ປະຈຳອາຊຽນ ແລະ ທ່ານເອກອັກຄະລັດສະທູດອິດສະຕຣາລີ ປະຈຳວຽກງານຕ້ານການເປັນຂ້າທາດສະໄໝໃໝ່, ການລັກລອບຂົນສົ່ງຄົນເຂົ້າ-ອອກເມືອງ ແລະ ຕ້ານການຄ້າມະນຸດ

ການຄ້າມະນຸດຍັງຄົງເປັນສິ່ງທ້າທາຍອັນເລັ່ງດ່ວນທີ່ສຸດໃນຍຸກສະໄໝຂອງພວກເຮົາ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດມັກຈະປະສົບກັບຄວາມທຸກທໍລະມານ ແລະ ປະສົບກັບການຖືກຂູດຮີດ . ລັກສະນະວິວັດທະນາການຂອງອາດຊະຍາກຳນີ້, ລວມທັງການເພີ່ມທະວີການຄ້າມະນຸດໂດຍການຖືກບັງຄັບໃຫ້ກະທຳຜິດທາງອາຍາ, ສະແດງໃຫ້ເຫັນເຖິງຄວາມຈຳເປັນໃຫ້ມີຄວາມພະຍາຍາມຢ່າງຕໍ່ເນື່ອງ ເພື່ອປົກປ້ອງສິດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ໃນໄລຍະເວລາຫຼາຍກວ່າ 20 ປີ, ອິດສະຕຣາລີ ໄດ້ຮ່ວມມືກັບອາຊຽນ ແລະ ບັນດາປະເທດສະມາຊິກອາຊຽນ ເພື່ອຕ້ານການຄ້າມະນຸດ. ການຮ່ວມມືຢ່າງຕໍ່ເນື່ອງນີ້ ແມ່ນຜ່ານການຈັດຕັ້ງປະຕິບັດແຜນງານອາຊຽນ-ອິດສະຕຣາລີ ເພື່ອຕ້ານການຄ້າມະນຸດ, ເຊິ່ງສະໜັບສະໜູນອາຊຽນ ແລະ ລັດສະມາຊິກ ໃນການປະຕິບັດສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ (ACTIP). ສົນທິສັນຍາ ACTIP ເປັນພື້ນຖານທີ່ໜັກແໜ້ນ ເພື່ອນຳໃຊ້ຫຼັກການບໍ່ລົງໂທດ, ທີ່ສອດຄ່ອງກັບກົດໝາຍພາຍໃນຂອງບັນດາປະເທດສະມາຊິກອາຊຽນ.

ການສົ່ງເສີມ “ຫຼັກການບໍ່ລົງໂທດ” ແມ່ນເປັນການຊ່ວຍປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຮັບປະກັນວ່າເຂົາເຈົ້າບໍ່ໄດ້ຮັບການລົງໂທດ ຫຼື ຖືກລົງໂທດຍ້ອນການກະທຳທີ່ຜິດກົດໝາຍ ທີ່ເປັນຜົນໂດຍກົງຈາກການຖືກຄ້າມະນຸດ.

ລັດຖະບານອິດສະຕຣາລີ ມີຄວາມພາກພູມໃຈທີ່ໄດ້ໃຫ້ການການສະໜັບສະໜູນການສ້າງຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ສະບັບດັ່ງກ່າວນີ້, ໂດຍຜ່ານການຮ່ວມມືຢ່າງສະໜິດແໜ້ນລະຫວ່າງ ບັນດາປະເທດສະມາຊິກອາຊຽນ, ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດ, ຄະນະກຳມະການລະຫວ່າງລັດຖະບານອາຊຽນ ວ່າດ້ວຍສິດທິມະນຸດ, ແລະ ບັນດາອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມຕ່າງໆ.

ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງຈິງໃຈຕໍ່ທຸກໆພາກສ່ວນ ທີ່ໄດ້ປະກອບສ່ວນເຂົ້າໃນການສ້າງຄຳແນະນຳສະບັບນີ້. ຂໍໃຫ້ພວກເຮົາສືບຕໍ່ເຮັດວຽກຮ່ວມກັນ ເພື່ອຮັບປະກັນວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄດ້ຮັບຄວາມຍຸຕິທຳ ແລະ ໄດ້ຮັບການປົກປ້ອງຕາມທີ່ເຂົາເຈົ້າສົມຄວນໄດ້ຮັບ ອີງຕາມສົນທິສັນຍາ ACTIP ແລະ ກົດໝາຍສາກົນ.



**ພະນະ ທ່ານ ທິບຟານີ ແມັກໂດນໍ (H.E. Tiffany McDonald)**
ເອກອັກຄະລັດສະທູດອິດສະຕຣາລີ ປະຈຳອາຊຽນ



**ເອກອັກຄະລັດສະທູດອິດສະຕຣາລີ**
ປະຈຳວຽກງານຕ້ານການເປັນຂ້າທາດສະໄໝໃໝ່,
ການລັກລອບຂົນສົ່ງຄົນເຂົ້າ-ອອກເມືອງ ແລະ ການຄ້າມະນຸດ

# ຄຳຂອບໃຈ

ຄຳແນະນຳອາຊຽນ ກ່ຽວກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຮັບການພັດທະນາຂຶ້ນ ໂດຍການສະໜັບສະໜູນອັນໃຫຍ່ຫຼວງຈາກລັດຖະບານອົດສະຕຣາລີ ຜ່ານແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ.

ຄຳແນະນຳຂອງອາຊຽນນີ້ ແມ່ນຜົນຜະລິດຂອງການຮ່ວມມື ແລະ ການປຶກສາຫາລືຂອງ ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ວ່າດ້ວຍອາຊະຍາກຳຂ້າມຊາດ (SOMTC) ແລະ ຄະນະກຳມາທິການລະຫວ່າງລັດຖະບານອາຊຽນ ວ່າດ້ວຍສິດທິມະນຸດ (AICHR), ໄດ້ຮັບຮູ້ຄຳໝາຍໝັ້ນຂອງອາຊຽນ ໃນການສົ່ງເສີມສິດທິມະນຸດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະ ນຸດ ແລະ ການຕອບໂຕ້ອາຊະຍາກຳຂ້າມຊາດ ທີ່ມີຜົນກະທົບຕໍ່ພາກພື້ນ. ເຊິ່ງເປັນແນວທາງແນະນຳແກ່ບັນດາປະເທດສະ ມາຊິກອາຊຽນ ໃນການຈັດຕັ້ງປະຕິບັດພັນທະພາຍໃຕ້ສົນທິສັນຍາອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ, ໂດຍສະ ເພາະແມ່ຍິງ ແລະ ເດັກນ້ອຍ ແລະ ແຜນວຽກຫຼາຍພາກສ່ວນຂອງອາຊຽນ ວ່າດ້ວຍຕ້ານການຄ້າມະນຸດ 2023-2028 ('ແຜນວຽກ ໂບໂຮ ວ່າດ້ວຍການຕ້ານການຄ້າມະນຸດ 2.0') ເພື່ອຮັບປະກັນວ່າ ຜູ້ຖືກຄ້າມະນຸດຈະບໍ່ຖືກດຳເນີນຄະດີທາງອາຍາ ຫຼື ທາງບໍລິຫານ ຕໍ່ການກະທຳຜິດທາງອາຍາຂອງເຂົາເຈົ້າ ທີ່ເປັນການກະທຳທີ່ກ່ຽວຂ້ອງໂດຍກົງກັບການຄ້າມະນຸດ.

ໃນການນຳສະເໜີຄຳແນະນຳສະບັບນີ້, SOMTC ແລະ AICHR, ໄດ້ຮັບຮອງເອົາຂະບວນທີ່ມີສ່ວນຮ່ວມ ເພື່ອພັດທະນາເອກະສານສະບັບນີ້, ເຊິ່ງຮວມມີການປຶກສາຫາລືຢ່າງກວ້າງຂວາງກັບລັດຖະບານຈາກບັນດາປະເທດສະມາຊິກອາຊຽນ, ບັນດາຂະແໜງການຕ່າງໆຂອງຄະນະກຳມະການອາຊຽນອື່ນໆ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນ. ກອງປະຊຸມປຶກສາຫາລື ໄດ້ຈັດຂຶ້ນໃນວັນທີ 10-12 ມິຖຸນາ 2024 ແລະ ວັນທີ 2-3 ກັນຍາ 2024 ເພື່ອຮວມຮອມຂໍ້ມູນ ແລະ ປະສົບການ ຈາກບັນດາຜູ້ປະຕິບັດຕົວຈິງໃນວຽກງານຕ້ານການຄ້າມະນຸດຈາກພາຍໃນ ແລະ ພາກພື້ນອາຊຽນ ອື່ນໆ. ຮ່າງຄຳແນະນຳດັ່ງກ່າວນີ້ ໄດ້ເຜີຍແຜ່ຕໍ່ບັນດາຜູ້ຕາງໜ້າ SOMTC ແລະ AICHR ປະຈຳບັນດາປະເທດສະມາຊິກອາຊຽນ ເຊິ່ງໄດ້ຮັບການຮັບຮອງໃນເດືອນກັນຍາ 2025 ໃນລະຫວ່າງກອງປະຊຸມລັດຖະມົນຕີອາຊຽນ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດ (AMMTC) ຄັ້ງທີ 25.

SOMTC ແລະ AICHR ຂໍສະແດງຄວາມຍິນດີ ແລະ ຂໍຂອບໃຈ ຕໍ່ ທ່ານ ດຣ. ມາຣິກ້າ ແມັກອາດຳ (Dr. Marika McAdam), ທີ່ປຶກສາທີ່ໃຫ້ການສະໜັບສະໜູນການພັດທະນາຄຳແນະນຳອາຊຽນສະບັບນີ້ ແລະ ທ່ານນາງ ນູຣູ ຄອຍເຣຍ (Ms. Nurul Qoiriah), ຜູ້ອຳນວຍການດ້ານວຽກງານຄວາມສະເໝີພາບບົດບາດຍິງ-ຊາຍ, ຄວາມພິການ ແລະ ການ ຮວມເອົາທຸກຄົນໃນສັງຄົມ ແລະ ສິດທິຜູ້ຖືກເຄາະຮ້າຍ ປະຈຳແຜນງານອາຊຽນ-ອົດສະຕຣາລີ ເພື່ອຕ້ານການຄ້າມະນຸດ ທີ່ໃຫ້ການສະໜັບສະໜູນທາງດ້ານວິຊາການ ແລະ ອຳນວຍຄວາມສະດວກຕະຫຼອດຂະບວນການພັດທະນາຄຳແນະນຳສະບັບນີ້.

# ພາກນໍາສະເໜີ

ບັນດາປະເທດສະມາຊິກຂອງສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ASEAN) ທັງໝົດແມ່ນເປັນພາຄີຂອງ ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ສົນທິສັນຍາ ACTIP). ມາດຕາ 14(7) ຂອງສົນທິສັນຍາສະບັບດັ່ງກ່າວໄດ້ກໍານົດຫຼັກການບໍ່ລົງໂທດ ດັ່ງນີ້:

ແຕ່ລະລັດພາຄີ, ອີງຕາມກົດໝາຍ, ລະບຽບການ, ນິຕິກໍາ ແລະ ນະໂຍບາຍພາຍໃນຂອງຕົນ ແລະ ໃນກໍລະນີທີ່ເໝາະສົມ, ຈະຕ້ອງພິຈາລະນາບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມຮັບຜິດຊອບທາງອາຍາ ຫຼື ທາງບໍລິຫານ ຕໍ່ກັບການກະທໍາທີ່ຜິດກົດໝາຍ ທີ່ເຂົາເຈົ້າໄດ້ກະທໍາ ຖ້າຫາກການກະທໍາດັ່ງກ່າວ ແມ່ນພົວພັນໂດຍກົງກັບການຄ້າມະນຸດ.

ແຜນປະຕິບັດງານຂອງຫຼາຍຂະແໜງການຂອງອາຊຽນ ວ່າດ້ວຍການຕ້ານການຄ້າມະນຸດ ປີ 2023-2028 (‘ແຜນວຽກ ໂບໂຮ ວ່າດ້ວຍການຕ້ານການຄ້າມະນຸດ ສະບັບ 2.0’), ໄດ້ຖືກຮັບຮອງໃນ AMMTC ຄັ້ງທີ 17 ໃນວັນທີ 21 ສິງຫາ 2023 ໄດ້ເຮັດໃຫ້ມາດຕາ 14(7) ຂອງສົນທິສັນຍາ ACTIP ມີຄວາມເຂັ້ມແຂງຂຶ້ນ ໂດຍສະເພາະໃນຫຼັກການທີ 3 ເຊິ່ງກໍານົດໄວ້ວ່າ “ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ຄວນຈະມີຄວາມຮັບຜິດຊອບທາງອາຍາ ຫຼື ທາງບໍລິຫານຕໍ່ກັບການກະທໍາທີ່ຜິດກົດໝາຍ ທີ່ພວກເຂົາເຈົ້າໄດ້ກະທໍາ ຖ້າຫາກການກະທໍາດັ່ງກ່າວຫາກພົວພັນໂດຍກົງກັບການຄ້າມະນຸດ.” [5]

ພາຍໃຕ້ແຜນວຽກ ໂບໂຮ ວ່າດ້ວຍຕ້ານການຄ້າມະນຸດ ສະບັບ 2.0’, ກອງປະຊຸມເຈົ້າໜ້າທີ່ອາວຸໂສຂອງອາຊຽນ ວ່າດ້ວຍອາຊະຍາກໍາຂ້າມຊາດ (SOMTC) ເຊິ່ງເປັນໜ່ວຍງານປະສານງານຂອງອາຊຽນກ່ຽວກັບບັນດາກິດຈະກໍາຕ່າງໆ/ແຜນງານ ເພື່ອໃຫ້ມີຜົນບັງຄັບໃຊ້ຫຼັກການບໍ່ລົງໂທດໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ, ນະໂຍບາຍ ແລະ ໃນພາກປະຕິ ບັດຂອງບັນດາປະເທດສະມາຊິກອາຊຽນ. ບັນດາກິດຈະກໍາທີ່ຢູ່ພາຍໃຕ້ພາກບັງຄັບນີ້ ລວມມີ ການຊຸກຍູ້ໃຫ້ບັນດາປະເທດລັດສະມາຊິກອາຊຽນ ມີການທົບທວນ ແລະ ໃນກໍລະນີທີ່ເໝາະສົມ, ຊຸກຍູ້ໃຫ້ມີການປະຕິຮູບກົດໝາຍ ຫຼື ຫຼັກການໃນການດໍາເນີນຄະດີ ຫຼື ຄໍາແນະນໍາ; ສ້າງຄວາມເຂັ້ມແຂງໃຫ້ແກ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ພະນັກງານໄອຍະການ ກ່ຽວກັບຫຼັກການບໍ່ລົງໂທດ ແລະ ດໍາເນີນການກັ່ນກອງບຸກຄົນທີ່ຢູ່ໃນສະຖານທີ່ກັກຂັງ ແລະ ການເຂົ້າ-ອອກເມືອງ ເພື່ອຊອກຫາຜູ້ຖືກເຄາະຮ້າຍໃນສະຖານທີ່ດັ່ງກ່າວ.

ຄໍາແນະນໍາທີ່ບໍ່ມີຜົນຜູກມັດທາງດ້ານນິຕິກໍານີ້ ເກີດຈາກການຮ່ວມມືກັນ ຂອງ SOMTC ແລະ ຄະນະກໍາມາທິການລະ ຫວ່າງລັດຖະບານອາຊຽນ ວ່າດ້ວຍສິດທິມະນຸດ (AICHR) ໂດຍຮັບຮູ້ເຖິງຂໍ້ມູນທີ່ວ່າ ຫຼັກການບໍ່ລົງໂທດແມ່ນມີຄວາມສໍາຄັນໃນການສົ່ງເສີມສິດທິມະນຸດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການຕອບໂຕ້ຕໍ່ກັບອາຊະຍາກໍາຂ້າມຊາດ. ຄໍາແນະນໍາຍັງໄດ້ສະເໜີ ໃຫ້ການສະໜັບສະໜູນບັນດາຂະແໜງການຕ່າງໆຂອງຄະນະກໍາມະການອາຊຽນ ແລະ ບັນ ດາປະເທດສະມາຊິກອາຊຽນ ຕໍ່ກັບການເຮັດວຽກຢ່າງຕໍ່ເນື່ອງຂອງຕົນ ເພື່ອສ້າງຄວາມເຂັ້ມແຂງ ໃນການນໍາໃຊ້ຫຼັກການບໍ່ລົງໂທດໃນພາກປະຕິບັດຕົວຈິງ, ອີງຕາມນິຕິກໍາພາຍໃນຂອງບັນດາປະເທດສະມາຊິກອາຊຽນ ແລະ ອີງຕາມພັນທະຂອງຕົນທີ່ມີຕໍ່ພາກພື້ນ ແລະ ສາກົນ.

ຄໍາແນະນໍາອາຊຽນນີ້ ແມ່ນສ້າງມາຈາກ *ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນບັນດາປະເທດສະມາຊິກອາຊຽນ* (ແຜນງານ ASEAN-ACT, 2022), ເຊິ່ງເປັນຂໍ້ແນະນໍາທີ່ເປັນຂໍ້ມູນສະໜັບສະໜູນບັນ ດາປະເທດສະມາຊິກອາຊຽນໃນການປະຕິບັດວຽກງານຂອງຕົນ. [6] ແລະ ໄດ້ມີການຈັດກອງປະຊຸມປຶກສາຫາລືຂຶ້ນສອງຄັ້ງໃນເດືອນມິຖຸນາ ແລະ ເດືອນກັນຍາ 2024 ໂດຍມີຜູ້ຕາງໜ້າຈາກ SOMTC, AICHR, ພາກສ່ວນທີ່ກ່ຽວຂ້ອງທີ່ເຮັດວຽກງານຕ້ານການຄ້າມະນຸດໃນລະດັບຊາດ, ຄະນະກໍາມະທິການອາຊຽນທີ່ກ່ຽວຂ້ອງ,ສະຖາບັນດ້ານສິດທິມະນຸດແຫ່ງຊາດ, ແລະ ອົງການຈັດຕັ້ງທາງສັງຄົມ (CSOs).

5 ຫຼັກການບໍ່ລົງໂທດ ສາມາດຊອກຫາໄດ້ທີ່ ຫຼັກການ ແລະ ຄໍາແນະນໍາຂອງ OHCHR ກ່ຽວກັບການຄ້າມະນຸດ ແລະ ສິດທິມະນຸດ (2002). ຄໍາແນະນໍານີ້ ໄດ້ຮັບການສະແດງອອກເພີ່ມເຕີມ ໃນລະດັບພາກພື້ນ ໂດຍຄະນະກໍາມາທິການອາຊຽນວ່າດ້ວຍການສົ່ງເສີມ ແລະ ປົກປ້ອງສິດທິຂອງແມ່ຍິງ ແລະ ເດັກນ້ອຍ (ACWC) ຕໍ່ກັບຄໍາແນະນໍາໃນການເຮັດວຽກກັບແມ່ຍິງທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍເອົາໃຈໃສ່ບົດບາດຍິງ-ຊາຍ; ຄໍາແນະນໍາຂອງອາຊຽນ ສໍາລັບຜູ້ປະຕິບັດງານຕົວຈິງກ່ຽວກັບການຕອບໂຕ້ຍຸຕິທໍາທາງອາຍາຕໍ່ກັບການຄ້າມະນຸດ (2007) ແລະ ແຜນປະຕິບັດງານອາຊຽນ ກ່ຽວກັບການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ.

6 ມີສະບັບພາສາອັງກິດ, ພາສາບາຮາຊາ ອິນໂດເນເຊຍ, ພາສາມຽນມາ, ພາສາຂອມ, ພາສາລາວ, ພາສາໄທ ແລະ ພາສາຫວຽດນາມ.

# ພາກທີ 1



# ຄວາມເຂົ້າໃຈຕໍ່ກັບຫຼັກການ ບໍ່ລົງໂທດ

## ພາກທີ 1. ຄວາມເຂົ້າໃຈຕໍ່ກັບຫຼັກການບໍ່ລົງໂທດ

ບັນດາປະເທດສະມາຊິກອາຊຽນມີພັນທະຕໍ່ກັບກົດໝາຍສາກົນ ແລະ ພາກພື້ນ, ໂດຍອີງຕາມກົດໝາຍ, ລະບຽບການ, ນິຕິ ກຳ ແລະ ນະໂຍບາຍ ພາຍໃນຂອງຕົນ, ໃນການສືບສວນ-ສອບສອບ ແລະ ດຳເນີນຄະດີຜູ້ຄ້າມະນຸດ, ປົກປ້ອງ ແລະ ຊ່ວຍ ເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຮ່ວມມືກັນເພື່ອຈຸດປະສົງນີ້. ບັນດາປະເທດສະມາຊິກອາຊຽນຄວນພິຈາລະ ນານຳໃຊ້ຫຼັກການບໍ່ລົງໂທດ ເພື່ອຕອບສະໜອງກັບພັນທະດັ່ງກ່າວ.[7]

ສົນທິສັນຍາ ACTIP ເປັນເຄື່ອງມືທີ່ມີຂໍ້ຜູກພັນດ້ານນິຕິກຳ. ໂດຍອີງຕາມມາດຕາ 14(7) ຂອງສົນທິສັນຍາ ACTIP, ລັດຕ່າງໆທີ່ເປັນພາຄີໃນສົນທິສັນຍາ ACTIP ມີຄຳໝາຍໝັ້ນ ໃນການພິຈາລະນາບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະ ນຸດມີຄວາມຮັບຜິດຊອບທາງອາຍາ ແລະ ທາງບໍລິຫານ ຕໍ່ກັບການກະທຳທີ່ຜິດກົດໝາຍທີ່ເຂົາເຈົ້າໄດ້ກະທຳ ຖ້າການກະ ທຳດັ່ງກ່າວ ກ່ຽວຂ້ອງໂດຍກົງກັບການຄ້າມະນຸດ.

ເຖິງວ່າຫຼັກການບໍ່ລົງໂທດ ໄດ້ຖືກນຳໃຊ້ໃນທົ່ວພາກພື້ນອາຊຽນ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກໍຍັງຖືກກັກຂັງ ແລະ ເນລະເທດໃຫ້ອອກຈາກບັນດາປະເທດຕ່າງໆໃນອາຊຽນ ໃນຖານະຜູ້ກະທຳຜິດ ແລະ ຖືກດຳເນີນຄະດີໃນຄວາມຜິດ ເລັກນ້ອຍ ແລະ ຮ້າຍແຮງ ທີ່ເຂົາເຈົ້າໄດ້ກະທຳ ເຊິ່ງເປັນຜົນສະທ້ອນມາຈາກການຄ້າມະນຸດ ຫຼື ຄວາມພະຍາຍາມໃນ ການຫຼຸດພົ້ນ.[8] ເຖິງວ່າພັນທະມີຄວາມຊັດເຈນ, ບັນດາປະເທດສະມາຊິກອາຊຽນຕ້ອງໄດ້ສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະ ຕິບັດຫຼັກການບໍ່ລົງໂທດໃນພາກປະຕິບັດຕົວຈິງ.

## *ຫຼັກການບໍ່ລົງໂທດແມ່ນຫຍັງ?*

ຫຼັກການບໍ່ລົງໂທດ ແມ່ນຖືກຮັບຮູ້ວ່າເປັນຫຼັກການທີ່ໄດ້ຮັບການຍອມຮັບ ເຊິ່ງກຳນົດໄວ້ວ່າ ລັດຕ້ອງພິຈາລະນາບໍ່ລົງໂທດ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈາກການກະທຳທີ່ຜິດກົດໝາຍທີ່ເຂົາເຈົ້າໄດ້ກະທຳ ຖ້າຫາກການກະທຳດັ່ງກ່າວກ່ຽວ ຂ້ອງໂດຍກົງກັບການຄ້າມະນຸດ. ຈຸດປະສົງຂອງຫຼັກການບໍ່ລົງໂທດ ແມ່ນເພື່ອປົກປ້ອງຈາກການຖືກຈັບຕົວ, ການກັກຂັງ, ການຖືກເນລະເທດກັບ, ການສືບສວນ-ສອບສວນ, ການດຳເນີນຄະດີ, ການຕັດສິນ ແລະ ຖືກລົງໂທດຈາກການກະທຳ ທີ່ຜິດກົດໝາຍທີ່ເຂົາເຈົ້າໄດ້ມີສ່ວນພົວພັນ ເຊິ່ງເປັນຜົນຈາກການຖືກຄ້າມະນຸດ. ເຊິ່ງຍັງເປັນການປ້ອງກັນຈາກການຖືກ ລົງໂທດຮູບແບບອື່ນໆ ລວມທັງ ແຕ່ບໍ່ຈຳກັດ ການຖືກຖອນສິດໃນການຖືສັນຊາດ.
ຫຼັກການບໍ່ລົງໂທດ ສະທ້ອນເຖິງລັກສະນະຂອງການຄ້າມະນຸດ ເຊິ່ງເປັນການລະເມີດສິດທິມະນຸດຢ່າງຮ້າຍແຮງ. ການລົງ ໂທດຜູ້ຖືກເຄາະຮ້າຍອາດຈະເປັນກໍລະນີທີ່ຂັດກັບຄຳໝາຍໝັ້ນຂອງລັດ ໃນການພິຈາລະນາການປົກປ້ອງເຂົາເຈົ້າ ແລະ ອາດນຳໄປສູ່ການລະເມີດສິດທິມະນຸດທີ່ຮ້າຍແຮງຍິ່ງຂຶ້ນ.[9]

ຫຼັກການບໍ່ລົງໂທດ ໄດ້ຮັບການຮອງຮັບໂດຍກົດໝາຍອາຍາ, ເຊິ່ງຖືວ່າບຸກຄົນຈະມີຄວາມຮັບຜິດຊອບທາງອາຍາ ໃນກໍລະ ນີທີ່ເຂົາເຈົ້າໄດ້ກະທຳຜິດທາງອາຍາໂດຍເຈດຕະນາ. ການປະເມີນຄວາມຮັບຜິດຊອບທາງອາຍາ ຈຳເປັນຕ້ອງມີເຈດຕະນາ ຂອງການກະທຳຜິດທາງອາຍາ; ຫຼັກການບໍ່ລົງໂທດ ບໍ່ໄດ້ປ້ອງກັນການດຳເນີນຄະດີຕໍ່ບຸກຄົນທີ່ມີສ່ວນພົວພັນ ກັບການກະ ທຳຜິດທີ່ຜິດກົດໝາຍໂດຍເຈດຕະນາຂອງເຂົາເຈົ້າເອງ. ຫຼັກການບໍ່ລົງໂທດຮັບຮູ້ວ່າ ກໍລະນີທີ່ບຸກຄົນໃດໜຶ່ງບໍ່ມີເຈດຕະ ນາໃນການກະທຳຜິດທາງອາຍາ - ເນື່ອງຈາກວິທີການທີ່ເຂົາເຈົ້າໄດ້ຖືກຄ້າມະນຸດນັ້ນ, ເຂົາເຈົ້າບໍ່ສາມາດທີ່ຈະຮັບຜິດຊອບ ທາງອາຍາຕໍ່ກັບກະທຳຜິດທາງອາຍານັ້ນໄດ້. ຜູ້ຄ້າມະນຸດ ນຳໃຊ້ວິທີການຕ່າງໆຕໍ່ກັບຜູ້ຖືກເຄາະຮ້າຍ ລວມມີ ການບັງຄັບ, ສໍ້ໂກງ, ຫຼອກລວງ ແລະ ມີຄວາມສ່ຽງທີ່ຈະຖືກລ່ວງລະເມີດ ເພື່ອບີບບັງຄັບໃຫ້ຜູ້ຖືກເຄາະຮ້າຍປະຕິບັດຕາມເຈດຈຳນົງ ຂອງຕົນ. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ມີຄວາມຮັບຜິດຊອບຕໍ່ກັບ ການມີສ່ວນພົວພັນໃນການກະທຳຜິດທີ່ຜິດ ກົດໝາຍໃນກໍລະນີທີ່ຜູ້ຄ້າມະນຸດ ໄດ້ນຳໃຊ້ວິທີການຕ່າງໆ ເພື່ອທຳລາຍ ຫຼື ຫຼຸດຜ່ອນຄວາມຕັ້ງໃຈທີ່ຜູ້ຖືກເຄາະຮ້າຍມີ, ໝາຍຄວາມວ່າ ຜູ້ຖືກເຄາະຮ້າຍ ບໍ່ສາມາດຮັບຜິດຊອບຕໍ່ກັບການກະທຳຂອງເຂົາເຈົ້າໄດ້. ໃນກໍລະນີທີ່ຜູ້ຖືກເຄາະຮ້າຍເປັນ ເດັກ, ຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ໄດ້ມີຂໍ້ສະເໜີແນະນຳວ່າ ເມື່ອເວລາ ທີ່ມີການສັນນິຖານ ຄວາມກ່ຽວພັນລະຫວ່າງການກະທຳທີ່ຜິດກົດໝາຍ ແລະ ສະຖານະຂອງເດັກ ຫຼື ບຸກຄົນທີ່ຖືກກຳນົດ ຕົວວ່າເປັນຜູ້ຖືກເຄາະຮ້າຍແລ້ວ, ລັດ ຄວນພິຈາລະນາຢຸດຕິການດຳເນີນຄະດີ, ລຶບລ້າງການຕັດສິນ ທີ່ໄດ້ຕັດສິນໄປແລ້ວ ນັ້ນ ແລະ/ຫຼື ປ່ອຍຕົວເດັກຈາກສະຖານທີ່ກັກຕົວ ໂດຍທັນທີ.[10]

7 ເບິ່ງທີ່ ສົນທິສັນຍາອົງການສະຫະປະຊາຊາດວ່າດ້ວຍ ການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ (UNTOC) ແລະ ອານຸສັນຍາເພີ່ມເຕີມ ວ່າດ້ວຍ ການປ້ອງກັນ, ປາບປາມ ແລະ ການລົງໂທດການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, ລວມເຖິງສົນທິສັນຍາອາຊຽນວ່າດ້ວຍ ການຕ້ານການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ

8 ເບິ່ງເອກະສານຊ້ອນທ້າຍທີ 4

9 ບົດລາຍງານການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດ ຂອງ ຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ Siobhán Mullally, UN Doc. A/HRC/47/34, ວັນທີ 17 ເມສາ 2021 [18]-[19].

10 ບົດລາຍງານການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດ ຂອງ ຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ Siobhán Mullally, UN Doc. A/HRC/47/34, ວັນທີ 17 ພຶດສະພາ 2021 [47]. ເບິ່ງຄຳແນະນຳ 8(3) ຂອງ OHCHR ຫຼັກການ ແລະ ຄຳແນະນາ ກ່ຽວກັບ ສິດທິມະນຸດ ແລະ ການຄ້າມະນຸດ (2002)

'ຜູ້ຖືກເຄາະຮ້າຍ' ແລະ 'ຜູ້ກະທຳຜິດ' ບໍ່ແມ່ນກອບແນວຄວາມຄິດທີ່ກົງກັນຂ້າມກັນ: ບຸກຄົນດັ່ງກ່າວ ອາດຈະເປັນທັງຜູ້ ຖືກເຄາະຮ້າຍ ແລະ ຜູ້ກະທຳຜິດ. ເຊິ່ງອາດຈະເປັນກໍລະນີທີ່ສົມເຫດສົມຜົນໄດ້ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຈະ ໄດ້ຮັບການປົກປ້ອງຈາກການລົງໂທດ ຕໍ່ກັບການກະທຳບາງຢ່າງທີ່ຜິດກົດໝາຍ ແຕ່ສາມາດລົງໂທດຕໍ່ກັບການກະທຳຜິດ ອື່ນໄດ້ ທີ່ບໍ່ກ່ຽວຂ້ອງກັບການຖືກຄ້າມະນຸດ. ຕົວຢ່າງ, ຜູ້ຖືກເຄາະຮ້າຍອາດຈະຖືກຄ້າມະນຸດ ໃຫ້ກະທຳຜິດທາງອາຍາ, ຕົວ ຢ່າງ ໃນກໍລະນີທີເຂົາເຈົ້າຖືກຂູດຮີດໃຫ້ຂາຍຢາເສບຕິດທີ່ຜິດກົດໝາຍ. ໃນກໍລະນີນີ້, ເຂົາເຈົ້າບໍ່ຄວນຖືກລົງໂທດຕໍ່ກັບ ຄວາມຜິດທີ່ກ່ຽວຂ້ອງກັບຢາເສບຕິດ ແຕ່ອາດຈະມີຄວາມເໝາະສົມທີ່ຈະລົງໂທດເຂົາເຈົ້າ ຕໍ່ກັບການກະທຳຜິດອື່ນທີ່ຜິດ ກົດໝາຍທີ່ເຂົາເຈົ້າໄດ້ມີສ່ວນພົວພັນ ເຊິ່ງມັນບໍ່ກ່ຽວຂ້ອງກັບກໍລະນີທີ່ເຂົາເຈົ້າຖືກຄ້າມະນຸດ.

### ຂອບເຂດ

ຫຼັກການບໍ່ລົງໂທດ ນຳໃຊ້ໄດ້ກັບການຄ້າມະນຸດໃນທຸກໆຂັ້ນຕອນ ແລະ ນຳໃຊ້ໄດ້ກັບຄວາມຍຸຕິທຳທາງອາຍາໃນທຸກໆຂັ້ນ ຕອນ. ເຊິ່ງຄວນນຳໃຊ້ຫຼັກຫານດັ່ງກ່າວໂດຍໄວທີ່ສຸດ ຖ້າຫາກເຈົ້າໜ້າທີ່ດ້ານໜ້າມີຄວາມສົງໄສທີ່ເຊື່ອຖືໄດ້ວ່າ ບຸກຄົນ ດັ່ງກ່າວອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊິ່ງບໍ່ກ່ຽວຂ້ອງກັບຄວາມຮ້າຍແຮງ ຫຼື ຄວາມຜິດທີ່ຮ້າຍແຮງ ທີ່ ເຂົາເຈົ້າໄດ້ກະທຳ ຫຼື ມີສ່ວນຮ່ວມ. ບາງປະເທດບັນດາປະເທດສະມາຊິກອາຊຽນໄດ້ມີນະໂຍບາຍທີ່ອະນຸຍາດໃຫ້ເຈົ້າໜ້າທີ່ ທີ່ມີຄວາມສົງໄສວ່າບຸກຄົນໃດໜຶ່ງເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຄວນປະຕິບັດຕໍ່ເຂົາເຈົ້າໃນຖານະທີ່ເປັນຜູ້ຖືກ ເຄາະຮ້າຍຈາກການຄ້າມະນຸດ ເພື່ອຈຸດປະສົງໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອໃນເບື້ອງຕົ້ນ. ສິ່ງດັ່ງກ່າວນີ້ ແມ່ນຮັບຮູ້ວ່າ ເປັນການສັນນິຖານວ່າເປັນຜູ້ຖືກເຄາະຮ້າຍ.[11] ໃນກໍລະນີ ທີ່ບັນດາປະເທດບັນດາປະເທດສະມາຊິກອາຊຽນນຳໃຊ້ການສັນ ນິຖານວ່າເປັນຜູ້ຖືກເຄາະຮ້າຍ ເຊິ່ງຄວນຖືກນຳໃຊ້ (ເບິ່ງໃນພາກທີ 3, ຄຳແນະນຳ 4) ເພື່ອປົກປ້ອງຜູ້ທີ່ຖືກສັນນິຖານ / ຜູ້ ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ຫຼັກການບໍ່ລົງໂທດ ນຳໃຊ້ໃນທຸກໆຂັ້ນຕອນ ຂອງຂະບວນການຄ້າມະນຸດ ແລະ ໃນທຸກໆຂັ້ນຕອນຂອງຂະບວນການຍຸຕິ ທຳທາງອາຍາ. ຜູ້ຖືກເຄາະຮ້າຍ ຄວນໄດ້ຮັບການປົກປ້ອງຈາກການຖືກລົງໂທດ ຕໍ່ກັບຄວາມຜິດທາງແພ່ງ, ບໍລິຫານ, ການ ເຂົ້າ -ອອກເມືອງ ແລະ ຄວາມຜິດທາງອາຍາ.

*ແຜນວາດ: ຂອບເຂດການນຳໃຊ້ຫຼັກການບໍ່ລົງໂທດ*




11 ຄູ່ມືດ້ານນະໂຍບາຍ ກ່ຽວກັບການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຄູ່ມືເບື້ອງຕົ້ນ ສຳລັບຜູ້ສ້າງນະໂຍບາຍ ແລະ ຜູ້ປະຕິບັດຕົວຈິງ (ຂະບວນການບາຫຼີ, ພຶດສະພາ 2015) ໜ້າທີ 3

ປະເພດ ຫຼື ຄວາມຮຸນແຮງຂອງການກະທຳທີ່ຜິດກົດໝາຍ ບໍ່ແມ່ນສິ່ງທີ່ກຳນົດວ່າຫຼັກການບໍ່ລົງໂທດ ຈະຖືກນຳໃຊ້ ຫຼື ບໍ່. ຫຼັກການບໍ່ລົງໂທດແທນທີ່ຈະຖືກນຳໃຊ້ໃນກໍລະນີທີ່ການກະທຳທີ່ຜິດກົດໝາຍນັ້ນ ກ່ຽວຂ້ອງໂດຍກົງຕໍ່ກັບບຸກຄົນທີ່ຖືກ ຄ້າມະນຸດ. ໃນອີກດ້ານໜຶ່ງ, ໃນກໍລະນີທີ່ອົງປະກອບການກະທຳຜິດທາງອາຍາ ກ່ຽວກັບຄວາມຜິດໃນສະຖານການຄ້າມະ ນຸດ ເຊິ່ງຈຳເປັນຕ້ອງໄດ້ກຳນົດໄວ້ໃນກົດໝາຍພາຍໃນຂອງປະເທດໃດໜຶ່ງ, ເຊິ່ງມີສາເຫດທີ່ເຊື່ອມໂຍງກັບຄວາມຜິດ ຂອງຜູ້ຖືກເຄາະຮ້າຍ, ປະເທດນັ້ນ ອາດຈະກຳນົດວ່າ ຄວນນຳໃຊ້ຫຼັກການບໍ່ລົງໂທດ. ຕົວຢ່າງ, ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ໄດ້ມີການພົວພັນກັບການກະທຳຜິດທາງອາຍາ ເຊິ່ງເປັນຜົນໂດຍກົງຈາກການຄ້າມະນຸດ, ຜູ້ຖືກເຄາະຮ້າຍນຳໃຊ້ວິທີການ ຕ່າງໆ (ລວມທັງ ການບັງຄັບ, ສໍ້ໂກງ, ຫຼອກລວງ, ບີບບັງຄັບ, ການສວຍໃຊ້ອຳນາດ) ເພື່ອກະຕຸ້ນໃຫ້ຜູ້ຖືກເຄາະຮ້າຍ ມີສ່ວນກ່ຽວພັນກັບການກະທຳດັ່ງກ່າວ ຖືວ່າ ຜູ້ຖືກເຄາະຮ້າຍບໍ່ມີເຈດຕະນາທີ່ພຽງພໍ ທີ່ຈະມີຄວາມຮັບຜິດຊອບທາງອາຍາ.

ສະຫຼຸບແລ້ວ, ບໍ່ມີຂໍ້ຈຳກັດຕໍ່ກັບປະເພດຂອງການກະທຳຜິດທີ່ຈະນຳໃຊ້ຫຼັກການບໍ່ລົງໂທດ. ຫຼັກການດັ່ງກ່າວ ຄວນຖືກນຳ ໃຊ້ໄດ້ ເຖິງວ່າກໍລະນີທີ່ຜູ້ຖືກເຄາະຮ້າຍໄດ້ກະທຳຜິດທາງອາຍາທີ່ຮ້າຍແຮງ ເຊິ່ງເປັນຜົນໂດຍກົງຈາກການຖືກ ຄ້າມະນຸດ ເຊັ່ນ ການປູກພືດເພື່ອຜະລິດຢາເສບຕິດ ຫຼື ການຫຼອງລວງທາງອອນລາຍ ຫຼື ກໍ່ການຮ້າຍ. ສິ່ງເຫຼົ່ານີ້ ແລະ ຕົວຢ່າງອື່ນໆ ກ່ຽວກັບການກະທຳທີ່ຜິດກົດໝາຍ ແລະ ນຳໃຊ້ຫຼັກການບໍ່ລົງໂທດແມ່ນລະບຸໃນ ເອກະສານຊ້ອນທ້າຍ 5. ການນຳໃຊ້ ຫຼັກການບໍ່ລົງໂທດ ບໍ່ໄດ້ໝາຍຄວາມວ່າເປັນການໃຫ້ສິດຜູ້ຖືກເຄາະຮ້າຍຈາກການຖືກລົງໂທດ ຈາກຄວາມຜິດໃດໜຶ່ງ ແລະ ຄວາມຜິດທັງໝົດທີ່ເຂົາເຈົ້າໄດ້ກະທຳ ແຕ່ຫຼັກການບໍ່ລົງໂທດຄວນຖືກນຳໃຊ້ ເພື່ອກຳນົດກ່ຽວກັບຄວາມຮັບຜິດ ຊອບຂອງເຂົາເຈົ້າ.

**ກ່ອງຂໍ້ມູນ: ການປ້ອງກັນ ການນຳໃຊ້ຫຼັກການບໍ່ລົງໂທດ ທີ່ບໍ່ຖືກຕ້ອງ**

ຜູ້ປະຕິບັດຕົວຈິງດ້ານຍຸຕິທຳທາງອາຍາບາງຄົນ ແລະ ຜູ້ວາງນະໂຍບາຍ ອາດຈະສະແດງຄວາມກັງວົນວ່າຫຼັກການບໍ່ລົງໂທດ ສາມາດນຳໃຊ້ໂດຍບໍ່ຖືກຕ້ອງ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການຖືກດຳເນີນຄະດີ ຕໍ່ກັບຄວາມຜິດທີ່ເຂົາເຈົ້າໄດ້ກະທຳ ເຊິ່ງບໍ່ກ່ຽວຂ້ອງກັບການຄ້າມະນຸດ ຫຼື ນຳໃຊ້ບໍ່ຖືກຕ້ອງເພື່ອປົກປ້ອງບຸກຄົນທີ່ບໍ່ແມ່ນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ກົດໝາຍທຸກສະບັບສາມາດນຳໃຊ້ໂດຍບໍ່ຖືກຕ້ອງ ໂດຍບຸກຄົນທີ່ຊື່ວຮ້າຍ ແລະ ນຳໃຊ້ໂດຍບໍ່ຖືກຕ້ອງໄດ້ ໂດຍຜູ້ປະຕິບັດ ວຽກຕົວຈິງທີ່ຂາດທັກສະ ແລະ ຄວາມອາດສາມາດໃນການນຳໃຊ້ກົດໝາຍຢ່າງເໝາະສົມ. ໃນພາກປະຕິບັດ, ການບໍ່ນຳໃຊ້ ຫຼັກການບໍ່ລົງໂທດ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍ ສະແດງໃຫ້ເຖິງຄວາມສ່ຽງສູງຫຼາຍກວ່າ ການນຳໃຊ້ຫຼັກການດັ່ງກ່າວບໍ່ ຖືກຕ້ອງ ໃນການປົກປ້ອງຜູ້ກະທຳຜິດ.

ຄວາມສ່ຽງທີ່ຫຼັກການບໍ່ລົງໂທດ ອາດຈະຖືກນຳໃຊ້ໂດຍບໍ່ຖືກຕ້ອງ ຕໍ່ກັບອາຊະຍາກຳທີ່ຮ້າຍແຮງ ເພື່ອຫຼີກລ້ຽງຄວາມຮັບ ຜິດຊອບທາງອາຍານັ້ນສາມາດຫຼຸດຜ່ອນໄດ້ ໂດຍການນຳໃຊ້ກົດໝາຍດ້ວຍຄວາມຊື່ສັດ ແລະ ມີຄວາມຊຳນິຊຳນານເທົ່າ ນັ້ນ. ລັດ ຄວນສືບຕໍ່ສ້າງຄວາມອາດສາມາດດ້ານຍຸຕິທຳທາງອາຍາ ເພື່ອນຳໃຊ້ເຂົ້າໃນການທົດສອບ ສາມອົງປະກອບ (ການກະທຳ, ວິທີການ ແລະ ຈຸດປະສົງ) ຫຼື ທົດສອບສອງອົງປະກອບ (ການກະທຳ ແລະ ຈຸດປະສົງ) ໃນກໍລະນີທີ່ ຜູ້ຖືກເຄາະຮ້າຍເປັນເດັກ ເພື່ອກຳນົດວ່າບຸກຄົນດັ່ງກ່າວ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ເພື່ອພິສູດ ຫຼື ລົບລ້າງຄວາມສຳພັນລະຫວ່າງ ການກະທຳຜິດຂອງຜູ້ຖືກເຄາະຮ້າຍ ແລະ ຕົກເປັນຜູ້ຖືກເຄາະຮ້າຍຂອງເຂົາເຈົ້າ. ວິທີການນີ້ ແມ່ນໄດ້ຮັບຮູ້ຈາກຄຳນິຍາມຂອງການຄ້າມະນຸດ ຕາມທີ່ກຳນົດໄວ້ໃນອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ ແລະ ສົນທິສັນຍາ ACTIP ໂດຍສອດຄ່ອງກັບລະບົບກົດໝາຍ ໃນຂອບເຂດອຳນາດຕຸລາການທີ່ກ່ຽວຂ້ອງ ລວມທັງ ກົດໝາຍ ພາຍໃນ ແລະ ພັນທະດ້ານສິດທິມະນຸດສາກົນ.

## *ເປັນຫຍັງຫຼັກການບໍ່ລົງໂທດຈຶ່ງມີຄວາມສຳຄັນ?*

ການນຳໃຊ້ຫຼັກການບໍ່ລົງໂທດ ເປັນສ່ວນໜຶ່ງໃນພັນທະຂອງລັດ ໃນການກຳນົດຕົວ, ປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະ ຮ້າຍຈາກການຄ້າມະນຸດ ແລະ ດຳເນີນຄະດີຜູ້ຄ້າມະນຸດ. ເຊິ່ງຍັງມີຄວາມສຳຄັນໃນການຍຶດໝັ້ນ ຕໍ່ກັບການຄຸ້ມຄອງລັດ ຄຸ້ມຄອງສັງຄົມດ້ວຍກົດໝາຍ, ຮັບປະກັນວ່າຜູ້ຖືກເຄາະຮ້າຍຈະບໍ່ຖືກລົງໂທດ ຕໍ່ກັບການກະທຳທີ່ເຂົາເຈົ້າຈະບໍ່ກະທຳ ຖ້າ ຫາກວ່າເຂົາເຈົ້າບໍ່ຕົກເປັນຜູ້ຖືກເຄາະຮ້າຍ. ຫຼັກການນີ້ ເປັນປະໂຫຍດໃນການສະໜັບສະໜູນລັດ ໃນການປົກປ້ອງ ບຸກຄົນ ທີ່ຕ້ອງການໄດ້ຮັບການປົກປ້ອງ, ເພື່ອດຳເນີນຄະດີຕໍ່ກັບບຸກຄົນທີ່ຄວນຖືກດຳເນີນຄະດີ. ການນຳໃຊ້ຫຼັກການດັ່ງກ່າວນີ້ ສົ່ງຜົນໃຫ້ເກີດຜົນໄດ້ຮັບດ້ານສິດທິມະນຸດ ລວມທັງຜົນໄດ້ຮັບດ້ານຍຸຕິທຳທາງອາຍາທີ່ດີຂຶ້ນ.

## ການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

ລັດ ມີພັນທະຕໍ່ກັບກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ກົດໝາຍວ່າດ້ວຍສິດທິມະນຸດ ເພື່ອປົກປ້ອງ ຄົນເຮົາຈາກການຖືກຄ້າມະນຸດ ແລະ ເພື່ອກຳນົດຕົວ, ປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຫຼັກການບໍ່ລົງ ໂທດ ເປັນພາກສ່ວນທີ່ສຳຄັນຕໍ່ກັບພັນທະໃນການປົກປ້ອງຂອງລັດ.

ລັດຕ້ອງປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ ໂດຍຜ່ານລະບົບບໍລິຫານ, ລະບົບຄຸ້ມຄອງແຮງງານ ແລະ ການເຂົ້າ-ອອກເມືອງ ດ້ວຍລະບົບຍຸຕິທຳທາງອາຍາ. ຫຼັກການບໍ່ລົງໂທດ ມີເປົ້າໝາຍເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການຖືກລົງ ໂທດ ລວມທັງການກັກຂັງດ້ານເສລີພາບໃນສະຖານທີ່ກັກຕົວໃນການເຂົ້າ-ອອກເມືອງ ຫຼື ສະຖານທີ່ອື່ນໆ, ປັບໃໝການຢູ່ ອາໄສເກີນກຳນົດ, ການຖືກຫ້າມເຂົ້າປະເທດຄືນ, ການເນລະເທດກັບຄືນປະເທດ ຫຼື ການຕັດຖອນສິດ. ຫຼັກການນີ້ຍັງມີ ເປົ້າໝາຍໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການຖືກປະຕິບັດທີ່ເປັນການລົງໂທດ ລວມທັງ ການຖືກໃຫ້ຢູ່ສູນພັກເຊົາ ທີ່ຂັດກັບເຈດຈຳນົງຂອງເຂົາເຈົ້າ ຫຼື ການສະໜອງການບໍລິການອື່ນໆ ທີ່ເຂົາເຈົ້າບໍ່ຕ້ອງການ.

ຫຼັກການບໍ່ລົງໂທດ ຍັງເຮັດໜ້າທີ່ປ້ອງກັນບໍ່ໃຫ້ມີການຖອນສັນຊາດ ແລະ ຖືກກີດກັ້ນຈາກການປົກປ້ອງຜູ້ລີ້ໄພສາກົນ ໂດຍຜ່ານຫຼັກການ ການບໍ່ຖືກສົ່ງກັບຄືນປະເທດ (non-refoulement). ໃນກໍລະນີທີ່ຫຼັກການບໍ່ລົງໂທດ ບໍ່ໄດ້ຖືກນຳ ໃຊ້ຢ່າງມີປະສິດທິພາບ ຈາກປະເທດຕົ້ນທາງຂອງຜູ້ຖືກເຄາະຮ້າຍ, ຄວາມສ່ຽງທີ່ເຂົາເຈົ້າຈະປະສົບກັບໄພອັນຕະລາຍ ທີ່ບໍ່ ສາມາດແກ້ໄຂໄດ້ ຫຼື ການລະເມີດສິດທິມະນຸດອັນຮ້າຍແຮງອື່ນໆ ໃນເວລາທີ່ຖືກສົ່ງກັບຄືນປະເທດ, ເຮັດໃຫ້ເຫັນພັນທະ ຂອງລັດທີ່ເປັນເຈົ້າພາບ ຕໍ່ກັບ ການບໍ່ຖືກສົ່ງກັບຄືນປະເທດ (non-refoulement). ໃນກໍລະນີທີ່ການຖືກສົ່ງກັບນັ້ນ ແມ່ນອີງໃສ່ສິດທິທີ່ຕ້ອງໄດ້ຮັບ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຄວນມີສິດໃນການເຂົ້າເຖິງການໄດ້ຮັບສະຖານະທາງ ດ້ານກົດໝາຍ ແລະ ມາດຕະການ ການມີສ່ວນຮ່ວມທາງສັງຄົມໃນໄລຍະຍາວ ເຊັ່ນດຽວກັບທາງເລືອກ ທີ່ອີງໃສ່ສິດທິ ຕໍ່ກັບການຖືກສົ່ງກັບ.[12]

ຫຼັກການບໍ່ລົງໂທດ ຍັງນຳໃຊ້ເພື່ອຮັບປະກັນວ່າ ຜູ້ຖືກເຄາະຮ້າຍຈະບໍ່ຖືກຈັບຕົວ ແລະ ບໍ່ຖືກດຳເນີນຄະດີ ໂດຍບໍ່ຖືກຕ້ອງ ໃນຖານະຜູ້ກະທຳຜິດ ແລະ ຮຽກຮ້ອງໃຫ້ມີການປຽວຢາ ຕໍ່ກັບສິດທິຂອງເຂົາເຈົ້າທີ່ຖືກລະເມີດ ລວມທັງ ການກັກຂັງ, ການຖືກສົ່ງກັບຄືນ ແລະ ຕັດສິນໂດຍບໍ່ຖືກຕ້ອງ.

ການນຳໃຊ້ຫຼັກການບໍ່ລົງໂທດ ຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຜົນປະໂຫຍດຕໍ່ກັບລະບົບຍຸຕິທຳທາງອາຍາ. ຖ້າ ເຂົາເຈົ້າບໍ່ໄດ້ຮັບການປົກປ້ອງຈາກການຖືກລົງໂທດ, ຜູ້ຖືກເຄາະຮ້າຍ ມັກຈະບໍ່ໃຫ້ການສະໜັບສະໜູນແກ່ເຈົ້າໜ້າທີ່ໃນ ການກຳນົດຕົວເຂົາເຈົ້າໄດ້ຢ່າງມີປະສິດທິພາບ. ນອກນັ້ນ, ຜູ້ຖືກເຄາະຮ້າຍທີ່ໄດ້ຮັບການປົກປ້ອງຈາກການລົງໂທດ ແມ່ນ ມີແນວໂນ້ມຫຼາຍກວ່າ ໃນການຮ່ວມມືກັບເຈົ້າໜ້າທີ່ໃນການນຳເອົາຜູ້ຄ້າມະນຸດ ແລະ ການກະທຳຜິດທາງອາຍາທີ່ຮ້າຍ ແຮງອື່ນໆ ເຂົ້າສູ່ຂະບວນການຍຸຕິທຳ. ມີຫຼາຍໆເຫດຜົນວ່າເປັນຫຍັງຜູ້ຖືກເຄາະຮ້າຍ ມັກຈະບໍ່ໃຫ້ການຮ່ວມມືກັບເຈົ້າໜ້າ ທີ່ຜູ້ປະຕິບັດຕົວຈິງໃນຂະແໜງຍຸຕິທຳທາງອາຍາ, ລວມທັງ ແຕ່ບໍ່ຈຳກັດ ສິ່ງຕ່າງໆດັ່ງລຸ່ມນີ້:

- ເຂົາເຈົ້າອາດຈະບໍ່ໄວ້ໃຈເຈົ້າໜ້າທີ່ ຍ້ອນເຂົາເຈົ້າຄິດວ່າ - ບໍ່ວ່າ ຈະຖືກ ຫຼື ຜິດ- ເຈົ້າໜ້າທີ່ແມ່ນມີສ່ວນຮ່ວມໃນ ການກະທຳຂອງຜູ້ຄ້າມະນຸດ.
- ເຂົາເຈົ້າອາດຈະລັງເລທີ່ຈະໃຫ້ການສະໜັບສະໜູນເຈົ້າໜ້າທີ່ໃນການສືບສວນ-ສອບສວນ ແລະ ດຳເນີນຄະດີຜູ້ ຄ້າມະນຸດ, ຍ້ອນວ່າ ຖ້າໃຫ້ການຮ່ວມມືນັ້ນໝາຍຄວາມວ່າ ເຂົາເຈົ້າຕ້ອງຢູ່ໃນສູນພັກເຊົາເປັນເວລາຍາວນານ ແລະ ຂາດໂອກາດໃນການເຮັດວຽກ ແລະ ສະໜັບສະໜູນຄອບຄົວ ເຂົາເຈົ້າ.
- ເຂົາເຈົ້າອາດຈະຢ້ານກົວວ່າ ການຊ່ວຍເຫຼືອເຈົ້າໜ້າທີ່ ຈະສົ່ງຜົນໃຫ້ມີການແກ້ແຄ້ນຈາກຜູ້ຄ້າມະນຸດ.
- ເຂົາເຈົ້າອາດຈະຢ້ານກົວວ່າ ການຮ່ວມມືກັບເຈົ້າໜ້າທີ່ ຈະສົ່ງຜົນຕໍ່ກັບການລົງໂທດເຂົາເຈົ້າເອງ, ໃນກໍລະນີທີ່ ເຂົາເຈົ້າໃຫ້ຂໍ້ມູນທີ່ເປັນປະໂຫຍດ ອາດຈະສົ່ງຜົນໃຫ້ ເຂົາເຈົ້າມີສ່ວນພົວພັນກັບການກະທຳທີ່ຜິດກົດໝາຍນັ້ນ.

ເພື່ອເອົາຊະນະສິ່ງເຫຼົ່ານີ້ ແລະ ອຸປະສັກອື່ນໆ ຈຳເປັນຕ້ອງໄດ້ນຳໃຊ້ການປົກປ້ອງແກ່ຜູ້ທີ່ລາຍງານຂໍ້ມູນ ລວມທັງ ການປົກ ປ້ອງພະຍານ ໂດຍສອດຄ່ອງກັບພັນທະໃນກົດໝາຍສາກົນ, ກົດໝາຍພາກພື້ນ ແລະ ກົດໝາຍພາຍໃນ ໂດຍສະເພາະຜູ້ຖືກ ເຄາະຮ້າຍຈາກການຄ້າມະນຸດ ທີ່ອາດຈະມີສ່ວນກ່ຽວຂ້ອງກັບການກະທຳທີ່ຜິດກົດໝາຍ.[13] ເຂົາເຈົ້າຍັງຢໍ້າໃຫ້ເຫັນເຖິງ ຄວາມຈຳເປັນໃນການນຳໃຊ້ວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ເພື່ອປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໂດຍ ສອດຄ່ອງກັບຄວາມຕ້ອງການ ແລະ ຄວາມມັກຂອງແຕ່ລະຄົນ. ຄວາມກັງວົນເຫຼົ່ານີ້ ມີຄວາມສຳຄັນຫຼາຍຕໍ່ກັບການນຳໃຊ້ ຫຼັກການບໍ່ລົງໂທດໃນການປົກປ້ອງຜູ້ຖືກເຄາະຮ້າຍ ເພື່ອຊຸກຍູ້ໃຫ້ເຂົາເຈົ້າຮ່ວມມື ແລະ ນຳເອົາຜູ້ຄ້າມະນຸດ ແລະ ອາຊະຍາ ກອນຮ້າຍແຮງອື່ນໆ ເຂົ້າສູ່ຂະບວນການຍຸຕິທຳ.

12 ມະຕິກອງປະຊຸມ ສະມັດຊາໃຫຍ່ໄດ້ຮັບຮອງເອົາ ຂໍ້ຕົກລົງລະດັບໂລກ ເພື່ອການເຄື່ອນຍ້າຍທີ່ປອດໄພ, ເປັນລະບຽບ, ເປັນປົກກະຕິ ໃນວັນທີ 19 ທັນວາ 2018, UN Doc A/RES/73/195, ວັນທີ 11 ມັງກອນ 2019, ວັກທີ 26(h) ຮຽກຮ້ອງ ໃຫ້ລັດຕ່າງໆ "ໃຫ້ປົກປ້ອງ ແລະ ຊ່ວຍເຫຼືອແຮງງານເຄື່ອນຍ້າຍທີ່ຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊັ່ນ ມາດຕະການ ການຟື້ນຟູທາງດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມ ຕະຫຼອດເຖິງມາດຕະການທີ່ອະນຸຍາດ ໃຫ້ເຂົາເຈົ້າດຳລົງຊີວິດຢູ່ໃນປະເທດ ປາຍທາງ ແບບຊົ່ວຄາວ ຫຼື ຖາວອນ ໃນກໍລະນີທີ່ເໝາະສົມ ເພື່ອອຳນວຍຄວາມສະດວກໃຫ້ຜູ້ຖືກເຄາະຮ້າຍເຂົ້າເຖິງຄວາມຍຸຕິທຳ ລວມເຖິງການປຽວຢາ ແລະ ຊົດເຊີຍຕາມກົນໝາຍສາກົນ"

13 ເບິ່ງມາດຕາທີ 24 ຂອງ UNTOC ກ່ຽວຂ້ອງກັບ ການປົກປ້ອງພະຍານ.

**ກ່ອງຂໍ້ມູນ: ຕົວຢ່າງ (ການເປັນຂໍທານ)**

A, ເປັນບຸກຄົນທີ່ມີຄວາມບົກຜ່ອງດ້ານການຮຽນຮູ້, ຖືກຍາດພີ່ນ້ອງຫ່າງໆ ພາມາຢູ່ໃນເມືອງ. ຄອບຄົວຂອງ A ໄດ້ຮັບ ການແຈ້ງວ່າ A ຈະໄດ້ວຽກທີ່ດີໃນເມືອງ ແລະ ມີເວລາໄປໂຮງຮຽນພິເສດ ບ່ອນທີ່ມີຄູສອນ ທີ່ສາມາດຊ່ວຍລາວໄດ້. ແທນ ທີ່ຈະໄດ້ວຽກທີ່ດີ, ລາວຊ້ຳພັດຖືກໃຫ້ນັ່ງຢູ່ຕາມຫົນທາງ ແລະ ຂໍເງິນກັບບຸກຄົນອື່ນໆ. ລາວຖືກຫ້າມບໍ່ໃຫ້ໄປຕິດຕໍ່ກັບ ຄອບຄົວເປັນເວລາຫຼາຍເດືອນ ນັບແຕ່ມື້ທີ່ເຂົ້າມາຢູ່ໃນເມືອງ. ມື້ໜຶ່ງ ມີຕຳຫຼວດມາ ແລະ ພາຕົວລາວໄປ ແລະ ເອົາລາວໄປ ຢູ່ໃນສະຖານທີ່ ທີ່ບໍ່ສາມາດອອກໄປໄດ້. ເຂົາເຈົ້າບອກລາວວ່າ ເຮັດແບບນີ້ ເພື່ອເປັນການປົກປ້ອງລາວ ແຕ່ລາວຕ້ອງການ ທີ່ຈະກັບບ້ານໄປຫາຄອບຄົວລາວເທົ່ານັ້ນ.

*ການນໍາໃຊ້ຫຼັກການບໍ່ລົງໂທດ:* ພະນັກງານທີ່ສູນພັກເຊົາກ່ຽວກັບການຄ້າມະນຸດ ບ່ອນທີ່ A ຖືກເກັບຕົວໄວ້ ຮັບຮູ້ວ່າລາວ ບໍ່ຕ້ອງການທີ່ຈະພັກເຊົາຢູ່ໃນສູນ ແລະ ບໍ່ເຂົ້າໃຈວ່າເປັນຫຍັງລາວຕ້ອງຢູ່ໃນສູນພັກເຊົາ. ເຂົາເຈົ້າອະທິບາຍໃຫ້ລາວຟັງວ່າ ລາວຕ້ອງຖືກເກັບຕົວຢູ່ໃນປະເທດນີ້ກ່ອນ ເນື່ອງຈາກວ່າ ເຈົ້າໜ້າທີ່ກຳລັງສືບສວນ-ສອບສວນ ບຸກຄົນທີ່ພາລາວມາປະ ເທດນີ້ ແລະ ເຮັດໃຫ້ລາວເປັນຂໍທານຂ້າງຖະໜົນ ແລະ ລາວ ຈະຕ້ອງໄດ້ໃຫ້ການຕໍ່ສານວ່າມີຫຍັງແດ່ເກີດຂຶ້ນກັບລາວ. A ມີຄວາມທຸກໃຈ ແລະ ເວົ້າຊໍ້າໆວ່າ ລາວຕ້ອງການກັບຄືນບ້ານ ເພື່ອໄປຫາຄອບຄົວລາວ. ພະນັກງານບໍລິການດ້ານສັງຄົມ ສົງເຄາະ ທີ່ເປັນຜູ້ຕາງໜ້າ ເພື່ອຜົນປະໂຫຍດຂອງ A, ໄດ້ປະສານກັບເຈົ້າໜ້າທີ່ສືບສວນ-ສອບສວນ ເພື່ອກະກຽມ A ໃນການສະໜອງຄໍາໃຫ້ການ ກ່ອນການພິຈາລະນາຄະດີ ດ້ວຍເຫດນັ້ນ ລາວບໍ່ຈໍາເປັນຕ້ອງໃຫ້ການຢູ່ສານ ແລະ ສາມາດກັບ ຄືນບ້ານລາວ ໂດຍໄວທີ່ສຸດເທົ່າທີ່ຈະເປັນໄປໄດ້.

## ການດໍາເນີນຄະດີຜູ້ຄ້າມະນຸດ

ລັດມີພັນທະຕໍ່ກົດໝາຍສາກົນ ໃນການປ້ອງກັນ ແລະ ຕ້ານການຄ້າມະນຸດ, ແລະ ດໍາເນີນຄະດີຕໍ່ຜູ້ກະທໍາຜິດ. ປະເທດຕ່າງໆ ທີ່ບໍ່ມີຄວາມສາມາດໃນການຕ້ານການຄ້າມະນຸດ ມີແຮງດຶງດູດໃນການກໍ່ອາຊະຍາກໍາ ເນື່ອງຈາກມີສະພາບແວດລ້ອມທີ່ ເອື້ອອໍານວຍໃຫ້ມີການກະທໍາຜິດ ໂດຍບໍ່ມີຄວາມຢ້ານກົວທີ່ຈະຖືກດໍາເນີນຄະດີ. ຜູ້ຄ້າມະນຸດ ມັກຈະເຮັດໃຫ້ຜູ້ຖືກເຄາະ ຮ້າຍ ມີຄວາມສ່ຽງທີ່ຈະຖືກລົງໂທດ ດ້ວຍການໂຍນຄວາມຮັບຜິດຊອບຂອງຕົນໄປໃຫ້ຜູ້ຖືກເຄາະຮ້າຍ ເຊິ່ງເປັນຍຸດທະ ສາດທີ່ຕັ້ງໃຈເພື່ອຂັດຂວາງຄວາມພະຍາຍາມຂອງຜູ້ປະຕິບັດຕົວຈິງດ້ານຍຸຕິທໍາທາງອາຍາ. ນອກນັ້ນ, ໃນກໍລະນີທີ່ລັດ ບໍ່ສາມາດນໍາໃຊ້ຫຼັກການບໍ່ລົງໂທດຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄດ້ນັ້ນ, ມີຄວາມເປັນອັນຕະລາຍຫຼາຍ ທີ່ຈະເປັນການຊ່ວຍເຫຼືອຜູ້ຄ້າມະນຸດ ໃນການກະທໍາສິ່ງທີ່ຜິດກົດໝາຍທາງອາຍາ. ເນື່ອງຈາກເປັນກົນລະຍຸດຫຼັກຂອງຜູ້ຄ້າມະ ນຸດໃນການຂົ່ມຂູ່ຜູ້ຖືກເຄາະຮ້າຍ ໂດຍບອກເຂົາເຈົ້າວ່າເຈົ້າໜ້າທີ່ຈະຈັບຕົວ, ກັກຂັງ ແລະ ສົ່ງກັບຄືນປະເທດ ຫຼື ອາດຈະດໍາເນີນຄະດີຕໍ່ເຂົາເຈົ້າ ຕໍ່ກັບກິດຈະກໍາຕ່າງໆທີ່ເຂົາເຈົ້າໄດ້ມີສ່ວນ ກ່ຽວພັນນໍາ. ໃນກໍລະນີທີ່ ເຈົ້າໜ້າທີ່ລັດໃຫ້ການຮ່ວມມືກັບຜູ້ຄ້າມະນຸດດ້ວຍການກະທໍາສິ່ງຕ່າງໆເຫຼົ່ານີ້, ຜູ້ຄ້າມະນຸດຖືກພິສູດວ່າມີຄວາມຖືກຕ້ອງ ແລະ ຄວາມເອົາໃຈໃສ່ຂອງເຈົ້າ ໜ້າທີ່ຕໍ່ກັບຄວາມພະຍາຍາມທີ່ຈະເອົາຜູ້ຖືກຄ້າມະນຸດເຂົ້າສູ່ຂະບວນການຍຸຕິທໍາ ໄດ້ຖືກຫັນປ່ຽນທິດທາງດ້ວຍການລົງ ໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດແທນ. ນອກນັ້ນ, ລັດທີ່ດໍາເນີນຄະດີ ຫຼື ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະ ນຸດ ຈະບໍ່ສາມາດສືບສວນ-ສອບສວນ, ດໍາເນີນຄະດີ ແລະ ສະກັດກັ້ນການຄ້າມະນຸດໄດ້ຢ່າງມີປະສິດທິພາບ, ແຕ່ເປັນການ ໃຫ້ການສະໜັບສະໜູນຜູ້ຄ້າມະນຸດ ແລະ ອາຊະຍາກອນອື່ນໆ ກະທໍາຜິດທາງອາຍາ ໂດຍບໍ່ໄດ້ຮັບໂທດ.

ລັດມີໜ້າທີ່ໃນການສືບສວນ-ສອບສວນ ຄວາມເຊື່ອມໂຍງລະຫວ່າງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເຂົາເຈົ້າໄດ້ພົບເຫັນ - ບໍ່ວ່າຈະຢູ່ໃນອຸດສາຫະກໍາດ້ານເພດ, ໃນເຮືອປະມົງ IUU, ຫຼື ໃນຂົງເຂດທີ່ມີການສໍ້ໂກງທາງອອນລາຍ ຫຼື ໂຮງງານກັນຊາ ແລະ ບຸກຄົນທີ່ຂູດຮີດເຂົາເຈົ້າ. ກໍລະນີທີ່ບໍ່ມີການເຊື່ອມໂຍງກັນນັ້ນ, ລັດ ບໍ່ໄດ້ບັນລຸໜ້າທີ່ຂອງຕົນໃນການສືບ ສວນ-ສອບສວນ ແລະ ດໍາເນີນຄະດີຜູ້ກະທໍາຜິດຈາກອາຊະຍາກໍາທີ່ຮ້າຍແຮງ.

ຄໍາໃຫ້ການຂອງຜູ້ຖືກເຄາະຮ້າຍ ເປັນຫຼັກຖານທີ່ສໍາຄັນໃນການດໍາເນີນຄະດີຕໍ່ກັບຜູ້ຄ້າມະນຸດ ໂດຍສະເພາະ ກໍລະນີທີ່ເຈົ້າ ໜ້າທີ່ບໍ່ໄດ້ມີການສືບສວນ-ສອບສວນຄະດີຄ້າມະນຸດຢ່າງຕັ້ງໜ້າ. ກໍລະນີທີ່ຜູ້ຖືກເຄາະຮ້າຍ ບໍ່ໄດ້ຮັບການປົກປ້ອງຈາກ ການຖືກລົງໂທດ, ເຂົາເຈົ້າບໍ່ສາມາດໃຫ້ການຮ່ວມມືກັບເຈົ້າໜ້າທີ່ ຕໍ່ກັບຄວາມພະຍາຍາມຂອງເຂົາເຈົ້າທີ່ຈະສືບສວນ-ສອບສວນ ແລະ ດໍາເນີນຄະດີຕໍ່ກັບຜູ້ຄ້າມະນຸດ. ນອກນັ້ນ, ຄວາມຫຼົ້ມເຫຼວໃນການນໍາໃຊ້ຫຼັກການບໍ່ລົງໂທດ ຍັງສົ່ງຜົນເຮັດໃຫ້ຂາດໂອກາດໃນການນໍາເອົາຜູ້ຖືກເຄາະຮ້າຍ ມາເປັນພະຍານເພື່ອຕໍ່ສູ້ກັບຜູ້ກະທໍາຜິດໃນສະຖານການຄ້າມະນຸດ ແລະ ອາຊະຍາກໍາຮ້າຍແຮງອື່ນໆ.

## *ຫຼັກການບໍ່ລົງໂທດມາຈາກໃສ?*

### ກົດໝາຍສາກົນ

ຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍ ບໍ່ໄດ້ຖືກກຳນົດໄວ້ຢ່າງຊັດເຈນໃນ ອານຸສັນຍາວ່າດ້ວຍການປ້ອງກັນ, ສະກັດກັ້ນ ແລະ ລົງໂທດການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ (ອານຸສັນຍາ ວ່າດ້ວຍການຕ້ານການຄ້າມະນຸດ). ເຖິງຢ່າງ ໃດກໍຕາມ, ມາດຕາ 14 ຍັງຮັກສາຂໍ້ກຳນົດກ່ຽວກັບອານຸສັນຍາວ່າດ້ວຍການປ້ອງກັນ, ສະກັດກັ້ນ ແລະ ລົງໂທດການຄ້າ ມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ (ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ) ເຊິ່ງຊຸກຍູ້ໃຫ້ລັດນຳໃຊ້ອານຸ ສັນຍາດັ່ງກ່າວ ໂດຍສອດຄ່ອງກັບພັນທະຂອງເຂົາເຈົ້າ ຕໍ່ກັບກົດໝາຍວ່າດ້ວຍສິດທິມະນຸດສາກົນ, ມາດຕາ 25 ຂອງສົນທິ ສັນຍາ UNTOC ຮຽກຮ້ອງໃຫ້ ລັດທີ່ເປັນຄູ່ພາຄີ ໃຫ້ການປົກປ້ອງສິດທິຂອງຜູ້ຖືກເຄາະຮ້າຍຈາກອາຊະຍາກຳທີ່ມີການ ຈັດຕັ້ງ. ເຊິ່ງເປັນສິ່ງທີ່ຖືກຮັບຮູ້ຫຼາຍຂຶ້ນໃນກົດໝາຍລະຫວ່າງປະເທດ ແລະ ກົດໝາຍທີ່ບໍ່ມີຂໍ້ຜູກມັດທາງດ້ານກົດໝາຍ (soft law) ວ່າ ຫຼັກການບໍ່ລົງໂທດເປັນວິທີການການປະຕິບັດທີ່ດີທີ່ສຸດ ເພື່ອໃຫ້ການຈັດຕັ້ງປະຕິບັດເຄື່ອງມືດັ່ງກ່າວມີປະ ສິດທິພາບໂດຍອີງໃສ່ສິດທິມະນຸດ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ.

ຫຼັກການບໍ່ລົງໂທດ ໄດ້ຖືກກຳນົດໄວ້ຢ່າງຊັດເຈນ ໃນມາດຕາ 4(2) ຂອງອານຸສັນຍາວ່າດ້ວຍການບັງຄັບໃຊ້ແຮງງານເລກ ທີ 29.

> ສະມາຊິກແຕ່ລະປະເທດ ຕ້ອງປະຕິບັດ, ໂດຍອີງຕາມຫຼັກການພື້ນຖານຂອງລະບົບກົດໝາຍຂອງຕົນ, ໃຫ້ນຳໃຊ້ມາດຕະການທີ່ຈຳເປັນເພື່ອຮັບປະກັນວ່າເຈົ້າໜ້າທີ່ທີ່ມີສິດອຳນາດ ມີ ສິດໃນການບໍ່ດຳເນີນຄະດີ ຫຼື ລົງໂທດຜູ້ຖືກເຄາະຮ້າຍທີ່ຖືກບັງຄັບໃຊ້ແຮງງານ ຫຼື ເປັນແຮງ ງານທີ່ຖືກບັງຄັບ ຕໍ່ກັບການມີສ່ວນຮ່ວມໃນການກະທຳທີ່ຜິດກົດໝາຍ ທີ່ເຂົາເຈົ້າຖືກບັງ ຄັບໃຫ້ກະທຳ ທີ່ເປັນຜົນສະທ້ອນໂດຍກົງຈາກການຖືກບັງຄັບໃຊ້ແຮງງານ ຫຼື ເປັນແຮງງານ ບັງຄັບ.

ການບັງຄັບໃຊ້ແຮງງານ ຫຼື ການບັງຄັບໃຊ້ບໍລິການ ຕາມທີ່ກຳນົດໄວ້ໃນສົນທິສັນຍາ ILO ເລກທີ 29 ສາມາດ ຮວມເຖິງແຮງງານ ຫຼື ການບໍລິການ ທີ່ຜິດກົດໝາຍ ຫຼື ໃນຂົງເຂດທີ່ຜິດກົດໝາຍ. ນອກນັ້ນ, *ການນຳໃຊ້ຫຼັກການບໍ່ລົງໂທດ ຕໍ່ກັບ ແຮງງານທີ່ຖືກບັງຄັບຈະກ່ຽວຂ້ອງສະເພາະກັບລັດ ເຊິ່ງວິທີການຄ້າມະນຸດ ເພື່ອຈຸດປະສົງຂອງການບັງຄັບໃຫ້ກະທຳຜິດທາງອາຍາ ເຊິ່ງຜູ້ຖືກຄ້າມະນຸດເປັນແຮງງານທີ່ຖືກບັງຄັບໃນກົດໝາຍພາຍໃນຂອງເຂົາເຈົ້າ.*

ເຄື່ອງມືດ້ານກົດໝາຍສາກົນອື່ນໆ ທີ່ໄດ້ມີການເສີມສ້າງຫຼັກການບໍ່ລົງໂທດ ລວມທັງ ຄູ່ມື ແລະ ຫຼັກການທີ່ເປັນ ຂໍ້ສະເໜີ ແນະນຳ ກ່ຽວກັບສິດທິມະນຸດ ແລະ ການຄ້າມະນຸດ ຂອງສຳນັກງານຄະນະກຳມາທິ ການໃຫຍ່ເພື່ອສິດທິມະນຸດແຫ່ງສະຫະປະຊາຊາດ.

> ຜູ້ຖືກຄ້າມະນຸດ ຕ້ອງບໍ່ຖືກກັກຂັງ, ບໍ່ຖືກຕັ້ງຂໍ້ກ່າວຫາ ຫຼື ບໍ່ຖືກດຳເນີນຄະດີ ສຳລັບການ ເຂົ້າເມືອງ ຫຼື ອາໄສຢູ່ໃນບັນດາປະເທດທາງຜ່ານ ແລະ ປະເທດປາຍທາງ ຫຼື ການມີສ່ວນ ຮ່ວມຂອງເຂົາເຈົ້າຕໍ່ກັບການກະທຳທີ່ຜິດກົດໝາຍ ໃນຂອບເຂດທີ່ມີສ່ວນຮ່ວມດັ່ງກ່າວ ເຊິ່ງເປັນຜົນສະທ້ອນໂດຍກົງຈາກສະຖານະການຂອງເຂົາເຈົ້າ ໃນຖານະຜູ້ຖືກຄ້າມະນຸດ

ຄຳແນະນຳ4(5) ໄດ້ກຳນົດໄວ້ວ່າ ລັດຄວນພິຈາລະນາ:

> ຮັບປະກັນວ່າ ກົດໝາຍແມ່ນປ້ອງກັນຜູ້ຖືກຄ້າມະນຸດຈາກການຖືກດຳເນີນຄະດີ, ຖືກກັກ ຂັງ ແລະ ຖືກລົງໂທດ ສຳລັບການເຂົ້າເມືອງ ຫຼື ອາໄສຢູ່ ຫຼື ກິດຈະກຳທີ່ເຂົາເຈົ້າໄດ້ມີສ່ວນ ພົວພັນເຊິ່ງເປັນຜົນສະທ້ອນໂດຍກົງຈາກສະຖານະການຂອງເຂົາເຈົ້າ ໃນຖານະຜູ້ຖືກຄ້າມະ ນຸດ.

ໃນກໍລະນີສະເພາະ ທີ່ກ່ຽວຂ້ອງກັບເດັກ, ຄຳແນະນຳ 8(3) ໄດ້ກຳນົດໄວ້ວ່າ ລັດ ແລະ ໃນກໍລະນີທີ່ໃຊ້ໄດ້, ອົງການຈັດຕັ້ງລະຫວ່າງລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ຄວນພິຈາລະນາ:

> ຮັບປະກັນວ່າ ເດັກທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກດຳເນີນຄະດີທາງອາ ຍາ ຫຼື ບໍ່ຖືກລົງໂທດຕໍ່ກັບຄວາມຜິດທີ່ກ່ຽວຂ້ອງກັບສະຖານະການຂອງເຂົາເຈົ້າ ໃນຖານະເປັນຜູ້ຖືກຄ້າມະນຸດ.

ຫຼັກການບໍ່ລົງໂທດ ໄດ້ຖືກເສີມຂະຫຍາຍເພີ່ມເຕີມໃນບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ[14], ແລະ ມະຕິຂອງສະພາຄວາມໝັ້ນຄົງ ທີ່ຮຽກຮ້ອງໃຫ້ລັດ ບໍ່ໃຫ້ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.[15] ເອກະສານ ແລະ ເຄື່ອງມືຕ່າງໆທີ່ກ່ຽວຂ້ອງ ໄດ້ຖືກອ້າງອີງໃນຄຳແນະນຳອາຊຽນສະບັບນີ້ ແລະ ມີຢູ່ໃນເອກະສານຊ້ອນທ້າຍ 4.

## ກົດໝາຍພາກພື້ນ

ສົນທິສັນຍາ ACTIP ເປັນເຄື່ອງມືທີ່ມີກ້າວໜ້າ ທີ່ໄດ້ກຳນົດຫຼັກການບໍ່ລົງໂທດໄວ້ຢ່າງຊັດເຈນ ໃນມາດຕາ 14(7).

> ແຕ່ລະລັດພາຄີ, ອີງຕາມກົດໝາຍ, ລະບຽບການ, ນິຕິກຳ ແລະ ນະໂຍບາຍພາຍໃນຂອງຕົນ ແລະ ໃນກໍລະນີທີ່ເໝາະສົມ, ຈະຕ້ອງພິຈາລະນາບໍ່ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມຮັບຜິດຊອບທາງອາຍາ ຫຼື ທາງບໍລິຫານ ຕໍ່ກັບການກະທຳທີ່ຜິດກົດໝາຍທີ່ເຂົາ ເຈົ້າໄດ້ກະທຳ ຖ້າຫາກການກະທຳດັ່ງກ່າວແມ່ນພົວພັນໂດຍກົງກັບການຄ້າມະນຸດ.

ຂໍ້ກຳນົດນີ້ ລະບຸໄວ້ຢ່າງຊັດເຈນວ່າ ບັນດາປະເທດສະມາຊິກອາຊຽນ ຄວນຈະມີຄວາມຍືດຢຸ່ນໃນລະດັບໃດໜຶ່ງຕໍ່ກັບວິທີ ການປະຕິບັດພັນທະດັ່ງກ່າວ, ໂດຍພິຈາລະນານຳໃຊ້ຫຼັກການບໍ່ລົງໂທດ. ບັນດາປະເທດສະມາຊິກອາຊຽນທັງໝົດ ເປັນພາ ຄີໃນສົນທິສັນຍາ ACTIP, ໝາຍຄວາມວ່າບັນດາປະເທດເຫຼົ່ານີ້ ມີພັນທະຜູກມັດທາງດ້ານກົດໝາຍຕໍ່ກັບມາດຕາ 14(7).

ສິບປີກ່ອນທີ່ຈະມີການປະກາດນຳໃຊ້ສົນທິສັນຍາອາຊຽນ, ສົນທິສັນຍາວ່າດ້ວຍການຕ້ານການຄ້າມະນຸດ ຂອງສະພາເອີຣົບ ມາດຕາ 26 ສະບັບປີ 2005 (ສົນທິສັນຍາຂອງສະພາເອີຣົບ ສະບັບເລກທີ 197) ໄດ້ກວມເອົາຫຼັກການບໍ່ລົງໂທດ ດັ່ງລຸ່ມ ນີ້:

> ແຕ່ລະລັດພາຄີ, ໂດຍສອດຄ່ອງກັບຫຼັກການພື້ນຖານຂອງລະບົບກົດໝາຍຂອງຕົນ ຕ້ອງສະ ໜອງຄວາມເປັນໄປໄດ້ ທີ່ຈະບໍ່ລົງໂທດຜູ້ຖືກເຄາະຮ້າຍຕໍ່ກັບການກະທຳທີ່ຜິດກົດໝາຍ ທີ່ ເຂົາເຈົ້າມີສ່ວນຮ່ວມໃນຂອບເຂດທີ່ເຂົາເຈົ້າຖືກບັງຄັບ ໃຫ້ກະທຳສິ່ງທີ່ຜິດກົດໝາຍດັ່ງກ່າວ.

ເຖິງວ່າບັນດາປະເທດສະມາຊິກອາຊຽນ ຈະບໍ່ມີພັນຜູກມັດທາງດ້ານກົດໝາຍຕໍ່ກັບສົນທິສັນຍາຂອງສະພາເອີຣົບ, ແຕ່ເຂົາ ເຈົ້າສາມາດຮຽນຮູ້ຈາກຄວາມພະຍາຍາມຂອງລັດອື່ນໆ ໃນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດໃນພາກປະຕິບັດຕົວຈິງ, ແລະ ຕາມຄຳແນະນຳທີ່ມີຢູ່ ເພື່ອສະໜັບສະໜູນຄວາມພະຍາຍາມຂອງເຂົາເຈົ້າ.

## ກົດໝາຍພາຍໃນ

ບັນດາປະເທດຕ່າງໆສ່ວນໃຫຍ່ໃນອາຊຽນ ມີຂໍ້ກຳນົດກ່ຽວກັບຫຼັກການບໍ່ລົງໂທດທີ່ຊັດເຈນໃນກົດໝາຍພາຍໃນຂອງຕົນ (ເບິ່ງທີ່ເອກະສານຊ້ອນທ້າຍ 1). ຍົກເວັ້ນ ປະເທດກຳປູເຈຍ ແລະ ປະເທດສິງກະໂປ ທີ່ຫຼັກການບໍ່ລົງໂທດ ບໍ່ໄດ້ຖືກກຳນົດ ໄວ້ຢ່າງຊັດເຈນໃນກົດໝາຍພາຍໃນຂອງຕົນ. ປະເທດຫວຽດນາມ ໄດ້ປັບປຸງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ໃນເດືອນພະຈິກ ປີ 2024 ເພື່ອກຳນົດເອົາຫຼັກການບໍ່ລົງໂທດເຂົ້າໃນກົດໝາຍ. ກົດໝາຍສະບັບນີ້ ຈະມີຜົນບັງຄັບໃຊ້ນັບ ແຕ່ວັນທີ 1 ກໍລະກົດ 2025.

ຂໍ້ກົດນົດຫຼັກການບໍ່ລົງໂທດໃນກົດໝາຍພາຍໃນ ນຳໃຊ້ວິທີການທີ່ແຕກຕ່າງກັນ ເພື່ອສ້າງສາຍສຳພັນລະຫວ່າງ ການກະ ທຳທີ່ຜິດກົດໝາຍຂອງຜູ້ຖືກເຄາະຮ້າຍ ແລະ ປະສົບການໃນການຖືກຄ້າມະນຸດຂອງເຂົາເຈົ້າ.

- ປະເທດໜຶ່ງ (ປະເທດອິນໂດເນເຊຍ) ກຳນົດໄວ້ວ່າ ຜູ້ຖືກເຄາະຮ້າຍທີ່ໄດ້ຖືກບັງຄັບໃຫ້ມີສ່ວນຮ່ວມໃນການກະທຳທີ່ຜິດກົດໝາຍ ເພື່ອທີ່ຈະນຳໃຊ້ຫຼັກການບໍ່ລົງໂທດນັ້ນໄດ້.
- ສ່ວນປະເທດອື່ນໆ (ປະເທດບຣູໄນ, ສປປ ລາວ, ມາເລເຊຍ ແລະ ຫວຽດນາມ) ກຳນົດໄວ້ວ່າການກະທຳທີ່ຜິດກົດໝາຍທີ່ຜູ້ຖືກເຄາະຮ້າຍໄດ້ກະທຳ ເຊິ່ງເປັນຜົນສະທ້ອນໂດຍກົງຈາກການຄ້າມະນຸດ. ກົດໝາຍຂອງມຽນມາ ສະບັບປີ 2005 ໄດ້ກຳນົດວ່າ ການກະທຳທີ່ຜິດກົດໝາຍ ທີ່ເປັນ 'ຜົນສະທ້ອນໂດຍກົງ' ຈາກການຄ້າມະນຸດ ຕາມທີ່ກຳນົດໄວ້ໃນກົດໝາຍ ສະບັບປີ 2005, ແຕ່ກົດໝາຍສະບັບປີ 2022 ທີ່ປ່ຽນແທນກົດໝາຍສະບັບກ່ອນໜ້ານີ້ ບໍ່ໄດ້ມີການກຳນົດການເຊື່ອມໂຍງທີ່ຈຳເປັນໄວ້ຢ່າງຊັດເຈນ.

---

14 ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ Maria Grazia Giammarinaro, ວັນທີ 6 ເມສາ 2020, UN Doc A/HRC/44/45, ວັກທີ. 36; ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດ: ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, Siobhán Mullaly, UN Doc. A/HRC/47/34 (ວັນທີ 17 ພຶດສະພາ 2021).

15 ມະຕິ 2331 ຂອງສະພາຄວາມໝັ້ນຄົງ (2016); ມະຕິ 2388 ສະພາຄວາມໝັ້ນຄົງ (2017)

- ປະເທດຟີລິບປິນ ນໍາໃຊ້ກົດໝາຍພາຍໃນປະເທດ ໂດຍມີຄວາມເຂົ້າໃຈວ່າການກະທໍາທີ່ຜິດກົດໝາຍ ເຊິ່ງການກະທໍາດັ່ງກ່າວ ເປັນການກະທໍາທີ່ເປັນຜົນໂດຍກົງ, ຫຼື ເປັນເຫດການ ຫຼື ກ່ຽວຂ້ອງກັບການຄ້າມະນຸດ ຫຼື ເປັນການປະຕິບັດຕາມຄໍາສັ່ງຂອງຜູ້ຄ້າມະນຸດ ຕໍ່ກັບການກະທໍາດັ່ງກ່າວ.
- ຂໍ້ກໍານົດບາງຢ່າງຈໍາກັດຂອບເຂດການປົກປ້ອງສະເພາະການກະທໍາຜິດທີ່ໄດ້ກໍານົດໄວ້ເຊັ່ນ ຄວາມຜິດກ່ຽວ ກັບ ການເຄື່ອນຍ້າຍຖິ່ນຖານ ແລະ ເອກະສານ (ປະເທດບຣູໄນ້, ມາເລເຊຍ); ການເຂົ້າ–ອອກເມືອງ ທີ່ຜິດກົດໝາຍ ແລະ ການເປັນໂສເພນີ (ສປປ ລາວ); ແລະ ການຄ້າມະນຸດ, ການເຂົ້າເມືອງ, ອອກເມືອງ, ອາໄສຢູ່ ແລະ ການ ເຮັດວຽກທີ່ຜິດກົດໝາຍ ລວມທັງເອກະສານທີ່ຜິດກົດໝາຍ (ມຽນມາ). ໃນປະເທດອິນໂດເນເຊຍ ແລະ ຟີລິບ ປິນ, ການປົກປ້ອງຈາກການຖືກລົງໂທດ ບໍ່ໄດ້ມີການຈໍາກັດສະເພາະຄວາມຜິດທີ່ໄດ້ມີການກໍານົດໄວ້ເທົ່ານັ້ນ.
- ປະເທດໄທ ໄດ້ກໍານົດໄວ້ວ່າຕ້ອງມີການຂໍອະນຸຍາດຢ່າງເປັນລາຍລັກອັກສອນຈາກກະຊວງຍຸຕິທໍາ ກ່ຽວກັບການ ດໍາເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍ ກ່ຽວກັບການເຂົ້າ–ອອກເມືອງ, ການເປັນໂສເພນີ, ຄວາມຜິດກ່ຽວກັບເອກະສານ ແລະ ການເຮັດວຽກທີ່ຜິດກົດໝາຍ.[16] ຄືກັນກັບກົດໝາຍຂອງມຽນມາ ສະບັບປີ 2022 ທີ່ກໍານົດໄວ້ວ່າ ຕ້ອງມີການຂໍອະນຸຍາດຈາກໜ່ວຍງານຂັ້ນສູນກາງ ເພື່ອດໍາເນີນການຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ຂໍ້ກໍານົດຫຼັກການບໍ່ລົງໂທດ ໄດ້ກໍານົດໄວ້ໃນກົດໝາຍພາຍໃນຂອງບັນດາປະເທດສະມາຊິກອາຊຽນ ຕາມເອກະສານຊ້ອນ ທ້າຍ 1.

ເຊິ່ງເປັນການປະຕິບັດທີ່ເປັນຕົວແບບທີ່ດີ ທີ່ມີຂໍ້ກໍານົດທີ່ຊັດເຈນ ໃນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ໃນກົດໝາຍ ພາຍໃນປະເທດ.[17] ເຖິງຢ່າງໃດກໍຕາມ, ກໍລະນີທີ່ກົດໝາຍພາຍໃນຂອງບັນດາປະເທດຕ່າງໆ ບໍ່ໄດ້ມີການກໍານົດຫຼັກການບໍ່ ລົງໂທດໄວ້ຢ່າງຊັດເຈນ ຫຼື ກໍລະນີທີ່ກົດໝາຍພາຍໃນຂອງປະເທດນັ້ນ ບໍ່ໄດ້ນໍາໃຊ້ສະຖານະການສະເພາະຂອງຜູ້ຖືກເຄາະ ຮ້າຍ, ເຊິ່ງອາດຈະມີໂອກາດອື່ນໆທີ່ກົດໝາຍພາຍໃນຈະໃຫ້ການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງ ການນໍາໃຊ້ການປ້ອງກັນທົ່ວໄປ ເຊັ່ນ ການຂົ່ມຂູ່, ເຊິ່ງອາດຈະກໍານົດໄວ້ໃນກົດໝາຍພາຍ ໃນ. ຜູ້ປະຕິບັດຕົວຈິງສາມາດ ນໍາໃຊ້ຫຼັກການບໍ່ລົງໂທດ ດ້ວຍການອ້າງອີງເຖິງພັນທະຂອງຕົນເອງຕໍ່ກັບສາກົນ ແລະ ພາກພື້ນຕາມທີ່ກໍານົດໄວ້ໃນສົນທິ ສັນຍາ UNTOC ແລະ ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ ແລະ ສົນທິສັນຍາ ACTIP.

## *ເມື່ອໃດທີ່ຄວນນໍາໃຊ້ຫຼັກການບໍ່ລົງໂທດ?*

ການນໍາໃຊ້ຫຼັກການບໍ່ລົງໂທດ ບໍ່ຄວນຂຶ້ນກັບການກໍານົດທີ່ເປັນທາງການວ່າ ບຸກຄົນໃດໜຶ່ງເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ໂອກາດຕ່າງໆໃນການນໍາໃຊ້ຫຼັກການບໍ່ລົງໂທດແມ່ນເກີດຂຶ້ນນັບແຕ່ເວລາທີ່ເຈົ້າໜ້າທີ່ໄດ້ພົບເຫັນຜູ້ຖືກສົມມຸ ຖານວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນເບື້ອງຕົ້ນ ແລະ ຕະຫຼອດໄລຍະການມີສ່ວນຮ່ວມຂອງເຂົາເຈົ້າໃນຂະ ບວນການຍຸຕິທໍາທາງອາຍາ ທັງໃນຖານະ ຜູ້ຖືກເຄາະຮ້າຍ ຫຼື ໃນບາງກໍລະນີ ໃນຖານະຜູ້ກະທໍາຜິດ.

**ການກັ່ນກອງ ແລະ ການກໍານົດຕົວຜູ້ຖືກເຄາະຮ້າຍ** (ພາກທີ 2)

ໂດຍປົກກະຕິແລ້ວ, ຜູ້ຖືກເຄາະຮ້າຍຈະຖືກກໍານົດຕົວໂດຍໄວທີ່ສຸດ ເມື່ອເຈົ້າໜ້າທີ່ມີຂໍ້ສົງໄສທີ່ເຊື່ອຖືໄດ້ວ່າ ບຸກຄົນດັ່ງ ກ່າວ ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ກ່ອນທີ່ຈະມີການລົງໂທດໃດໜຶ່ງເກີດຂຶ້ນ. ຖ້າຫາກຜູ້ຖືກເຄາະຮ້າຍ ບໍ່ໄດ້ຮັບການກໍານົດຕົວໂດຍທັນທີ, ກໍ່ເປັນສິ່ງທີ່ຍາກທີ່ຈະນໍາເອົາເຂົາເຈົ້າກັບຄືນໄປສູ່ຊ່ອງ ທາງການປົກປ້ອງ. ເຖິງຢ່າງໃດ ກໍຕາມ, ໃນທຸກໆຈຸດທີ່ເຈົ້າໜ້າທີ່ພົບເຫັນຜູ້ຖືກເຄາະຮ້າຍ, ຕ້ອງນໍາໃຊ້ທຸກໂອກາດເພື່ອນໍາໃຊ້ຫຼັກການບໍ່ລົງໂທດ.

ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງນັ້ນ, ຜູ້ຖືກເຄາະຮ້າຍ ແລະ ຜູ້ກະທໍາຜິດ ບໍ່ແມ່ນແນວຄິດທີ່ກົງກັນຂ້າມກັນ; ບຸກຄົນໃດໜຶ່ງອາດຈໍາເປັນຕ້ອງໄດ້ຮັບການປົກປ້ອງຈາກການຖືກລົງໂທດຈາກການກະທໍາໃດໜຶ່ງທີ່ຜິດກົດໝາຍ ແຕ່ບໍ່ແມ່ນທັງໝົດ. ເຊິ່ງອາດຈະເປັນສິ່ງທີ່ຫຍຸ້ງຍາກແກ່ຜູ້ປະຕິບັດຕົວຈິງ ໃນການກໍານົດວ່າ ການກະທໍາໃດຂອງຜູ້ຖືກເຄາະຮ້າຍນັ້ນ ເປັນການກະ ທໍາຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ ແລະ ການກະທໍາອັນໃດທີ່ບໍ່ກ່ຽວຂ້ອງກັບການຄ້າມະນຸດ ເຊິ່ງເປັນວິທີການອັນເໝາະ ສົມ ເພື່ອນໍາໃຊ້ກັບຜູ້ຖືກເຄາະຮ້າຍໃນຖານະຜູ້ກະທໍາຜິດ. ການກໍານົດຕົວເຂົາເຈົ້າໂດຍໄວ ແລະ ມີປະສິດທິພາບໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີຄວາມສໍາຄັນໃນການກໍານົດສິ່ງເຫຼົ່ານີ້.

ເຈົ້າໜ້າທີ່ແຮງງານ, ເຈົ້າໜ້າທີ່ກວດຄົນເຂົ້າ–ອອກເມືອງ ແລະ ເຈົ້າໜ້າທີ່ອື່ນໆ ເຊິ່ງເປັນຜູ້ທໍາອິດທີ່ພົບເຫັນຜູ້ທີ່ອາດຈະ ເປັນຜູ້ຖືກເຄາະຮ້າຍ ທີ່ກ່ຽວຂ້ອງກັບການກະທໍາທີ່ຜິດກົດໝາຍ ສາມາດດໍາເນີນການກັ່ນກອງ ແລະ ກໍານົດຕົວເຂົາເຈົ້າໃນ ຖານະຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ຢ່າງມີປະສິດທິພາບ ແລະ ນໍາເອົາເຂົາເຈົ້າ ອອກຈາກຂະບວນການຍຸຕິທໍາທາງອາຍາ ເພື່ອເຂົ້າສູ່ຊ່ອງທາງການປົກປ້ອງ.

16 ມາດຕາທີ 41 ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ພສ 2551 (2008) ແກ້ໄຂເພີ່ມເຕີມ ປີ 2015 (ພສ 2558) ແລະ 2017 (ພສ 2560). ໃນປີ 2022 ບົດສຶກສາຄົ້ນຄ້ວາຂອງແຜນງານ ASEAN-ACT ພົບວ່າ ກົດໝາຍສະບັບດັ່ງກ່າວ ບໍ່ໄດ້ມີການຮ້ອງຂໍຢ່າງເປັນລາຍລັກອັກສອນ

17 ຄໍາແນະນໍາກ່ຽວກັບບັນຫາການຕອບໂຕ້ຄວາມຍຸຕິທໍາທາງອາຍາທີ່ເໝາະສົມຕໍ່ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທໍາຜິດຍ້ອນຖືກຄ້າມະນຸດ: ເອກະສານຄວາມເປັນມາ ກະກຽມໂດຍ ກອງເລຂາ ຄະນະປະຕິບັດງານຕ້ານການຄ້າມະນຸດ, ວຽນນາ ວັນທີ 10 ແລະ 11 ກັນຍາ 2020, UN Doc. CTOC/COP/WG.4/2020/2 (ວັນທີ 15 ມິຖຸນາ 2020), ວັກທີ 46.

ຍົກຕົວຢ່າງ, ເຈົ້າໜ້າທີ່ກວດກາດ້ານແຮງງານ ອາດຈະກຳລັງສືບສວນ-ສອບສວນ ການປະຕິບັດທີ່ເປັນຕົວແບບທີ່ດີ ດ້ານ ແຮງງານ ແລະ ພົບກັບບຸກຄົນທີ່ສົງໄສວ່າ ອາດຈະຖືກຄ້າມະນຸດ ເພື່ອໃຫ້ປະຕິບັດວຽກສະເພາະໃດໜຶ່ງ. ເຈົ້າໜ້າທີ່ກວດຄົນເຂົ້າ–ອອກເມືອງ ທີ່ກຳລັງສືບສວນ-ສອບສວນການເຂົ້າ–ອອກເມືອງທີ່ຜິດກົດໝາຍ ອາດຈະພົບກັບບຸກຄົນທີ່ຖືກຄ້າມະ ນຸດ. ເຈົ້າໜ້າທີ່ຕຳຫຼວດອາດຈະກຳລັງສືບສວນ-ສອບສວນອາຊະຍາກຳທີ່ຮ້າຍແຮງເຊັ່ນ ການປູກພືດເພື່ອຜະລິດຢາເສບ ຕິດ, ການລັກລອບຂົນສິ່ງສິນຄ້າທີ່ຜິດກົດໝາຍ ຫຼື ອາຊະຍາກຳທາງໂທລະຄົມ ເຊັ່ນ ການສໍ້ໂກງທາງໂທລະຄົມ (cyber-scamming) ແລະ ພົບເຫັນສະຖານະການທີ່ກຸ່ມຄົນນີ້ ໄດ້ຖືກຄ້າມະນຸດ ເພື່ອໃຫ້ຕົກຢູ່ໃນສະຖານະການເຫຼົ່ານີ້. ໃນສະຖາ ນະການທັງໝົດນີ້, ກໍລະນີທີ່ເຈົ້າໜ້າທີ່ໄດ້ພົບຜູ້ຖືກເຄາະຮ້າຍ ແລະ ກຳນົດຕົວ ເຂົາເຈົ້າໄດ້ຢ່າງຖືກຕ້ອງ, ເຂົາເຈົ້າສາມາດ ປ່ອຍຕົວຜູ້ຖືກເຄາະຮ້າຍໄດ້ທັນທີ ຈາກການໄຕ່ສວນກ່ອນການພິຈາລະນາຄະດີໃນທີ່ປະຊຸມສານ ຫຼື ປ່ອຍຕົວຈາກສະຖານ ທີ່ກັກຂັງການເຂົ້າ–ອອກເມືອງ ແລະ ນຳເອົາຜູ້ຖືກເຄາະຮ້າຍເຂົ້າສູ່ຊ່ອງທາງການປົກປ້ອງ.

ຜູ້ຊ່ຽວຊານດ້ານສຸຂະພາບ ແລະ ຜູ້ໃຫ້ບໍລິການດ້ານອື່ນໆ ກໍມີບົດບາດໃນການຮັບປະກັນວ່າ ມີການຍຶດໝັ້ນຕໍ່ກັບຫຼັກ ການບໍ່ລົງໂທດ. ຖ້າຫາກເຂົາເຈົ້າ ສາມາດຮັບຮູ້ວ່າມີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນກຸ່ມຄົນທີ່ເຂົາເຈົ້າໄດ້ພົບເຫັນ, ເຂົາເຈົ້າສາມາດໃຫ້ການສະໜັບສະໜູນແກ່ເຈົ້າໜ້າທີ່ດ້ານແຮງງານ, ເຈົ້າໜ້າທີ່ກວດຄົນເຂົ້າອອກ–ເມືອງ ແລະ ເຈົ້າໜ້າທີ່ ດ້ານອື່ນໆ ເພື່ອຮັບຮູ້ວ່າ ບຸກຄົນນັ້ນເປັນຜູ້ຖືກເຄາະຮ້າຍ ເພື່ອໃຫ້ນຳໃຊ້ຫຼັກການບໍ່ລົງໂທດ ໄດ້ຢ່າງມີປະສິດທິພາບ.

ເຈົ້າໜ້າທີ່ດ່ານໜ້າ ແລະ ເຈົ້າໜ້າທີ່ອື່ນໆ ທີ່ຕິດຕໍ່ພົວພັນກັບຜູ້ຖືກເຄາະຮ້າຍ, ຕ້ອງສາມາດຮັບຮູ້ໄດ້ເຖິງບຸກຄົນຕ່າງໆທີ່ພົບເຫັນນັ້ນ ອາດຈະເປັນຜູ້ຖືກເຄາະຮ້າຍ. ເຊິ່ງລວມມີຜູ້ຖືກເຄາະຮ້າຍ ທີ່ອາດຈະເປັນກຸ່ມສ່ຽງສະເພາະ ຍ້ອນເຂົາເຈົ້າເປັນຄົນ ອົບພະຍົບ; ບຸກຄົນທີ່ຫຼົບໜີຈາກຄວາມຂັດແຍ່ງ; ກຸ່ມຄົນຫຼາກຫຼາຍທາງເພດ (LGBTQI+); ບຸກຄົນທີ່ມີຄວາມພິການ; ແຮງງານເຄື່ອນຍ້າຍທີ່ຕົກຢູ່ໃນສະຖານະການທີ່ມີຄວາມສ່ຽງ ແລະ ບຸກຄົນອື່ນໆທີ່ຕ້ອງການການປົກປ້ອງພິເສດ.[18] ກຸ່ມຄົນທີ່ມີຂໍ້ຂັດແຍ່ງດ້ານກົດໝາຍ – ລວມທັງກຸ່ມໄວໜຸ່ມ - ທີ່ຢູ່ໃນຄວາມສ່ຽງສະເພາະທີ່ຈະບໍ່ໄດ້ຮັບ ການປົກປ້ອງ ແລະ ການຊ່ວຍເຫຼືອຕາມທີ່ເຂົາເຈົ້າຕ້ອງການ. ເຈົ້າໜ້າທີ່ຕ້ອງຂ້າມຜ່ານອຸປະສັກອັນສະເພາະນີ້ໃຫ້ໄດ້ ລວມທັງອັກຄະຕິທີ່ເກີດ ຂຶ້ນໂດຍບໍ່ຕັ້ງໃຈ ເພື່ອໃຫ້ເຂົາເຈົ້າສາມາດກຳນົດຕົວຜູ້ຖືກເຄາະຮ້າຍໄດ້ຢ່າງມີປະສິດທິພາບ ແລະ ປົກປ້ອງເຂົາເຈົ້າຈາກການຖືກລົງໂທດ.

ບັນຫາດ້ານການກຳນົດຕົວ ແລະ ບັນຫາອື່ນໆ ໄດ້ຖືກອະທິບາຍໄວ້ໃນພາກທີ 2 ຂ້າງລຸ່ມນີ້.

## ໃນເວລາທີ່ຜູ້ຖືກເຄາະຮ້າຍ ກຳລັງປະເຊີນໜ້າກັບການໄຕ່ສວນຄະດີ (ພາກທີ 4)

ໃນກໍລະນີທີ່ ເຈົ້າໜ້າທີ່ດ່ານໜ້າປະຕິບັດພັນທະຂອງຕົນບໍ່ໄດ້ ໂດຍສະເພາະໃນການນຳໃຊ້ຫຼັກການບໍ່ລົງໂທດ ເພື່ອນຳເອົາຜູ້ ຖືກເຄາະຮ້າຍເຂົ້າສູ່ຊ່ອງທາງການປົກປ້ອງ, ຜູ້ຖືກເຄາະຮ້າຍອາດຈະຖືກສົ່ງກັບຄືນປະເທດ ເຊິ່ງມັນກົງກັນຂ້າມກັບຫຼັກ ການບໍ່ລົງໂທດ. ຜູ້ຖືກເຄາະຮ້າຍ ຈະຖືກຈັບຕົວ ແລະ ດຳເນີນຄະດີຕໍ່ກັບເຂົາເຈົ້າ, ເຈົ້າໜ້າທີ່ດ້ານຍຸຕິທຳທາງອາຍາ ຈະເປັນ ບຸກຄົນຕໍ່ໄປທີ່ຈະລົງໂທດຜູ້ຖືກເຄາະຮ້າຍ ໂດຍບໍ່ຖືກຕ້ອງອີກ.

ໃນເວລາທີ່ພະນັກງານໄອຍະການ ມີເຫດຜົນອັນສົມຄວນທີ່ສົງໄສວ່າບຸກຄົນທີ່ເຂົາເຈົ້າກຳລັງດຳເນີນຄະດີ ເປັນຜູ້ຖືກເຄາະ ຮ້າຍ, ເຂົາເຈົ້າຄວນນຳໃຊ້ດຸນພິນິດຂອງພະນັກງານໄອຍະການ ໃນການບໍ່ດຳເນີນຄະດີ ຫຼື ຮຽກຮ້ອງໃຫ້ຢຸດຕິການດຳເນີນ ຄະດີ.

ໃນກໍລະນີທີ່ມີການສືບຕໍ່ດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ທະນາຍຄວາມທີ່ໃຫ້ການປົກປ້ອງ ແລະ ເປັນຜູ້ຕາງໜ້າໃຫ້ແກ່ຜູ້ຖືກເຄາະຮ້າຍ ຕ້ອງນຳໃຊ້ການປ້ອງກັນ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການຖືກຕັດສິນລົງໂທດ. ຜູ້ປະຕິບັດຕົວຈິງ ອາດຈະພິຈາລະນາໂອກາດອື່ນໆ ກ່ຽວກັບສະຖານະຂອງບຸກຄົນ ໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອປົກປ້ອງເຂົາເຈົ້າຈາກການຖືກລົງໂທດ.

ສະມາຊິກຂອງຝ່າຍຕຸລາການມີໂອກາດເພີ່ມເຕີມໃນການນຳໃຊ້ຫຼັກການບໍ່ລົງໂທດຢູ່ໃນສານ. ໂດຍຂຶ້ນກັບສະພາບການ ຂອງແຕ່ລະກໍລະນີ, ສານສາມາດຢຸດຕິການດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍ ຫຼື ຖ້າຫາກສານເລືອກທີ່ຈະດຳເນີນຄະດີ, ສານສາມາດຕັດສິນໃຈທີ່ຈະບໍ່ຕັດສິນລົງໂທດເຂົາເຈົ້າ, ຫຼື ຫຼຸດຜ່ອນໂທດໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຖ້າຫາກວ່າສານຕັດສິນລົງໂທດເຂົາເຈົ້າ.

18 ເບິ່ງທີ່ ການກະທຳໃນສິ່ງຕ່າງໆ ( inter alia), ຂໍ້ຕົກລົງລະດັບໂລກ ເພື່ອການເຄື່ອນຍ້າຍທີ່ປອດໄພ, ເປັນລະບຽບ, ເປັນປົກກະຕິ, UN Doc A/RES/73/195, 11 ມັງກອນ 2019, ຈຸດປະສົງທີ 7 ການແກ້ໄຂ ແລະ ຫຼຸດຜ່ອນຄວາມສ່ຽງຂອງການເຄື່ອນ ຍ້າຍຖິ່ນຖານ

**ໃນເວລາທີ່ຜູ້ຖືກເຄາະຮ້າຍຖືກຕັດສິນລົງໂທດ** (ພາກທີ 5)

ສຸດທ້າຍແລ້ວ, ເມື່ອເປັນທາງເລືອກສຸດທ້າຍ, ກໍລະນີທີ່ຜູ້ຖືກເຄາະຮ້າຍຖືກຕັດສິນລົງໂທດໂດຍບໍ່ຖືກຕ້ອງ ເຊິ່ງຂັດກັບຫຼັກ ການບໍ່ລົງໂທດ, ລັດສາມາດນຳໃຊ້ໂອກາດຕ່າງໆໃນການຍົກເລີກ ຫຼື ລຶບລ້າງການຕັດສິນລົງໂທດ ແລະ ໃຫ້ການປຽວຢາ ແກ່ຜູ້ຖືກເຄາະຮ້າຍຕໍ່ກັບການຖືກລົງໂທດທີ່ຜິດພາດນັ້ນ.

| ໂອກາດຕ່າງໆໃນການນຳໃຊ້ຫຼັກການບໍ່ລົງໂທດ | |
|---|---|
| ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ຖືກພົບເຫັນໂດຍເຈົ້າໜ້າທີ່ດ່ານໜ້າ | • ເຈົ້າໜ້າທີ່ດ່ານໜ້າ ນຳໃຊ້ຂໍ້ສົມມຸດຕິຖານການເປັນຜູ້ຖືກເຄາະຮ້າຍ ໂດຍສອດຄ່ອງກັບນະໂຍບາຍການກຳນົດຕົວ ໃນການກັ່ນກອງຜູ້ຖືກ ເຄາະຮ້າຍ<br>• ເຈົ້າໜ້າທີ່ດ່ານໜ້າ ໄດ້ມີການຫັນປ່ຽນທິດທາງການສັນນິຖານວ່າ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອອກຈາກການເຂົ້າ–ອອກ ເມືອງ ແລະ/ຫຼື ຂະບວນການຍຸຕິທຳ ເພື່ອນຳເຂົ້າສູ່ຊ່ອງທາງການປົກ ປ້ອງ<br>• ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ນຳໃຊ້ດຸນພິນິດ ທີ່ຈະບໍ່ຈັບຕົວ ຫຼື ຕັ້ງຂໍ້ກ່າວຫາແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕໍ່ກັບການມີສ່ວນ ຮ່ວມ ທີ່ກ່ຽວຂ້ອງກັບການກະທຳຜິດກົດໝາຍ |
| ໃນເວລາທີ່ຜູ້ຖືກເຄາະຮ້າຍຈາກການ ຄ້າມະນຸດປະເຊີນໜ້າກັບການຖືກ ກັກຂັງ, ສົ່ງກັບຄືນປະເທດ ຫຼື ການລົງໂທດກ່ຽວກັບການເຂົ້າ–ອອກເມືອງ ເຊິ່ງຂັດກັບຫຼັກການບໍ່ລົງໂທດ | • ເຈົ້າໜ້າທີ່ກວດຄົນເຂົ້າ–ອອກເມືອງ ທີ່ຮັບຮູ້ວ່າບຸກຄົນທີ່ຢູ່ໃນ ສະ ຖານທີ່ກັກຂັງໄດ້ຖືກສັນນິຖານວ່າອາດຈະເປັນຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ, ຕ້ອງປ່ອຍຕົວເຂົາເຈົ້າອອກຈາກສະຖານທີ່ ການເຂົ້າ –ອອກເມືອງ ແລະ ສົ່ງຕໍ່ເຂົາເຈົ້າໃຫ້ເຂົ້າສູ່ການປົກປ້ອງ<br>• ໃຫ້ການປົກປ້ອງດ້ານວີຊ່າແກ່ຜູ້ຖືກເຄາະຮ້າຍທີ່ເປັນຄົນຕ່າງປະເທດ ໃນເຂົ້າປະເທດຜິດກົດໝາຍ ເພື່ອໃຫ້ເຂົາເຈົ້າສາມາດອາໄສຢູ່ ໄດ້ໃນ ໄລຍະຊົ່ວຄາວ |
| ໃນເວລາທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄດ້ຖືກໄຕ່ສວນ ສຳລັບການກະທຳຜິດກົດໝາຍທີ່ເປັນຜົນມາຈາກການຖືກຄ້າມະນຸດ | • ພະນັກງານໄອຍະການນຳໃຊ້ດຸນພິນິດ ທີ່ຈະບໍ່ດຳເນີນຄະດີຕໍ່ກັບ ຜູ້ ຖືກເຄາະຮ້າຍ ຫຼື ຮ້ອງຂໍໃຫ້ມີການຢຸດຕິການດຳເນີນຄະດີ<br>• ທະນາຍຄວາມທີ່ໃຫ້ການປົກປ້ອງ ນຳໃຊ້ການປ້ອງກັນ ທີ່ມີຢູ່ໃນກົດ ໝາຍພາຍໃນເພື່ອປ້ອງກັນຜູ້ຖືກເຄາະຮ້າຍ ໃນການໄຕ່ສວນ ຕໍ່ກັບ ການກະທຳທີ່ຜິດກົດໝາຍທີ່ເຂົາເຈົ້າໄດ້ເຮັດ ເນື່ອງຈາກການຖືກຄ້າ ມະນຸດນັ້ນ<br>• ສານ ບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ<br>• ມີການຫຼຸດຜ່ອນໂທດ ຕໍ່ກັບການຕັດສິນລົງໂທດແກ່ຜູ້ຖືກເຄາະຮ້າຍ |
| ໃນເວລາທີ່ຜູ້ຖືກເຄາະຮ້າຍ ຖືກຕັດສິນລົງໂທດໂດຍບໍ່ຖືກຕ້ອງ | • ຍົກເລີກ, ລຶບລ້າງ ຫຼື ປິດລັບການບັນທຶກຄວາມຜິດທາງອາຍາ<br>• ຜູ້ຖືກເຄາະຮ້າຍ ໄດ້ເຂົ້າເຖິງການປຽວຢາຕໍ່ກັບການຕັດສິນລົງໂທດທີ່ ບໍ່ຖືກຕ້ອງ |

ລັດ ຄວນຮັບປະກັນວ່າມີກົນໄກໃນການຕິດຕາມການນຳໃຊ້ຫຼັກການບໍ່ລົງໂທດໃນທຸກທີ່ວຂະແໜງການ ທີ່ມີການພົວພັນ ກັນ ແລະ ຕ້ອງມີຄວາມຮັບຜິດຊອບຕໍ່ກັບບຸກຄົນທີ່ນຳໃຊ້ຫຼັກການດັ່ງກ່າວໂດຍບໍ່ຖືກຕ້ອງ ຫຼື ຫຼົ້ມເຫຼວ ຕໍ່ກັບການນຳໃຊ້ ຫຼັກການດັ່ງກ່າວໃນພາກປະຕິບັດຕົວຈິງ (ພາກທີ 6).

**ຄຳແນະນຳຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ**

ລັດຕ່າງໆ ຕ້ອງຮັບປະກັນວ່າ ຫຼັກການບໍ່ລົງໂທດແມ່ນຖືກນຳໃຊ້ກັບ:
(a) ການຄ້າມະນຸດທຸກຮູບແບບ ລວມທັງ ການຄ້າມະນຸດເພື່ອຈຸດປະສົງຂອງການຂູດຮີດທາງເພດ, ການຂູດຮີດແຮງງານ ແລະ ບັງຄັບໃຫ້ກະທຳຜິດທາງອາຍາ; ລວມທັງ ການຄ້າມະນຸດພາຍໃນ ແລະ ລະຫວ່າງປະເທດ;
(b) ທຸກໆການກະທຳທີ່ຜິດກົດໝາຍ ທີ່ກະທຳໂດຍຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນຜົນກະທົບ ໂດຍກົງຈາກສະ ຖານະການຖືກຄ້າມະນຸດນັ້ນ ໂດຍບໍ່ກ່ຽວຂ້ອງກັບຄວາມຮ້າຍແຮງ ຫຼື ຄວາມຮຸນແຮງຈາກການກະທຳຜິດ ດັ່ງກ່າວ.
(c) ຄວາມຜິດທາງອາຍາ, ທາງແພ່ງ, ທາງປົກຄອງ ແລະ ການເຂົ້າ–ອອກເມືອງ ລວມທັງ ການລົງໂທດຮູບແບບອື່ນໆ ເຊັ່ນ ການຖືກຖອນສັນຊາດໂດຍບໍ່ຖືກຕ້ອງ, ການຖືກປະເສດການຊ່ວຍເຫຼືອຈາກກົງສູນ ຫຼື ການຖືກເນລະເທດກັບຄືນປະເທດ, ການຖືກແຍກອອກຈາກສະຖານະພາບການອົບພະຍົບ ຫຼື ຮູບແບບການປົກປ້ອງລະຫວ່າງປະເທດອື່ນໆ ແລະ ຖືກແຍກອອກຈາກຄອບຄົວ
(d) ສະຖານະການໃດໜຶ່ງ ທີ່ຖືກຈຳກັດດ້ານອິດສະລະພາບ, ລວມທັງ ການກັກຂັງໃນສະຖານທີ່ເຂົ້າ–ອອກເມືອງ ແລະ ກັກຂັງເພື່ອລໍຖ້າເຄື່ອນຍ້າຍ ຫຼື ສົ່ງຕົວກັບຄືນປະເທດ.[19]

## *ໃຜມີໜ້າທີ່ຮັບຜິດຊອບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ?*

ລັດທີ່ເປັນພາຄີຕໍ່ກັບກົດໝາຍສາກົນ ແລະ ກົດໝາຍໃນລະດັບພາກພື້ນ ແລະ ຜູ້ທີ່ມີໜ້າທີ່ຮັບຜິດຊອບ ໃນການປົກປ້ອງຜູ້ ຖືກເຄາະຮ້າຍຈາກການຄ້າມະນຸດ, ການດຳເນີນຄະດີຕໍ່ກັບຜູ້ຄ້າມະນຸດ ແລະ ການໃຫ້ການຮ່ວມມືຈົນສິ້ນສຸດຄະດີ. ເຈົ້າໜ້າ ທີ່ລັດຍັງມີໜ້າທີ່ຮັບຜິດຊອບນຳໃຊ້ຫຼັກການບໍ່ລົງໂທດ ໂດຍສອດຄ່ອງກັບພັນທະສາກົນ ແລະ ພາກພື້ນ, ໂດຍຂຶ້ນກັບກົດ ໝາຍພາຍໃນ, ລະບຽບການ, ນິຕິກຳ ແລະ ພາກປະຕິບັດຕົວຈິງຂອງບັນດາສະມາຊິກອາຊຽນ.

ພາກສ່ວນທີ່ກ່ຽວຂ້ອງອື່ນໆ ລວມທັງ ໜ່ວຍງານຕ່າງໆຂອງຄະນະກຳມະການອາຊຽນ, CSOs, ອົງການຈັດຕັ້ງສາກົນທີ່ບໍ່ ສັງກັດລັດຖະບານ (NGOs), ແລະ ອົງການຈັດຕັ້ງສາກົນ ທີ່ອາດຈະສາມາດໃຫ້ການສະໜັບສະໜູນລັດ ໃນການປະຕິບັດ ພັນທະດັ່ງກ່າວ ແຕ່ສຸດທ້າຍແລ້ວ ລັດກໍ່ເປັນຜູ້ທີ່ມີໜ້າທີ່ຮັບຜິດຊອບຕໍ່ພັນທະດັ່ງກ່າວ.

### ເຈົ້າໜ້າທີ່ລັດ

ຄວາມແຕກຕ່າງ ດ້ານນິຕິກຳ, ບົດບາດໜ້າທີ່ ແລະ ອຳນາດ ຂອງຕຳຫຼວດ, ພະນັກງານໄອຍະການ ແລະ ສານ, ແລະ ຄຸນຄ່າ ແລະ ທຳນຽມປະຕິບັດຂອງລະບົບຍຸຕິທຳທາງອາຍາ, ທັງໝົດນີ້ມີອິດທິພົນຕໍ່ກັບຫຼັກການບໍ່ລົງໂທດ ທີ່ຈະຖືກຕີຄວາມໝາຍ ແລະ ຖືກນຳໃຊ້ ໃນແຕ່ລະລັດທີ່ແຕກຕ່າງກັນ. ໂດຍອີງຕາມຄວາມແຕກຕ່າງເຫຼົ່ານີ້, ເຈົ້າໜ້າທີ່ກວດຄົນເຂົ້າ–ອອກເມືອງ ແລະ ເຈົ້າໜ້າທີ່ກົງສູນ, ເຈົ້າໜ້າທີ່ກວດສອບດ້ານແຮງງານ ແລະ ເຈົ້າໜ້າທີ່ຕຳຫຼວດ ຜູ້ທີ່ຕິດຕໍ່ພົວພັນກັບຜູ້ຖືກເຄາະຮ້າຍ ລ້ວນແລ້ວແຕ່ພາລະໜ້າທີ. ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ, ທະນາຍຄວາມທີ່ໃຫ້ການປົກປ້ອງ ແລະ ສະມາຊິກຝ່າຍຕຸລາການ – ທັງໝົດນີ້ມີບົດບາດທີ່ສຳຄັນໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການຖືກລົງໂທດ ແລະ ຄວນຄະນີທັກສະ, ຊັບພະຍາກອນ ແລະ ຄວາມສາມາດໃນການປະຕິບັດໜ້າທີ່ດັ່ງກ່າວ.

### ໜ່ວຍງານຕ້ານການຄ້າມະນຸດ

ໜ່ວຍງານຕ່າງໆທີ່ເປັນໜ່ວຍງານລະຫວ່າງລັດ ມີໜ້າທີ່ຮັບຜິດຊອບໃນການຕ້ານການຄ້າມະນຸດ ເຊິ່ງມີບົດບາດທີ່ສຳຄັນຕໍ່ ກັບການບໍ່ລົງໂທດ. ເຂົາເຈົ້າອາດຈະມີພັນທະຕາມກົດໝາຍ ໃນການຮັບປະກັນວ່າພາກສ່ວນຕ່າງໆທີ່ກ່ຽວຂ້ອງທີ່ປະເຊີນ ໜ້າກັບ ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍໃນໜ້າວຽກຂອງເຂົາເຈົ້າ, ຮູ້ວ່າການຄ້າມະນຸດແມ່ນຫຍັງ, ຮູ້ວ່າຕ້ອງສົ່ງຕໍ່ຜູ້ທີ່ອາດ ຈະເປັນຜູ້ຖືກເຄາະຮ້າຍໂດຍຜ່ານກົນໄກການສົ່ງຕໍ່ລະດັບຊາດ. ກໍລະນີທີ່ບໍ່ມີກົນໄກການສົ່ງຕໍ່ລະດັບຊາດທີ່ມີປະສິດທິພາບ, ຕ້ອງມີຄວາມຊັດເຈນວ່າ ໃຜທີ່ສາມາດຕິດຕໍ່ປະສານງານໄດ້ ເພື່ອໃຫ້ການສະໜັບສະໜູນໃນການປ້ອງກັນ ການກຳນົດຕົວ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ໜ່ວຍງານຕ້ານການຄ້າມະນຸດ ມີບົດບາດສຳຄັນໃນການສ້າງຄວາມອາດສາມາດໃຫ້ແກ່ປະເທດຕົນ ໃນການນຳໃຊ້ຫຼັກ ການບໍ່ລົງໂທດ. ເຊິ່ງວຽກດັ່ງກ່າວ ອາດຈະລວມມີການອອກຄຳແນະນຳ, ຈັດການຝຶກອົບຮົມ ແລະ ການໃຫ້ຄຳແນະນຳ ເພື່ອສ້າງຄວາມອາດສາມາດໃຫ້ແກ່ຜູ້ປະຕິບັດຕົວຈິງໃນວຽກງານທີ່ມີຄວາມຊ່ຽວຊານ ແລະ ບໍ່ມີຄວາມຊ່ຽວຊານ ສະເພາະ ດ້ານໃນປະເທດຕົນເອງ ເພື່ອໃຫ້ມີຄວາມເຂົ້າໃຈທີ່ດີຕໍ່ກັບ ການຄ້າມະນຸດ, ການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ການນຳ ໃຊ້ຫຼັກການບໍ່ລົງໂທດ.

19 ແຫຼ່ງຂໍ້ມູນ: ບົດລາຍງານການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, Siobhán Mullally, UN Doc. A/HRC/47/34, 17 ພຶດສະພາ 2021, [57]

**ກ່ອງຂໍ້ມູນ: ໜ່ວຍງານຕ້ານການຄ້າມະນຸດລະດັບຊາດ**

| | |
|---|---|
| ປະເທດບຣູໄນ້ | ຄະນະກຳມະການແຫ່ງຊາດວ່າດ້ວຍການຕ້ານການຄ້າມະນຸດ |
| ປະເທດກຳປູເຈຍ | ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຄ້າມະນຸດ |
| ປະເທດອິນໂດເນເຊຍ | ຄະນະສະເພາະກິດ ເພື່ອປ້ອງກັນ ແລະ ຮັບມືກັບການກະທຳຜິດທາງອາຍາ ກ່ຽວກັບການຄ້າມະນຸດ (Gugus Tugas TPPO) |
| ສປປ ລາວ | ຄະນະກຳມະການແຫ່ງຊາດເພື່ອຕ້ານການຄ້າມະນຸດ (NSC) |
| ປະເທດມາເລເຊຍ | ສະພາວ່າດ້ວຍການຕ້ານການຄ້າມະນຸດ ແລະ ການລັກລອບເຂົ້າ–ອອກເມືອງ ຢ່າງຜິດກົດໝາຍ (NSO MAPO) |
| ປະເທດມຽນມາ | ໜ່ວຍງານຂັ້ນສູນກາງ ເພື່ອສະກັດກັ້ນການຕ້ານການຄ້າມະນຸດ (CBTIP) |
| ປະເທດຟີລິບປິນ | ໜ່ວຍງານເພື່ອຕ້ານການຄ້າມະນຸດ (IACAT) |
| ປະເທດສິງກະໂປ | ຄະນະສະເພາະກິດລະຫວ່າງໜ່ວຍງານຕ່າງໆ ເພື່ອຕ້ານການຄ້າມະນຸດ (TIP-TF) |
| ປະເທດໄທ | ຄະນະກຳມະການເພື່ອຕ້ານການຄ້າມະນຸດ (ຄະນະກຳມະການ ATP) |
| ປະເທດຫວຽດນາມ | ຄະນະກຳມະການລະດັບຊາດວ່າດ້ວຍການປ້ອງກັນ ແລະ ສະກັດກັ້ນອາຊະຍາກຳ (NSC) |

## ສະຖາບັນສິດທິມະນຸດແຫ່ງຊາດ

ສະຖາບັນສິດທິມະນຸດແຫ່ງຊາດ ມີບົດບາດທີ່ສຳຄັນໃນການຮັບປະກັນວ່າ ລັດໄດ້ປະຕິບັດພັນທະດ້ານສິດທິມະນຸດຂອງ ຕົນຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ວຽກງານດັ່ງກ່າວ ລວມມີ ການຕິດຕາມ ແລະ ການລາຍງານ ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງ ໃຫ້ຄຳແນະນຳແກ່ໜ່ວຍງານພາກລັດກ່ຽວ ກັບວິທີການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດດັ່ງກ່າວ ໂດຍສອດຄ່ອງກັບກົດໝາຍສາກົນ ວ່າດ້ວຍສິດທິມະນຸດ.

ເພື່ອເຮັດໃຫ້ສະຖາບັນສິດທິມະນຸດ ແຫ່ງຊາດ ຖືກຮັບຮູ້ໂດຍປະຊາຄົມສາກົນ, ເຂົາເຈົ້າຕ້ອງປະຕິບັດຕາມມາດຕະຖານ ຕາມທີ່ກຳນົດໄວ້ ໃນຫຼັກການປາຣີ ທີ່ກ່ຽວຂ້ອງກັບສະຖານະຂອງສະຖາບັນແຫ່ງຊາດ (ຫຼັກການປາຣີ), ທີ່ຖືກຮັບຮອງ ໂດຍສະມັດຊາໃຫຍ່ ໃນປີ 1993.[20] ໃນພາກພື້ນອາຊີປາຊີຟິກ, ມີສະຖາບັນສິດທິມະນຸດແຫ່ງຊາດ ຫຼາຍສະຖາບັນ ທີ່ໄດ້ ຮັບຄວາມໜ້າເຊື່ອຖື ແລະ ຮັບຮອງໂດຍອີງການພັນທະມິດສາກົນວ່າດ້ວຍສະຖາບັນສິດທິມະນຸດແຫ່ງຊາດ. ໃນພາກພື້ນ ອາຊຽນ, ໃນເດືອນ ທັນວາ ປີ 2024, ມີຄະນະກຳມະທິການວ່າດ້ວຍສິດທິມະນຸດໃນປະເທດອິນໂດເນເຊຍ, ຄະນະກຳມະທິ ການວ່າດ້ວຍສິດ ທິມະນຸດຂອງມາເລເຊຍ, ຄະນະກຳມະທິການວ່າດ້ວຍສິດທິມະນຸດຂອງຟີລິບປິນ ແລະ ຄະນະກຳມາທິ ການວ່າດ້ວຍ ສິດທິມະນຸດແຫ່ງປະເທດໄທ.[21] ສະຖາບັນເຫຼົ່ານີ້, ລວມທັງ ຄະນະກຳມະທິການວ່າດ້ວຍຄວາມຍຸຕິທຳມະນຸດຂອງປະເທດຕີມໍເຣດເຕ້, ແມ່ນຖືກຮັບຮູ້ໃນຖານະເປັນຄູ່ຮ່ວມງານຂອງ AICHR ແລະ ໄດ້ໃຫ້ຄຳປຶກສາຕໍ່ວຽກງານຕ່າງໆຂອງ AICHR ໃນການສົ່ງເສີມສິດທິມະນຸດໃນພາກພື້ນ.

20 ສາມາດເຂົ້າເບິ່ງ ຫຼັກການປາຣີ ໄດ້ທີ່: https://www.ohchr.org/en/instruments-mechanisms/instruments/principles-relating-status-national-institutions-paris

21 ຕາຕະລາງສະຖານະພາບຂອງສະຖາບັນແຫ່ງຊາດ ທີ່ໄດ້ຮັບການຮັບຮອງຈາກ ພັນທະມິດລະດັບ ໂລກສະຖາບັນສິດທິມະນຸດແຫ່ງຊາດ, ໄດ້ຮັບຮອງສະຖານະພາບໃນວັນທີ 31 ທັນວາ 2024 ເບິ່ງຂໍ້ມູນໄດ້ທີ່ https://www.ohchr.org/en/documents/tools-and-resources/current-chart-accreditation-nhris

## ບົດບາດຂອງໜ່ວຍງານທີ່ບໍ່ແມ່ນພາກລັດ

ອົງການຈັດຕັ້ງທາງສັງຄົມ (CSOs), ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (NGOs) ແລະ ອົງການຈັດຕັ້ງສາກົນ (IOs) ສາມາດໃຫ້ການສະໜັບສະໜູນລັດໃນການປະຕິບັດພັນທະຂອງຕົນ ໃນການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ນຳ ໃຊ້ຫຼັກການບໍ່ລົງໂທດ. ເຂົາເຈົ້າສາມາດແບ່ງປັນຜົນຂອງບົດສຶກສາຄົ້ນຄ້ວາ ລວມທັງ ປະສົບການ ແລະ ຄວາມຊ່ຽວຊານຂອງເຂົາເຈົ້າ ໃນການເຮັດວຽກຮ່ວມກັບຜູ້ຖືກເຄາະຮ້າຍທີ່ຖືກໂທດທາງອາຍາ. ເຂົາເຈົ້າສາມາດແບ່ງປັນຂໍ້ມູນແບບລົງເລິກ ກ່ຽວກັບທ່າອ່ຽງຂອງການຄ້າມະນຸດທີ່ພົ້ນເດັ່ນ ທີ່ອາດຈະຕິດພັນກັບການຫຼຸດຜ່ອນຄວາມສ່ຽງໃນການລົງໂທດ ທີ່ສາມາດ ໃຫ້ການສະໜັບສະໜູນແກ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ໃນການກຳນົດຕົວຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນຂົງເຂດທີ່ເຂົາເຈົ້າເຮັດວຽກ.

ໜ່ວຍງານທີ່ບໍ່ແມ່ນພາກລັດ ອາດຈະສາມາດໃຫ້ການສະໜັບສະໜູນ ການສ້າງຄວາມອາດສາມາດໃຫ້ແກ່ຜູ້ປະຕິບັດຕົວ ຈິງ ໃນການນຳໃຊ້ຫຼັກການບໍ່ລົງໂທດໃນພາກປະຕິບັດຕົວຈິງ. ເຂົາເຈົ້າມີບົດບາດສຳຄັນ ໃນການຕິດຕາມການປະຕິບັດຕໍ່ຜູ້ຖືກເຄາະຮ້າຍ ຕະຫຼອດໄລຍະເວລາທີ່ຜູ້ຖືກເຄາະຮ້າຍຕິດຕໍ່ພົວພັນກັບເຈົ້າໜ້າທີ່ກວດຄົນເຂົ້າ-ອອກເມືອງ ແລະ ລະບົບຍຸຕິທຳທາງອາຍາ, ແລະ ຮັບປະກັນວ່າມີການຍຶດໝັ້ນຕໍ່ກັບຫຼັກການບໍ່ລົງໂທດ.

## ພາກທີ 2

# ການສ້າງຄວາມເຂັ້ມແຂງດ້ານນິຕິກຳ ເພື່ອຍຶດໝັ້ນຫຼັກການບໍ່ລົງໂທດ

## ພາກທີ 2. ການສ້າງຄວາມເຂັ້ມແຂງດ້ານນິຕິກຳ ເພື່ອຍຶດໝັ້ນຫຼັກການບໍ່ລົງໂທດ

ລັດມີຫຼາຍກາລະໂອກາດ ເພື່ອສ້າງຄວາມເຂັ້ມແຂງໃນການຕ້ານການຄ້າມະນຸດ ແລະ ນິຕິກຳອື່ນໆ ເພື່ອຍຶດໝັ້ນຫຼັກການ ບໍ່ລົງໂທດ.

ລັດຄວນພິຈາລະນາປັບປຸງຄຳນິຍາມການຄ້າມະນຸດ ເພື່ອໃຫ້ກວມເອົາການຂູດຮີດໃນການກະທຳຜິດທາງອາຍາ ທີ່ເປັນຮູບ ແບບການຄ້າມະນຸດທີ່ຊັດເຈນຂຶ້ນ. ຄຳນິຍາມການຄ້າມະນຸດ ທີ່ກວມເອົາຈຸດປະສົງຂອງການຂູດຮີດນີ້ ສາມາດລຶບລ້າງ ຄວາມສົງໄສຂອງເຈົ້າໜ້າທີ່ດ່ານໜ້າ ທີ່ເປັນຄົນກັ່ນກອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ເຮັດໃຫ້ເຂົາເຈົ້າຕື່ນຕົວ ຂຶ້ນຕື່ມເຖິງຄວາມເປັນໄປໄດ້ທີ່ວ່າບຸກຄົນທີ່ເຂົາເຈົ້າໄດ້ພົບເຫັນໃນຖານະເປັນຜູ້ກະທຳຜິດນັ້ນ ອາດຈະຖືກຄ້າມະນຸດມາ. ຄຳນິຍາມ ທີ່ກວມເອົາການບັງຄັບໃຫ້ກະທຳຜິດທາງອາຍາ ເຊິ່ງເປັນຮູບແບບໜຶ່ງຂອງການຂູດຮີດ ຍັງຊ່ວຍຫຼີກລ້ຽງຄວາມ ຈຳເປັນຂອງພະນັກງານໄອຍະການທີ່ຕ້ອງກຳນົດປະເພດຂອງການຂູດຮີດ (ຕົວຢ່າງ ການບັງຄັບໃຊ້ແຮງງານ ຫຼື ການບໍລິ ການ, ການເປັນຂ້າທາດ, ການຖືກປະຕິບັດຄ້າຍຄືກັບເປັນທາດ ຫຼື 'ຮູບແບບອື່ນໆ') ນຳໃຊ້ໃນສະຖານະການໃດ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຖືກຂູດຮີດໃນການກະທຳຜິດທາງອາຍາ.

ລັດຄວນພິຈາລະນາ ປະກາດໃຊ້ຂໍ້ກຳນົດສະເພາະກ່ຽວກັບການບໍ່ລົງໂທດໃນນິຕິກຳວ່າດ້ວຍການຕ້ານການຄ້າມະນຸດ. ຂໍ້ກຳ ນົດເຫຼົ່ານີ້ ຄວນປົກປ້ອງຜູ້ຖືກເຄາະຮ້າຍທຸກຄົນຈາກການຖືກລົງໂທດ ສຳລັບການກະທຳທີ່ຜິດກົດໝາຍ ທີ່ເຂົາເຈົ້າໄດ້ພົວ ພັນກັບການໃນເວລາຖືກຄ້າມະນຸດ. ຂໍ້ກຳນົດດັ່ງກ່າວ ສາມາດສ້າງຄວາມເຂັ້ມແຂງໃຫ້ແກ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ໃນການຕັດສິນໃຈທີ່ຈະບໍ່ຈັບຕົວ, ພະນັກງານໄອຍະການນຳໃຊ້ດຸນພິນິດຂອງຕົນ ທີ່ຈະບໍ່ດຳເນີນຄະດີ ແລະ ທະນາຍຄວາມທີ່ໃຫ້ການປົກປ້ອງ ໃຫ້ການປ້ອງກັນຜູ້ຖືກເຄາະຮ້າຍ–ຜູ້ກະທຳຜິດ ທີ່ເຂົາເຈົ້າເປັນຜູ້ຕາງໜ້າໃຫ້.

ນອກນັ້ນ, ຍັງມີໂອກາດຕ່າງໆ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ນິຕິກຳອື່ນ ນອກຈາກ ນິຕິກຳສະເພາະການຄ້າມະນຸດ ເພື່ອ ປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດທຸກຮູບແບບ. ໂອກາດເຫຼົ່ານີ້ ກ່ຽວຂ້ອງກັບຄວາມຜິດທີ່ຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ ມັກຈະຢູ່ໃນກຸ່ມສ່ຽງທີ່ຈະຖືກລົງໂທດ; ອາຍຸຕໍ່າສຸດຕໍ່ກັບຄວາມຮັບຜິດຊອບທາງອາຍາ ແລະ ກົດໝາຍໃນ ການຍົກເລີກ, ລຶບລ້າງ ຫຼື ປິດລັບການບັນທຶກຄວາມຜິດທາງອາຍາຂອງຜູ້ຖືກເຄາະຮ້າຍ.

### [1] ສ້າງຄວາມເຂັ້ມແຂງໃຫ້ແກ່ນິຕິກຳກ່ຽວກັບການຕ້ານການຄ້າມະນຸດ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ.

ລັດ ໄດ້ຮັບການຊຸກຍູ້ໃຫ້ມີຂໍ້ກຳນົດກ່ຽວກັບຫຼັກການບໍ່ລົງໂທດໃນນິຕິກຳພາຍໃນຂອງຕົນ ເພື່ອສົ່ງເສີມໃຫ້ແກ່ການປ້ອງ ກັນໃນກົດໝາຍທີ່ມີຢູ່. ຂອບເຂດຕໍ່ກັບສິ່ງທີ່ຫຼັກການບໍ່ລົງໂທດ ຄວນຖືກນຳໃຊ້ໂດຍບໍ່ມີຂໍ້ຈຳກັດ; ເຊິ່ງຄວນຖືກໃຊ້ກັບຜູ້ ຖືກເຄາະຮ້າຍທຸກຄົນ ບົນພື້ນຖານບໍ່ມີການຈຳແນກ ໂດຍບໍ່ກ່ຽວຂ້ອງກັບປະເພດຂອງການຄ້າມະນຸດທີ່ເຂົາເຈົ້າຖືກຄ້າມະ ນຸດ ແລະ ປະເພດຂອງການກະທຳທີ່ຜິດກົດໝາຍທີ່ເຂົາເຈົ້າໄດ້ມີສ່ວນຮ່ວມ ທີ່ເປັນຜົນມາຈາກການຄ້າມະນຸດ.

### ຄົ້ນຄວ້າການປັບປຸງຄຳນິຍາມການຄ້າມະນຸດ ເພື່ອກວມເອົາການຂູດຮີດທີ່ເປັນການກະທຳຜິດທາງ

ຄຳນິຍາມການຄ້າມະນຸດ ໃນກົດໝາຍສາກົນ ແລະ ກົດໝາຍລະດັບພາກພື້ນຂອງອາຊຽນ ກວມເອົາຮູບແບບຂອງການ ຂູດຮີດ: ການຂູດຮີດທີ່ເປັນການບັງຄັບໃຫ້ເປັນໂສເພນີ ຫຼື ຮູບແບບອື່ນຂອງການຂູດຮີດທາງເພດ; ການບັງຄັບໃຊ້ແຮງ ງານ ຫຼື ການບັງຄັບໃຊ້ການບໍລິການ, ການເປັນຂ້າທາດ ຫຼື ປະຕິບັດໃຫ້ເປັນຄືກັບຂ້າທາດ; ການເປັນທາດ ຫຼື ການຕັດອະ ໄວຍະວະຂອງຮ່າງກາຍ. ສິ່ງເຫຼົ່ານີ້ ຖືກກຳນົດເປັນຂັ້ນຕໍ່າສຸດ, ໝາຍຄວາມວ່າ ລັດສາມາດກວດເອົາຮູບແບບອື່ນໆໄດ້ ແລະ ແກ້ໄຂໃນນິຕິກຳຂອງຕົນ ເພື່ອກຳນົດຮູບແບບອື່ນໆສະເພາະໄດ້. ຕົວຢ່າງ, ປະເທດມາເລເຊຍ ໄດ້ກຳນົດໄວ້ວ່າ 'ການກະທຳ ໃດໜຶ່ງທີ່ຜິດກົດໝາຍ' ທີ່ເປັນຮູບແບບຂອງການຂູດຮີດ ເພື່ອກວມເອົາສະຖານະການຂອງຜູ້ຖືກເຄາະຮ້າຍທີ່ຖືກຂູດຮີດ ໃນການກະທຳຜິດທາງອາຍາ. ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ໃນຫວຽດນາມ (ປະກາດໃຊ້ໃນເດືອນ ພະຈິກ ປີ 2024 ແລະ ມີຜົນບັງຄັບໃຊ້ໃນ ວັນທີ 1 ກໍລະກົດ ປີ 2025) ໄດ້ກວມເອົາ 'ການບັງຄັບຜູ້ຖືກເຄາະຮ້າຍໃຫ້ກະທຳຜິດທາງ ອາຍາ' ເພື່ອຈຸດປະສົງທີ່ບໍ່ມີມະນຸດສະທຳໃນການຄ້າມະນຸດ.

ບັນດາປະເທດສະມາຊິກອາຊຽນປະເທດອື່ນໆ ສາມາດປັບປຸງກົດໝາຍວ່າດ້ວຍການຄ້າມະນຸດຂອງຕົນ ໃຫ້ມີຄວາມ ຊັດເຈນຂຶ້ນ ດ້ວຍການກຳນົດເອົາການກະທຳຜິດທາງອາຍາ ເປັນຮູບແບບໜຶ່ງຂອງການຂູດຮີດໃນຄຳນິຍາມການຄ້າມະ ນຸດ. ການກວມເອົາການກະທຳຜິດກົດໝາຍ ເປັນຮູບແບບການຂູດຮີດສະເພາະ ຈະຊ່ວຍສະໜັບສະໜູນເຈົ້າໜ້າທີ່ດ່ານ ໜ້າ ແລະ ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ໃນການກຳນົດຄະດີຄ້າມະນຸດໃຫ້ມີປະສິດທິພາບ.

ກໍລະນີ ບໍ່ມີການກຳນົດການຂູດຮີດ ເປັນການກະທຳຜິດທາງອາຍາ ຫຼື ບັງຄັບໃຫ້ກະທຳຜິດທາງອາຍາ ທີ່ເປັນຮູບແບບ ການຂູດຮີດທີ່ຊັດເຈນ ເພື່ອກຳນົດໄວ້ໃນຄຳນິຍາມການຄ້າມະນຸດ, ຜູ້ປະຕິບັດຕົວຈິງດ້ານຍຸຕິທຳທາງອາຍາ ຕ້ອງເຂົ້າໃຈວິ ທີການທີ່ຈະກວມເອົາສະຖານະການທີ່ມີຢູ່ ທີ່ເປັນຮູບແບບຂອງການຄ້າມະນຸດນັ້ນ, ບໍ່ວ່າຈະເປັນການບັງຄັບໃຊ້ແຮງງານ ຫຼື ການບໍລິການ, ການເປັນຂ້າທາດ ຫຼື ການປະຕິບັດຄືກັບຂ້າທາດ ຫຼື ຮູບແບບ 'ອື່ນ'. ກໍລະນີທີ່ນິຕິກຳມີການກຳນົດລາຍການກ່ຽວກັບ ຄວາມຜິດ ເຊິ່ງເປັນຂໍ້ກຳນົດລາຍການທີ່ຈະມີການນຳໃຊ້, ລາຍການດັ່ງກ່າວ ຄວນຖືກກຳນົດໄວ້ໃຫ້ຄົບຖ້ວນ.[22]

## ກ່ອງຂໍ້ມູນ: ຕົວຢ່າງ (ປະເທດອົດສະຕຣາລີ)

ປະເທດອົດສະຕຣາລີ ບໍ່ໄດ້ກຳນົດເອົາການຂູດຮີດໃນການກະທຳຜິດທາງອາຍາເປັນຮູບແບບຫນຶ່ງຂອງການຂູດຮີດ ໃນຄຳນິຍາມ ຂອງການຄ້າມະນຸດ. ການທົບທວນກົດໝາຍຂອງປະເທດດັ່ງກ່າວ ເຫັນວ່າ "ຄຳນິຍາມຂອງປະເທດອົດ ສະຕຣາລີກ່ຽວ ກັບການຂູດຮີດ ນັ້ນ ຄ້າຍຄືວ່າໄດ້ກວມເອົາ 'ການຂູດຮີດ ໃນການກະທຳຜິດທາງອາຍາ' ແລ້ວ ເນື່ອງຈາກວ່າ ຮູບແບບການ ຂູດຮີດດ້ານແຮງງານ ທີ່ກ່ຽວຂ້ອງກັບຄຳນິຍາມສາມາດກວມເອົາທັງ ສິ່ງທີ່ຖືກກົດໝາຍ ແລະ ຜິດກົດໝາຍ ຫຼື ຮູບແບບ ການບໍລິການ ແລະ ການໃຊ້ແຮງງານທີ່ຜິດກົດໝາຍ. ເຖິງຢ່າງໃດກໍຕາມ, ຄວາມຊັດເຈນໃນປະໂຫຍກດັ່ງກ່າວ ທີ່ໄດ້ກຳ ນົດໄວ້ສະເພາະກ່ຽວກັບການຂູດຮີດນັ້ນ ສາມາດກວມ ເອົາການຂູດຮີດຕ່າງໆ ທີ່ອາດຈະສົ່ງ ຜົນຕໍ່ຫຼັກການບໍ່ລົງໂທດໄດ້ ດີຂຶ້ນກວ່າເກົ່າ."[23]

ບົດຮຽນທີ່ສາມາດຖອດຖອນໄດ້ຈາກວິທີການອອກນິຕິກຳໃນພາກພື້ນອື່ນ. ປະເທດຕ່າງໆໃນສະຫະພາບເອີຣົບ ເຫັນວ່າ ຄວາມຊັດເຈນ ໃນການລວມເອົາການກະທຳຜິດທາງອາຍາວ່າເປັນຮູບແບບຂອງການຂູດຮີດ ເປັນປະໂຫຍດ ໃນການທີ່ຈະ ຊ່ວຍໃຫ້ຜູ້ປະຕິບັດຕົວຈິງ ກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄດ້ຢ່າງມີປະສິດທິພາບ.[24] ໃນສະຫະພາບເອີຣົບ, ຄຳແນະນຳຂອງສະຫະພາບເອີຣົບ ເລກທີ 2011/36/EU9 (EU Directive 2011/36/EU9) ມີການຮັບຮູ້ສະເພາະກ່ຽວກັບປະກົດການທີ່ຜູ້ຄ້າມະນຸດທີ່ມີຕໍ່ຜູ້ຖືກເຄາະຮ້າຍ ດ້ວຍການບັງຄັບໃຫ້ກະທຳຜິດທາງອາຍາ ເຊິ່ງເປັນຮູບແບບໜຶ່ງ ຂອງການຂູດຮີດທີ່ໄດ້ກວມຢູ່ໃນຄຳນິຍາມຂອງການຄ້າມະນຸດ.[25] ຄຳແນະນຳຂອງສະຫະພາບເອີຣົບ ກວມເອົາ 'ການຂູດ ຮີດບຸກຄົນໃດໜຶ່ງເພື່ອໃຫ້ກະທຳ, ກະທຳໃນລະຫວ່າງສິ່ງຕ່າງໆ (inter alia), ການລັກກະເປົາເງິນ, ການລັກເຄື່ອງໃນ ຮ້ານຄ້າ, ການຄ້າຂາຍຢາເສບຕິດ ແລະ ການກະທຳອື່ນໆທີ່ມີລັກສະນະຄ້າຍຄືກັນ ທີ່ຈະຖືກລົງໂທດ ຫຼື ມີຜົນປະໂຫຍດ ທາງດ້ານການເງິນ".[26] ຄຳແນະນຳຍັງອະທິບາຍເພີ່ມເຕີມວ່າ ບັນດາປະເທດສະມາຊິກ ຄວນປົກປ້ອງຜູ້ຖືກເຄາະຮ້າຍຈາກ ການດຳເນີນຄະດີ ຫຼື ການລົງໂທດ ສຳລັບການກະທຳທີ່ຜິດກົດໝາຍ ເຊັ່ນ ການນຳໃຊ້ເອກະສານປອມ, ຄວາມຜິດຕາມທີ່ ກຳນົດໄວ້ໃນກົດໝາຍວ່າດ້ວຍການເປັນໂສເພນີ ຫຼື ການເຂົ້າ–ອອກເມືອງ, ທີ່ເຂົາເຈົ້າຖືກບັງຄັບໃຫ້ກະທຳ ອັນເປັນຜົນສະ ທ້ອນໂດຍກົງຈາກການຖືກຄ້າມະນຸດ.[27]

ຄຳແນະນຳສະບັບປີ 2011 ນີ້ ໄດ້ຮັບການປັບປຸງ ໂດຍຄຳແນະນຳຂອງສະຫະພາບເອີຣົບ ສະບັບ 2024/1712 (EU Directive 2024/1712) ເຊິ່ງມີຜົນບັງຄັບໃຊ້ໃນວັນທີ 14 ກໍລະກົດ ປີ 2024. ຄຳແນະນຳສະບັບໃໝ່ ໄດ້ຂະຫຍາຍ ຂອບເຂດການຂູດຮີດໃຫ້ກວ້າງຂວາງຂຶ້ນ (ເພື່ອກວມເອົາການຂູດຮີດກ່ຽວກັບການໃຫ້ຖືພາແທນ, ການບັງຄັບແຕ່ງງານ ແລະ ການຮັບເອົາເດັກເປັນລູກລ້ຽງໂດຍຜິດກົດໝາຍ) ແຕ່ຍັງຮັກສາຮູບແບບເກົ່າໄວ້ ລວມທັງ 'ການຂູດຮີດໃຫ້ກະ ທຳຜິດທາງອາຍາ.' ຄຳແນະນຳສະບັບປີ 2024 ສະແດງໃຫ້ເຫັນເຖິງຄວາມເປັນກັງວົນສະເພາະຕໍ່ກຸ່ມເປົ້າໝາຍທີ່ເປັນເດັກ ທີ່ກຸ່ມອາຊະຍາກຳນຳໃຊ້ເຂົາເຈົ້າໃຫ້ກະທຳຜິດທາງອາຍາ.[28]

ຄວາມເຂົ້າໃຈຂອງສະຫະພາບເອີຣົບນີ້ ສະແດງໃຫ້ເຫັນເຖິງຄວາມເຂົ້າໃຈພາຍໃນປະເທດ ກ່ຽວກັບການຄ້າມະນຸດ ແລະ ຄວາມພະຍາຍາມຂອງການບັງຄັບໃຊ້ກົດໝາຍໃນລະດັບພາກພື້ນ. ໜ່ວຍງານບັງຄັບໃຊ້ກົດໝາຍ ຂອງສະຫະພາບເອີຣົບ (Europol) ໃຫ້ຂໍ້ສັງເກດວ່າ ການຄ້າມະນຸດ ສາມາດ "ນຳໃຊ້ຮູບແບບການຂູດຮີດ ເພື່ອຈຸດປະສົງ ບັງຄັບໃຫ້ກະທຳ ຜິດທາງອາຍາ ເຊັ່ນ ການລັກກະເປົາເງິນ, ລັກເຄື່ອງໃນຮ້ານຄ້າ

22 ບົດລາຍງານການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, Siobhán Mullally, UN Doc. A/HRC/47/34, (17 ພຶດສະພາ 2021), ວັກທີ 37 ແລະ 38

23 ການທົບທວນແບບມີເປົ້າໝາຍໃສ່ ການກະທຳຜິດທີ່ເປັນຂ້າທາດສະໄໝໃໝ່ ໃນໝວດ 270 ແລະ 271 ຂອງປະມວນກົດໝາຍອາຍາປີ 1995 (Cth): ລາຍງານຜົນທີ່ຄົ້ນພົບ (ເຄືອຈັກກະພົບອົດສະຕຣາລີ, 2023), ໜ້າທີ 68

24 ເບິ່ງທີ່ເອກະສານຊ້ອນທ້າຍທີ 2

25 ເບິ່ງທີ່ຄວາມສຳຄັນໃນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ: ພັນທະໃນການປົກປ້ອງຜູ້ຖືກເຄາະຮ້າຍ, Maria Grazia Giammarinaro, ຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ອົງການສະຫະປະຊາຊາດ, ເຈນນີວາ 30 ກໍລະກົດ 2020, ມາດຕາ 2 [3]

26 ຄຳສັ່ງຂອງສະພາສະຫະພາບເອີຣົບ 2011/36/EU ແລະ ຄຳສັ່ງຂອງສະພາ ຄັ້ງວັນທີ 5 ເມສາ 2011 ວ່າດ້ວຍການປ້ອງກັນ ແລະ ປາບປາມການຄ້າມະນຸດ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ (5 ເມສາ 2021) (ມີຜົນບັງຄັບໃຊ້ໃນວັນທີ (15 ເມສາ 2021), ວັກທີ 11 ແລະ ມາດຕາ 2(3)

27 ຄຳສັ່ງຂອງສະພາສະຫະພາບເອີຣົບ 2011/36/EU ແລະ ຄຳສັ່ງຂອງສະພາ ຄັ້ງວັນທີ 5 ເມສາ 2011 ວ່າດ້ວຍການປ້ອງກັນ ແລະ ປາບປາມການຄ້າມະນຸດ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ (5 ເມສາ 2021) (ມີຜົນບັງຄັບໃຊ້ໃນວັນທີ 15 ເມສາ 2021), ວັກທີ 14

28 ຄຳສັ່ງຂອງສະພາສະຫະພາບເອີຣົບ 2024/1712 ແລະ ຄຳສັ່ງຂອງສະພາ ຄັ້ງວັນທີ 13 ມິຖຸນາ 2024 ປັບປຸງ ຄຳສັ່ງສະພາ ສະຫະພາບເອີຣົບ 2024/1712 ວ່າດ້ວຍການປ້ອງກັນ ແລະ ປາບປາມການຄ້າມະນຸດ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ ວັກທີ 23

ລະ ຄ້າຢາເສບຕິດ."[29] ຈາກການຮັບຮູ້ ດ້ວຍຄວາມເຂົ້າໃຈ ດັ່ງກ່າວນັ້ນ, ການບັງຄັບໃຊ້ກົດໝາຍຮ່ວມກັນ ເພື່ອຕ້ານການຄ້າມະນຸດ ໄດ້ແກ້ໄຂການຄ້າມະນຸດ ເພື່ອຈຸດປະສົງຂອງການ ບັງຄັບໃຫ້ກະທຳຜິດທາງອາຍາ ໃນຮູບແບບການຂູດຮີດອື່ນໆ.[30]

## ຮ່າງ ຫຼື ປັບປຸງຂໍ້ກຳນົດ–ກົດໝາຍກ່ຽວກັບການບໍ່ລົງໂທດ ໃຫ້ມີຄວາມຊັດເຈນ

ການປ້ອງກັນອາດຈະລວມໃນມິຕິກຳພາຍໃນ ເຊັ່ນ: ການບັງຄັບ ແລະ ສິ່ງທີ່ຈຳເປັນ ແມ່ນເປັນປະໂຫຍດໃນການປົກປ້ອງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຈາກການຖືກລົງໂທດ, ແຕ່ບໍ່ໄດ້ປົກປ້ອງຜູ້ຖືກເຄາະຮ້າຍຈາກການຖືກຕັ້ງຂໍ້ກ່າວຫາ ແລະ ນຳຕົວຂຶ້ນສານນັບແຕ່ເບື້ອງຕົ້ນ. ການປະກາດໃຊ້ກົດໝາຍ ທີ່ມີຂໍ້ກຳນົດການບໍ່ລົງໂທດຕາມກົດໝາຍ ທີ່ມີຄວາມ ຊັດເຈນ ແລະ ຈະແຈ້ງ ຈະເປັນການປະຕິບັດທີ່ດີໃນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ກ່ອນທີ່ຜູ້ຖືກເຄາະຮ້າຍຈະຖືກ ນຳມາໄຕ່ສວນໃນທີ່ປະຊຸມສານ.[31] ນອກນັ້ນ, ການປ້ອງກັນທົ່ວໄປອາດຈະມີພຽງແຕ່ການຫຼຸດຜ່ອນໂທດເທົ່ານັ້ນ ແທນທີ່ ຈະເປັນການສົ່ງຜົນໃຫ້ແກ່ຜູ້ຖືກຫາທີ່ຖືກຈັບຕົວ, ຖືກຕັ້ງຂໍ້ກ່າວຫາ ແລະ ພິຈາລະນາຄະດີຢ່າງບໍ່ເປັນທຳ ໃຫ້ຫຼຸດພົ້ນຈາກຄວາມຜິດ: ປະສົບການທີ່ເກີດຂຶ້ນໃນຕົວ ແລະ ເກີດຂຶ້ນກັບເຂົາເຈົ້າ ເທົ່າກັບວ່າເປັນການລົງໂທດເຂົາເຈົ້າ ເຊິ່ງຂັດກັບຫຼັກ ການບໍ່ລົງໂທດ.

ສະມາຊິກສະພານິຕິບັນຍັດ ຄວນພິຈາລະນາຮ່າງ ຫຼື ປັບປຸງຂໍ້ກຳນົດຕາມກົດໝາຍໃຫ້ມີຄວາມຊັດເຈນ ເພື່ອຮອບຮອມ ຫຼັກການບໍ່ລົງໂທດໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ. ໃນຂອບເຂດອຳນາດຕຸລາການ ທີ່ມີໜ້າທີ່ໃນການດຳ ເນີນຄະດີ, ກົດໝາຍ ຄວນກຳນົດການບໍ່ດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍ ຫຼື ຢຸດຕິການດຳເນີນຄະດີໃນຂັ້ນຕອນເບື້ອງຕົ້ນ. ອຳນາດຕຸລາການທີ່ໃຫ້ດຸນພິນິດໃນການດຳເນີນຄະດີ, ກົດໝາຍຄວນຮັບປະກັນວ່າ ພະນັກງານໄອຍະການ ຈະບໍ່ດຳ ເນີນຄະດີ ຫຼື ຢຸດຕິການດຳເນີນຄະດີທັນທີ ຖ້າຮູ້ວ່າຜູ້ທີ່ກະທຳຜິດນັ້ນ ກະທຳຜິດເນື່ອງຈາກຜົນທີ່ມາຈາກການຖືກຄ້າມະ ນຸດ.

ຂໍ້ກຳນົດການບໍ່ລົງໂທດຄວນຈະຖືກຮ່າງຂຶ້ນ ເພື່ອນຳໃຊ້ກັບຜູ້ຖືກເຄາະຮ້າຍທຸກຄົນ ບົນພື້ນຖານທີ່ບໍ່ມີການຈຳແນກ, ໂດຍບໍ່ກ່ຽວຂ້ອງກັບປະເພດຂອງການຄ້າມະນຸດທີ່ເຂົາເຈົ້າໄດ້ປະສົບມາ, ຫຼື ປະເພດຂອງຄວາມຜິດທີ່ເຂົາເຈົ້າໄດ້ກະທຳ ອັນເປັນ ຜົນໂດຍກົງຈາກການຖືກຄ້າມະນຸດ. ບັນດາປະເທດສະມາຊິກອາຊຽນ ອາດຈະພິຈາລະນາປະກາດນຳໃຊ້ກົດໝາຍ ຫຼື ປັບປຸງ ຂໍ້ກຳນົດການບໍ່ລົງໂທດ ເພື່ອຮັບປະກັນວ່າການກະທຳຜິດກົດໝາຍທັງໝົດທີ່ຜູ້ຖືກເຄາະຮ້າຍໄດ້ກະທຳ ເຊິ່ງເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດນັ້ນ ໄດ້ຖືກກວມເອົາແລ້ວ.[32] ຂໍ້ກຳນົດຕາມກົດໝາຍ ຄວນນຳໃຊ້ຕໍ່ກັບການກະທຳ ຜິດທາງແພ່ງ, ບໍລິຫານ, ການເຂົ້າອອກ–ເມືອງ ແລະ ຄວາມຜິດທາງອາຍາ ແລະ ຄວນນຳໃຊ້ກັບຜູ້ຖືກເຄາະຮ້າຍທຸກຄົນ ບົນພື້ນຖານທີ່ບໍ່ມີການຈຳແນກ, ໂດຍບໍ່ກ່ຽວຂ້ອງກັບປະເພດຂອງການຖືກຂູດຮີດ ທີ່ເຂົາເຈົ້າຖືກຄ້າມະນຸດ ແລະ ບໍ່ກ່ຽວ ກັບລະດັບຄວາມຮຸນແຮງ ຫຼື ຄວາມຮ້າຍແຮງຂອງຄວາມຜິດທີ່ເຂົາເຈົ້າໄດ້ກະທຳ.[33]

29 https://www.europol.europa.eu/crime-areas/trafficking-in-human-beingsz

30 https://www.europol.europa.eu/media-press/newsroom/news/human-trafficking-action-week-219-criminals-arrested-and-1-374-victims-identified

31 ຄຳແນະນຳກ່ຽວກັບບັນຫາການຕອບໂຕ້ຄວາມຍຸຕິທຳທາງອາຍາທີ່ເໝາະສົມຕໍ່ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດຍ້ອນຖືກ ຄ້າມະນຸດ: ເອກະສານຄວາມເປັນມາ ກະກຽມໂດຍກອງເລຂາ ຄະນະປະຕິບັດງານດ້ານການຄ້າມະນຸດ, ວຽນນາ 10 ແລະ 11 ກັນຍາ 2020, UN Doc. CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກທີ 46.

32 ບົດລາຍງານການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຂອງຜູ້ລາຍງານພິເສດ ວ່າດ້ວຍການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ Siobhán Mullally, UN Doc. A/HRC/47/34, ວັນທີ 17 ພຶດສະພາ 2021, [57]

33 ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດ: ບົດລາຍງານຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ , Siobhán Mullaly, UN Doc. A/HRC/47/34 (ວັນທີ 17 ພຶດສະພາ 2021, ວັກທີ 37.

*ແຜນວາດ: ຂອບເຂດການນຳໃຊ້ຫຼັກການບໍ່ລົງໂທດ*

| ຜູ້ຖືກເຄາະຮ້າຍທຸກຄົນ | ການຄ້າມະນຸດທຸກປະເພດ | ການກະທຳຜິດກົດໝາຍທຸກປະເພດ |
|---|---|---|
| ຜູ້ໃຫຍ່<br>ເດັກນ້ອຍ<br>ພົນລະເມືອງ<br>ຜູ້ເຄື່ອນຍ້າຍ<br>ບຸກຄົນອື່ນໆ | ການຂູດຮີດທາງເພດ<br>ການບັງຄັບໃຊ້ແຮງງານ<br>ການບັງຄັບໃຫ້ກະທຳຜິດທາງອາຍາ<br>ການຕັດອະໄວຍະວະຂອງຮ່າງກາຍ<br>ການຄ້າມະນຸດເພື່ອເຂົ້າສູ່ການກໍ່ການຮ້າຍອື່ນໆ | ສະຖານະຂອງຄວາມຜິດ<br>ຄວາມຜິດເບົາບາງ<br>ຄວາມຜິດທາງອາຍາທີ່ ຮ້າຍແຮງ |

ກໍລະນີທີ່ຜູ້ຖືກເຄາະຮ້າຍກະທຳຜິດ ທີ່ເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດ

ປະເພດ ແລະ ຄວາມຮຸນແຮງຂອງການກະທຳທີ່ຜິດກົດໝາຍ ບໍ່ແມ່ນຕົວກຳນົດວ່າ ຄວນນຳໃຊ້ຫຼັກການບໍ່ລົງໂທດ ຫຼື ບໍ່. ການອະນຸຍາດໃຫ້ນຳໃຊ້ຫຼັກການບໍ່ລົງໂທດຢ່າງກວ້າງຂວາງນັ້ນ ບໍ່ໄດ້ມີຜົນຕໍ່ກັບຂໍ້ຫ້າມທົ່ວໄປ ໃນການດຳເນີນຄະດີ ຕໍ່ກັບ ຜູ້ຖືກເຄາະຮ້າຍ ແຕ່ຈະເປັນການກຳນົດມາດຕະຖານໃນການສືບສວນ-ສອບສວນແທນ.[34] ຫຼັກການນີ້ ຍັງຮຽກຮ້ອງໃຫ້ ເຈົ້າໜ້າທີ່ ພິຈາລະນາບໍ່ລົງໂທດຜູ້ຖືກເຄາະຮ້າຍ ທີ່ມີຄວາມເຊື່ອມໂຍງກັນ ລະຫວ່າງ ການກະທຳຜິດກົດໝາຍຂອງຜູ້ຖືກ ເຄາະຮ້າຍ ແລະ ການຖືກຄ້າມະນຸດຂອງເຂົາເຈົ້າ.[35]

ຕາມທີ່ໄດ້ມີການອະທິບາຍໄວ້ໂດຍອະດີດຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ:

> ຄວາມຜິດຮ້າຍແຮງເທົ່າໃດ, ການສືບສວນ-ສອບສວນຍິ່ງຈຳເປັນຕ້ອງເຮັດຫຼາຍຂຶ້ນ ເພື່ອ ກຳນົດສະພາບການທີ່ມີການກະທຳຜິດນັ້ນ ແລະ ສິດໃນການນຳໃຊ້ການບໍ່ລົງໂທດນັ້ນ ໄດ້ມີການນຳໃຊ້ໂດຍຖືກຕ້ອງ ຫຼື ບໍ່. ການຄຸ້ມຄອງດັ່ງກ່າວ ບໍ່ໄດ້ໝາຍຄວາມເຖິງ 'ການຄຸ້ມຄອງ ຢ່າງຄວບຄຸມ' ແຕ່ການປົກປ້ອງນັ້ນ ເປັນການຕອບສະໜອງຕໍ່ (1) ຄວາມຈຳເປັນໃນການ ກຳນົດສະຖານະການຈິງ ທີ່ໄດ້ມີການກະທຳຄວາມຜິດ, (2) ຊ່ວຍໃຫ້ຜູ້ຖືກເຄາະຮ້າຍ ນຳໄປ ສູ່ຮູບແບບການປົກປ້ອງ ແລະ ການຊ່ວຍເຫຼືອ ທີ່ເຂົາເຈົ້າມີສິດທີ່ຈະໄດ້ຮັບ ແລະ (3) ຊຸກຍູ້ ໃຫ້ມີການສືບສວນ-ສອບສວນ ອາຊະຍາກຳການຄ້າມະນຸດ, ສົ່ງຜົນໃຫ້ມີການດຳເນີນຄະດີ ຕໍ່ຜູ້ຄ້າມະນຸດຫຼາຍຂຶ້ນ ແລະ ຫຼຸດຜ່ອນການດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍ ສຳລັບຄວາມ ຜິດທີ່ເຂົາເຈົ້າໄດ້ເຮັດ ໃນເວລາທີ່ເຂົາເຈົ້າຖືກຄວບຄຸມ ຫຼື ຖືກຂູດຮີດ. ນອກນັ້ນ, ຫຼັກການ ບໍ່ລົງໂທດຈະມີການນຳໃຊ້ໂດຍບໍ່ມີຄວາມລຳອຽງ ຕໍ່ກັບການປ້ອງກັນໃດໆໃນກົດໝາຍ ພາຍໃນ.[36]

ສຳຄັນໄປກວ່ານັ້ນ, ການນຳໃຊ້ຫຼັກການບໍ່ລົງໂທດ ຕ້ອງບໍ່ຂຶ້ນກັບເງື່ອນໄຂການດຳເນີນຄະດີຕໍ່ກັບຜູ້ຖືກຫາ ໃນຄະດີຄ້າມະ ນຸດ ຫຼື ການຮ່ວມມືຂອງຜູ້ຖືກເຄາະຮ້າຍໃນຄະດີອາຍາ.[37]

34 ເບິ່ງທີ່ກ່ອງ: ການປ້ອງກັນ ການນຳເອົາຫຼັກການບໍ່ລົງໂທດໄປໃຊ້ໂດຍບໍ່ຖືກຕ້ອງ ຕາມຂ້າງເທິງ.

35 ຄະດີຂອງ V.C.L ແລະ A.N. v ສະຫະຣາດຊະອານາຈັກອັງກິດ, (ຄຳຮ້ອງເລກທີ. 77587/12 ແລະ 74603/12) ຄຳຕັດສິນຂອງສະຕຣາເບີສ (Strasbourg), ວັນທີ 16 ກຸມພາ 2021, ວັກທີ. 158

36 ຄວາມສຳຄັນໃນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ: ພັນທະໃນການປົກປ້ອງຜູ້ຖືເຄາະຮ້າຍ Maria Grazia Giammarinaro, ຜູ້ລາຍງານພິເສດວ່າດ້ວຍການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, ອົງການສະຫະປະຊາຊາດ, ເຈນີວາ, ວັນທີ 30 ກໍລະກົດ 2020, 11 ທີ່ [41]

37 ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດ: ບົດລາຍງານຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ , Siobhán Mullaly, UN Doc. A/HRC/47/34 (ວັນທີ 17 ພຶດສະພາ 2021), ວັກທີ. 58

**ຄຳແນະນຳຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ**

ລັດຄວນໃຫ້ສັດຕະຍາບັນ ແລະ ປະຕິບັດຕາມກົດໝາຍສາກົນທີ່ກ່ຽວຂ້ອງທັງໝົດ ທີ່ເກືອດຫ້າມການຄ້າມະນຸດ ແລະ ໃຫ້ສິດໃນການບໍ່ຖືກລົງໂທດ, ລວມທັງ ສົນທິສັນຍາຂອງ ILO ວ່າດ້ວຍການບັງຄັບໃຊ້ແຮງງານ, ປີ 1930 (ເລກທີ. 29).

ລັດຄວນຮັບຮອງເອົານິຕິກຳ, ນະໂຍບາຍ, ການບໍລິຫານ-ການປົກຄອງ ແລະ ມາດຕະການອື່ນໆທີ່ເໝາະສົມ ເພື່ອຮັບປະ ກັນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຜູ້ຖືກເຄາະຮ້າຍໃຫ້ມີປະສິດທິພາບ ແລະ ຄວນຈະ:

(a) ມີການແນະນຳຂໍ້ກຳນົດສະເພາະ ໃນນິຕິກຳພາຍໃນ ເພື່ອໃຫ້ມີການກຳນົດຫຼັກການບໍ່ລົງໂທດ;
(b) ຮັບຮອງເອົາຄຳແນະນຳໃນການດຳເນີນຄະດີ ເພື່ອອຳນວຍຄວາມສະດວກໃຫ້ແກ່ວິທີການນຳໃຊ້ຫຼັກການບໍ່ລົງໂທດທີ່ເປັນລະບົບ ແລະ ຕໍ່ເນື່ອງ ໃນຄະດີການຄ້າມະນຸດທຸກໆຄະດີ;
(c) ຮັບຮອງເອົາລາຍການຄວາມຜິດຕ່າງໆ ທີ່ເກີດຂຶ້ນແບບກວ້າງຂວາງ (open-ended) ແລະ ລາຍການຄວາມຜິດທີ່ບໍ່ໄດ້ຖືກຄວບຄຸມ ເຊິ່ງເກີດຂຶ້ນເລື້ອຍໆ ກ່ຽວກັບການຄ້າມະນຸດ ເຊິ່ງຄວນຈະມີການເຜີຍແຜ່ ລວມທັງ ປະກອບເຂົ້າໃນການ ຝຶກອົບຮົມ ແລະ ຄຳແນະນຳທີ່ເຜີຍແຜ່ໃຫ້ແກ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍທັງໝົດ ແລະ ເຜີຍແຜ່ໃຫ້ກັບທຸກໆຄົນ ທີ່ຄິດ ວ່າຈະມີການຕິດຕໍ່ພົວພັນກັບຜູ້ຖືກຄ້າມະນຸດ.[38]

## ຮັບປະກັນວ່າ ນິຕິກຳໄດ້ໃຫ້ຄວາມຊັດເຈນ ກ່ຽວກັບການເຊື່ອມໂຍງລະຫວ່າງ ການຄ້າມະນຸດ ແລະ ການກະທຳທີ່ຜິດກົດ ໝາຍຂອງຜູ້ຖືກເຄາະຮ້າຍ.

ລັດຕ່າງໆ ນຳໃຊ້ວິທີການທີ່ແຕກຕ່າງກັນໃນການກຳນົດວ່າຈະນຳໃຊ້ຫຼັກການບໍ່ລົງໂທດ ຫຼື ບໍ່ ໃນກໍລະນີທີ່ຜູ້ຖືກເຄາະຮ້າຍ ມີສ່ວນຮ່ວມກັບການກະທຳທີ່ຜິດກົດໝາຍ. ຮູບແບບທີ່ພົບເຫັນຫຼາຍທີ່ສຸດມີສອງຮູບແບບ ຄື ຮູບແບບບັງຄັບ (ຫຼື ການ ບີບບັງຄັບ) (Compulsion Model) ແລະ ຮູບແບບຕາມສາເຫດ (Causation Model)

- ຮູບແບບບັງຄັບ (ຫຼື ບີບບັງຄັບ) ນຳໃຊ້ຫຼັກການບໍ່ລົງໂທດ ໃນກໍລະນີທີ່ຊີ້ໃຫ້ເຫັນວ່າຜູ້ຖືກເຄາະຮ້າຍຈາກການ ຄ້າມະນຸດ ໄດ້ຖືກບີບບັງຄັບໂດຍຜູ້ຄ້າມະນຸດ ໃຫ້ມີສ່ວນຮ່ວມກັບການກະທຳທີ່ຜິດກົດໝາຍດັ່ງກ່າວ.
- ຮູບແບບຕາມສາເຫດ ນຳໃຊ້ຫຼັກການບໍ່ລົງໂທດໃນກໍລະນີທີ່ຊີ້ໃຫ້ເຫັນວ່າ ການກະທຳທີ່ຜິດກົດໝາຍຂອງຜູ້ຖືກ ເຄາະຮ້າຍນັ້ນ ເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດ.

ຮູບແບບເຫຼົ່ານີ້ ໄດ້ຖືກສະແດງໄວ້ໃນຂໍ້ກຳນົດການບໍ່ລົງໂທດ ໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ພາຍໃນປະ ເທດ. ຂໍ້ກຳນົດດັ່ງກ່າວ ມີຄວາມສຳຄັນຫຼາຍທີ່ຈະໃຫ້ຜູ້ບັງຄັບໃຊ້ກົດໝາຍ ຕັດສິນໃຈວ່າ ຈະຈັບຕົວຜູ້ຖືກເຄາະຮ້າຍ ຫຼື ບໍ່ ສຳລັບການກະທຳທີ່ຜິດກົດໝາຍນັ້ນ; ພະນັກງານໄອຍະການ ຈະນຳໃຊ້ດຸນພິນິດຂອງຕົນວ່າຈະດຳເນີນຄະດີ ຕໍ່ກັບຜູ້ຖືກ ເຄາະຮ້າຍ ຫຼື ບໍ່ ຕໍ່ກັບການກະທຳທີ່ຜິດກົດໝາຍ ແລະ ທະນາຍຄວາມທີ່ໃຫ້ການປົກປ້ອງ ຈະປ້ອງກັນຜູ້ຖືກເຄາະຮ້າຍ ທີ່ຂຶ້ນ ໄຕ່ສວນໃນທີ່ປະຊຸມສານຕໍ່ກັບການກະທຳທີ່ຜິດກົດໝາຍ.

38 ແຫຼ່ງຂໍ້ມູນ: ບົດລາຍງານການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, Siobhán Mullally, UN Doc. A/HRC/47/34, (ວັນທີ 17 ພຶດສະພາ 2021), ວັກທີ [53-54]

## ວິທີການນຳໃຊ້ ຫຼັກການບໍ່ລົງໂທດ

| ຮູບແບບບັງຄັບ (ຫຼື ຖືກບີບບັງຄັບ) | ຮູບແບບມີສາເຫດ |
|---|---|
| ການກະທຳທີ່ຜິດກົດໝາຍຂອງຜູ້ຖືກເຄາະຮ້າຍນັ້ນແມ່ນ ຖືກບັງຄັບ ໂດຍຜູ້ຄ້າມະນຸດ ໝາຍຄວາມວ່າ ເຂົາເຈົ້າກະທຳ ພາຍໃຕ້ການບັງຄັບ ຫຼື ຖືກບັງຄັບ | ການກະທຳທີ່ຜິດກົດໝາຍຂອງຜູ້ຖືກເຄາະຮ້າຍ ເປັນຜົນ ສະທ້ອນໂດຍກົງຈາກການຄ້າມະນຸດ. |
| ຕົວຢ່າງ | |
| **ສົນທິສັນຍາຂອງສະພາສະຫະພາບເອີຣົບ ວ່າດ້ວຍການຕ້ານ ການຄ້າມະນຸດ (2005)**<br><br>ແຕ່ລະພາຄີໂດຍອີງຕາມຫຼັກການພື້ນຖານຂອງລະບົບກົດ ໝາຍ ພາຍໃນຂອງຕົນ, ສະໜອງຄວາມເປັນໄປໄດ້ ທີ່ຈະ ບໍ່ລົງໂທດຜູ້ຖືກ ເຄາະຮ້າຍ ຕໍ່ກັບການມີສ່ວນຮ່ວມ ໃນການ ກະທຳທີ່ຜິດກົດໝາຍ ຂອງເຂົາເຈົ້າ, ໃນຂອບ ເຂດທີ່ເຂົາ ເຈົ້າ ໄດ້ຖືກບັງຄັບໃຫ້ກະທຳຜິດ ກົດ ໝາຍດັ່ງກ່າວ.<br><br>ສົນທິສັນຍາຂອງສະພາສະຫະພາບເອີຣົບ ວ່າດ້ວຍການ ຕ້ານການຄ້າ ມະນຸດ (ມາດຕາ 26) | **ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (2015)**<br><br>ແຕ່ລະພາຄີ ອີງຕາມກົດໝາຍ, ກົດລະບຽບ, ນິຕິກຳ ແລະ ນະໂຍບາຍພາຍໃນຂອງປະເທດຕົນ ແລະ ໃນກໍລະນີທີ່ ເໝາະສົມ ພິຈາລະນາບໍ່ໃຫ້ຜູ້ຖືກເຄາະຮ້າຍ ມີຄວາມຮັບຜິດ ຊອບທາງອາຍາ ຫຼື ທາງບໍລິຫານ ຕໍ່ກັບການກະທຳທີ່ຜິດ ກົດໝາຍ ທີ່ເຂົາເຈົ້າໄດ້ກະທຳ ເຊິ່ງການກະທຳດັ່ງກ່າວ ເປັນ ຜົນສະທ້ອນໂດຍກົງ ຈາກການຄ້າມະນຸດ.<br><br>ສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ ໂດຍ ສະເພາະແມ່ຍິງ ແລະ ເດັກນ້ອຍ (ມາດຕາ 14(7)) |
| **ອິນໂດເນເຊຍ**<br><br>**ຟີລິບປິນ** | **ບຣູໄນ**<br>(ສະເພາະຄວາມຜິດກ່ຽວກັບການເຂົ້າ–ອອກ ເມືອງ ແລະ ຄວາມຜິດກ່ຽວກັບເອກະສານ)<br><br>**ສປປ ລາວ**<br>(ສະເພາະການເຂົ້າອອກ-ອອກເມືອງ ທີ່ຜິດກົດໝາຍ ແລະ ການເປັນໂສເພນີ)<br><br>**ມາເລເຊຍ**<br>(ສະເພາະຄວາມຜິດກ່ຽວກັບການເຂົ້າ–ອອກ ເມືອງ ແລະ ຄວາມຜິດກ່ຽວກັບເອກະສານ)<br><br>**ມຽນມາ**<br>(ສະເພາະຄວາມຜິດກ່ຽວກັບການຄ້າມະນຸດ, ການເຂົ້າອອກ–ເມືອງ, ການເຮັດວຽກ ແລະ ຄວາມຜິດກ່ຽວກັບເອກະສານ)[39]<br><br>**ຟີລິບປິນ**<br><br>**ຫວຽດນາມ** |

39 ກົດໝາຍ ປີ 2005 ຂອງມຽນມາ ກຳນົດການກະທຳທີ່ຜິດກົດໝາຍມີ “ຜົນໂດຍກົງ” ໃນກົດໝາຍປີ 2005 ແຕ່ກົດໝາຍປີ 2022 ທີ່ຍົກເລີກກົດໝາຍສະບັບກ່ອນໜ້ານັ້ນ ບໍ່ໄດ້ກຳນົດຄວາມກ່ຽວຂ້ອງຢ່າງຊັດເຈນ

ລັດຕ່າງໆ ທີ່ກຳລັງຮ່າງ ຫຼື ປັບປຸງນິຕິກຳຂອງຕົນ ຄວນພິຈາລະນາ ຜົນຂອງການປະຕິບັດຕົວຈິງຕໍ່ກັບຮູບແບບທີ່ເຂົາເຈົ້າຮັບຮອງ ແລະ ຂໍ້ຈຳກັດ ແລະ ສິ່ງທ້າທາຍທີ່ກ່ຽວຂ້ອງກັບແຕ່ລະຮູບແບບ.

ນິຕິກຳ ຄວນເຮັດໃຫ້ມີຄວາມຊັດເຈນ ເພື່ອໃຫ້ຜູ້ປະຕິບັດຕົວຈິງ ທີ່ກຳລັງດຳເນີນຄະດີ ຫຼື ປົກປ້ອງຄະດີ ທີ່ກ່ຽວຂ້ອງ ກັບຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ, ວິທີການກຳນົດຄວາມສຳພັນລະຫວ່າງ ຄວາມຜິດ ແລະ ການຄ້າມະນຸດ.

## *ໃນຂອບເຂດຕຸລາການທີ່ນຳໃຊ້ ຮູບແບບ 'ການບັງຄັບ'.....*

ເຊິ່ງເປັນສິ່ງທີ່ສຳຄັນທີ່ຜູ້ປະຕິບັດຕົວຈິງ ທີ່ຈະເຂົ້າໃຈຢ່າງເຕັມສ່ວນຕໍ່ກັບວິທີການຕ່າງໆ ທີ່ຜູ້ຄ້າມະນຸດຈະທຳລາຍເຈດຈຳນົງທີ່ເປັນອິດສະຫລະ ຂອງຜູ້ຖືກເຄາະຮ້າຍ. ປະເທດທີ່ນຳໃຊ້ຮູບແບບການບັງຄັບ ຄວນເຂົ້າໃຈການບັງຄັບແບບກວ້າງຂວາງ ເພື່ອໃຫ້ກວມເອົາ 'ວິທີການ' ທັງໝົດທີ່ ຜູ້ຄ້າມະນຸດສາມາດບັງຄັບຜູ້ຖືກເຄາະຮ້າຍທີ່ເປັນຜູ້ໃຫຍ່ ຕາມທີ່ໄດ້ກຳນົດໄວ້ໃນຄຳນິຍາມຂອງການຄ້າມະນຸດ ໃນລະດັບພາກພື້ນ ແລະ ສາກົນ. ໃນຂອບເຂດຕຸລາການ ທີ່ນຳໃຊ້ຮູບແບບການບັງຄັບ, ມາດຕະ ຖານທີ່ກຳນົດ ບໍ່ຄວນເປັນມາດຕະຖານດຽວກັບທີ່ກຳນົດໃນການປ້ອງກັນ ແບບດັ້ງເດີມ ກ່ຽວກັບການບີບບັງຄັບ ແລະ ຄວາມຈຳເປັນທີ່ອາດຈະຖືກຂົ່ມຂູ່ ຫຼື ເຖິງແກ່ຄວາມຕາຍ ຫຼື ຖືກໃຊ້ຄວາມຮຸນແຮງດ້ານຮ່າງກາຍ. ອີກດ້ານໜຶ່ງ, ມາດຕະ ຖານຄວນຈະພິຈາລະນາຄວາມລະອຽດອ່ອນຕໍ່ກັບວິທີການທີ່ຜູ້ຖືກເຄາະຮ້າຍ ສາມາດ 'ຖືກບັງຄັບ'. ເວົ້າອີກຢ່າງໜຶ່ງ, ຄວນ ຈະເຂົ້າໃຈວ່າ ຜູ້ຖືກເຄາະຮ້າຍສາມາດ 'ຖືກບີບບັງຄັບ' ໃຫ້ມີສ່ວນຮ່ວມກັບການກຳທີ່ຜິດກົດໝາຍໄດ້ ດ້ວຍວິທີການຂົ່ມ ຂູ່ ຫຼື ນຳໃຊ້ ການບັງຄັບ ຫຼື ຮູບແບບການບັງຄັບອື່ນ, ການລັກພາຕົວ, ການສໍ້ໂກງ, ການຫຼອກລວງ, ໃຊ້ອຳນາດຂົ່ມຂູ່ ຫຼື ການສວຍໃຊ້ອຳນາດ, ການໃຫ້ ຫຼື ຮັບເອົາເງິນ ຫຼື ເພື່ອຜົນປະໂຫຍດອື່ນໆ ເພື່ອໃຫ້ບັນລຸການຍິນຍອມ ຂອງບຸກຄົນທີ່ຖືກ ຄວບຄຸມໂດຍບຸກຄົນອື່ນ.[40]

ຕາມຄວາມຈິງເຊັ່ນດຽວກັນນີ້ ໃນເວລາມີການໃຊ້ຄຳວ່າ 'ບັງຄັບໃຫ້ກະທຳຜິດທາງອາຍາ' ນັ້ນ ເຊິ່ງບໍ່ຄວນເປັນຄວາມເຂົ້າ ໃຈວ່າ ມີ ຄວາມຈຳເປັນຕ້ອງໃຫ້ຜູ້ຖືກເຄາຮ້າຍຖືກບັງຄັບທາງດ້ານຮ່າງກາຍ ເພື່ອໃຫ້ມີສ່ວນຮ່ວມກັບການກະທຳຜິດທາງອາຍາ, ແຕ່ຄວນມີຄວາມເຂົ້າໃຈ ຫຼາຍຂຶ້ນຕໍ່ກັບວິທີການທີ່ມີຄວາມລະອຽດອ່ອນທີ່ຜູ້ຄ້າມະນຸດ ອາດຈະໃຊ້ເພື່ອຂູດຮີດບຸກ ຄົນໃດໜຶ່ງ, ລວມທັງ ການຂູດຮີດບຸກຄົນອື່ນດ້ວຍ ການສວາຍໃຊ້ສະຖານະພາບຄວາມສ່ຽງຂອງເຂົາເຈົ້າ.[41] ການຂູດຮີດບຸກຄົນອື່ນດ້ວຍການສວາຍໃຊ້ສະຖານະພາບຄວາມສ່ຽງຂອງເຂົາເຈົ້າ ບໍ່ ຈຳເປັນຕ້ອງອາໄສແຕ່ຄວາມສ່ຽງຂອງຜູ້ຖືກເຄາະ ຮ້າຍເທົ່ານັ້ນ ແຕ່ມັນຍັງມີການລ່ວງລະເມີດໂດຍຜູ້ຄ້າມະນຸດ. ອີງຕາມຄຳແນະນຳຂອງອົງການ ສະຫະປະຊາຊາດ ແມ່ນມີປະ ໂຫຍດທີ່ຈະສ້າງຄວາມເຂົ້າໃຈວ່າ 'ການຂູດຮີດບຸກຄົນອື່ນດ້ວຍການສວາຍໃຊ້ສະຖານະພາບຄວາມສ່ຽງຂອງ ເຂົ້າເຈົ້າ' ແມ່ນເປັນວິທີການຂອງການຄ້າມະນຸດ.

> ການປະເມີນຄວາມສ່ຽງທີ່ມີຢູ່ ແມ່ນປະເມີນເປັນແຕ່ລະກໍລະນີ ເປັນສິ່ງທີ່ດີທີ່ສຸດ, ໂດຍມີ ການຄຳນຶງເຖິງບຸກຄົນ, ສະຖານະການ ຫຼື ສະພາບແວດລ້ອມຂອງຜູ້ທີ່ຖືວ່າເປັນຜູ້ຖືກເຄາະ ຮ້າຍ. ຕົວຢ່າງ ຄວາມສ່ຽງຂອງບຸກຄົນໃດໜຶ່ງ ອາດຈະກ່ຽວຂ້ອງກັບຄວາມບົກຜ່ອງ ດ້ານ ຮ່າງກາຍ ແລະ ຈິດໃຈ. ສະຖານະການທີ່ມີຄວາມສ່ຽງ ອາດຈະກ່ຽວຂ້ອງກັບບຸກຄົນທີ່ອາ ໄສຢູ່ຕ່າງປະເທດໂດຍບໍ່ຖືກຕ້ອງ ຕາມກົດໝາຍ ເຊິ່ງເຮັດໃຫ້ເຂົາເຈົ້າແຍກຕົວອອກຈາກສັງ ຄົມ ຫຼື ພາສາ. ສະພາບແວດລ້ອມຂອງຄວາມສ່ຽງ ທີ່ອາດຈະກ່ຽວຂ້ອງກັບ ບຸກຄົນໃດໜຶ່ງ ທີ່ຫວ່າງງານ ຫຼື ມີຄວາມອ່ອນແອດ້ານເສດຖະກິດ. ຄວາມສ່ຽງທີ່ມີຢູ່ກ່ອນນັ້ນອາດຈະກ່ຽວ ຂ້ອງກັບ (ແຕ່ບໍ່ຈຳກັດ) ຄວາມທຸກຍາກ, ຄວາມພິການດ້ານສະຕິປັນຍາ ແລະ ຮ່າງກາຍ, ໄວໜຸ່ມ ຫຼື ຜູ້ເຖົ້າ; ເພດ, ການຖືພາ, ວັດທະນະທຳ, ພາສາ, ຄວາມເຊື່ອ, ສະພາບຂອງຄອບຄົວ ຫຼື ສະຖານະທີ່ຜິດກົດໝາຍ. ຄວາມສ່ຽງທີ່ຖືກສ້າງຂຶ້ນ ອາດຈະກ່ຽວຂ້ອງກັບ (ແຕ່ບໍ່ຈຳກັດ) ການແຍກຕົວ ອອກຈາກສັງຄົມ, ວັດທະນະທຳ ຫຼື ພາສາ; ສະຖານະທີ່ຜິດ ກົດໝາຍ ຫຼື ການເພິ່ງພາອາໄສການປູກຝັງໂດຍຜ່ານການຕິດຢາເສບຕິດ ຫຼື ຄວາມໂຣແມນ ຕິກ ຫຼື ສະພາວະທາງອາລົມດ້ານຄວາມຮູ້ສຶກ ຫຼື ຜ່ານການນຳໃຊ້ດ້ານວັດທະນະທຳ, ພິທີກຳ ທາງສາສະໜາ ຫຼື ການປະຕິບັດຕົວຈິງ.
>
> ສິ່ງສຳຄັນນັ້ນ, ຄວາມສ່ຽງຂອງຜູ້ຖືກເຄາະຮ້າຍອາດຈະເປັນຕົວຊີ້ວັດຂອງ [ການຂູດຮີດບຸກ ຄົນອື່ນດ້ວຍການສວາຍໃຊ້ສະຖານະພາບ ຄວາມສ່ຽງຂອງເຂົ້າເຈົ້າ], ແຕ່ຈະບໍ່ແມ່ນວິທີການ ຂອງການຄ້າມະນຸດ ເວັ້ນແຕ່ ສະພາບການຂອງຄວາມສ່ຽງດັ່ງກ່າວ ມີການລ່ວງ ລະເມີດໃນຂອບເຂດທີ່ບໍ່ໄດ້ຄຳນຶງເຖິງການຍິນຍອມຂອງຜູ້ຖືກເຄາະຮ້າຍ.
>
> ການຂູດຮີດບຸກຄົນອື່ນ ດ້ວຍການສວາຍໃຊ້ສະຖານະພາບຄວາມສ່ຽງຂອງເຂົ້າເຈົ້າເກີດຂຶ້ນ ໃນເວລາທີ່ຄວາມສ່ຽງຂອງ ບຸກຄົນ, ສະພາບການ ຫຼື ສະພາບແວດລ້ອມຂອງບຸກຄົນນັ້ນ ຖືກນຳໃຊ້ໂດຍເຈດຕະນາ ຫຼື ຖືກນຳໃຊ້ຈາກການສະແຫວງຫາຜົນປະໂຫຍດ, ການຊອກ ຫາ, ການຂົນສົ່ງ, ການສົ່ງຕໍ່, ການຮັບເອົາ ຫຼື ໃຫ້ທີ່ພັກອາໄສແກ່ບຸກຄົນ ເພື່ອຈຸດປະສົງ ຂອງການຂູດຮີດ, ເຊິ່ງບຸກຄົນ ດັ່ງກ່າວເຊື່ອວ່າ ການຍອມຈຳນົນຕໍ່ກັບເຈດຕະນາຂອງຜູ້ລ່ວງ ລະເມີດ ເປັນທາງເລືອກດຽວທີ່ແທ້ຈິງໄດ້ ແລະ ຍອມຮັບໄດ້ຕໍ່ເຂົາເຈົ້າ ແລະ ຄວາມເຊື່ອນັ້ນ ແມ່ນສົມເຫດສົມຜົນ ຕໍ່ກັບສະພາບການຂອງຜູ້ຖືກເຄາະຮ້າຍ. ໃນການກຳນົດວ່າ ຄວາມ ເຊື່ອຂອງຜູ້ຖືກເຄາະ

---

40 ວິທີການເຫຼົ່ານີ້ ກຳນົດໄວ້ໃນມາດຕາ 2 ຂອງສົນທິສັນຍາ ACTIP ແລະ ມາດຕາ 3 ຂອງອານຸສັນຍາ ປາເລໂມ

41 ເບິ່ງທີ່: ການສວຍໃຊ້ຕຳແໜ່ງ ແລະ ວິທີການອື່ນໆ ໃນຄຳນິຍາມຂອງການຄ້າມະນຸດ (UNODC, 2013) ແລະ ອົງການສະຫະປະຊາຊາດ ບົດແນະນຳກ່ຽວກັບ ການສວຍໃຊ້ໜ້າທີ່ ເປັນວິທີການຄ້າມະນຸດ ມີສະບັບທີ່ເປັນພາສາ ບາຮາຊາ, ອິນໂດເນເຊຍ, ມຽນມາ, ກຳປູເຈຍ, ລາວ, ໄທ ແລະ ຫວຽດນາມ

ຮ້າຍ ທີ່ວ່າເຂົາເຈົ້າບໍ່ມີທາງເລືອກແທ້ຈິງ ຫຼື ເປັນທາງເລືອກທີ່ຍອມຮັບ ໄດ້ ໂດຍສົມເຫດສົມຜົນນັ້ນ, ຄວນພິຈາລະນາເຖິງລັກສະນະຂອງບຸກຄົນ ແລະ ສະພາບ ແວດລ້ອມຂອງຜູ້ຖືກເຄາະຮ້າຍນັ້ນ.[42]

ໃນບັນດາປະເທດທີ່ນິຕິກຳຈຳກັດວິທີການທີ່ຖືກນຳໃຊ້ ເພື່ອຂູດຮີດຜູ້ຖືກເຄາະຮ້າຍ ໃນການກະທຳທີ່ຜິດກົດໝາຍ, ຄວນມີ ການພິຈາລະນາ ວ່າຈະສາມາດເຮັດໃຫ້ມີການປັບປຸງນິຕິກຳແນວໃດ ຫຼື ການອອກຄຳແນະນຳດ້ານນິຕິກຳ ເພື່ອຮັບປະກັນວ່າ ຜູ້ຖືກເຄາະຮ້າຍໄດ້ຮັບການປົກປ້ອງຈາກການລົງໂທດ ໂດຍສອດຄ່ອງຕາມສິດທິມະນຸດຂອງ ເຂົາເຈົ້າ.[43]

ຮູບແບບແມ່ນກວ້າງຂວາງກວ່າການປ້ອງກັນການບີບບັງຄັບແບບດັ້ງເດີມ ແລະ ບໍ່ຄວນຈະຮຽກຮ້ອງໃຫ້ມີຫຼັກຖານ ດຽວ ກັນກັບມາດຕະຖານທີ່ຈະມີຜົນບັງຄັບໃຊ້ ທີ່ເປັນການປະຕິເສດຫຼັກການການປົກປ້ອງຜູ້ຖືກເຄາະຮ້າຍ.[44] ອະດີດຜູ້ລາຍງານ ພິເສດຂອງອົງການສະຫະປະຊາຊາດ ກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ ກ່າວວ່າ ເກນການນຳ ໃຊ້ຄວາມຜິດ ບໍ່ຄວນຈະ 'ມີຫຼັກການທີ່ຊັດເຈນ ແຕ່ຄວນຈະມີພື້ນຖານທີ່ສົມເຫດສົມຜົນ ທີ່ເຊື່ອຖືໄດ້ວ່າ ມີການຄ້າມະນຸດ ເກີດຂຶ້ນ.'[45]

ການປ້ອງກັນທີ່ມີຢູ່ໃນນິຕິກຳພາຍໃນ ຄວນນຳໃຊ້ກັບເດັກ ໂດຍບໍ່ກ່ຽວຂ້ອງກັບວິທີການທີ່ນຳໃຊ້ໃນການຂູດ ຮີດເຂົາເຈົ້າ ໃນການກະທຳຜິດອາຍາ. ວິທີການບໍ່ຈຳເປັນຕ້ອງໄດ້ຮັບການພິສູດວ່າເດັກຖືກຄ້າມະນຸດ. ນອກນັ້ນ, ຄວາມສຳພັນລະຫວ່າງ ສະພາບການຂອງເຂົາເຈົ້າ ໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຜົນຈາກການມີສ່ວນຮ່ວມໃນການກະທຳ ທີ່ຜິດກົດໝາຍ ຄວນຈະພຽງພໍແລ້ວໃນການນຳໃຊ້ການປ້ອງກັນ.

## ຂອບເຂດຕຸລາການທີ່ນຳໃຊ້ຮູບແບບ 'ຕາມສາເຫດ'....

ຮູບແບບຕາມສາເຫດ ບໍ່ຈຳເປັນຕ້ອງກຳນົດວ່າ ການກະທຳທີ່ຜິດກົດໝາຍ ເປັນຜົນມາຈາກວິທີການທີ່ຜູ້ຄ້າມະນຸດໄດ້ນຳໃຊ້ ເຊັ່ນ: ການບັງຄັບ, ການບີບບັງຄັບ ຫຼື ວິທີການອື່ນໆ ເພື່ອ 'ບັງຄັບ' ເຂົາເຈົ້າ. ແຕ່ການກະທຳທີ່ຜິດກົດໝາຍ ຕ້ອງເປັນຜົນ ສະທ້ອນໂດຍກົງຈາກທີ່ເຂົາເຈົ້າຖືກຄ້າມະນຸດ.

ສະມາຊິກສະພານິຕິບັນຍັດ ຄວນຮັບປະກັນວ່າ ຄຳວ່າ 'ຜົນສະທ້ອນໂດຍກົງ' ຫຼື 'ຜົນໂດຍກົງ' ແລະ 'ກ່ຽວຂ້ອງກັບ' ມີ ຄວາມເຂົ້າໃຈຢ່າງກວ້າງຂວາງ. ຄຳຖາມກ່ຽວກັບຊ່ວງເວລາ ອາດຈະເກີດຂຶ້ນວ່າ ເກີດຂຶ້ນເມື່ອໃດ ແລະ  ຕອນໃດທີ່ເວລາຜ່ານໄປ ຫຼື ການປ່ຽນແປງສະພາບການທີ່ເຮັດໃຫ້ເປັນການຕັດຂາດການເຊື່ອມໂຍງ ລະຫວ່າງ ການກະທຳຂອງຜູ້ຖືກ ຫາທາງອາຍາ ແລະ ບຸກຄົນທີ່ຖືກຄ້າມະນຸດ. ຄວາມເຂົ້າໃຈຢ່າງກວ້າງຂວາງ ບໍ່ຈຳເປັນຕ້ອງມີການເຊື່ອມໂຍງ 'ໂດຍກົງ ແລະ ທັນທີ,' ແຕ່ຕ້ອງຮັບຮູ້ວ່າການເຊື່ອມໂຍງ ລະຫວ່າງ ການຄ້າມະນຸດ ແລະ ຄວາມຜິດທີ່ຖືກກ່າວຫານັ້ນ ອາດຈະຍັງມີຢູ່. ຕົວຢ່າງ ເນື່ອງຈາກຄວາມຢ້ານກົວທີ່ມີຢູ່ຢ່າງຕໍ່ເນື່ອງ ແລະ ບັນຫາການບັງຄັບຍັງຖືກນຳໃຊ້ຢູ່.[46] ອີກດ້ານໜຶ່ງ, ຜູ້ຖືກເຄາະ ຮ້າຍຍັງຢູ່ໃນສະພາບການຂອງການຄ້າມະນຸດ ອາດຈະກະທຳຄວາມຜິດທີ່ບໍ່ກ່ຽວຂ້ອງກັບການຄ້າມະນຸດ ແລະ ການກະທຳ ດັ່ງກ່າວຈະບໍ່ນອນຢູ່ໃນຂອບເຂດການປົກປ້ອງຈາກການລົງໂທດ.

ສົນທິສັນຍາ ACTIP ໄດ້ຮັບຮອງເອົາຮູບແບບຕາມສາເຫດ. ເຊິ່ງຍັງເປັນຮູບແບບທີ່ຖືກສະເໜີໂດຍຜູ້ລາຍງານພິເສດ ກ່ຽວ ກັບການຄ້າມະນຸດ ແລະ ຜູ້ຊ່ຽວຊານກ່ຽວກັບການຕ້ານການຄ້າມະນຸດ ເນື່ອງຈາກວ່າ ເປັນຮູບແບບທີ່ກວ້າງຂວາງ ແລະ ງ່າຍກວ່າ ໃນການພິສູດຖ້າທຽບກັບຮູບແບບການບັງຄັບ.[47] ຮູບແບບຕາມສາເຫດມີ ຈຸດດີແມ່ນມີການຮັບຮູ້ວ່າ ການກະທຳທີ່ຜິດກົດໝາຍ ທີ່ເກີດຈາກຜູ້ຖືກເຄາະຮ້າຍທີ່ບໍ່ມີຄວາມເປັນອິດສະຫລະ ແລະ ຄວາມເປັນເອກະລາດ. ນອກນັ້ນ, ການ ເຊື່ອມໂຍງ ລະຫວ່າງ ຄວາມຜິດຂອງຜູ້ຖືກເຄາະຮ້າຍ ແລະ ການຖືກຄ້າມະນຸດຂອງເຂົາເຈົ້າ ຈະມີຄວາມຊັດເຈນເປັນພິເສດ ໃນເວລາທີ່ຜູ້ຖືກເຄາະຮ້າຍຖືກຄ້າມະນຸດ ເພື່ອໃຫ້ເຂົາເຈົ້າກະທຳຜິດທາງອາຍາ ເຊັ່ນ ການປູກພືດເພື່ອຜະລິດຢາເສບຕິດ ຫຼື ຄ້າຢາເສບຕິດ, ການຫຼອກລວງທາງໂທລະຄົມ ຫຼື ການລັກກະເປົາເງິນ.

42 ບັນທຶກການແນະນຳ "ການຂູດຮີດບຸກຄົນອື່ນດ້ວຍການສວາຍໃຊ້ສະຖານະພາບຄວາມສ່ຽງຂອງເຂົ້າເຈົ້າ" ເປັນເຄື່ອງມືໃນການຄ້າມະນຸດ ໃນມາດຕາ 3 ຂອງອານຸສັນຍາສາກົນວ່າດ້ວຍການຕ້ານ, ສະກັດກັ້ນແລະ ລົງໂທດການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, ເປັນສົນທິສັນຍາເພີ່ມເຕີມໃຫ້ແກ່ສົນທິສັນຍາວ່າດ້ວຍອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ (UNODC, 2012) ວັກທີ 2.2-2-5

43 ຕົວຢ່າງ, ກົດໝາຍຂອງອິນໂດເນເຊຍ ກຳນົດວ່າ "ຜູ້ຖືກເຄາະຮ້າຍທີ່ກໍ່ອາຊະຍາກຳໂດຍການຖືກບັງຄັບໃຫ້ກະທຳຜິດຄະດີ ອາຍາໃນເວລາຖືກຄ້າມະນຸດ ຈະບໍ່ໄດ້ຮັບຜິດຕໍ່ຂໍ້ກ່າວຫາທາງອາຍາ" (ມາດຕາ 18 ກົດໝາຍວ່າດ້ວຍການລຶບລ້າງການຄ້າມະນຸດ ສະບັບເລກທີ 21 ປີ 2007). ໃນກໍລະນີນີ້, ຄວນມີຄຳແນະນຳ ໃຫ້ແກ່ຜູ້ປະຕິບັດຕົວຈິງ ເພື່ອໃຫ້ເຂົາເຈົ້າເຂົ້າໃຈເຖິງວິທີການຕ່າງໆ ທີ່ຜູ້ຖືກເຄາະຮ້າຍຖືກບັງຄັບ.

44 ຄຳແນະນຳກ່ຽວກັບບັນຫາການຕອບໂຕ້ຄວາມຍຸຕິທຳທາງອາຍາທີ່ເໝາະສົມຕໍ່ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດ ຍ້ອນຖືກຄ້າມະນຸດ: ເອກະສານຄວາມເປັນມາ ກະກຽມໂດຍກອງເລຂາ ຄະນະປະຕິບັດງານດ້ານການຄ້າມະນຸດ, ວຽນນາ ວັນທີ 10 ແລະ 11 ກັນຍາ 2020,  UN Doc. CTOC/COP/WG.4/2020/2 (ວັນທີ 15 ມິຖຸນາ 2020), ວັກທີ 60.

45 ການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, ບົດລາຍງານຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, UN Doc. A/HRC/44/45 (ວັນທີ 6 ເມສາ 2020) [36]

46 Ryszard Piotrowicz, ພວກເຮົາສາມາດຂະຫຍາຍຂອບເຂດຫຼັກການບໍ່ລົງໂທດ ໄດ້ໄກເທົ່າໃດ? La Strada, ວັນທີ 21 ເມສາ 2021.

47 ບົດລາຍງານ ຂອງຜູ້ລາຍງານພິເສດ  ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, Maria Grazia Giammarinaro, 6 ເມສາ 2020, UN Doc A/HRC/44/45, ວັກທີ. 36; ບົດລາຍງານການຈັດຕັ້ງປະຕິບັດ ຫຼັກການ ບໍ່ລົງໂທດ ຂອງຜູ້ລາຍງານພິເສດ  ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ, Siobhán Mullally, UN Doc. A/HRC/47/34, (17 ພຶດສະພາ  2021), ວັກທີ 52

## ການຊີ້ແຈ້ງພາລະ ແລະ ມາດຕະຖານທີ່ຈໍາເປັນໃນການພິສູດ

ພາລະໃນການພິສູດເພື່ອກໍານົດການເຊື່ອມໂຍງລະຫວ່າງ ການຄ້າມະນຸດ ແລະ ການກະທໍາທີ່ຜິດກົດໝາຍຂອງຜູ້ຖືກເຄາະຮ້າຍ ເປັນພາລະຂອງລັດ. ຂໍ້ກໍານົດຫຼັກການບໍ່ລົງໂທດ ອາດຈະຖືກຮ່າງຂຶ້ນໃນລັກສະນະທີ່ກໍານົດວ່າ ພາລະໃນການພິສູດ ຜູ້ຖືກເຄາະຮ້າຍ–ຈໍາເລີຍ ເພື່ອນໍາເອົາຫຼັກຖານເພື່ອຢືນຢັນວ່າເຂົາເຈົ້າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ໃນພາກປະຕິບັດຕົວຈິງ, ອາດຈະເປັນເລື່ອງຍາກທີ່ຜູ້ຖືກເຄາະຮ້າຍ ໃນການພິສູດວ່າຕົນເອງເປັນຜູ້ຖືກເຄາະຮ້າຍ, ໂດຍສະເພາະຢ່າງຍິ່ງ ໃນປະເທດທີ່ການຂູດຮີດໃນກິດຈະກໍາທີ່ຜິດທາງອາຍາ ບໍ່ໄດ້ຖືກຮັບຮູ້ວ່າເປັນຮູບແບບໜຶ່ງ ຂອງການຄ້າມະນຸດໃນກົດໝາຍພາຍໃນ.[48] ການນໍາເອົາພາລະໃນການພິສູດໄປໃຫ້ຜູ້ຖືກເຄາະຮ້າຍ ເຊິ່ງຂັດກັບການປະຕິບັດທີ່ເປັນຕົວແບບທີ່ດີ ໃນການຮັບປະກັນວ່າ ພາລະນັ້ນເປັນຂອງລັດ ເຊິ່ງສອດຄ່ອງກັບພັນທະຂອງຕົນຕໍ່ກັບການກໍານົດຕົວ ແລະ ປົກປ້ອງຜູ້ຖືກເຄາະ ຮ້າຍຢ່າງຕັ້ງໜ້າ. ດ້ວຍເຫດນັ້ນ, ການປ່ຽນແປງນິຕິກໍາ ອາດຈະໄດ້ຮັບການພິຈາລະນາ ໂດຍຮັບປະກັນວ່າພາລະໃນການພິສູດເປັນພາລະຂອງລັດສະເໝີ ເພື່ອພິສູດວ່າການປ້ອງກັນນັ້ນ ບໍ່ສາມາດນໍາໃຊ້ໄດ້, ຍ້ອນວ່າຜູ້ຖືກເຄາະຮ້າຍ ມີເຈດຕະນາທາງອາຍາທີ່ຈໍາເປັນ ແລະ ເຈດຕະນາທາງອາຍານັ້ນ ບໍ່ໄດ້ມີຄວາມເສຍຫາຍຈາກວິທີການທີ່ຜູ້ຄ້າມະນຸດໄດ້ນໍາໃຊ້.[49]

ຕໍ່ກັບມາດຕະຖານທີ່ຈໍາເປັນໃນການພິສູດ, ໄດ້ມີການອອກຄໍາແນະນໍາໃຫ້ແກ່ຄະນະເຮັດວຽກສະເພາະກິດ ກ່ຽວກັບການຄ້າ ມະນຸດ ພາຍໃຕ້ກອງປະຊຸມປະເທດທີ່ເປັນພາຄີ ຕໍ່ກັບສົນທິສັນຍາວ່າດ້ວຍອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ ທີ່ກໍານົດໄວ້ວ່າຜູ້ຖືກເຄາະຮ້າຍທີ່ເປັນຜູ້ຖືກຫາວ່າກະທໍາຜິດ ບໍ່ຈໍາເປັນຕ້ອງພິສູດການປ້ອງກັນຕົນເອງທີ່ມີຢູ່ ນອກເໜືອຈາກຂໍ້ສົງໄສທີ່ສົມເຫດສົມຜົນ, ແຕ່ຝ່າຍຜູ້ດໍາເນີນຄະດີ ຕ້ອງພິສູດວ່າການປ້ອງກັນນັ້ນ ນໍາໃຊ້ບໍ່ໄດ້:

> ຜູ້ຖືກຫາ ບໍ່ມີຄວາມຈໍາເປັນໃນການພິສູດການປ້ອງກັນທີ່ມີຢູ່ ໂດຍປາສະຈາກຂໍ້ສົງໄສທີ່ສົມເຫດສົມຜົນ ຫຼື ແມ້ແຕ່ ຄວາມສົມດຸນຂອງຄວາມເປັນໄປໄດ້, ເນື່ອງຈາກການກະທໍາ ດັ່ງກ່າວອາດຈະລະເມີດຫຼັກການ ການສັນນິຖານວ່າເປັນຜູ້ບໍລິສຸດ. ໃນເວລາທີ່ການປ້ອງ ກັນກາຍເປັນບັນຫາໃນທີ່ປະຊຸມສານ, ພະນັກງານໄອຍະການຈໍາເປັນຕ້ອງ ໄດ້ສະແດງໃຫ້ເຫັນ ໂດຍປາສະຈາກຂໍ້ສົງໄສທີ່ສົມເຫດສົມຜົນວ່າ, ການປ້ອງກັນນັ້ນ ບໍ່ສາມາດນໍາໃຊ້ໄດ້.[50]

ນິຕິກໍາ ອາດຈະມີການປະກາດໃຊ້ ຫຼື ປັບປຸງ ເພື່ອເຮັດໃຫ້ມີຄວາມຊັດເຈນຂຶ້ນຕໍ່ກັບຜູ້ປະຕິບັດຕົວຈິງດ້ານຍຸຕິທໍາທາງອາຍາ, ໃນເວລາທີ່ອ້າງມີການປ້ອງກັນ, ເຊິ່ງມີຄວາມຈໍາເປັນສໍາລັບພາກລັດ (ພະນັກງານໄອຍະການ) ທີ່ຈະສະແດງໃຫ້ເຫັນວ່າ ການປ້ອງກັນບໍ່ສາມາດນໍາໃຊ້ໄດ້.

## ພັດທະນາ ແລະ ເຜີຍແຜ່ຄໍາແນະນໍາດ້ານນິຕິກໍາກ່ຽວກັບຫຼັກການບໍ່ລົງໂທດ

ຜູ້ປະຕິບັດຕົວຈິງດ້ານຍຸຕິທໍາທາງອາຍາ ອາດຈະບໍ່ມີຄວາມຊັດເຈນ ກ່ຽວກັບວິທີການກໍານົດການເຊື່ອມ ໂຍງລະຫວ່າງ ຄວາມຜິດຂອງຜູ້ຖືກເຄາະຮ້າຍ ແລະ ການຖືກຄ້າມະນຸດ ເພື່ອນໍາໃຊ້ຫຼັກການບໍ່ລົງໂທດ. ເຊິ່ງບໍ່ກ່ຽວຂ້ອງ ກັບວ່າ ລັດຈະນໍາ ໃຊ້ຮູບແບບການບັງຄັບ ຫຼື ຮູບແບບຕາມສາເຫດ, ການນໍາໃຊ້ວິທີດັ່ງກ່າວທັງສອງຮູບແບບ ຫຼື ວິທີການອື່ນທີ່ແຕກ ຕ່າງກັນ, ເຊິ່ງມີຄວາມສໍາຄັນທີ່ສຸດທີ່ຜູ້ປະຕິບັດຕົວຈິງຕ້ອງເຂົ້າໃຈຫຼັກການນີ້.

ໜ່ວຍງານຕ່າງໆທີ່ເຮັດວຽກກ່ຽວກັບການຕ້ານການຄ້າມະນຸດ – ໂດຍການປຶກສາຫາລືກັບຜູ້ປະຕິບັດຕົວຈິງດ້ານຍຸຕິທໍາ ທາງອາຍາ – ຄວນພິຈາລະນາ ພັດທະນາຄໍາແນະນໍາກ່ຽວກັບຂໍ້ກໍານົດຫຼັກການບໍ່ລົງໂທດ ແລະ ນິຕິກໍາອື່ນໆ ທີ່ອາດຈະກ່ຽວ ຂ້ອງກັບການບໍ່ລົງໂທດ ແລະ ເຜີຍແຜ່ນະໂຍບາຍດັ່ງກ່າວໃຫ້ແກ່ຜູ້ປະຕິບັດຕົວຈິງດ້ານຍຸຕິທໍາທາງອາຍາ ຜູ້ທີ່ອາດຈະບໍ່ຮູ້ວ່າ ມີຂໍ້ກໍານົດເຫຼົ່ານີ້ຢູ່ ຫຼື ບໍ່ຮູ້ວ່າຈະນໍາໃຊ້ຫຼັກການດັ່ງກ່າວນັ້ນແນວໃດ. ຄໍາແນະນໍາດັ່ງກ່າວ ມີຄວາມສໍາຄັນ ເພື່ອຮັບປະກັນວ່າ ມີການນໍາໃຊ້ຫຼັກການບໍ່ລົງໂທດຢ່າງເປັນລະບົບ ແລະ ສອດຄ່ອງກັນໃນທົ່ວລະບົບຍຸຕິທໍາ ໂດຍພະນັກງານໄອຍະການ, ທະ ນາຍຄວາມທີ່ໃຫ້ການປົກປ້ອງ ແລະ ສະມາຊິກຝ່າຍຕຸລາການ.

ຄໍາແນະນໍາ ທີ່ສະໜອງໃຫ້ຜູ້ປະຕິບັດຕົວຈິງ ຄວນພິຈາລະນາ ການອະທິບາຍທີ່ຊັດເຈນ ແລະ ໃນພາສາທີ່ມີຄວາມໜ້າເຊື່ອ ຖື:

- ບໍ່ວ່າ ການພົວພັນລະຫວ່າງ ການກະທໍາທີ່ຜິດກົດໝາຍຂອງຜູ້ຖືກເຄາະຮ້າຍ ຫຼື ປະສົບການໃນການຖືກຄ້າມະນຸດ ຂອງ ເຂົາເຈົ້າຈະເກີດຂຶ້ນບົນພື້ນຖານ ການບັງຄັບ ຫຼື ຕາມສາເຫດ ກໍຕາມ.
- ວິທີການທີ່ພະນັກງານໄອຍະການ ແລະ ທະນາຍຄວາມທີ່ໃຫ້ການປົກປ້ອງ ສາມາດນໍາເອົາຫຼັກຖານ ເພື່ອກໍານົດວ່າ ຄວາມຜິດຂອງຜູ້ຖືກເຄາະຮ້າຍ ມີການເຊື່ອມໂຍງ ຫຼື ບໍ່ມີການເຊື່ອມໂຍງກັບການຖືກຄ້າມະນຸດຂອງເຂົາເຈົ້າ

48 ອົງການສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນເພດຍິງທີ່ຖືກ ຂູດຮີດທາງເພດ ໃນຖານະ ຈໍາເລີຍ: ກໍລະນີ ການວິເຄາະກົດໝາຍ (ອົງການສະຫະປະຊາຊາດ, ວຽນນາ 2020) 6, 76-93

49 ຄໍາຕັດສິນຂອງສານສະຫະຣາຊະອານາຈັກອັງກິດ ປີ 2018 ຂອງສານຂັ້ນອຸທອນ ເຊິ່ງກໍານົດວ່າ ໜ້າທີ່ໃນການພິສູດ ຄວນເປັນຂອງລັດ, ໝາຍຄວາມວ່າ ມັນຄວນເປັນຄວາມຮັບຜິດຊອບຂອງພະນັກງານໄອຍະການ ທີ່ຈະບໍ່ພິສູດການນໍາໃຊ້ ການປ້ອງກັນຕົວຕາມກົດໝາຍ ໂດຍບໍ່ມີຂໍ້ສົງໄສທີ່ສົມເຫດສົມຜົນ. ກົດໝາຍວ່າດ້ວຍການທົບທວນຢ່າງເປັນອິດສະລະກ່ຽວກັບ ການເປັນຂ້າທາດສະໄໝໃໝ່ ປີ 2015: ບົດລາຍງານສຸດທ້າຍ (ກະຊວງພາຍໃນ, 2019) 18, ອ້າງອີງເຖິງ MK v R [2018] EWCA Crim 667

50 ຄໍາແນະນໍາກ່ຽວກັບບັນຫາການຕອບໂຕ້ຄວາມຍຸຕິທໍາທາງອາຍາທີ່ເໝາະສົມຕໍ່ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທໍາຜິດຍ້ອນຖືກ ຄ້າມະນຸດ: ເອກະສານຄວາມເປັນມາ ກະກຽມໂດຍກອງເລຂາ ຄະນະປະຕິບັດງານດ້ານການຄ້າມະນຸດ, ວຽນນາ ວັນທີ 10 ແລະ 11 ກັນຍາ 2020, UN Doc. CTOC/COP/WG.4/2020/2 (15 ມິຖຸນາ 2020), ວັກທີ 65.

- ອະນຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ ແລະ ສົນທິສັນຍາ ACTIP ສາມາດເປັນນິຕິກຳອ້າງອີງໄດ້ ຕໍ່ກັບກົດ ໝາຍພາຍໃນ ທີ່ບໍ່ມີຂໍ້ກຳນົດຫຼັກການບໍ່ລົງໂທດ ແລະ/ຫຼື ເພີ່ມເຕີມໃຫ້ແກ່ຂໍ້ກຳນົດພາຍໃນ ທີ່ມີຂອບເຂດຈຳກັດ ດ້ານການປົກປ້ອງ
- ກົດໝາຍວ່າດ້ວຍສິດທິມະນຸດ ແລະ ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ໃນລະດັບພາກພື້ນ ແລະ ສາກົນ ມີຄວາມສຳຄັນໃນການຕີຄວາມໝາຍ ການປ້ອງກັນຈາກການບີບບັງຄັບ ແລະ ຄວາມຈຳເປັນ ກໍລະນີທີ່ບຸກຄົນໃດໜຶ່ງ ໄດ້ກະທຳຜິດກົດໝາຍ ໃນສະຖານະການຂອງການຄ້າມະນຸດ.

ເຄື່ອງມືທີ່ເປັນຄຳແນະນຳຕ່າງໆມີຄວາມສຳຄັນຫຼາຍ ບໍ່ສະເພາະແຕ່ກັບຜູ້ປະຕິບັດຕົວຈິງທີ່ເຮັດວຽກຕ້ານການຄ້າມະນຸດ, ແຕ່ຍັງມີຄວາມສຳຄັນສຳລັບຜູ້ປະຕິບັດຕົວຈິງໃນດ້ານທົ່ວໄປ ເຊິ່ງອາດຈະເປັນບຸກຄົນທີ່ມີພົວພັນໃນການດຳເນີນຄະດີ ຫຼື ການປ້ອງກັນບຸກຄົນທີ່ກ່ຽວຂ້ອງກັບຄວາມຜິດທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດອາດໄດ້ກະທຳ. ດ້ວຍເຫດນັ້ນ ຄຳແນະນຳ ຕ່າງໆຄວນມີການແກ້ໄຂບໍ່ສະເພາະແຕ່ຂໍ້ກຳນົດຫຼັກການບໍ່ລົງໂທດ ໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແຕ່ຍັງມີ ໃນກົດໝາຍອື່ນໆ ທີ່ອາດຈະເປັນປະໂຫຍດໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ.

## [2] ສ້າງຄວາມເຂັ້ມແຂງ ຕໍ່ກັບນິຕິກຳອື່ນ (ທີ່ບໍ່ແມ່ນການຄ້າມະນຸດ) ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງ ໂທດ

> ນອກເໜືອຈາກກົດໝາຍກ່ຽວກັບການຄ້າມະນຸດ (ຕາມທີ່ກ່າວໄວ້ໃນຂໍ້ [1]) ລັດຄວນພິຈາລະນາປະກາດໃຊ້ກົດໝາຍ ຫຼື ປັບປຸງກົດໝາຍອື່ນໆ ເພື່ອຫຼຸດຜ່ອນຄວາມສ່ຽງຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຈາກການດຳເນີນຄະດີ ທີ່ບໍ່ເໝາະ ສົມຕໍ່ກັບຄວາມຜິດທີ່ເຂົາເຈົ້າໄດ້ກະທຳ ອັນເປັນຜົນສະທ້ອນໂດຍກົງຈາກການຖືກຄ້າມະນຸດ. ການປັບປຸງກົດໝາຍ ອາດ ຈະພິຈາລະນາ ເຖິງການຫຼຸດຜ່ອນຄວາມສ່ຽງໃນກົດໝາຍວ່າດ້ວຍການເຂົ້າ–ອອກເມືອງ ແລະ ມາດຕະການການຄຸ້ມຄອງ ຊາຍແດນອື່ນໆ ທີ່ນຳໃຊ້ໂດຍບໍ່ເໝາະສົມຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນການລົງໂທດທາງອາຍາ ແລະ/ຫຼື ທາງບໍລິຫານ ຕໍ່ກັບການລະເມີດການເຂົ້າ–ອອກເມືອງ. ຜູ້ປະຕິບັດຕົວຈິງ ອາດຈະຊອກຫາຂໍ້ກຳນົດສະເພາະ ທີ່ເປັນປະ ໂຫຍດໃນການສະໜັບສະໜູນເຂົາເຈົ້າ ໃນການນຳໃຊ້ຂໍ້ກຳນົດການ ບໍ່ລົງໂທດໃນພາກປະຕິບັດຕົວຈິງ ໄດ້ຢ່າງມີປະສິດ ທິພາບ, ແທນທີ່ຈະໃຊ້ ຫຼື ເພີ່ມເຕີມຕໍ່ກັບຂໍ້ກຳນົດການບໍ່ລົງໂທດໃດໆ ທີ່ມີຢູ່ໃນນິຕິກຳພາຍໃນ. ໃນພາກນີ້ ໄດ້ມີການສະເໜີຄຳແນະນຳ ກ່ຽວກັບໂອກາດເພີ່ມເຕີມ ທີ່ລັດສາມາດນຳໃຊ້ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການປົກປ້ອງການບໍ່ລົງ ໂທດໃນນິຕິກຳພາຍໃນຂອງຕົນ, ນອກເໜືອຈາກການນຳໃຊ້ຂໍ້ກຳນົດກ່ຽວກັບການບໍ່ລົງໂທດ.

### ຄົ້ນຄວ້າ ປັບປຸງຂໍ້ກຳນົດທາງອາຍາ ແລະ ທາງບໍລິຫານ ເພື່ອຫຼຸດຜ່ອນຄວາມສ່ຽງຂອງຜູ້ຖືກເຄາະຮ້າຍ ທີ່ຈະຖືກດຳເນີນຄະດີ

ລັດຄວນພິຈາມະລາປັບປຸງນິຕິກຳ ທີ່ຈະເຮັດໃຫ້ຜູ້ຖືກເຄາະຮ້າຍຕົກຢູ່ໃນຄວາມສ່ຽງໃນການດຳເນີນຄະດີ. ຕົວຢ່າງ ພິຈາລະ ນາວິທີການໃນການປົກປ້ອງຜູ້ຖືກເຄາະຮ້າຍ ທີ່ຕ້ອງຮັບຜິດຊອບຕໍ່ຄວາມຜິດນັ້ນຢ່າງເຂັ້ມງວດ. ຕົວຢ່າງ ການນຳໃຊ້ຂໍ້ກຳ ນົດທາງອາຍາ ແລະ ທາງບໍລິຫານສຳລັບຄວາມຜິດການເຂົ້າ–ອອກເມືອງ ຕໍ່ແຮງງານເຄື່ອນຍ້າຍທີ່ຢູ່ໃນສະຖານະພາບທີ່ຜິດ ກົດໝາຍ ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດເຊິ່ງອາດຈະລະເມີດຫຼັກການບໍ່ລົງໂທດ. ຄວາມຜິດຕ່າງໆທີ່ກ່ຽວຂ້ອງ ກັບຢາເສບຕິດ, ອາດເຮັດໃຫ້ຜູ້ຖືກເຄາະຮ້າຍທີ່ຖືກຄ້າມະນຸດ ມີສ່ວນຮ່ວມກ່ຽວກັບການກະທຳຜິດທີ່ຕິດພັນກັບຢາເສບ ຕິດມີຄວາມສ່ຽງທີ່ຈະຖືກດຳເນີນຄະດີ ເຊິ່ງອາດຈະສົ່ງຜົນເຮັດໃຫ້ມີການລົງໂທດທາງດ້ານຮ່າງກາຍ ຫຼື ໂທດປະຫານຊີວິດ. ການປັບປຸງກົດໝາຍທີ່ເກືອດຫ້າມການບໍລິການທາງເພດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ກຸ່ມສ່ຽງ ແລະ ກຸ່ມຜູ້ດ້ອຍໂອກາດອື່ນໆກໍຄວນໄດ້ຮັບການພິຈາລະນາ. ໂດຍສະເພາະຢ່າງຍິ່ງ ກໍລະນີທີ່ກ່ຽວພັນ ກັບເດັກ, ການເຮັດໃຫ້ອາຍຸຂອງເດັກຢູ່ໃນເກນບັນລຸນິຕິພາວະ ທີ່ເປັນອົງປະກອບຂອງການກະທຳຜິດ ທີ່ກ່ຽວຂ້ອງກັບອຸດສາຫະກຳທາງເພດ ເປັນວິທີການທີ່ບໍ່ຖືກຕ້ອງຕາມກົດໝາຍ ເຊິ່ງມີຄວາມເປັນໄປໄດ້ທີ່ຈະດຳເນີນຄະດີຕໍ່ກັບເດັກ (ລວມທັງຜູ້ຖືກເຄາະຮ້າຍໃນບັນດາກຸ່ມ ເດັກເຫຼົ່ານີ້) ສຳລັບການມີສ່ວນຮ່ວມຂອງເຂົາເຈົ້າໃນການກະທຳທີ່ຜິດກົດໝາຍ.[51]

51 ເອກອັກຄະລັດຖະທູດ, ທ່ານ John Cotton Richmond ໄດ້ກ່າວໃນເວທີສົນທະນາໃນຫົວຂໍ້ຄວາມຍຸຕິທຳ ກ່ຽວກັບຜູ້ລອດຊີວິດ, Dressember and Karana Rising, 7pm ET, ວັນທີ 30 ເມສາ 2021.

ກ່ອງຂໍ້ມູນ: ຕົວຢ່າງ

ໃນປະເທດອາເຈນຕິນາ ການທີ່ບໍ່ມີການກຳນົດ 'ການບັງຄັບໃຫ້ກະທຳຜິດທາງອາຍາ' ເພື່ອຈຸດປະສົງສະເພາະຂອງການຄ້າ ມະນຸດ ມີຜົນເຮັດໃຫ້ຜູ້ຖືກເຄາະຮ້າຍ ທີ່ຖືກຂູດຮີດໃນຂະບວນການຄ້າຢາເສບຕິດ ບໍ່ຖືກກຳນົດຕົວໃນຖານະຜູ້ຖືກເຄາະ ຮ້າຍ ຢ່າງມີປະສິດທິພາບ ແຕ່ກັບຖືກດຳເນີນຄະດີ ຕໍ່ກັບຄວາມຜິດທີ່ກ່ຽວກັບຢາເສບຕິດແທນ. ເມື່ອກ່າວເຖິງບັນຫານີ້, ຜູ້ປົກປ້ອງຂອງລັດຖະບານກາງກ່າວວ່າ ຄ້າຍຄືກັນຂັງ "....ເຕັມໄປດ້ວຍອີງກອນທີ່ເຊື່ອມໂຍງກັບການຄ້າຂາຍຢາເສບຕິດ ຜູ້ທີ່ ນຳໃຊ້ແມ່ຍິງ, ຄົນພິການ ແລະ ໃນຫຼາຍໆກໍລະນີ ຜູ້ບໍ່ຮູ້ໜັງສື ເພື່ອເປັນການຂັດຂວາງເຈົ້າໜ້າທີ່."[52]

ເພື່ອປະເຊີນໜ້າກັບສິ່ງທ້າທາຍນີ້, ກະຊວງປ້ອງກັນຊາດ ໄດ້ຮຽກຮ້ອງໃຫ້ມີການປັບປຸງກົດໝາຍວ່າດ້ວຍຢາເສບຕິດ ເພື່ອ ຍົກເວັ້ນຄວາມຮັບຜິດຊອບທາງອາຍາ, ຜູ້ທີ່ຖືກຄ້າມະນຸດ ເພື່ອຂົນສົ່ງຢາເສບຕິດ ໃນຂະບວນການຄ້າຂາຍຢາເສບຕິດ.

## ການກຳນົດອາຍຸຂັ້ນຕ່ຳທີ່ເໝາະສົມ ຕໍ່ກັບຄວາມຮັບຜິດຊອບທາງອາຍາ

ເພື່ອຈຸດປະສົງໃນການກຳນົດຕົວ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ເດັກແມ່ນບຸກຄົນຜູ້ທີ່ມີອາຍຸຕ່ຳ ກວ່າ 18 ປີ.[53]

ເພື່ອປົກປ້ອງຜູ້ຖືກເຄາຮ້າຍທີ່ເປັນເດັກຈາກການຖືກດຳເນີນຄະດີ, ມີຄວາມຈຳເປັນຕ້ອງໄດ້ກຳນົດອາຍຸຂັ້ນຕ່ຳທີ່ເໝາະສົມ ສຳລັບຄວາມຮັບຜິດຊອບທາງອາຍາ ເພື່ອຮັບປະກັນໃຫ້ມີການປະຕິບັດທີ່ເໝາະສົມແກ່ອາຍຸຂອງເດັກໃນທຸກດ້ານ.[54] ມາດຕາ 40 ຂອງສົນທິສັນຍາວ່າດ້ວຍສິດທິເດັກ ບໍ່ໄດ້ກຳນົດອາຍຸຂັ້ນຕ່ຳຂອງເດັກ ກ່ຽວກັບຄວາມຮັບຜິດຊອບທາງອາຍາ, ເຖິງວ່າ ຄະນະກຳມະການວ່າດ້ວຍສິດທິເດັກ ຊຸກຍູ້ໃຫ້ລັດດຳເນີນການບັນທຶກຫຼັກຖານດ້ານວິທະຍາສາດ ແລະ ເພີ່ມອາຍຸຂອງເດັກຕໍ່ກັບຄວາມຮັບຜິດຊອບທາງອາຍາຂຶ້ນເປັນອາຍຸ 14 ປີ ແລະ ຍົກຜົນປະໂຫຍດໃຫ້ແກ່ເຂົາເຈົ້າຕໍ່ກັບຄວາມສົງໄສ ກ່ຽວກັບອາຍຸ ຖ້າຫາກວ່າບໍ່ສາມາດພິສູດກ່ຽວກັບອາຍຸຂອງເດັກໄດ້.[55]

## ຄົ້ນຄ້ວາການປະກາດໃຊ້ ຫຼື ປັບປຸງນິຕິກຳ ເພື່ອເຮັດໃຫ້ການບັນທຶກປະຫວັດທາງອາຍາຂອງຜູ້ຖືກເຄາະຮ້າຍ ໄດ້ຮັບການ ຍົກເລີກ, ລຶບລ້າງ ແລະ ປິດລັບ

ລັດຄວນພິຈາລະນາຄົ້ນຄວ້າການປັບປຸງ ຫຼື ແນະນຳນິຕິກຳ ທີ່ອະນຸຍາດໃຫ້ມີການຍົກເລີກຄຳຕັດສິນຂອງສານ ແລະ ການ ບັນທຶກປະຫວັດທາງອາຍາຂອງຜູ້ຖືກເຄາະຮ້າຍ (ຍົກເລີກຄຳຕັດສິນຂອງສານ), ຍົກເລີກ (ຄຳຕັດສິນຍັງຄົງຢູ່ ແຕ່ລຶບປະ ຫວັດທາງອາຍາຂອງຜູ້ຖືກເຄາະຮ້າຍອອກ) ຫຼື ປິດລັບປະຫວັດ (ຄຳຕັດສິນຂອງສານຍັງຄົງຢູ່ ແຕ່ຕ້ອງມີຄຳສັ່ງ ຈາກສານໃນ ການເບິ່ງປະຫວັດດັ່ງກ່າວ).

ກົດໝາຍດັ່ງກ່າວ ມີຄວາມສຳຄັນໃນການຊ່ວຍຢາຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອໃຫ້ສາມາດດຳເນີນຊີວິດຕໍ່ໄປ ໄດ້. ເຖິງວ່າເຂົາເຈົ້າອາດຈະໄດ້ຮັບຄວາມເຈັບປວດຈາກການຖືກລົງໂທດຜ່ານການຖືກຈັບຕົວ, ການດຳເນີນຄະດີ ແລະ ຕັດສິນລົງໂທດ, ການລຶບລ້າງຄຳຕັດສິນສາມາດເຮັດໃຫ້ຜູ້ຖືກເຄາະຮ້າຍກັບມາເຊື່ອໝັ້ນ ໃນລະບົບຍຸຕິທຳທາງອາຍາ ທີ່ ເຄີຍປະຕິບັດຕໍ່ເຂົາເຈົ້າຄືກັບເປັນອາຊະຍາກອນ. ເຊິ່ງສາມາດເຮັດໃຫ້ ເຂົາເຈົ້າຫຼຸດພົ້ນອອກຈາກຄວາມລັງກຽດຂອງສັງຄົມ ແລະ ລຶບລ້າງອຸປະສັກຕ່າງໆ ຕໍ່ກັບໂອກາດຕ່າງໆ.[56]

---

52 Jean-Pierre Gauci ແລະ Noemi Magugliani, ການຄ້າມະນຸດ ແລະ ສິດທິຂອງຜູ້ຖືກເຄາະຮ້າຍ: ການວິເຄາະກ່ຽວກັບການນຳໃຊ້ຫຼັກການບໍ່ລົງໂທດ, (BIICL and IBA, 2023), ໜ້າທີ.34, ອ້າງອີງເຖິງ Ministerio Público de la Defensa, [‘El MPD planteó ante el Senado la necesidad de la reforma de la Ley de drogas’] (2020)

53 ອານຸສັນຍາການຄ້າມະນຸດ, ມາດຕາ 3(d); ສົນທິສັນຍາ ACTIP ມາດຕາ 2(d)

54 ຄຳຄິດເຫັນທົ່ວໄປ ເລກທີ 24 (2019) ກ່ຽວກັບ ສິດທິເດັກ ໃນຂະບວນການຍຸຕິທຳເດັກ,UN Doc. CRC/C/GC/24, ວັນທີ18 ກັນຍາ 2019 [6]

55 ຄຳຄິດເຫັນທົ່ວໄປ ເລກທີ 24 (2019) ກ່ຽວກັບ ສິດທິເດັກ ໃນຂະບວນການຍຸຕິທຳເດັກ,UN Doc. CRC/C/GC/24, ວັນທີ18 ກັນຍາ 2019 [22-24]

56 ເບິ່ງທີ່ຄຳແນະນຳ 14.

## ພາກທີ 3

# ການນຳໃຊ້ຫຼັກການບໍ່ລົງໂທດໃນການ ກັ່ນກອງເບື້ອງຕົ້ນ ແລະ ກຳນົດຕົວ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

## ພາກທີ 3: ການນຳໃຊ້ຫຼັກການບໍ່ລົງໂທດໃນການກັ່ນກອງເບື້ອງຕົ້ນ ແລະ ກຳນົດຕົວ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

ກົດໝາຍສາກົນ ແລະ ພາກພື້ນ ກຳນົດໃຫ້ບັນດາລັດຕ່າງໆຕ້ອງໄດ້ກຳນົດວິທີການປ້ອງກັນ ແລະ ຕ້ານການຄ້າມະນຸດ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ການປະຕິບັດພັນທະເຫຼົ່ານີ້ ຮຽກຮ້ອງໃຫ້ມີຄວາມພະຍາຍາມ ໃນການສ້າງ ຄວາມເຂັ້ມແຂງໃຫ້ແກ່ຂະແໜງການບັງຄັບໃຊ້ກົດໝາຍ, ຂະແໜງການກວດຄົນເຂົ້າ-ອອກເມືອງ ແລະ ຂະແໜງການ ອື່ນໆທີ່ກ່ຽວຂ້ອງ ເພື່ອກຳນົດຕົວຜູ້ກະທຳຜິດ, ຜູ້ຖືກເຄາະຮ້າຍ ແລະ ສະພາບການຂອງການຄ້າມະນຸດ.

ຫຼັກການບໍ່ລົງໂທດ ຕ້ອງຖືກນຳໃຊ້ເຂົ້າໃນການກັ່ນກອງເບື້ອງຕົ້ນ ລວມທັງ ການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າ ມະນຸດ ຈົນເຖິງການສະໜອງການປົກປ້ອງ ແລະ ຊ່ວຍເຫຼືອເຂົາເຈົ້າ. ການກັ່ນກອງເບື້ອງຕົ້ນໝາຍເຖິງຂະບວນການ ທີ່ບຸກ ຄົນໃດໜຶ່ງຖືກພິຈາລະນາວ່າ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍອີງໃສ່ສັນຍານ ຫຼື ຕົວຊີ້ວັດທີ່ເກີດຂຶ້ນ ຜ່ານ ການສັງເກດການ ຫຼື ມີການພົວພັນກັບເຂົາເຈົ້າ. ການກຳນົດຕົວໝາຍເຖິງຂະບວນການທີ່ເປັນທາງການ ໂດຍຂະແໜງ ການທີ່ມີອຳນາດຕັດສິນໃຈຢ່າງເປັນທາງການ ເພື່ອກຳນົດວ່າບຸກຄົນນັ້ນເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.[57] ຫຼັກການບໍ່ລົງໂທດຄວນຖືກນຳໃຊ້ເຂົ້າໃນກໍລະນີທີ່ໜ່ວຍງານທີ່ມີສິດອຳນາດ ໄດ້ມີການກຳນົດວ່າມີການເຊື່ອມໂຍງທີ່ ພຽງພໍລະຫວ່າງ ການກະທຳທີ່ຜິດກົດໝາຍ ແລະ ການສັນນິຖານວ່າມີການຄ້າມະນຸດ/ຜູ້ທີ່ອາດຈະເປັນຜູ້ຖືກເຄາຮ້າຍ ເພື່ອ ໃຫ້ມີການປະຕິບັດຕໍ່ເຂົາເຈົ້າໃນຖານະຜູ້ຖືກເຄາຮ້າຍຈາກການຄ້າມະນຸດ ເພື່ອຈຸດປະສົງໃນການກຳນົດຕົວ.

ການກັ່ນກອງ ແລະ ການກຳນົດຕົວຜູ້ຖືກເຄາະຮ້າຍໂດຍໄວ ແລະ ມີປະສິດທິພາບແມ່ນເປັນຈຸດເລີ່ມຕົ້ນໃນການນຳໃຊ້ຫຼັກ ການບໍ່ລົງໂທດ. ເວັ້ນແຕ່ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄດ້ຖືກກັ່ນກອງໃນຖານະຂອງບຸກຄົນທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ເຂົາເຈົ້າຈະບໍ່ຖືກປົກປ້ອງຈາກການລົງໂທດ. ເມື່ອບຸກຄົນໃດໜຶ່ງຫາກໄດ້ຮັບການປະຕິບັດໃນລັກສະນະທີ່ເຂົາເຈົ້າເປັນຜູ້ກະທຳຜິດ, ເຊິ່ງເປັນສິ່ງທີ່ຍາກທີ່ຈະມີການຫັນທິດທາງ ເພື່ອປະຕິບັດຕໍ່ເຂົາເຈົ້າໃຫ້ເຂົ້າສູ່ເສັ້ນ ທາງການປົກປ້ອງ. ດັ່ງນັ້ນ, ຫຼັກການບໍ່ລົງໂທດຄວນນຳໃຊ້ກ່ອນທີ່ຈະມີການເລີ່ມຕົ້ນຂະບວນການຍຸຕິທຳທາງອາຍາ ທັນທີທີ່ເຈົ້າໜ້າທີ່ພົບເຫັນບຸກຄົນທີ່ເຂົາເຈົ້າສັນນິຖານວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ໃນກໍລະນີ ທີ່ພົບວ່າມີຕົວຊີ້ ວັດວ່າເປັນການຄ້າມະນຸດ, ຜູ້ຕອບໂຕ້ດ່ານໜ້າ ຄວນຈະສົ່ງຕໍ່ຜູ້ຖືກສົງໄສວ່າເປັນຜູ້ຖືກເຄາະຮ້າຍເຂົ້າສູ່ລະບົບການສົ່ງຕໍ່ໃນລະດັບຊາດ. ໃນກໍລະນີທີ່ເປັນເດັກ ຫຼື ສົງໄສວ່າບຸກຄົນດັ່ງກ່າວເປັນເດັກ, ຂັ້ນຕອນທຳອິດຄວນມີການກຳນົດ ແລະ ການປະເມີນເພື່ອຜົນປະໂຫຍດສູງສຸດຂອງເດັກ ແລະ ຕ້ອງຕິດຕໍ່ຫາໜ່ວຍງານ ທີ່ໃຫ້ການບໍລິການປົກປ້ອງເດັກ.

ການນຳໃຊ້ຫຼັກການບໍ່ລົງໂທດບໍ່ຄວນຢູ່ໃນເງື່ອນໄຂການກຳນົດຕົວຜູ້ຖືກເຄາະຮ້າຍຢ່າງເປັນທາງການ ຫຼື ການດຳເນີນຄະດີ ກັບຜູ້ຖືກຫາວ່າເປັນຜູ້ຄ້າມະນຸດ ແລະ ບໍ່ຄວນຢູ່ໃນເງື່ອນໄຂທີ່ຜູ້ຖືກເຄາະຮ້າຍໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ໃນຂະບວນ ການຍຸຕິທຳທາງອາຍາ. ຜູ້ປະຕິບັດຕົວຈິງບໍ່ໄດ້ເອົາໃຈໃສ່ໃນການປະຕິບັດກັບຜູ້ຖືກເຄາະຮ້າຍ ໃນການກຳນົດຕົວເຂົາເຈົ້າ ວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ແຕ່ເຂົາເຈົ້າປະຕິບັດຕາມພັນທະ ແລະ ໜ້າທີ່ຕາມກົດໝາຍ, ແລະ ຕ້ອງການ ໃຫ້ຜູ້ຖືກເຄາະຮ້າຍໃຫ້ການສະໜັບສະໜູນການປະຕິບັດໜ້າທີ່ຂອງເຂົາເຈົ້າຢ່າງມີປະສິດທິພາບ.

ການຕອບໂຕ້ຕໍ່ການຄ້າມະນຸດ ຈຳເປັນຕ້ອງມີກົນໄກເພື່ອຮັບປະກັນວ່າ ຜູ້ຖືກເຄາະຮ້າຍສາມາດເຂົ້າເຖິງຄວາມຍຸຕິທຳ ແລະ ການແຈ້ງຄວາມທີ່ມີຄວາມປອດໄພ ໂດຍປາສະຈາກຄວາມຢ້ານກົວທີ່ຈະຖືກກັກຂັງ, ຖືກສົ່ງກັບຄືນ ຫຼື ຖືກລົງໂທດທາງ ອາຍາໃນສະຖານອື່ນໆ. ແຕ່ໜ້າເສຍດາຍ, ມີຫຼາຍລັດມີການນຳໃຊ້ວິທີການແບບຮັບມືຫຼາຍກວ່າການນຳໃຊ້ວິທີການສືບ ສວນ-ສອບສວນແບບຕັ້ງໜ້າໃນຄະດີຄ້າມະນຸດ, ເຊິ່ງເຈົ້າໜ້າທີ່ອາດຈະເອື່ອຍອີງໃຫ້ຜູ້ຖືກເຄາະຮ້າຍກຳ ນົດຕົວເຂົາເຈົ້າເອງ.[58] ເຖິງຢ່າງໃດກໍຕາມ, ໃນພາກປະຕິບັດແລ້ວ ຜູ້ຖືກເຄາະຮ້າຍສ່ວນໃຫຍ່ບໍ່ໄດ້ມີການກຳນົດຕົວເອງ – ບາງຄົນອາດຈະບໍ່ຍອມຮັບວ່າ ຕົນເອງເປັນຜູ້ຖືກເຄາະຮ້າຍ ເຖິງວ່າພາຍຫຼັງເຂົາເຈົ້າໄດ້ຖືກກຳນົດຕົວແລ້ວກໍຕາມ. ມີຫຼາຍເຫດຜົນວ່າເປັນ ຫຍັງຜູ້ຖືກເຄາະຮ້າຍ ບໍ່ຕ້ອງການຖືກກຳນົດຕົວໃນຖານະຜູ້ຖືກເຄາະຮ້າຍ, ລວມທັງ ຄວາມຢ້ານກົວທີ່ຈະຖືກຜູ້ຄ້າມະ ນຸດແກ້ແຄ້ນ ຫຼື ຄວາມຊື່ສັດຂອງຜູ້ຖືກເຄາະຮ້າຍທີ່ມີຕໍ່ຜູ້ຄ້າມະນຸດ ແລະ ຄວາມຢ້ານກົວທີ່ຈະຖືກລົງໂທດໂດຍເຈົ້າໜ້າ ທີ່ລັດ. ເຊິ່ງບໍ່ແມ່ນຄວາມຮັບຜິດຊອບຂອງຜູ້ຖືກເຄາະຮ້າຍໃນການກຳນົດຕົວເອງ, ແຕ່ເປັນໜ້າທີ່ຂອງເຈົ້າໜ້າທີ່ລັດ ໃນ ການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ສົ່ງຕໍ່ເຂົາເຈົ້າໄປສູ່ການປົກປ້ອງ ແລະ ການຊ່ວຍເຫຼືອ. ເຈົ້າໜ້າ ທີ່ດ່ານໜ້າ ຜູ້ທີ່ເຂົ້າໃຈດ້ານຈິດຕະວິທະຍາຂອງບຸກຄົນທີ່ເຂົາເຈົ້າໄດ້ພົບເຫັນ ສາມາດດຳເນີນການກັ່ນກອງໄດ້ຢ່າງມີປະສິດ ທິພາບຫຼາຍຂຶ້ນ. ນອກນັ້ນ, ລັດຄວນນຳໃຊ້ວິທີການກັ່ນກອງ ແລະ ກຳນົດຕົວໂດຍອີງໃສ່ສິດທິມະນຸດ, ຄວາມລະອຽດ ອ່ອນດ້ານເພດພາວະ, ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ແລະ ການຮັບຮູ້ເຖິງຄວາມບອບຊ້ຳ ດ້ານຈິດໃຈ ແລະ ສິ່ງດັ່ງກ່າວມີທ່າແຮງທີ່ຈະເຮັດໃຫ້ຜົນການກັ່ນກອງທີ່ຖືກຕ້ອງຫຼາຍຂຶ້ນ.[59]

57 ຕົວຢ່າງ, Surtees, Rebecca ແລະ Laura S. Johnson, ການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: ຄູ່ມືສຳລັບຜູ້ປະຕິບັດຕົວຈິງ (ບາງກອກ: ສຳນັກງານສະໜັບສະໜູນລະດັບພາກພື້ນຂອງຂະບວນການບາຫຼີ (RSO) ແລະ ວໍຊິງຕັນດີຊີ: ສະຖາບັນ NEXUS, 2021) ໜ້າ 2

58 ບົດລາຍງານລະດັບໂລກກ່ຽວກັບການຄ້າມະນຸດ 2022 (UNODC, 2023) ເປີດເຜີຍວ່າ ຜູ້ຖືກເຄາະຮ້າຍສ່ວນຫຼາຍ ທີ່ໄດ້ຕັດສິນຄະດີນັ້ນແມ່ນ "ຊ່ວຍເຫຼືອຕົນເອງ" ຊຶ່ງຊີ້ໃຫ້ເຫັນວ່າການກຳນົດຕົວທີ່ຕັ້ງໜ້າ ຍັງຈຳກັດຢູ່.

59 ເບິ່ງທີ່ຕົວຢ່າງ, ສິດທິມະນຸດ, ການເຮັດວຽກທີ່ຄຳນຶງເຖິງບົດບາດຍິງ–ຊາຍ ແລະ ວິທີການທີ່ເປັນມິດຕໍ່ເດັກໃນຄະດີຄ້າມະນຸດ ສຳລັບຜູ້ຕອບໂຕ້ດ່ານໜ້າ: ຄູ່ມືຝຶກອົບຮົມສຳລັບຜູ້ຕອບໂຕ້ດ່ານໜ້າ (ຄະນະກຳມາທິການອາຊຽນວ່າດ້ວຍສິດທິມະນຸດ 2023) ໜ້າທີ 36 ແລະ ຄູ່ມືອາຊຽນກ່ຽວກັບການບໍ່ເຮັດໄພອັນຕະລາຍ (ຄະນະກຳມາທິການອາຊຽນວ່າດ້ວຍສິດທິມະນຸດ ແລະ ASEAN-ACWC) ໜ້າທີ.71-72

ການນຳສະເໜີຄຳແນະນຳຕໍ່ໄປນີ້ ກໍເພື່ອສະໜັບສະໜູນລັດ ເພື່ອສ້າງຄວາມເຂັ້ມແຂງດ້ານຄວາມອາດສາມາດໃຫ້ແກ່ ເຈົ້າ ໜ້າທີ່ດ່ານໜ້າ ເພື່ອກຳນົດຕົວຜູ້ຖືກເຄາະຮ້າຍ ທີ່ມີສ່ວນພົວພັນກັບຮູບແບບການຂູດຮີດຕ່າງໆຢ່າງມີປະສິດທິພາບ ລວມ ທັງ ການກະທຳທີ່ຜິດກົດໝາຍ ແລະ ສິ່ງຕໍ່ເຂົາເຈົ້າໃຫ້ເຂົ້າສູ່ຊ່ອງທາງການປົກປ້ອງ.

## [3] ສ້າງຄວາມອາດສາມາດໃຫ້ເຈົ້າໜ້າທີ່ດ່ານໜ້າ ເພື່ອກຳນົດຕົວຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າ ມະນຸດຈາກກຸ່ມຄົນທີ່ເຂົາເຈົ້າໄດ້ພົບເຫັນໃນຖານະຜູ້ກະທຳຜິດ.

ເຈົ້າໜ້າທີ່ຕຳຫຼວດ, ເຈົ້າໜ້າທີ່ກວດຄົນເຂົ້າ–ອອກເມືອງ ແລະ ເຈົ້າໜ້າທີ່ແຮງງານ ຄວນໄດ້ຮັບການສ້າງຄວາມອາດສາ ມາດ ເພື່ອກຳນົດຕົວບຸກຄົນທີ່ອາດຈະເປັນຜູ້ຖືກເຄາະຮ້າຍໃນກຸ່ມຄົນທີ່ເຂົາເຈົ້າໄດ້ພົບເຫັນ, ບໍ່ວ່າຈະຢູ່ໃນບໍລິບົດ ຂອງ ການເຄື່ອນຍ້າຍແຮງງານທີ່ບໍ່ຖືກຕ້ອງ, ການຄ້າປະເວນີ, ຂົງເຂດກະສິກຳ ແລະ ຂົງເຂດອາຍາອື່ນໆເຊັ່ນ ການຄ້າຂາຍຢາ ເສບຕິດ, ການປະມົງ IUU ຫຼື ການສໍ້ໂກງທາງໂທລະຄົມ ຫຼື ຂົງເຂດອື່ນໆ. ຄວາມເຂົ້າໃຈກອບແນວຄວາມຄິດ ທີ່ຜິດ ແລະ ແນວຄວາມຄິດແບບດັ້ງເດີມກ່ຽວກັບຜູ້ທີ່ເປັນເປັນຜູ້ຖືກເຄາະຮ້າຍ 'ແທ້' ຫຼື 'ສົມຄວນໄດ້ຮັບ' ເຂົາເຈົ້າຕ້ອງໄດ້ຮັບສິ່ງທ້າ ທາຍ ເພື່ອໃຫ້ເຈົ້າໜ້າທີ່ດ່ານໜ້າສາມາດກັ່ນກອງຜູ້ຖືກເຄາະຮ້າຍລວມໄປເຖິງ ກຸ່ມຄົນທີ່ເຂົາເຈົ້າມີສ່ວນຮ່ວມ ໃນການກະ ທຳທີ່ຜິດກົດໝາຍ.

### ເສີມສ້າງຄວາມເຂົ້າໃຈກ່ຽວກັບອົງປະກອບຂອງການຄ້າມະນຸດ

ຜູ້ປະຕິບັດຕົວຈິງ ຈະຕ້ອງເຂົ້າໃຈຄຳນິຍາມຂອງການຄ້າມະນຸດ ເພື່ອຮັບຮູ້ເຖິງບຸກຄົນທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ໃນກຸ່ມ ຄົນທີ່ເຂົາເຈົ້າໄດ້ພົບເຫັນ ເຊິ່ງເປັນຜູ້ທີ່ມີສ່ວນພົວພັນກັບການກະທຳທີ່ຜິດກົດໝາຍ ແລະ ຖືກກົດໝາຍ. ເຖິງວ່າ ຈະມີ ຄວາມແຕກຕ່າງກັນບາງຢ່າງ ໃນບັນດາປະເທດສະມາຊິກອາຊຽນ, ທຸກໆປະເທດ ໄດ້ຕົກລົງເປັນເອກະພາບຕໍ່ກັບຄຳນິຍາມ ຂອງການຄ້າມະນຸດໃນພາກພື້ນ ແລະ ,ສາກົນ ເຊິ່ງປະກອບດ້ວຍການກະທຳ, ວິທີການທີ່ໃຊ້ຕໍ່ກັບຜູ້ຖືກເຄາະຮ້າຍທີ່ເປັນຜູ້ ໃຫຍ່ ເພື່ອຈຸດປະສົງຂອງການຂູດຮີດ. ຄວາມເຂົ້າໃຈທີ່ເປັນດເອກະພາບກັນກ່ຽວກັບຜູ້ຖືກເຄາະຮ້າຍ ເປັນສິ່ງທີ່ສຳຄັນ ໃນ ທົ່ວພາກພື້ນອາຊຽນ. ສະນັ້ນ, ບຸກຄົນທີ່ໄດ້ຮັບການປົກປ້ອງໃນຖານະຜູ້ຖືກເຄາະຮ້າຍໃນປະເທດໜຶ່ງ ຈະບໍ່ຖືກປະຖິ້ມໂດຍ ບໍ່ໄດ້ຮັບການປົກປ້ອງໃນປະເທດອື່ນ.

ຜູ້ປະຕິບັດຕົວຈິງ ຕ້ອງມີຄວາມເຂົ້າໃຈ ໃນກໍລະນີທີ່ຜູ້ຄ້າມະນຸດນຳໃຊ້ 'ວິທີການ' ຕໍ່ກັບຜູ້ໃຫຍ່,[60] ຄວາມຍິນຍອມ ໃດໜຶ່ງ ທີ່ຜູ້ຖືກເຄາະຮ້າຍອາດຈະຍິນຍອມນັ້ນ ແມ່ນບໍ່ກ່ຽວຂ້ອງກັບການກຳນົດວ່າ ເຂົາເຈົ້າຖືກຄ້າມະນຸດ ຫຼື ບໍ່ ແລະ ຄວາມຍິນ ຍອມຂອງເດັກ ບໍ່ກ່ຽວກັບວ່າຜູ້ຄ້າມະນຸດຈະນຳໃຊ້ວິທີການໃດກໍຕາມ.[61]

ເຖິງວ່າ ກໍລະນີ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ມີສັນຍາເປັນລາຍລັກອັກສອນ, ສັນຍານັ້ນ ບໍ່ສາມາດປະຖິ້ມ ຂໍ້ມູນຄວາມຈິງກ່ຽວກັບການຂູດຮີດ. ໃນບາງກໍລະນີ, ສັນຍາທີ່ມີຢູ່ ອາດຈະເປັນປະໂຫຍດເພື່ອເປັນຫຼັກຖານ ໃນການກະທຳ ທີ່ຜິດທາງອາຍາ, ຕົວຢ່າງ ກໍລະນີທີ່ຜູ້ຄ້າມະນຸດ ເຮັດສັນຍາໃຫ້ຜູ້ຖືກເຄາະຮ້າຍ ເຮັດການສໍ້ໂກງທາງໂທລະຄົມ ຫຼື ກະທຳ ຜິດກົດໝາຍອື່ນໆ. ເຈົ້າໜ້າທີ ທີ່ພົບເຫັນຜູ້ຖືກເຄາະຮ້າຍທີ່ຖືກຂູດຮີດໃນການກະທຳທີ່ຜິດກົດໝາຍນັ້ນ ຕ້ອງເຂົ້າໃຈວ່າ ບຸກຄົນນັ້ນບໍ່ສາມາດເຮັດສັນຍາເພື່ອກະທຳຜິດທາງອາຍາໄດ້. ສັນຍາດັ່ງກ່າວຖືເປັນໂມຄະ ແລະ ອາດຈະເປັນຫຼັກຖານທີ່ ເປັນປະໂຫຍດຕໍ່ກັບເຈດຕະນາໃນການຂູດຮີດຂອງຜູ້ຄ້າມະນຸດ ລວມທັງ ເຈດຕະນາຂອງເຂົາເຈົ້າ ໃນການກະທຳຜິດທາງ ອາຍາອື່ນໆ.

60 ການບັງຄັບ ແລະ ການບັງຄັບດ້ວຍຮູບແບບອື່ນໆ, ການລັກພາຕົວ, ການສໍ້ໂກງ, ການຕົວະຍົວະຫຼອກລວງ, ການສວຍໃຊ້ອຳນາດ ຫຼື ໃຊ້ອຳນາດໄປໃນທາງຜິດ, ແລະ ການໃຫ້ ຫຼື ຮັບເອົາເງິນ ຫຼື ຜົນປະໂຫຍດອື່ນໆ ເພື່ອໃຫ້ບຸກຄົນໃດໜຶ່ງ ຍິນຍອມຢູ່ໃນການຄວບຄຸມຂອງອີກຜູ້ໜຶ່ງ ແມ່ນວິທີການທີ່ກຳນົດໄວ້ໃນມາດຕາ 3(a) ຂອງອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ ແລະ ມາດຕາ 2 (a) ຂອງສົນທິສັນຍາ ACTIP.

61 "ເດັກ" ໝາຍເຖິງບຸກຄົນທີ່ມີອາຍຸຕໍ່າກວ່າ 18 ປີ. ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ, ມາດຕາ 3 (d)

**ກ່ອງຂໍ້ມູນ: ຕົວຢ່າງ (ຄວາມຜິດທີ່ກ່ຽວຂ້ອງກັບເອກະສານ)**

ໃນລະຫວ່າງການກວດສອບເຮືອສິນຄ້າ, ເຈົ້າໜ້າທີ່ທາງທະເລ ກຳລັງສືບສວນ-ສອບສວນການປະມົງທີ່ຜິດກົດໝາຍ (IUU), ເຈົ້າໜ້າທີ່ໄດ້ກວດສອບບັດປະຈຳຕົວ ແລະ ປື້ມປະຈຳຕົວຂອງລູກເຮືອປະມົງ ເຊິ່ງລວມມີເອກະສານຂອງ A ແລະ ບຸກຄົນອື່ນໆ ທີ່ຖືກເກັບໄວ້ເທິງເຮືອເປັນເວລາຫຼາຍເດືອນ. A ແລະ ບຸກຄົນອື່ນໆ ໄດ້ຖືກປັບໃໝ ສຳລັບ ຄວາມຜິດກ່ຽວ ກັບເອກະສານ ແລະ ນຳຕົວເຂົາເຈົ້າໄປກັກຂັງໄວ້ໃນສະຖານທີ່ການເຂົ້າ–ອອກເມືອງ ເພື່ອລໍຖ້າການສົ່ງກັບຄືນປະເທດ. ເຈົ້າ ໜ້າທີ່ໄດ້ບອກ A ວ່າ ລາວໂຊກດີທີ່ບໍ່ຖືກຈັບຕົວໃນຂໍ້ຫາການປະມົງທີ່ຜິດກົດໝາຍ.

<u>*ການນຳໃຊ້ຫຼັກການບໍ່ລົງໂທດ:*</u> ຢູ່ໃນສູນກັກຂັງການເຂົ້າ–ອອກເມືອງ, ເຈົ້າໜ້າທີ່ກວດຄົນເຂົ້າ–ອອກເມືອງ ທີ່ໄດ້ຮັບການ ຝຶກອົບຮົມ ໄດ້ພົບກັບ A ແລະ ສົງໄສວ່າ A ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. A ຖືກນຳຕົວອອກ ຈາກສະຖານ ທີ່ກັກຂັງການເຂົ້າ–ອອກເມືອງ ແລະ ສົ່ງຕໍ່ໄປຍັງກົນໄກການສົ່ງຕໍ່ແຫ່ງຊາດ. ເນື່ອງຈາກວ່າ A ມີສະຖານະພາບທີ່ຜິດກົດ ໝາຍ, ໄດ້ມີການອະນຸຍາດໃຫ້ລາວຢູ່ຕໍ່ໄດ້ໃນໄລຍະໜຶ່ງ ເພື່ອໃຫ້ລາວສາມາດອາໄສຢູ່ໃນປະເທດ ເພື່ອໄດ້ຮັບການປົກປ້ອງ ແລະ ສະໜັບສະໜູນກ່ອນການຕັດສິນໃຈໃນບາດກ້າວຕໍ່ໄປ. A ໄດ້ຖືກແຈ້ງໃຫ້ຊາບ ກ່ຽວກັບສິດຂອງລາວໃນການໄດ້ ຮັບຄ່າຊົດເຊີຍສຳລັບການກັກຂັງທີ່ຜິດກົດໝາຍ.

## ເສີມສ້າງສ້າງຄວາມເຂົ້າໃຈກ່ຽວກັບມິຕິທັບຊ້ອນຂອງການຄ້າມະນຸດ

ເຈົ້າໜ້າທີ່ດ່ານໜ້າ ຕ້ອງຄຳນຶງເຖິງອາຍຸຂອງຜູ້ຖືກເຄາະຮ້າຍ, ເພດພາວະ, ຊົນເຜົ່າ, ສັນຊາດ, ສະຖານະການເຂົ້າ–ອອກ ເມືອງ, ສະຖານະດ້ານເສດຖະກິດ–ສັງຄົມ, ປະສົບການຊີວິດ, ລະດັບຄວາມເປັນຜູ້ໃຫຍ່, ຄວາມພິການ ແລະ ປັດໄຈອື່ນໆ ທີ່ອາດຈະມີຄວາມທັບຊ້ອນກັນເພື່ອໃຫ້ຮູ້ວ່າເຂົາເຈົ້າຖືກຄ້າມະນຸດແນວໃດ. ປັດໄຈເຫຼົ່ານີ້ ອາດຈະມີອິດທິພົນຕໍ່ກັບການ ກະທຳທີ່ຜິດກົດໝາຍທີ່ຜູ້ຖືກເຄາະຮ້າຍອາດຈະມີສ່ວນພົວພັນ, ຜົນກະທົບຂອງການຄ້າມະນຸດທີ່ມີຕໍ່ເຂົາເຈົ້າ ແລະ ເຂົາເຈົ້າມີການຮັບຮູ້ແນວໃດ ລວມທັງເຈົ້າໜ້າທີ່ດ່ານໜ້າທີ່ພົບເຫັນເຂົາເຈົ້າ.[62] ຕົວຢ່າງ, ກໍລະນີທີ່ເຈົ້າ ໜ້າທີ່ສືບສວນ-ສອບສວນ ໄດ້ໃຊ້ເວລາເພື່ອຮຽນຮູ້ວ່າເປັນຫຍັງບຸກຄົນໃດໜຶ່ງທີ່ມີສ່ວນພົວພັນກັບ ການກະທຳທີ່ຜິດກົດໝາຍ, ເຊິ່ງອາດຈະດີກວ່າທີ່ຈະມີການກຳນົດຕົວເຂົາເຈົ້າ ເຊິ່ງເປັນຜູ້ທີ່ອາດຈະປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຜູ້ປະຕິບັດຕົວຈິງຕ້ອງຄຳນຶງເຖິງ ຄວາມສະຫຼັບຊັບຊ້ອນທີ່ເກີດຂຶ້ນ ລະຫວ່າງ ຜູ້ຄ້າມະນຸດ ແລະ ຜູ້ຖືກເຄາະຮ້າຍ ທີ່ສາມາດສົ່ງຜົນໄດ້ຮັບຕໍ່ກັບຄວາມທ້າທາຍໃນການປະສົມປະສານກັນຂອງຄວາມບອບຊ້ຳດ້ານຈິດໃຈ, ຄວາມຢ້ານຕົວຕໍ່ຜູ້ຄ້າມະນຸດ ຫຼື ໃນທາງກົງກັນຂ້າມ, ມີຊື່ສັດທີ່ມີຕໍ່ຜູ້ຄ້າມະນຸດ, ແລະ ຄວາມຢ້ານກົວ ຫຼື ເປັນສັດຕູຕໍ່ກັບເຈົ້າໜ້າທີ່.

ຜູ້ຖືກເຄາະຮ້າຍທີ່ຢ້ານກົວທີ່ຈະຖືກດຳເນີນຄະດີ ແລະ ລົງໂທດ ຈະບໍ່ລາຍງານກ່ຽວກັບຜູ້ຄ້າມະນຸດຕໍ່ກັບເຈົ້າໜ້າທີ່ບັງຄັບ ໃຊ້ກົດໝາຍ. ຜູ້ຄ້າມະນຸດອາດຈະວາງເປົ້າໝາຍບຸກຄົນທີ່ມີບັນຫາດ້ານກົດໝາຍ ຫຼື ມີຄວາມຊັບຊ້ອນກ່ຽວກັບຄວາມສຳ ພັນຕໍ່ກັບເຈົ້າໜ້າທີ່ ເຊິ່ງເຮັດໃຫ້ເຂົາເຈົ້າຈັດການກັບຜູ້ຖືກເຄາະຮ້າຍໄດ້ງ່າຍ. ຜູ້ຄ້າມະນຸດ ອາດຈະບອກກັບຜູ້ຖືກເຄາະຮ້າຍ ວ່າເຈົ້າໜ້າທີ່ຈະບໍ່ເຊື່ອເຂົາເຈົ້າ ແຕ່ຈະເບິ່ງເຂົາເຈົ້າເປັນອາຊະຍາກອນ ສຳລັບຄວາມຜິດທີ່ເຂົາເຈົ້າໄດ້ກະທຳ. ໃນເວລາທີ່ເຈົ້າ ໜ້າທີ່ປະຕິບັດຕໍ່ຜູ້ຖືກເຄາະຮ້າຍຄືກັບຜູ້ທີ່ອາດຈະເປັນຜູ້ກະທຳຜິດ, ຜູ້ຄ້າມະນຸດໄດ້ຮັບການພິສູດວ່າ ຖືກຕ້ອງ ແລະ ທຳລາຍຄວາມເຊື່ອໃຈຂອງຜູ້ຖືກເຄາະຮ້າຍຕໍ່ກັບເຈົ້າໜ້າທີ່.

ເປັນສິ່ງທີ່ສຳຄັນທີ່ເຈົ້າໜ້າທີ່ດ່ານໜ້າຈະເຂົ້າໃຈເພື່ອຮັບຮູ້ວ່າບຸກຄົນໃດໜຶ່ງໃນຖານະທີ່ເປັນຜູ້ຖືກເຄາະຮ້າຍ ບໍ່ຄວນຖືກຜູກມັດຕໍ່ກັບເຈດຈຳນົງຂອງເຂົາເຈົ້າໃນການຮ່ວມມືກັບຕຳຫຼວດ, ຫຼື ຄວາມເຂົ້າໃຈຂອງເຂົາເຈົ້າຕໍ່ຕົນເອງໃນຖານະທີ່ເປັນຜູ້ ຖືກເຄາະຮ້າຍຈາກການຄ້າມະນຸດ. ເຊິ່ງເປັນຄວາມຮັບຜິດຊອບຂອງເຈົ້າໜ້າທີ່ດ່ານໜ້າ ໃນການກຳນົດຕົວຜູ້ຖືກເຄາະຮ້າຍ, ບໍ່ແມ່ນຄວາມຮັບຜິດຊອບຂອງຜູ້ຖືກເຄາະຮ້າຍ ໃນການກຳນົດຕົວເອງ.

62 ວິທີການ “ການຈຳແນກແບບທັບຊ້ອນ” ຕໍ່ກັບການຄ້າມະນຸດ ພິຈາລະນາ ປະສົບການຂອງຜູ້ຊາຍ, ຜູ້ຍິງ ແລະ ບຸກຄົນທີ່ມີຄວາມຫຼາກຫຼາຍທາງເພດ, ການມີປະຕິສຳພັນກັບປັດໄຈອື່ນໆ ເຊັ່ນ ຖານະ, ເຊື້ອຊາດ, ອາຍຸ, ຊົນເຜົ່າ, ເພດ ຫຼື ການລະບຸຕົວຕົນອື່ນໆ, ໃນທິດທາງທີ່ມີອິດທິພົນວ່າເຂົາເຈົ້າມີການຮັບຮູ້ແນວໃດໃນສັງຄົມ. ວິທີການທີ່ທັບຊ້ອນກັນ ເປັນເຄື່ອງມືທີ່ເປັນປະໂຫຍດສຳລັບເຈົ້າໜ້າທີ່ດ່ານໜ້າ ເພື່ອໃຫ້ເຂົ້າໃຈປະສົບການຂອງບຸກຄົນທີ່ເຂົາເຈົ້າໄດ້ພົບເຫັນ. ເບິ່ງທີ່ຕົວຢ່າງ: ເຄື່ອງມືການເຊື່ອມສານດ້ານເພດພາວະ ແລະ ສິດທິມະນຸດ ໃນການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການຕ້ານການອາຊະຍາກຳຂ້າມ ຊາດທີ່ມີການຈັດຕັ້ງ (UNODC, 2023) ໜ້າທີ 9–17 ແລະ ວິທີການທີ່ຄຳນຶງເຖິງເພດພາວະ ແລະ ການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ສຳລັບເຈົ້າໜ້າທີ່ດ່ານໜ້າ: ວິທີການ ເຮັດວຽກກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (ASEAN ACWC ແລະ ແຜນງານ ASEAN-ACT, 2023) ໜ້າທີ.13.

### ກ່ອງຂໍ້ມູນ: ຕົວຢ່າງ (ຄວາມຜິດກ່ຽວກັບແຮງງານ)

ເຈົ້າໜ້າທີ່ກວດກາແຮງງານ ໄດ້ເຂົ້າກວດຄົ້ນຟາມແຫ່ງໜຶ່ງ ເຊິ່ງເປັນບ່ອນທີ່ A ແລະ ກຳມະກອນຜູ້ອື່ນໆໄດ້ເຮັດວຽກມາ ເປັນເວລາຫຼາຍຊົ່ວໂມງ. A ສາມາດເດີນທາງໄປ–ມາ ໄດ້ຕາມທີ່ຕ້ອງການ ແຕ່ລາວຖືກບອກໄວ້ວ່າ ຖ້າຫາກລາວໂຕນໜີ, ແມ່ລາວທີ່ຢູ່ບ້ານນຈະມີໄພອັນຕະລາຍ. ເຈົ້າໜ້າທີ່ກວດກາແຮງງານ ທີ່ໄດ້ກວດຄົ້ນນັ້ນ ບໍ່ໄດ້ຖາມຄຳຖາມໃດໆ ຕໍ່ກັບ A ມີແຕ່ໄດ້ກວດເອກະສານລາວ. ເຂົາເຈົ້າບອກລາວວ່າ ລາວເຮັດວຽກແບບຜິດກົດໝາຍໃນປະເທດ ແຕ່ລາວ ຈະບໍ່ຖືກດຳ ເນີນຄະດີ ຖ້າຫາກລາວຍອມຮັບດ້ວຍຄວາມສະໝັກໃຈທີ່ຈະເດີນທາງກັບຄືນປະເທດຕົນເອງ ໂດຍທັນທີ.

*ການນຳໃຊ້ຫຼັກການບໍ່ລົງໂທດ:* ພາຍຫຼັງທີ່ລາວເດີນທາງກັບຄືນປະເທດຕົນເອງແລ້ວ, ເຈົ້າໜ້າທີ່ຮັບຮູ້ເຖິງຕົວຊີ້ວັດທີ່ວ່າ ລາວອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຖານະຂ້າທາດຢູ່ເທິງເຮືອສິນຄ້າ. ເຂົາເຈົ້າສື່ສານຂໍ້ມູນຄວາມຈິງດັ່ງ ກ່າວໃຫ້ແກ່ເຈົ້າໜ້າທີ່ໃນປະເທດປາຍທາງ ບ່ອນທີ່ລາວເດີນທາງກັບຄືນມາ. ເຊິ່ງຕໍ່ມາການສືບສວນ–ສອບສວນ ເຮືອປະ ມົງພົບວ່າ ມີຫຼາຍຄົນທີ່ຢູ່ເທິງເຮືອສິນຄ້າຖືກຄ້າມະນຸດໃນສະຖານການເປັນຂ້າທາດ. ເຈົ້າໜ້າທີ່ໄດ້ປະສານຫາປະເທດຂອງ A ທີ່ເປັນປະເທດຕົ້ນທາງ ເຊິ່ງເປັນສ່ວນໜຶ່ງໃນການສືບສວນ–ສອບສວນ ແລະ ກຳນົດຕົວລາວ ໃນຖານະຜູ້ຖືກເຄາະ ຮ້າຍຈາກການຄ້າມະນຸດ. A ໄດ້ຖືກແຈ້ງໃຫ້ຊາບກ່ຽວກັບສິດຂອງລາວໃນການໄດ້ຄ່າຊົດເຊີຍ ຕໍ່ກັບການກັກຂັງໂດຍບໍ່ຖືກ ຕ້ອງ.

## ເສີມສ້າງຄວາມສາມາດໃຫ້ເຈົ້າໜ້າທີ່ ໃນການນຳໃຊ້ການສັນນິຖານວ່າເປັນຜູ້ຖືກເຄາະຮ້າຍ ແລະ ການສັນນິຖານວ່າເປັນເດັກ

ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຕ້ອງເຂົ້າໃຈວ່າການຄ້າມະນຸດແມ່ນເປັນຂະບວນການ ແລະ ອາຊະຍາກຳທີ່ມີຈຸດປະສົງອັນສະເພາະໃນການຂູດຮີດ. ໂດຍທິດສະດີແລ້ວ, ຜູ້ຖືກເຄາະຮ້າຍໄດ້ຮັບການກຳນົດຕົວ ກ່ອນຂັ້ນຕອນການຂູດຮີດ, ແຕ່ເປັນ ສິ່ງທີ່ຍາກໃນການກຳນົດຕົວຜູ້ຖືກເຄາະຮ້າຍ ກ່ອນທີ່ເຂົາເຈົ້າຈະຖືກຂູດຮີດ. ຕົວຢ່າງ ບຸກຄົນທີ່ຖືກຂູດຮີດໃນສະຖານທີ່ ທີ່ມີການສໍ້ໂກງທາງໂທລະຄົມ ຫຼື ໃນສະຖານທີ່ ທີ່ໃຫ້ການບໍລິການທາງເພດ ຫຼື ໃນສະຖານທີ່ອື່ນໆ ທີ່ມີການປູກພືດເພື່ອຜະລິດຢາເສບຕິດ, ເຊິ່ງອາດຈະຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ງ່າຍກວ່າ ບຸກຄົນທີ່ຖືກສະກັດກັ້ນເພື່ອຈັບຕົວໃນລະຫວ່າງທາງ ກ່ອນທີ່ຈະໄປຮອດຈຸດໝາຍປາຍທາງ ເຊິ່ງເປັນຜູ້ທີ່ອາດຈະຖືກກຳນົດຕົວຜິດພາດວ່າ ເປັນ ແຮງງານເຄື່ອນຍ້າຍທີ່ຜິດກົດໝາຍ ທີ່ເດີນທາງຢ່າງຜິດກົດໝາຍ ຫຼື ເຮັດວຽກຜິດກົດໝາຍ.

ຜູ້ປະຕິບັດຕົວຈິງ ທີ່ພົບເຫັນຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຄວນຈະມີຄວາມອາດສາມາດໃນການນຳໃຊ້ການສັນນິຖານວ່າເປັນຜູ້ຖືກເຄາະຮ້າຍ, ເພື່ອໃຫ້ເຂົາເຈົ້າປະຕິບັດຕໍ່ກັບບຸກຄົນໃດໜຶ່ງ ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ເພື່ອຈຸດປະສົງໃນການນຳໃຊ້ຫຼັກການບໍ່ລົງໂທດ. ນອກນັ້ນ, ໃນກໍລະນີ ທີ່ບໍ່ມີຫຼັກຖານພຽງພໍ ເພື່ອກຳນົດວ່າມີການ ຄ້າມະນຸດເກີດຂຶ້ນນັ້ນ, ການສັນນິຖານວ່າເປັນຜູ້ຖືກເຄາະຮ້າຍ ຈະເຮັດໃຫ້ຜູ້ຖືກເຄາະຮ້າຍ ຖືກປະຕິບັດໂດຍສອດຄ່ອງ ກັບຫຼັກການບໍ່ລົງໂທດ. ເພື່ອຈຸດປະສົງການກຳນົດຕົວຜູ້ຖືກເຄາະຮ້າຍ, ບັນດາປະເທດສະມາຊິກອາຊຽນ ທັງໝົດ ຄວນນຳໃຊ້ຄຳນິຍາມກ່ຽວກັບເດັກຕາມທີ່ກຳນົດໄວ້ໃນສົນທິສັນຍາວ່າດ້ວຍການຕ້ານການຄ້າມະນຸດ ແລະ ສົນທິສັນຍາ ACTIP ທີ່ກຳນົດໄວ້ວ່າ ເດັກແມ່ນມີອາຍຸຕໍ່າກວ່າ 18 ປີ.[63]

ໃນເວລາທີ່ຜູ້ປະຕິບັດຕົວຈິງ ມີເຫດຜົນທີ່ເຊື່ອວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະເປັນເດັກ, ການສັນນິຖານວ່າ ເປັນເດັກ ຄວນຖືກນຳໃຊ້ໃນຂະບວນການກັ່ນກອງ ເພື່ອໃຫ້ບຸກຄົນດັ່ງກ່າວຖືກປະຕິບັດໃນຖານະເດັກ ເພື່ອຈຸດປະສົງການນຳໃຊ້ຫຼັກການບໍ່ລົງໂທດ. ຖ້າການກະທຳນັ້ນ ຫາກເປັນການກະທຳເພື່ອຕໍ່ຕ້ານກັບບຸກຄົນໃດໜຶ່ງ ທີ່ມີການພົວພັນກັບການກະທຳທີ່ຜິດກົດໝາຍ ເນື່ອງຈາກເຂົາເຈົ້າຖືກຄ້າມະນຸດນັ້ນ, ເຂົາເຈົ້າບໍ່ຄວນຖືກລົງໂທດຕໍ່ກັບຄວາມຜິດທັງໝົດ. ແຕ່ ຖ້າຫາກການກະທຳທີ່ຜິດກົດໝາຍເຫຼົ່ານັ້ນ ບໍ່ໄດ້ເຊື່ອມໂຍງກັບປະສົບການຖືກຄ້າມະນຸດຂອງເຂົາເຈົ້າ, ອາຍຸຂອງຜູ້ຖືກ ເຄາະຮ້າຍ–ຜູ້ກະທຳຜິດ ຄວນໄດ້ຮັບການພິຈາລະນາ ເພື່ອນຳໃຊ້ຫຼັກການປ້ອງກັນທີ່ອາດຈະມີຢູ່, ຫຼື ຫຼຸດຜ່ອນໂທດໃນຂັ້ນ ຕອນຂອງການຕັດສິນລົງໂທດ.

63 ມາດຕາ 3(d) ຂອງອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ ແລະ ມາດຕາ2(d), ສົນທິສັນຍາ ACTIP.

### ຄຳແນະນຳຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ

ລັດຄວນຮັບປະກັນວ່າເດັກທີ່ເປັນຜູ້ຖືກເຄາະຮ້າຍ ບໍ່ຄວນຖືກລົງໂທດຕໍ່ກັບການກະທຳທີ່ຜິດກົດໝາຍ ທີ່ກ່ຽວຂ້ອງກັບ ການຖືກຄ້າມະນຸດນັ້ນ. ກໍລະນີທີ່ອາຍຸຂອງຜູ້ຖືກເຄາະຮ້າຍບໍ່ແນ່ນອນ ແລະ ມີເຫດຜົນທີ່ເຊື່ອໄດ້ວ່າຜູ້ຖືກເຄາະຮ້າຍເປັນ ເດັກ, ເຂົາເຈົ້າກໍຄວນຖືກສັນນິຖານວ່າເປັນເດັກ ແລະ ມີມາດຕະການປົກປ້ອງພິເສດ ໃນເວລາທີ່ມີການລໍຖ້າການກຳນົດ ອາຍຸຂອງເຂົາເຈົ້າ. ເມື່ອຄວາມສຳພັນ ລະຫວ່າງ ການກະທຳຄວາມຜິດ ແລະ ສະຖານະຂອງເດັກ ໄດ້ມີການສັນນິຖານ ຫຼື ກຳນົດຕົວຜູ້ຖືກເຄາະຮ້າຍ, ການພົວພັນນັ້ນ ຕ້ອງໄດ້ຮັບການຍອມຮັບວ່າມີຄວາມຈຳເປັນ ແລະ ມີພື້ນຖານທີ່ພຽງພໍ ໃນການຢຸດຕິການດຳເນີນຄະດີ ຫຼື ຍົກເລີກຄຳຕັດສິນທີ່ໄດ້ຕັດສິນໄປແລ້ວ ລວມທັງ ປ່ອຍຕົວເດັກອອກຈາກສະຖານທີ່ກັກ ຕົວໂດຍທັນທີ. ໂດຍເຄົາລົບຕໍ່ເດັກ, ບໍ່ຈຳເປັນຕ້ອງມີການກຳນົດວິທີການ ເພື່ອກຳນົດສະຖານະຂອງເຂົາເຈົ້າ ໃນຖານະທີ່ ເປັນຜູ້ຖືກເຄາະຮ້າຍທີ່ເປັນເດັກ, ເຊິ່ງບໍ່ຈຳເປັນຕ້ອງນຳໃຊ້ຮູບແບບການບັງຄັບ.[64]

## ຄວາມທ້າທາຍຕໍ່ກັບແນວຄວາມຄິດທີ່ເຂົ້າໃຈຜິດ ແລະ ອັກຄະຕິທີ່ບໍ່ຕັ້ງໃຈຕໍ່ກັບການຄ້າມະນຸດ ແລະ ຜູ້ຖືກເຄາະຮ້າຍ

ເພື່ອເຮັດໃຫ້ການກຳນົດຕົວຜູ້ຖືກເຄາະຮ້າຍມີປະສິດທິພາບ, ຜູ້ປະຕິບັດຕົວຈິງ ຕ້ອງຂ້າມຜ່ານອັກຄະຕິ ແລະ ແນວຄວາມ ຄິດທີ່ເຂົ້າໃຈຜິດທີ່ເຂົາເຈົ້າອາດຈະມີກ່ຽວກັບວ່າ ໃຜສາມາດເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ໃຜຄວນຈະໄດ້ ຮັບຜົນປະໂຫຍດຈາກຫຼັກການບໍ່ລົງໂທດ. ເຈົ້າໜ້າທີ່ ບໍ່ຄວນຈະສ້າງສົມມຸດຕິຖານກ່ຽວກັບວ່າ ໃຜ 'ດີ' ຫຼື 'ຊົ່ວ' ຫຼື ໃຜ ທີ່ເປັນຜູ້ຖືກເຄາະຮ້າຍ 'ແທ້' ຫຼື ບໍ່ເປັນຜູ້ຖືກເຄາະຮ້າຍ. ຄວາມລັງກຽດ ແລະ ອັກຄະຕິທີ່ມີສະເພາະຕໍ່ກັບບຸກຄົນ ແມ່ນສາ ມາດສົ່ງຜົນຕໍ່ກັບທັດສະນະຄະຕິທີ່ວ່າ ໃຜ 'ສົມຄວນເປັນ' ຫຼາຍກວ່າໃຜ, ເຊິ່ງສົ່ງຜົນເຮັດໃຫ້ບາງຄົນ ມີທ່າແຮງທີ່ຈະຖືກ ເຄາະຮ້າຍ ຫຼາຍວ່າຈະໄດ້ຮັບການປົກປ້ອງ. ຕົວຢ່າງ ຜູ້ຖືກເຄາະຮ້າຍທີ່ເປັນ ຜູ້ເຄື່ອນຍ້າຍຖິ່ນຖານ ທີ່ຢູ່ໃນສະພາບການທີ່ບໍ່ ຖືກຕ້ອງ ຫຼື ຜູ້ທີ່ມີປະຫວັດເລື່ອງບັນຫາທາງດ້ານກົດໝາຍ ຫຼື ມີທາດເຫຼົ້າ ຫຼື ບັນຫາການໃຊ້ສານເສບຕິດ ຫຼື ຄວາມພິການ ຫຼື ບັນຫາສັນຊາດຂອງປະເທດສະເພາະໃດໜຶ່ງ ຫຼື ສະເພາະກຸ່ມຊົນເຜົ່າ, ການກຳນົດເພດ ຫຼື ເພດພາວະ, ອາດຈະຖືກ ຈຳແນກໃນລັກສະນະທີ່ມີການລ່ວງລະເມີດສິດທິພື້ນຖານດ້ານສິດທິມະນຸດ ຕໍ່ກັບຫຼັກການທີ່ບໍ່ມີການຈຳແນກ ແລະ ທຳ ລາຍຄວາມສາມາດຂອງເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ໃນການຮັບຮູ້ຜູ້ຖືກເຄາະຮ້າຍ.

ຜູ້ປະຕິບັດຕົວຈິງອາດຈະມີອັກຄະຕິທີ່ເກີດຂຶ້ນໂດຍບໍ່ຕັ້ງໃຈຕໍ່ກັບບຸກຄົນທີ່ມີສ່ວນຮ່ວມສະເພາະໃນຂົງເຂດຕ່າງໆ ເຊັ່ນ ອຸດ ສາຫະກຳດ້ານເພດ ຫຼື ການສໍ້ໂກງທາງໂທລະຄົມ. ຕົວຢ່າງ, ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ຄອບຄົວ ຂອງເຂົາເຈົ້າ ອາດ ຈະເປັນຜູ້ຖືກເຄາະຮ້າຍຈາກຜູ້ສໍ້ໂກງທາງໂທລະຄົມ, ເຮັດໃຫ້ເຂົາເຈົ້າມີອັກຄະຕິໂດຍບໍ່ຮູ້ຕົວ ຕໍ່ກັບບຸກຄົນທີ່ມີສ່ວນຮ່ວມ ໃນລັກສະນະທີ່ເປັນການຂັດຂວາງຄວາມສາມາດຂອງເຂົາເຈົ້າ ໃນການຮັບຮູ້ເຖິງບຸກຄົນທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ.

## ຊຸກຍູ້ ການບໍ່ຈຳແນກໃນຂັ້ນຕອນການກັ່ນກອງ ແລະ ການກຳນົດຕົວ

ການສົ່ງເສີມການບໍ່ຈຳແນກໃນກຸ່ມຄົນທີ່ມີໜ້າທີ່ກຳນົດຕົວຜູ້ຖືກເຄາະຮ້າຍ ແມ່ນມີຄວາມສຳຄັນ ເພື່ອເພີ່ມຄວາມສາມາດ ຂອງເຂົາເຈົ້າໃນການເຮັດວຽກດັ່ງກ່າວ. ຜູ້ປະຕິບັດຕົວຈິງດ້ານຍຸຕິທຳທາງອາຍາ ຄວນຈະມີຄວາມສາມາດ ເພື່ອເຂົ້າໃຈການ ນຳໃຊ້ຫຼັກການບໍລົງໂທດຕໍ່ກັບຜູ້ຖືກເຄາະຮ້າຍທຸກຄົນ ໃນກໍລະນີທີມີຄວາມເຊື່ອມໂຍງ ລະຫວ່າງ ການກະທຳທີ່ຜິດກົດ ໝາຍ ແລະ ການຖືກຄ້າມະນຸດຕໍ່ເຂົາເຈົ້າບົນພື້ນຖານການບໍມີການຈຳແນກ. ການນຳໃຊ້ຫຼັກການບໍລົງໂທດ ບົນພື້ນຖານ ການບໍຈຳແນກ, ຜູ້ປະຕິບັດຄວນເຂົ້າໃຈວ່າ ສະຖານະຂອງບຸກຄົນທີເປັນຜູ້ເຄື່ອນຍ້າຍຖິນຖານ ອາດຈະທັບ ຊ້ອນກັບປັດໄຈອື່ນໆເຊັ່ນ: ເຊື້ອຊາດ, ສີຜິວ, ເພດ, ເພດພາວະ, ການກຳນົດເພດພາວະ, ພາສາ, ຄວາມພິການ, ສາສະໜາ, ການເມືອງ ຫຼື ທັດສະນະອື່ນໆ, ສັນຊາດ, ຕົ້ນກຳເນີດທາງສັງຄົມ, ສະຖານະດ້ານເສດຖະກິດ–ສັງຄົມ, ຄວາມທຸກຍາກ, ຖານະການເກີດ ແລະ ອື່ນໆ ໃນລັກສະນະທີ່ເຮັດໃຫ້ເຂົາເຈົ້າຕົກຢູ່ໃນຄວາມສ່ຽງທີຈະຖືກຈຳແນກ.[65]

64 ແຫຼ່ງຂໍ້ມູນ: ບົດລາຍງານການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ Siobhán Mullally, UN Doc A/HRC/47/34, ວັນທີ 17 ພຶດສະພາ 2021, [62]

65 ເບິ່ງທີ່ມາດຕາ 26 ຂອງສົນທິສັນຍາສາກົນວ່າດ້ວຍສິດທິຂອງພົນລະເຮືອນ ແລະ ການເມືອງ ແລະ ມາດຕາ 2 ຂອງ ຖະແຫຼງການອາຊຽນວ່າດ້ວຍສິດທິມະນຸດ. ນອກນັ້ນ ໃຫ້ເບິ່ງທີ່ມາດຕາ 2 ຂອງສົນທິສັນຍາວ່າດ້ວຍສິດທິເດັກ, ມາດຕາ 1 ຂອງ ສົນທິສັນຍາວ່າດ້ວຍການລຶບລ້າງການຈຳແນກແມ່ຍິງ ແລະ ມາດຕາ 5 ຂອງ ຂອງສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ. ລາຍລະອຽດເພີ່ມເຕີມກ່ຽວກັບການຈຳແນກ ແລະ ການຕັດກັນກັບຫຼາຍພາກສ່ວນ, ເບິ່ງໄດ້ທີ່ ບົດແນະນຳກ່ຽວກັບການຕັດກັນກັບຫຼາຍພາກສ່ວນ, ການຈຳແນກດ້ານເຊື້ອຊາດ ແລະ ການປົກປ້ອງເດັກ (UN, 2022) and ຫຼັກການ ແລະ ຄຳນແນະນຳ, ສະໜັບສະໜູນໂດຍຄຳແນະນຳພາກປະຕິບັດຕົວຈິງ ການປົກປ້ອງດ້ານສິດທິມະນຸດຂອງຜູ້ເຄື່ອນຍ້າຍຖິ່ນຖານ ທີ່ມີຄວາມສ່ຽງ (UN, 2018).

ລັດ ຕ້ອງຮັບປະກັນການເອົາໃຈໃສ່ບຸກຄົນທີ່ມີຄວາມພິການໃນມາດຕະການ ການຕ້ານການຄ້າມະນຸດທັງໝົດ ລວມທັງ ການເຄົາລົບການບໍ່ລົງໂທດ. ຂໍ້ກຳນົດນີ້ແມ່ນຮີບດ່ວນໃນກໍລະນີທີ່ບຸກຄົນທີ່ມີຄວາມພິການ ມີຄວາມສ່ຽງສູງທີ່ຈະຖືກຂູດ ຮີດ ລວມທັງ ເພື່ອຈຸດປະສົງຂອງການບັງຄັບໃຫ້ກະທຳຜິດທາງອາຍາ.[66] ໃນກໍລະນີ ມີສົມມຸດຖານວ່າຜູ້ຖືກເຄາະຮ້າຍມີ ຄວາມພິການດ້ານຮ່າງກາຍ, ຈິດໃຈ ຫຼື ສະໝອງ, ການບໍ່ຈຳແນກ ຈຳເປັນຕ້ອງມີການອຳນວຍຄວາມສະດວກ ທີ່ສົມເຫດ ສົມຜົນ ເພື່ອຮັບປະກັນວ່າບຸກຄົນທີ່ມີຄວາມພິການ ສາມາດເຂົ້າເຖິງຂະບວນການກຳນົດຕົວ ແລະ ການປົກປ້ອງທີ່ກ່ຽວ ຂ້ອງ ເພື່ອນຳໃຊ້ຫຼັກການບໍ່ລົງໂທດ ບົນພື້ນຖານຄວາມເທົ່າທຽມກັບບຸກຄົນອື່ນໆ.[67]

### ຄຳແນະນຳຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ

ລັດ ຕ້ອງຮັບປະກັນການປົກປ້ອງດ້ານກົດໝາຍຢ່າງເທົ່າທຽມກັນ ແລະ ຄວາມສະເໝີພາບຕໍ່ໜ້າກົດໝາຍ ໃນທຸກມາດຕະການຕ້ານການຄ້າມະນຸດ, ລວມທັງ ຮັບປະກັນການນຳໃຊ້ຫຼັກການບໍ່ລົງໂທດທີ່ມີປະສິດທິພາບ ສຳລັບ ຜູ້ຖືກເຄາະຮ້າຍທີ່ມີຄວາມພິການ. ລັດຕ້ອງນຳໃຊ້ທຸກຂັ້ນຕອນທີ່ເໝາະສົມເພື່ອຮັບປະກັນບໍ່ໃຫ້ມີການຈຳແນກ ບົນພື້ນຖານຂອງຄວາມພິການ ແລະ ຮັບປະກັນໃຫ້ມີການອຳນວຍຄວາມສະດວກທີ່ສົມເຫດສົມຜົນ ລວມທັງ ຂໍ້ກຳນົດຂັ້ນຕອນໃນການຈັດຫາທີ່ພັກເຊົາທີ່ເໝາະສົມກັບອາຍຸ, ເພື່ອອຳນວຍຄວາມສະດວກ ໃນການເຂົ້າເຖິງຄວາມຍຸຕິທຳຢ່າງມີປະສິດທິພາບ ແລະ ການມີສ່ວນຮ່ວມຂອງຜູ້ຖືກເຄາະຮ້າຍທີ່ມີຄວາມພິການ ໃນການດຳເນີນຄະດີທາງກົດໝາຍທັງໝົດ ລວມທັງ ຂັ້ນຕອນການກຳນົດຕົວ ແລະ ການສືບສວນ-ສອບສວນ ແລະ ຂັ້ນຕອນເບື້ອງຕົ້ນອື່ນໆ.[68]

## ສົ່ງເສີມການເປັນມິດກັບເດັກ, ການຄຳນຶງເຖິງຄວາມລະອຽດອ່ອນດ້ານເພດພາວະ, ການຮັບຮູ້ເຖິງຄວາມບອບ ຊໍ້າດ້ານຈິດໃຈ ແລະ ທັກສະ ໃນການກັ່ນກອງ ແລະ ການກຳນົດຕົວ

ຜູ້ທີ່ມີໜ້າທີ່ຮັບຜິດຊອບໃນການກຳນົດຕົວຜູ້ຖືກເຄາະຮ້າຍ ຕ້ອງມີທັກສະທີ່ພຽງພໍໃນການພົວພັນກັບບຸກຄົນໃດໜຶ່ງ ເພື່ອໃຫ້ສາມາດປະຕິບັດໜ້າທີ່ຕົນໄດ້. ໝາຍຄວາມວ່າ ບຸກຄົນທີ່ອາດຈະເປັນຜູ້ຖືກເຄະຮ້າຍ ລວມທັງ ບຸກຄົນທີ່ ກະທຳຜິດທາງອາຍາ, ຕ້ອງຖືກປະຕິບັດດ້ວຍຄວາມເຄົາລົບ ແລະ ສອດຄ່ອງກັບຫຼັກການຂອງສາກົນ ແລະ ພາກພື້ນ ກ່ຽວກັບການກຳນົດຕົວ ແລະ ການປົກປ້ອງ. ບຸກຄົນດັ່ງກ່າວ ບໍ່ຈຳເປັນຕ້ອງເປີດເຜີຍຂໍ້ມູນຢ່າງຊັດເຈນ ຕໍ່ກັບສິ່ງທີ່ເກີດຂຶ້ນກັບຕົນເອງ ເພື່ອໃຫ້ຖືກຮັບຮູ້ວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ເຂົາເຈົ້າບໍ່ຈຳເປັນຕ້ອງເວົ້າພາສາທ້ອງຖິ່ນໄດ້ ແຕ່ຈະເປັນໜ້າທີ່ຂອງເຈົ້າໜ້າທີ່ລັດ ໃນການນຳໃຊ້ທັກສະຂອງເຂົາເຈົ້າໃນການກຳນົດຕົວ ບຸກຄົນທີ່ອາດຈະເປັນຜູ້ຖືກເຄາະຮ້າຍໄດ້ຢ່າງມີປະສິດທິພາບ.

## ຄວາມທ້າທາຍຕໍ່ນະໂຍບາຍຂອງລັດ ທີ່ເພີ່ມຄວາມສ່ຽງໃນການລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

ໃນບໍລິບົດທີ່ຜູ້ຖືກເຄາະຮ້າຍຖືກພົບເຫັນຄັ້ງທຳອິດໃນຖານະທີ່ເປັນຜູ້ກະທຳຜິດ ສາມາດສົ່ງຜົນເຮັດໃຫ້ມີສິ່ງທ້າທ້າຍໃນ ການກຳນົດຕົວຜູ້ຖືກເຄາະຮ້າຍ. ຕົວຢ່າງ, ການກວດຄົ້ນສະຖານທີ່ ບ່ອນທີ່ຜູ້ຖືກເຄາະຮ້າຍອາດຈະເຮັດວຽກ ແລະ ອາໄສຢູ່ ລວມທັງ ບ່ອນທີ່ເປັນສະຖານທີ່ໃຫ້ການບໍລິການທາງເພດ ຫຼື ໃນບ່ອນທີ່ມີການສໍ້ໂກງທາງໂທລະຄົມ, ສາມາດສົ່ງຜົນໃຫ້ຜູ້ຖືກເຄາະຮ້າຍກາຍເປັນຜູ້ກະທຳຜິດທາງອາຍາ ແທນທີ່ຈະໄດ້ຮັບການກຳນົດຕົວ.

ຂະບວນການຄຸ້ມຄອງການເຂົ້າ–ອອກເມືອງ ອາດຈະຕິດພັນກັບເຈົ້າໜ້າທີ່ ໃນການໃສ່ຂໍ້ກ່າວຫາຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ສຳລັບຄວາມຜິດກ່ຽວກັບການເຂົ້າ–ອອກເມືອງ ແລະ ຄວາມຜິດກ່ຽວກັບເອກະສານ ແທນທີ່ ຈະເປັນການຮັບຮູ້ເຂົາເຈົ້າໃນຖານະຜູ້ຖືກເຄາະຮ້າຍ. ຄວາມສ່ຽງນີ້ຈະມີຄວາມຮຸນແຮງຂຶ້ນ ກໍລະນີທີ່ຜູ້ຖືກເຄາະຮ້າຍ ຢູ່ປົນກັບການເຄື່ອນຍ້າຍຖິ່ນຖານທີ່ຜິດກົດໝາຍ. ຄວາມສ່ຽງທີ່ຈະບໍ່ໄດ້ຮັບການກຳນົດຕົວ ຍັງເກີດຂຶ້ນໃນເວລາທີ່ລັດ ມີນະໂຍບາຍທີ່ບໍ່ເປັນມິດຕໍ່ກັບຜູ້ເຄື່ອນຍ້າຍຖິ່ນຖານທີ່ບໍ່ມີເອກະສານ ລວມທັງ ຜູ້ເຄື່ອນຍ້າຍຖິ່ນຖານທີ່ກະທຳຜິດທາງອາຍາ ແລະ ການກັກຂັງແບບຖືກບັງຄັບ.

66 ບົດລາຍງານການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຂອງ ຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ Siobhán Mullally, UN Doc. A/HRC/47/34, ວັນທີ 17 ພຶດສະພາ [27]

67 ມາດຕາ 2, ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ

68 ແຫຼ່ງຂໍ້ມູນ: ບົດລາຍງານການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຂອງ ຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ Siobhán Mullally, UN Doc. A/HRC/47/34, ວັນທີ 17 ພຶດສະພາ 2021, [61]

ບັນຫາທີ່ເປັນບຸລິມະສິດຫຼັກເຊັ່ນ 'ສິງຄາມຢາເສບຕິດ' ອາດຈະສົ່ງຜົນກະທົບດ້ານລົບໃນການກຳນົດຕົວຜູ້ຖືກເຄາະຮ້າຍ ສິ່ງຜົນເຮັດໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດມີຄວາມຜິດທາງອາຍາ ຕໍ່ກັບຄວາມຜິດກ່ຽວກັບຢາເສບຕິດ ແທນທີ່ເຂົາເຈົ້າຈະໄດ້ຮັບການກຳນົດຕົວ ແລະ ຖືກສົ່ງຕໍ່. ໜ່ວຍງານຂອງລັດທີ່ເຮັດວຽກງານຕ້ານການຄ້າມະນຸດ ຜູ້ທີ່ມີພັນທະໃນການແກ້ໄຂບັນຫາການຄ້າມະນຸດ ມີບົດບາດທີ່ສຳຄັນໃນການທ້າທາຍ ແລະ ຍົກສູງຄວາມຮັບຮູ້ກ່ຽວກັບນະໂຍບາຍຂອງລັດວ່າມີການທຳລາຍຈຸດປະສົງ ແລະ ພັນທະໃນການຕ້ານການຄ້າມະນຸດຄືແນວໃດ.

**ຄຳແນະນຳຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ**

ຫຼັກການບໍ່ລົງໂທດ ຄວນມີການນຳໃຊ້:
(a) ໂດຍເຈົ້າໜ້າທີ່ພາຍໃນທີ່ກ່ຽວຂ້ອງທັງໝົດ ລວມທັງ ຕຳຫຼວດ, ເຈົ້າໜ້າທີ່ຊາຍແດນ ແລະ ເຈົ້າໜ້າທີ່ກວດຄົນເຂົ້າ–ອອກເມືອງ, ຜູ້ກວດກາດ້ານແຮງງານ ແລະ ໜ່ວຍງານບັງຄັບໃຊ້ກົດໝາຍອື່ນໆ ຫຼື ເຈົ້າໜ້າທີ່ ແລະ ເຂົາເຈົ້າຄວນໄດ້ຮັບການຝຶກອົບຮົມ ແລະ ມີຄຸນສົມບັດໃນການກຳນົດຕົວບຸກຄົນທີ່ອາດຈະເປັນຜູ້ຖືກເຄາະຮ້າຍ.
(b) ທັນທີ ທີ່ມີເຫດຜົນທີ່ເຊື່ອວ່າບຸກຄົນໃດໜຶ່ງ ໄດ້ຖືກຄ້າມະນຸດ ຫຼື ທັນທີ ທີ່ບຸກຄົນນັ້ນຖືກຄ້າມະນຸດ ຫຼື ຜູ້ຕາງໜ້າທາງດ້ານກົດໝາຍຂອງເຂົາເຈົ້າ ໄດ້ນຳໃຊ້ການປ້ອງກັນການຄ້າມະນຸດ ເພື່ອໃຫ້ຜູ້ຖືກເຄາະຮ້າຍໄດ້ຮັບການປົກປ້ອງທີ່ມີປະສິດທິພາບ ແລະ ເຕັມສ່ວນ.

ລັດ ຕ້ອງຮັບປະກັນວ່າ ມີການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໂດຍທັນທີ ແລະ ມີປະສິດທິພາບ. ຄວນສະ ໜອງການຊ່ວຍເຫຼືອທາງດ້ານກົດໝາຍ ຕະຫຼອດໄລຍະຂອງຂັ້ນຕອນການກຳນົດຕົວ, ເພື່ອຮັບປະກັນການກຳນົດຕົວໂດຍໄວ, ການສົ່ງຕໍ່ເພື່ອຂໍການຊ່ວຍເຫຼືອ ແລະ ປົກປ້ອງ ແລະ ຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຢ່າງມີປະສິດທິພາບ.[69]

## [4] ສ້າງໃຫ້ເຈົ້າໜ້າທີ່ດ່ານໜ້າມີຄວາມສາມາດເຕັມສ່ວນຕໍ່ກັບຕົວຊີ້ວັດ ໃນການກັ່ນກອງ ແລະ ກຳນົດຕົວຜູ້ຖືກເຄາະຮ້າຍ

ຕົວຊີ້ວັດຕ່າງໆ - ທີ່ເປັນສັນຍານບົ່ງບອກວ່າອາດຈະມີການຄ້າມະນຸດເກີດຂຶ້ນ – ເຊິ່ງບໍ່ມີຫຼັກຖານທີ່ຄົບຖ້ວນວ່າ ບຸກຄົນດັ່ງກ່າວເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ແຕ່ມັນເປັນຈຸດເລີ່ມຕົ້ນໃນການສືບສວນ-ສອບສວນເພີ່ມເຕີມ. ຜູ້ປະຕິບັດຕົວຈິງ ທີ່ຮັບຜິດຊອບໃນການກຳນົດຕົວຜູ້ເຄື່ອນຍ້າຍຖິ່ນຖານທີ່ຜິດກົດໝາຍ ຫຼື ການກວດສອບສະຖານທີ່ເຮັດວຽກ ສຳລັບການລະເມີດດ້ານແຮງງານ ຫຼື ການສືບສວນ-ສອບສວນຜູ້ກະທຳຜິດສະຖານເບົາບາງ ຫຼື ອາຊະຍາກຳທີ່ຮ້າຍແຮງ ຕ້ອງມີລາຍການກວດສອບຕົວຊີ້ວັດທີ່ຮອບດ້ານ ເພື່ອສະໜັບສະໜູນເຂົາເຈົ້າ ໃນການຮັບຮູ້ວ່າບຸກຄົນໃດເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນກຸ່ມຄົນທີ່ເຂົາເຈົ້າໄດ້ພົບເຫັນ ເຊິ່ງອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

### ສັງລວມ, ທົບທວນ ແລະ ດັດປັບຕົວຊີ້ວັດທີ່ມີຢູ່ ເພື່ອໃຫ້ເຂົ້າກັບບໍລິບົດ/ສະພາບການ

ໄດ້ມີການລົງທຶນດ້ານເວລາ, ຊັບພະຍາກອນ ແລະ ຄວາມຊ່ຽວຊານຈຳນວນຫຼາຍເຂົ້າໃນການພັດທະນາຕົວຊີ້ວັດຕ່າງໆ ແລະ ເຮັດໃຫ້ຕົວຊີ້ວັດດັ່ງກ່າວ ສາມາດນຳໃຊ້ໄດ້ໃນບັນດາປະເທດສະມາຊິກອາຊຽນ. ບາງຕົວຊີ້ວັດ ແມ່ນນຳໃຊ້ສະເພາະ ປະເພດການຂູດຮີດໃດໜຶ່ງ ຫຼື ໃນຂົງເຂດໃດໜຶ່ງ ບ່ອນທີ່ມີການຄ້າມະນຸດເກີດຂຶ້ນ. ຕົວຢ່າງ, ອົງການ UNODC ໄດ້ມີການພັດທະນາຕົວຊີ້ວັດສະເພາະ ສຳລັບການຄ້າມະນຸດ ເພື່ອຈຸດປະສົງຂອງການບັງຄັບໃຫ້ກະທຳຜິດທາງອາຍາ ຕໍ່ກັບອາຊະຍາກຳທາງອິນເຕີເນັດ (ການຄ້າມະນຸດໃນບ່ອນທີ່ມີອາຊະຍາກຳທາງອິນເຕີເນັດ ຫຼື ສໍ້ໂກງທາງໂທລະຄົມ).

ເຈົ້າໜ້າທີ່ ທີ່ມີໜ້າທີ່ຮັບຜິດຊອບໃນບັນດາປະເທດສະມາຊິກອາຊຽນ ຄວນຈະສັງລວມ ແລະ ທົບທວນຕົວຊີ້ວັດທີ່ມີຢູ່ ແລະ ປັບໃຊ້ຕົວຊີ້ວັດດັ່ງກ່າວໃຫ້ເຂົ້າກັບຈຸດປະສົງຂອງປະເທດຕົນ.

69 ແຫຼ່ງຂໍ້ມູນ: ບົດລາຍງານການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຂອງ ຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ Siobhán Mullally, UN Doc. A/HRC/47/34, ວັນທີ 17 ພຶດສະພາ 2021, [55-56]

**ກ່ອງຂໍ້ມູນ: ຕົວຢ່າງ ຕົວຊີ້ວັດທີ່ເປີດກວ້າງ ທີ່ມີຢູ່ໃນບັນດາປະເທດສະມາຊິກອາຊຽນ**

ຕົວຊີ້ວັດທົ່ວໄປ ສໍາລັບຜູ້ປະຕິບັດຕົວຈິງ ທີ່ຖືກຮັບຮອງໂດຍອາຊຽນ ແລະ ກອງປະຊຸມການລິເລີ່ມການຮ່ວມມືລະຫວ່າງ ລັດຖະມົນຕີໃນປະເທດລຸ່ມແມ່ນໍ້າຂອງວ່າດ້ວຍການຕ້ານການຄ້າມະນຸດ (ຂະບວນການ COMMIT) ທີ່ກົວລາລໍາເປີ ວັນທີ 15–16 ທັນວາ, ທີ່ຈັດຂຶ້ນໃນ *ການທົບທວນໃນລະດັບພາກພື້ນ ກ່ຽວກັບກົດໝາຍ, ນະໂຍບາຍ ແລະ ການປະຕິບັດຕົວຈິງໃນອາຊຽນ ກ່ຽວກັບ ການກໍານົດຕົວ, ການຄຸ້ມຄອງ ແລະ ປະຕິບັດຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກ* (ອາຊຽນ, 2016), ໜ້າ.32-33

ຕົວຊີ້ວັດທົ່ວໄປຂອງ UNODC *ຕົວຊີ້ວັດກ່ຽວກັບການຄ້າມະນຸດ*

ອີງການ ILO *ຕົວຊີ້ວັດການດໍາເນີນງານກ່ຽວກັບການຄ້າມະນຸດ*

ຄູ່ມືແນະນໍາດ້ານນະໂຍບາຍຂອງຂະບວນການບາຫຼີ ກ່ຽວກັບການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງ ຊຸດຕົວຊີ້ວັດຕ່າງໆ ເຊິ່ງມີສະບັບທີ່ເປັນພາສາ *ມຽນມາ, ອັງກິດ, ຟີລິບປິນ, ກໍາປູເຈຍ, ມາເລເຊຍ, ຫວຽດນາມ ແລະ ໄທ.*

ແອັບພິເຄຊັ້ນທາງມືຖື ກ່ຽວກັບເຄື່ອງມືການກັ່ນກອງ ແລະ ການສົ່ງຕໍ່ສໍາລັບການກັ່ນກອງ ແລະ ສົ່ງຕໍ່ກຸ່ມສ່ຽງທີ່ມາຮອດ ຊາຍແດນ ສາມາດດາວໂຫຼດໄດ້ທີ່ *download* ແລະ ມີສະບັບທີ່ເປັນພາສາອັງກິດ, ມາເລເຊຍ, ອິນໂດເນເຊຍ ແລະ ໄທ.

ຕົວຊີ້ວັດສະເພາະ ເພື່ອສະໜັບສະໜູນການກໍານົດຕົວຜູ້ຖືກເຄາະຮ້າຍ ໃນສູນສໍ້ໂກງທາງໂທລະຄົມ ໃນພາກພື້ນອາຊຽນ:

*ຕົວຊີ້ວັດຫຼັກ ສໍາລັບການຄ້າມະນຸດເພື່ອບັງຄັບໃຫ້ກະທໍາຜິດທາງອາຍາ ຕໍ່ກັບອາຊະຍາກໍາທາງອິນເຕີເນັດ* (ອີງການ UNODC, 2023).

*ຕົວຊີ້ວັດຫຼັກສໍາລັບການຄ້າມະນຸດ ເພື່ອຈຸດປະສົງການຕັດອະໄວຍະວະຂອງຮ່າງກາຍ,* ເຄື່ອງມືທີ 3 ຂອງ *ຊຸດເຄື່ອງມືສໍາລັບການສືບສວນ–ສອບສວນ ແລະ ດໍາເນີນຄະດີການຄ້າມະນຸດ ເພື່ອຈຸດປະສົງການຕັດອະໄວຍະວະຂອງຮ່າງກາຍ* (ອີງການ UNODC, 2022)

## ຮັບປະກັນວ່າຕົວຊີ້ວັດບໍ່ໄດ້ມີການຕັດຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍອອກ

ປະຫວັດຂອງຜູ້ຖືກເຄາະຮ້າຍ ບໍ່ຄວນຈະເປັນຕົວກໍານົດວ່າເຂົາເຈົ້າຈະຖືກຮັບຮູ້ວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ບໍ່. ບັນດາປະເທດອາຊຽນ ເປັນປະເທດປາຍທາງຂອງການຄ້າມະນຸດ ທັງຜູ້ຖືກເຄາະຮ້າຍທີ່ມາຈາກພາກພື້ນ ແລະ ຈາກປະເທດອື່ນໆນອກຈາກອາຊຽນ. ຕົວຊີ້ວັດຕ່າງໆ ຕ້ອງຕອບສະໜອງຕໍ່ກັບບຸກຄົນທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ (ຕົວຢ່າງ, ບຸກຄົນທີ່ມີປະຫວັດຄວາມເປັນມາ ແລະ ເພດທີ່ສະເພາະເຈາະຈົງ ອາດຈະມີແນວໂນ້ມທີ່ຈະຖືກຂູດຮີດໃນຂະແໜງການໃດໜຶ່ງ), ແຕ່ໃນເວລາດຽວກັນ, ຫຼີກລ້ຽງອັກຄະຕິໃດໜຶ່ງ ຫຼື ສົມມຸດຕິຖານວ່າ ໃຜແດ່ທີ່ສາມາດເປັນຜູ້ຖືກເຄາະຮ້າຍ (ບົນພື້ນຖານກ່ຽວກັບສັນຊາດ, ຊົນເຜົ່າ, ເຊື້ອຊາດ, ເພດພາວະ, ເພດ, ຕົວຕົນ, ສະຖານະການເຄື່ອນຍ້າຍຖິ່ນຖານ, ສະຖານະດ້ານເສດຖະກິດ–ສັງຄົມ ແລະ ອື່ນໆ).

ປະເພດການກະທໍາທີ່ຜິດກົດໝາຍ ທີ່ບຸກຄົນໃດໜຶ່ງໄດ້ມີສ່ວນພົວພັນ ບໍ່ຄວນເປັນປັດໃຈໃນ ກໍານົດ ວ່າ ບຸກຄົນດັ່ງກ່າວເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ບໍ່. ຜູ້ຖືກເຄາະຮ້າຍອາດຈະມີສ່ວນພົວພັນກັບການກະທໍາຜິດຕ່າງໆ ທີ່ຜິດກົດໝາຍ ເຊິ່ງເປັນຜົນໂດຍກົງຈາກການຖືກຄ້າມະນຸດ, ຈາກຄວາມຜິດກ່ຽວກັບການເຂົ້າ–ອອກເມືອງ ແລະ ທາງບໍລິຫານ, ອາຊະຍາກໍາທີ່ເລັກນ້ອຍ ຫຼື ຮ້າຍແຮງ. ເຂົາເຈົ້າອາດຈະກະທໍາຜິດແບບປະສົມປະສານກັນ. ຕົວຊີ້ວັດຕ່າງໆ ຕ້ອງສະທ້ອນເຖິງຄວາມຈິງເຫຼົ່ານີ້ ເພື່ອຫຼຸດຜ່ອນຄວາມສ່ຽງທີ່ຜູ້ຖືກເຄາະຮ້າຍຈະບໍ່ໄດ້ຮັບການກໍານົດຕົວ ເຊິ່ງຈະນໍາໄປສູ່ການລົງໂທດ.

## ການປັບປຸງຕົວຊີ້ວັດຕ່າງໆຢ່າງເປັນປະຈຳ

ໜ່ວຍງານທີ່ເຮັດວຽກຕ້ານການຄ້າມະນຸດ ຕ້ອງສັງເກດຕິດຕາມແນວໂນ້ມຂອງການຄ້າມະນຸດ ແລະ ວິທີການທີ່ຜູ້ຄ້າມະນຸດນຳໃຊ້ ເພື່ອໃຫ້ຕົວຊີ້ວັດຕ່າງໆ ຍັງກ່ຽວຂ້ອງກັບແນວທາງທີ່ຜູ້ຖືກເຄາະຮ້າຍມີສ່ວນພົວພັນກັບການກະທຳທີ່ຜິດກົດໝາຍ.[70]

ການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຮູບແບບການຂູດຮີດທີ່ແຕກຕ່າງກັນ (ບໍ່ວ່າຈະເປັນການຂູດ ຮີດທາງເພດ, ການບັງຄັບໃຊ້ແຮງງານ, ການຕັດອະໄວຍະວະຂອງຮ່າງກາຍ ຫຼື ຂູດຮີດໃຫ້ກະທຳຜິດທາງອາຍາ) ເຊິ່ງຈຳເປັນຕ້ອງມີທັກສະທີ່ແຕກຕ່າງກັນ ແລະ ຕົວຊີ້ວັດອັນສະເພາະທີ່ໄດ້ຮັບການປຽບທຽບແລ້ວ.

ການຮັບປະກັນວ່າຕົວຊີ້ວັດ ຍັງສອດຄ່ອງກັບຈຸດປະສົງ, ຈຳເປັນຕ້ອງໄດ້ມີການຄົ້ນຄວ້າ–ວິໄຈ, ການເກັບກຳຂໍ້ມູນ ແລະ ການປຶກສາຫາລືກັບຜູ້ປະຕິບັດຕົວຈິງ ຢ່າງເປັນປະຈຳ ເຊິ່ງເປັນຜູ້ທີ່ຄຸ້ນເຄີຍຕໍ່ກັບພັດທະນາການຂອງການຄ້າມະນຸດວ່າມີຄືແນວໃດ, ທິດທາງທີ່ຜູ້ຖືກເຄາະຮ້າຍໄດ້ຖືກຂູດຮີດ, ແລະ ປະເພດຂອງການກະທຳທີ່ຜິດກົດໝາຍ ທີ່ຜູ້ຖືກເຄາະຮ້າຍອາດຈະມີສ່ວນພົວພັນນຳ. ໜ່ວຍງານພາກລັດທີ່ເຮັດວຽກຕ້ານການຄ້າມະນຸດ ຄວນພິຈາລະນາ ຂໍການສະໜັບສະໜູນຈາກຜູ້ປະຕິບັດຕົວຈິງດ້ານຍຸຕິທາງອາຍາ ແລະ ໜ່ວຍງານທີ່ບໍ່ແມ່ນພາກລັດເຊັ່ນ: ອົງການຈັດຕັ້ງທາງສັງຄົມ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນອື່ນໆ ເພື່ອຮັບປະກັນວ່າຕົວຊີ້ວັດນັ້ນ ຕອບໂຕ້ຕໍ່ກັບແນວໂນ້ມການພັດທະນາຂອງການຄ້າມະນຸດ, ຮູບແບບການກະທຳທີ່ຜິດກົດໝາຍ ທີ່ຜູ້ຖືກເຄາະຮ້າຍອາດຈະມີສ່ວນພົວພັນນຳ.

## ເຜີຍແຜ່ຕົວຊີ້ວັດຕ່າງໆໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ທີ່ອາດຈະພົບເຫັນຜູ້ຖືກເຄາະຮ້າຍ

ໜ່ວຍງານຕ່າງໆທີ່ເຮັດວຽກຕ້ານການຄ້າມະນຸດ ຕ້ອງຮັບປະກັນວ່າພາກສ່ວນທີ່ກ່ຽວຂ້ອງ ສາມາດເຂົ້າເຖິງຕົວຊີ້ວັດ ທີ່ກ່ຽວຂ້ອງກັບວຽກຂອງເຂົາເຈົ້າ. ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ, ເຈົ້າໜ້າທີ່ກວດກາແຮງງານ, ເຈົ້າໜ້າທີ່ກວດຄົນເຂົ້າ–ອອກເມືອງ ລວມທັງ ສະມາຊິກຄະນະສະເພາະກິດສະຫະວິຊາຊີບ ທີ່ໄດ້ຮັບການແຕ່ງຕັ້ງ ເພື່ອຕອບໂຕ້ຕໍ່ກັບອາຊະຍາກຳທີ່ຮ້າຍແຮງ ເຊິ່ງຜູ້ຖືກຄ້າມະນຸດອາດຈະໄດ້ຮັບການຂູດຮີດ ເຊັ່ນ: ການຄ້າຂາຍຢາເສບຕິດ ຫຼື ອາຊະຍາກຳທາງອິນເຕີເນັດ ເຊິ່ງຕ້ອງມີການເຜີຍແຜ່ກ່ຽວກັບຕົວຊີ້ວັດດັ່ງກ່າວ. ຫຼາຍພາກສ່ວນທີ່ພົບ ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຜູ້ບໍ່ໄດ້ຢູ່ໃນໜ່ວຍງານຕ່າງໆທີ່ເຮັດວຽກຕ້ານການຄ້າມະນຸດ ຫຼື ໃນເຄືອຂ່າຍຕ້ານການຄ້າມະນຸດ, ເຊິ່ງອາດຈະໄດ້ຮັບຜົນປະໂຫຍດໃນການເຊື່ອມສານ ເອົາຕົວຊີ້ວັດນັ້ນເຂົ້າໃນມາດຕະຖານການປະຕິບັດງານຂອງເຂົາເຈົ້າ.

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະຂໍການສະໜັບສະໜູນຈາກອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ຮ່ວມມືກັບຜູ້ໃຫ້ບໍລິການດ້ານສຸຂະພາບ, ພະນັກງານປົກປ້ອງເດັກ ແລະ ພາກສ່ວນອື່ນໆ. ແຕ່ວ່າພວກສ່ວນເຫຼົ່ານີ້ ບໍ່ໄດ້ແມ່ນໜ່ວຍງານສະເພາະດ້ານໃນການກຳນົດຕົວຜູ້ຖືກເຄາະຮ້າຍ, ແຕ່ເຂົາເຈົ້າອາດຈະມີສ່ວນຮ່ວມໃນການສະໜັບສະໜູນການກຳນົດຕົວເບື້ອງຕົ້ນ, ສະນັ້ນ, ຕ້ອງມີຕົວຊີ້ວັດທີ່ຖືກຕ້ອງ ແລະ ເປັນຕົວຊີ້ວັດທີ່ແທດເໝາະກັບສະພາບການ ເພື່ອໃຫ້ເຂົາເຈົ້າປະຕິບັດໜ້າທີ່ໄດ້ຢ່າງມີປະສິດທິພາບ. ພາກສ່ວນທີ່ກ່ຽວຂ້ອງເຫຼົ່ານີ້ ມີບົດບາດທີ່ສຳຄັນໃນການປັບປຸງຕົວຊີ້ວັດ.

## ກະຕຸ້ນໃຫ້ຜູ້ປະຕິບັດຕົວຈິງຮັບຮູ້ກ່ຽວກັບວິທີການນຳໃຊ້ຕົວຊີ້ວັດໃນພາກປະຕິບັດຕົວຈິງ

ຜູ້ປະຕິບັດຕົວຈິງ ຄວນຈະຄຳນຶງເຖິງຂໍ້ມູນຄວາມຈິງທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະມີສ່ວນພົວພັນ ກັບການກະທຳຕ່າງໆທີ່ຜິດກົດໝາຍ ທີ່ເປັນຜົນສະທ້ອນຈາກການຖືກຄ້າມະນຸດ, ເຊິ່ງບໍ່ກ່ຽວຂ້ອງກັບປະເພດ ຂອງການຄ້າມະນຸດທີ່ຜູ້ຖືກເຄາະຮ້າຍໄດ້ຖືກຄ້າມະນຸດ. ຕົວຢ່າງ ບຸກຄົນໃດໜຶ່ງ ທີ່ມີສ່ວນພົວພັນກັບການກະທຳ ທີ່ຜິດກົດໝາຍໃນອຸດສາຫະກຳທາງເພດ ອາດຈະລະເມີດກົດລະບຽບກ່ຽວກັບການເຂົ້າ–ອອກເມືອງ ຫລື ກົດລະບຽບດ້ານແຮງງານ. ບຸກຄົນທີ່ຖືກຄ້າມະນຸດໃນຂະແໜງກະສິກຳ ອາດຈະກະທຳຜິດໃນອາຊະຍາກຳທີ່ເບົາບາງເພື່ອຄວາມຢູ່ລອດ. ແຕ່ລະເຫດການມີລັກສະນະສະເພາະ, ໝາຍຄວາມວ່າ ຜູ້ປະຕິບັດຕົວຈິງ ຕ້ອງມີທັກສະ ແລະ ລິເລີ່ມເບິ່ງຢ່າງໃກ້ຊິດຕໍ່ກັບສະຖານະການຂອງແຕ່ລະຄົນ ເພື່ອກຳນົດວ່າບຸກຄົນດັ່ງກ່າວອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ບໍ່.

70 ຕົວຢ່າງ: ໃນບາງປະເທດ ທີ່ຜ່ານມາມີຄວາມເຂົ້າໃຈວ່າ ມີພຽງແຕ່ແມ່ຍິງ ແລະ ເດັກເທົ່ານັ້ນທີ່ເປັນຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ ຕໍ່ກັບການຂູດຮີດທາງເພດ, ແຕ່ປັດຈຸບັນ ເຫັນວ່າມີຄວາມເຂົ້າໃຈທີ່ວ່າ ບຸກຄົນທຸກເພດ, ທຸກອາຍຸ ສາມາດເປັນຜູ້ຖືກ ເຄາະຮ້າຍຈາກການຄ້າມະນຸດໃນຮູບແບບຕ່າງໆໄດ້. ເຊັ່ນດຽວກັບ ຄວາມເຂົ້າໃຈຜ່ານມາວ່າ ມີພຽງແຕ່ກຸ່ມຄົນທີ່ມີລາຍຮັບຖານະເສດຖະກິດ–ສັງຄົມບໍ່ສູງ ບວກກັບ ມີລະດັບການສຶກສາທີ່ຕ່ຳ ທີ່ເປັນຜູ້ຖືກຄ້າມະນຸດ, ແຕ່ມີບົດວິເຄາະໃໝ່ ກ່ຽວກັບການຄ້າມະນຸດ ໃນການບັງຄັບທາງອາຍາກ່ຽວກັບອາຊະຍາກຳທາງອິນເຕີເນັດ ເຊິ່ງສະແດງໃຫ້ເຫັນວ່າ ບຸກຄົນທີ່ມີການສຶກສາດີ ກໍເປັນເປົ້າໝາຍຂອງຜູ້ຄ້າມະນຸດ.

### ສະໜັບສະໜູນຕົວຊີ້ວັດທີ່ສອດຄ່ອງກັນໃນທົ່ວພາກພື້ນອາຊຽນ

ຄ້າມະນຸດ ຂູດຮີດບຸກຄົນອື່ນໃນລັກສະນະທີ່ຄ້າຍຄືກັນໃນທົ່ວພາກພື້ນອາຊຽນ, ໝາຍຄວາມອາດຈະມີບົດຮຽນທີ່ມີຄູນ ຄ່າ ທີ່ສາມາດຮຽນຮູ້ ແລະ ແບ່ງປັນໄດ້ ກ່ຽວກັບຜົນສຳເລັດດັ່ງກ່າວ ລວມທັງ ການຕອບໂຕ້ທີ່ມີປະສິດທິພາບ ເຊິ່ງບໍ່ກ່ຽວກັບອົງປະກອບຂອງການຄ້າມະນຸດໃນກົດໝາຍພາຍໃນວ່າຈະເປັນແນວໃດ, ຕົວຊີ້ວັດຂອງຜູ້ຖືກເຄາະຮ້າຍ ຄວນໄດ້ຮັບ ການສ້າງຄວາມເຂັ້ມແຂງ ເພື່ອສະໜັບສະໜູນການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ການນຳໃຊ້ຫຼັກການບໍ່ລົງໂທດໃນພາກພື້ນໜ່ວຍງານຕ້ານການຄ້າມະນຸດຂອງສະມາຊິກອາຊຽນໃນແຕ່ລະປະເທດ ຄວນແຈ້ງໃຫ້ໜ່ວຍງານຕ່າງໆຂອງອາຊຽນ ຊາບກ່ຽວກັບແນວໂນ້ມການປ່ຽນແປງຂອງການຄ້າມະນຸດ, ເພື່ອສ້າງຄວາມເຂົ້າໃຈກ່ຽວກັບການຄ້າມະນຸດໃນລະດັບພາກພື້ນ ແລະ ຕົວຊີ້ວັດທີ່ເຂັ້ມແຂງ ເພື່ອກຳນົດຕົວຜູ້ຖືກເຄາະຮ້າຍ ທີ່ມີສ່ວນພົວພັນກັບການກະທຳທີ່ຜິດກົດໝາຍ.

## [5] ສ້າງຄວາມເຂັ້ມແຂງໃຫ້ແກ່ເຈົ້າໜ້າທີ່ ທີ່ມີໜ້າທີ່ຈັບຕົວ ໃນການນຳໃຊ້ຫຼັກການບໍ່ລົງໂທດ

ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍບໍ່ກ່ຽວກັບວ່າຜູ້ຖືກເຄາະຮ້າຍນັ້ນ ໄດ້ຮັບການກຳນົດຕົວຢ່າງເປັນທາງ ການ ຫຼື ໄດ້ມີການຕັ້ງຂໍ້ກ່າວຫາແກ່ຜູ້ຄ້າມະນຸດແລ້ວ ຫຼື ບໍ່.[71] ໃນສະພາບການທີ່ມີຂໍ້ສົງໄສ ທີ່ມີຄວາມໜ້າເຊື່ອຖືໄດ້ວ່າ ບຸກຄົນທີ່ຖືກສົງໄສນັ້ນ ໄດ້ຖືກຂູດຮີດເພື່ອໃຫ້ກະທຳຜິດທາງອາຍາ ແລະ ອາດຈະຖືກຄ້າມະນຸດ, ຫຼັກການບໍ່ລົງໂທດ ຄວນຖືກນຳໃຊ້. ສະນັ້ນ ຄວນມີການປະເມີນຢ່າງທັນການ ໂດຍເຈົ້າໜ້າທີ່ ທີ່ໄດ້ຮັບການຝຶກອົບຮົມ ແລະ ມີເງື່ອນໄຂຄົບຖ້ວນ ເພື່ອກຳນົດວ່າບຸກຄົນນັ້ນເປັນຜູ້ຖືກເຄາະຮ້າຍຈາກອາຊະຍາກຳຄ້າມະນຸດ ຕາມທີ່ກຳນົດໄວ້ໃນກົດໝາຍພາຍໃນ, ພາກພື້ນ ແລະ ສາກົນ. ນິຕິກຳກ່ຽວກັບການບໍ່ລົງໂທດ (ເບິ່ງໃນພາກທີ 2) ຍັງສາມາດສ້າງຄວາມເຂັ້ມແຂງໃຫ້ແກ່ເຈົ້າໜ້າທີ່ ທີ່ມີໜ້າທີ່ຈັບຕົວ ເພື່ອນຳໃຊ້ຫຼັກການບໍ່ລົງໂທດ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຈາກຂໍ້ກ່າວຫາ ທີ່ເຂົາເຈົ້າຖືກຈັບຕົວໂດຍບໍ່ຖືກຕ້ອງ ຫຼື ບໍ່ຄວນຖືກຈັບຕົວ.

### ຮັບປະກັນວ່າເຈົ້າໜ້າທີ່ດ່ານໜ້າເຂົ້າໃຈ ແລະ ຮູ້ວິທີການນຳໃຊ້ດຸນພິນິດຂອງຕົນ

ຜູ້ປະຕິບັດຕົວຈິງ ທີ່ພົບເຫັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງເຂົ້າໃຈຕໍ່ກັບດຸນພິນິດທີ່ເຂົາເຈົ້າມີ ແລະ ຮູ້ນຳໃຊ້ດຸນພິນິດດັ່ງກ່າວ. ເຈົ້າໜ້າທີ່ສືບສວນ-ສອບສວນ ຄວນຕັດສິນໃຈວ່າ ຈະຕັ້ງຂໍ້ກ່າວຫາແກ່ບຸກຄົນ ໂດຍອີງຕາມອົງປະກອບດ້ານຮ່າງກາຍ – ການກະທຳ (actus reus) ແລະ ຈິດໃຈ – ເຈດຕະນາ (mens rea) ຂອງອາຊະຍາກຳ ຫຼື ບໍ່. ເຈົ້າໜ້າທີ່ສືບສວນ-ສອບສວນທີ່ມີທັກສະ ບໍ່ຄວນຕັ້ງຂໍ້ກ່າວຫາແກ່ບຸກຄົນໃດໜຶ່ງຕໍ່ກັບອາຊະຍາກຳທີ່ເຂົາເຈົ້າບໍ່ໄດ້ເຈດຕະນາກະທຳ, ແຕ່ຄວນກວດສອບຕໍ່ກັບອົງປະກອບຂອງເຈດຕະນາ ເພື່ອກຳນົດວ່າຈະຈັບຕົວ ແລະ ຕັ້ງຂໍ້ຫາແກ່ບຸກຄົນດັ່ງກ່າວ ຫຼື ບໍ່.

ໃນຂອບເຂດອຳນາດທີ່ເຈົ້າໜ້າທີ່ສືບສວນ-ສອບສວນ ມີດຸນພິນິດ, ເຂົາເຈົ້າຕ້ອງຕັດສິນໃຈວ່າຈະດຳເນີນການຕັ້ງຂໍ້ກ່າວຫາ ແລະ/ຫຼື ແນະນຳບໍ່ໃຫ້ມີການຕັ້ງຂໍ້ກ່າວຫາ. ດຸນພິນິດທີ່ຈະບໍ່ຈັບຕົວ ຫຼື ຕັ້ງຂໍ້ກ່າວຫາ ອາດຈະພົບເຫັນໄດ້ໃນກົດໝາຍ ແລະ ນະໂຍບາຍ ທີ່ມີການອະທິບາຍເຖິງດຸນພິນິດ ແລະ ການພິຈາລະນາ ທີ່ອາດແຈ້ງໃຫ້ຮັບຊາບ ລວມທັງ ການບໍ່ຕັ້ງຂໍ້ກ່າວຫາແກ່ບຸກຄົນໃດໜຶ່ງ ເພື່ອຜົນປະໂຫຍດສາທາລະນະ ຫຼື ບໍ່. ຫຼັກການບໍ່ລົງໂທດ ອາດຈະມີການສະແດງອອກໃນ ນະໂຍບາຍ ແລະ ແຜນປະຕິບັດງານເພື່ອຕ້ານການຄ້າມະນຸດ (ເບິ່ງໃນເອກະສານຊ້ອນທ້າຍ 2).

71 ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດ: ບົດລາຍງານຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ Siobhán Mullally, UN Doc. A/HRC/47/34, ວັນທີ 17 ພຶດສະພາ 2021, ວັກທີ 58

### ກ່ອງຂໍ້ມູນ: ບໍ່ໄດ້ມີການເຜີຍແຜ່ນະໂຍບາຍຕໍ່ສາທາລະນະ ກໍລະນີທີ່ບໍ່ມີຂໍ້ກໍານົດກ່ຽວກັບການບໍ່ລົງໂທດ

ປະເທດກໍາປູເຈຍ ບໍ່ມີຂໍ້ກໍານົດກ່ຽວກັບຫຼັກການບໍ່ລົງໂທດໃນນິຕິກໍາກ່ຽວກັບການຕ້ານການຄ້າມະນຸດ, ແຕ່ມີຄູ່ມືແນະນໍາ ທີ່ກໍານົດວ່າ "ຄົນຕ່າງປະເທດທີ່ຖືກກໍານົດຕົວຢ່າງເປັນທາງການວ່າເປັນຜູ້ຖືກເຄາະຮ້າຍ ຈະບໍ່ຖືກກັກຂັງ ຫຼື ໃສ່ຂໍ້ກ່າວຫາຕໍ່ກັບການ ເຂົ້າ–ອອກເມືອງທີ່ຜິດກົດໝາຍ ແລະ/ຫຼື ການເປັນໂສເພນີ."[72]

ເຊັ່ນດຽວກັບປະເທດອົດສະຕຣາລີ ທີ່ບໍ່ມີການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດໃນນິຕິກໍາຂອງປະເທດຕົນ. ແຕ່ວ່າ ເຈົ້າໜ້າທີ່ຕໍາຫຼວດລັດຖະບານກາງອົດສະຕຣາລີ ແລະ ຫົວໜ້າອົງການໄອຍະການປະຊາຊົນ ຂອງສະຫະພັນທະລັດ ໄດ້ມີການບັງຄັບໃຊ້ນະໂຍບາຍ ໂດຍຜ່ານ ນະໂຍບາຍການດໍາເນີນຄະດີຂອງສະຫະພັນທະລັດ ເຊິ່ງຈໍາເປັນຕ້ອງໄດ້ ມີການພິຈາລະນາວ່າການດໍາເນີນຄະດີເພື່ອຜົນປະໂຫຍດສາທາລະນະ ຫຼື ບໍ່.[73]

ໃນເຂດຂອບອໍານາດທີ່ເຈົ້າໜ້າທີ່ສືບສວນ-ສອບສວນ ມີຂໍ້ຈໍາກັດ ຫຼື ບໍ່ມີດຸນພິນິດກ່ຽວກັບວ່າຈະບໍ່ໃສ່ຂໍ້ກ່າວຫາ ຫຼື ບໍ່, ການຕັດສິນໃຈກ່ຽວກັບວ່າຈະດໍາເນີນການດໍາເນີນຄະດີກ່ຽວກັບຄວາມຜິດ ເພື່ອຍື່ນໄປຫາພະນັກງານໄອຍະການ ຫຼື ສານ ຫຼື ບໍ່. ໃນກໍລະນີດັ່ງກ່າວ ໃນເວລາທີ່ເຈົ້າໜ້າທີ່ທີ່ມີໜ້າທີ່ຈັບຕົວ ສົ່ງຄະດີໄປຫາພະນັກງານໄອຍະການ, ເຂົາເຈົ້າຄວນຍື່ນຂໍ້ມູນ ຫຼື ຫຼັກຖານທີ່ເຂົາເຈົ້າມີ ທີ່ເຊື່ອໄດ້ວ່າບຸກຄົນດັ່ງກ່າວນັ້ນເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍທັນທີ. ເອກະສານກ່ຽວກັບຄະດີ ຄວນລວມມີໃນພາກທີ່ເປັນມາດຕະຖານກ່ຽວກັບການບໍ່ລົງໂທດ ທີ່ກວມເອົາຂໍ້ມູນ ທີ່ວ່າ ຈະມີການນໍາໃຊ້ຫຼັກການບໍ່ລົງໂທດ ຫຼື ບໍ່ ແລະ ບົນພື້ນຖານກົດໝາຍໃດ.

### ກ່ອງຂໍ້ມູນ: ຕົວຢ່າງ (ການຫຼອກລວງທາງອິນເຕີເນັດ)

A ຮຽນຈົບປະລິນຍາຕີ ສາຂາການຕະຫຼາດ ແລະ ສະໝັກວຽກຕໍາແໜ່ງຝ່າຍຂາຍທີ່ຕ່າງປະເທດ. ພາຍຫຼັງທີ່ມີການສໍາພາດ ຫຼາຍຮອບ, ລາວກໍໄດ້ວຽກດັ່ງກ່າວ. ຫຼັງຈາກທີ່ເດີນທາງໄປຮອດສະຖານທີ່ເຮັດວຽກ, ລາວຮູ້ວ່າມີບາງຢ່າງຜິດປົກກະຕິ ໃນເວລາທີ່ນາຍຈ້າງໄດ້ຢຶດເອົາເອກະສານເດີນທາງ ແລະ ໂທລະສັບລາວໄປ. ເຂົາເຈົ້າບອກລາວວ່າ ລາວຈະມີສ່ວນຮ່ວມໃນການສໍ້ໂກງເງິນຂອງບຸກຄົນເປັນຈໍານວນຫຼາຍຜ່ານທາງໂທລະຄົມ ດ້ວຍການສ້າງປະຫວັດປອມທາງອອນລາຍ, ແລະ ໂນ້ມນ້າວໃຫ້ກຸ່ມເປົ້າໝາຍລົງທຶນເຂົ້າໃນການສໍ້ໂກງດັ່ງກ່າວ. ລາວເຮັດວຽກໄດ້ດີ ຈຶ່ງເຮັດໃຫ້ລາວບໍ່ຖືກທຸບຕີ ຄືກັບເພື່ອນຮ່ວມງານຂອງລາວທີ່ຖືກທຸບຕີ. ມື້ໜຶ່ງ, ລາວ ແລະ ເພື່ອນຮ່ວມງານ ຖືກແຈ້ງວ່າເຂົາເຈົ້າຈະຍ້າຍບ່ອນເຮັດວຽກ ແລະ ເຂົາເຈົ້າຈະຖືກຍ້າຍໄປປະເທດອື່ນ. ເຂົາເຈົ້າຖືກຍ້າຍໄປປະເທດເພື່ອນບ້ານ, ແລະ ຖືກສະກັດກັ້ນໂດຍເຈົ້າໜ້າທີ່ກວດຄົນເຂົ້າ–ອອກເມືອງ ແລະ ຖືກຈັບຕົວໃນສະຖານການລະເມີດກົດໝາຍວ່າດ້ວຍການເຂົ້າ–ອອກເມືອງ.

*ການນໍາໃຊ້ຫຼັກການບໍ່ລົງໂທດ:* B ເຊິ່ງເປັນເຈົ້າໜ້າທີ່ຕໍາຫຼວດອາວຸໂສ ທີ່ຊ່ຽວຊານດ້ານການຕ້ານການຄ້າມະນຸດ ຮຽນຮູ້ກ່ຽວກັບສະພາບການຂອງ A. ລາວເດີນທາງຈາກຕົວເມືອງໄປສູ່ເຂດຊາຍແດນ ບ່ອນທີ່ A ແລະ ບຸກຄົນອື່ນໆຖືກ ກັກຕົວໄວ້ທີ່ສະຖານີຕໍາຫຼວດ. ລາວໄດ້ແຈ້ງໃຫ້ກັບຜູ້ບັນຊາການຊາບກ່ຽວກັບຂໍ້ສົງໄສທີ່ວ່າບຸກຄົນທີ່ຖືກກັກຕົວໄວ້ນັ້ນ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ພາຍຫຼັງທີ່ມີການດໍາເນີນການກັ່ນກອງເບື້ອງຕົ້ນ ເພື່ອກໍານົດວ່າບຸກຄົນໃນກຸ່ມ ດັ່ງກ່າວ ອາດຈະເປັນຜູ້ດໍາເນີນການສໍ້ໂກງ ແລະ ບຸກຄົນທີ່ຖືກສັນນິຖານວ່າເປັນຜູ້ຖືກເຄາະຮ້າຍ, ຕໍ່ມາ ລາວໄດ້ມີການຈັດ ແບ່ງກຸ່ມ – ລວມມີ A - ໂດຍການຍ້າຍເຂົາເຈົ້າອອກຈາກສະຖານທີ່ກັກຕົວຂອງເຈົ້າໜ້າທີ່ຕໍາຫຼວດ ແລະ ສົ່ງຕໍ່ ເພື່ອໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອ. ລາວໄດ້ຢູ່ທີ່ສູນພັກເຊົາຂອງການຄ້າມະນຸດ. ພະນັກງານໄອຍະການ ຕັດສິນໃຈບໍ່ດໍາເນີນຄະດີຕໍ່ກັບ A.

## ສິ່ງເສີມພັນທະໃນການສືບສວນ-ສອບສວນຄະດີຄ້າມະນຸດຢ່າງຕັ້ງໜ້າ

ໂດຍບໍ່ຂຶ້ນກັບວ່າເຈົ້າໜ້າທີ່ສືບສວນ-ສອບສວນ ມີດຸນພິນິດ ຫຼື ນໍາໃຊ້ດຸນພິນິດ ຫຼື ບໍ່, ເຊິ່ງມີຄວາມສໍາຄັນຢ່າງຍິ່ງທີ່ ເຂົາເຈົ້າຕ້ອງປະຕິບັດໜ້າທີ່ຂອງຕົນ ໃນການເກັບກໍາຫຼັກຖານທີ່ມີຢູ່ກ່ຽວກັບການກ່າວຫາຄວາມຜິດ ລວມທັງ ສະພາບແວດລ້ອມອ້ອມຂ້າງ ທີ່ບົ່ງບອກເຖິງຂໍ້ມູນຄວາມຈິງທີ່ວ່າ ຜູ້ກະທໍາຜິດເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຫຼັກຖານດັ່ງກ່າວ ອາດຈະກ່ຽວຂ້ອງກັບຫຼັກຖານການຢືນຢັນການປ້ອງກັນຜູ້ຖືກ

72 ຄໍາແນະນໍາກ່ຽວກັບຮູບແບບ ແລະ ຂັ້ນຕອນສໍາລັບການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອໃຫ້ເໝາະສົມ ກັບການບໍລິການ (NCCT, 2015), ຈຸດທີ 2 ຂອງໜ້າທີ 12

73 ເບິ່ງທີ່: ນະໂຍບາຍການດໍາເນີນຄະດີຂອງເຄືອຈັກກະພົບ: ຄໍາແນະນໍາສໍາລັບການຕັດສິນໃຈ ໃນຂະບວນການດໍາເນີນຄະດີ (CDPP, 2011) ໜ້າທີ 4–7, ແລະ ການທົບທວນແບບມີເປົ້າໝາຍ ກ່ຽວກັບຄວາມຜິດຂອງການເປັນຂ້າທາດສະໄໝໃໝ່ ໃນໝວດທີ 270 ແລະ 271 ຂອງ ປະມວນກົດໝາຍອາຍາ ປີ 1995 (Cth): ລາຍງານທີ່ຄົ້ນພົບ (ເຄືອຈັກກະພົບຂອງອົດສະຕຣາລີ, 2023), ໜ້າທີ 118

ເຄາະຮ້າຍໃນການພິຈາລະນາໄຕ່ສວນຄະດີ ທີ່ອາດຈະມີການອ້າງອີງເຖິງ.[74] ຫຼັກຖານນີ້ ອາດຈະມີຄວາມສຳຄັນໃນການກຳນົດຕົວ ແລະ ກອບກູ້ ຜູ້ຖືກເຄາະຮ້າຍອື່ນໆ ແລະ ຈັບຕົວຜູ້ຄ້າມະນຸດ.

ໃນກໍລະນີທີ່ຄວາມພະຍາຍາມໃນການສືບສວນ-ສອບສວນ ໄດ້ສຸມໃສ່ການກະທຳທີ່ຜິດກົດໝາຍຂອງຜູ້ຖືກເຄາະຮ້າຍ ແທນທີ່ຈະສຸມໃສ່ ການເຊື່ອມໂຍງ ລະຫວ່າງ ການກະທຳທີ່ຜິດກົດໝາຍ ແລະ ຜູ້ທີ່ຄ້າມະນຸດ, ການຕອບໂຕ້ດ້ານຍຸຕິທຳ ທາງອາຍາຕໍ່ກັບການຄ້າມະນຸດ ກໍຈະ ອ່ອນແອລົງ. ຜູ້ຄ້າມະນຸດ ອາດຈະໃຊ້ຜູ້ຖືກເຄາະຮ້າຍ ເປັນຕົວແທນໃນການກະທຳ ຜິດທາງອາຍາ ເຊິ່ງເປັນສ່ວນໜຶ່ງໃນການປະຕິບັດງານຂອງ ເຂົາເຈົ້າ ເພື່ອເຮັດໃຫ້ໜ່ວຍງານຍຸຕິທຳທາງອາຍາ ຫັນປ່ຽນຄວາມສົນໃຈອອກຈາກຕົນເອງ ໄປສູ່ ຜູ້ຖືກເຄາະຮ້າຍແທນ, ສະນັ້ນ, ຈະເຮັດໃຫ້ຜູ້ ຖືກເຄາະຮ້າຍ ຕົກຢູ່ໃນຄວາມສ່ຽງທີ່ ຈະຖືກຈັບຕົວ.[75]

ຫຼັກຖານເພື່ອຕໍ່ຕ້ານຜູ້ຄ້າມະນຸດ – ລວມທັງ ອາຊະຍະກຳທີ່ມີການຈັດຕັ້ງທີ່ຮ້າຍແຮງ ທີ່ພົວພັນກັບຄວາມຜິດທາງອາຍາ ທີ່ຢູ່ໃນລະດັບທີ່ສູງ ກວ່າ – ສາມາດເຮັດໃຫ້ບັນລຸຜົນຜ່ານການສືບສວນ-ສອບສວນຢ່າງຕັ້ງໜ້າເທົ່ານັ້ນ. ເຈົ້າໜ້າທີ່ບັງຄັບ ໃຊ້ກົດໝາຍ ຕ້ອງເຂົ້າໃຈລັກສະນະ ຂັ້ນຕອນຄວາມຜິດຂອງຜູ້ຖືກເຄາະຮ້າຍ ແລະ ພາກສ່ວນຕ່າງໆທີ່ສືບສວນ-ສອບສວນຢ່າງຕັ້ງໜ້າ ຜູ້ທີ່ມີສ່ວນພົວພັນກັບການຄວບຄຸມ ຫຼື ຄຸ້ມຄອງຄົນ, ຊັບສິນ ຫຼື ກຳນົດບ່ອນທີ່ພົບຕົວຜູ້ຖືກເຄາະຮ້າຍ, ເພື່ອກຳນົດວ່າ ເຂົາເຈົ້າແມ່ນຜູ້ຄ້າມະນຸດ ຫຼື ຜູ້ຖືກເຄາະຮ້າຍ.[76]

ເຈົ້າໜ້າທີ່ຕຳຫຼວດທີ່ປະຕິບັດວຽກຕົວຈິງ ຄວນມີການທົບທວນ ແລະ ພິຈາລະນາວິທີການທີ່ຈະໃຫ້ການສະໜັບສະໜູນ ແລະ ຊຸກຍູ້ເຈົ້າໜ້າທີ່ ສືບສວນ-ສອບສວນ ເພື່ອນຳໃຊ້ເວລາ, ທັກສະ, ຄວາມພະຍາຍາມ ແລະ ຊັບພະຍາກອນ ເຂົ້າໃນການສືບສວນ-ສອບສວນຄະດີທີ່ມີຄວາມຮ້າຍ ແຮງ ແລະ ຊັບຊ້ອນ, ແທນທີ່ ທີ່ຈະດຳເນີນການຈັບຕົວແບບ ງ່າຍດາຍຕໍ່ກັບຜູ້ທີ່ກະທຳຜິດທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ທີ່ກະທຳຜິດໃນ ລະດັບຕ່ຳ. ຕໍ່ກັບສິ່ງດັ່ງກ່າວນີ້, ເຈົ້າໜ້າທີ່ສືບສວນ-ສອບສວນ ຄວນຈະຄຳນຶງເຖິງ ພັນທະດ້ານບວກຂອງລັດກ່ຽວກັບການສືບສວນ-ສອບສວນ ການຄ້າມະນຸດທີ່ອາດຈະເກີດຂຶ້ນ.

**ກ່ອງຂໍ້ມູນ: ຕົວຢ່າງ (ຄວາມຜິດກ່ຽວກັບເອກະສານ)**

ນາງ A ໄດ້ຖືກຈັດຫາງານໂດຍບໍລິສັດຈັດຫາງານ ເພື່ອໃຫ້ເຮັດວຽກເຮືອນທີ່ຕ່າງປະເທດ. ບໍລິສັດຈັດຫາງານ ໄດ້ຈັດຫາເອກະສານ ເດີນທາງ ແລະ ບັດປະຈຳຕົວທີ່ຈຳເປັນໃຫ້ແກ່ລາວ. ໃນເຮືອນບ່ອນທີ່ລາວເຮັດວຽກຢູ່, ລາວໄດ້ຖືກຂົ່ມເຫັງ ແລະ ມີອາຫານກິນທີ່ບໍ່ ພຽງພໍ. ລາວໄດ້ໄປຂໍການຊ່ວຍເຫຼືອກັບບໍລິສັດຈັດຫາງານ ເຊິ່ງພະນັກງານບໍລິສັດຈັດຫາງານບອກລາວວ່າ ຖ້າລາວບໍ່ກັບໄປຫານາຍຈ້າງ ຕຳຫຼວດຈະຈັບຕົວລາວໃນສະຖານການນຳໃຊ້ເອກະສານປອມ. ນາງ A ຄິດວ່າລາວເຂົ້າປະ ເທດໂດຍຖືກຕ້ອງຕາມກົດໝາຍ ແລະ ໄປຫາສະຖານີຕຳຫຼວດເພື່ອຂໍການຊ່ວຍເຫຼືອ. ເມື່ອລາວເອົາເອກະສານລາວໃຫ້ຕຳ ຫຼວດ, ເຂົາເຈົ້າຈັບຕົວລາວ ໃນສະຖານການນຳໃຊ້ ເອກະສານປອມ ແລະ ກັກຂັງລາວໃນສະຖານທີ່ກວດຄົນເຂົ້າ–ອອກເມືອງ.

*<u>ການນຳໃຊ້ຫຼັກການບໍ່ລົງໂທດ:</u>* ອົງການ NGO ພາຍໃນປະເທດ ຮູ້ກ່ຽວກັບສະຖານະການຂອງນາງ A. ເຂົາເຈົ້າ ກະກຽມ ການຊ່ວຍເຫຼືອ ທາງດ້ານກົດໝາຍຮ່ວມກັບອົງການ NGO ແລະ ທະນາຍຄວາມຂອງນາງ A ເພື່ອຕໍ່ສູ້ໃຫ້ມີການຍົກເລີກຂໍ້ກ່າວຫາຕໍ່ກັບ ນາງ A. ເຂົາເຈົ້າ ຮວບຮວມຫຼັກຖານ ລວມທັງ ເອກະສານການເດີນທາງ ແລະ ບັດປະຈຳຕົວ ທີ່ໄດ້ມີການກະກຽມໄວ້ໃຫ້ ນາງ A – ເຊິ່ງລາວອາດຈະຖືກ ຄ້າມະນຸດ ແລະ ໃຫ້ຂໍ້ມູນແກ່ເຈົ້າໜ້າທີ່ຕຳຫຼວດ ເພື່ອນຳໃຊ້ເຂົ້າໃນການສືບສວນ-ສອບສວນ.

## ສ້າງເຄືອຂ່າຍຂອງຜູ້ປະຕິບັດຕົວຈິງ ເພື່ອສະໜັບສະໜູນການກັ່ນກອງ ແລະ ການກຳນົດຕົວຜູ້ຖືກເຄາະຮ້າຍ

ຜູ້ໃຫ້ການຊ່ວຍເຫຼືອດ້ານສັງຄົມ, ສຸຂະພາບ, ອົງການຈັດຕັ້ງທາງສັງຄົມ, ສະຖາບັນສິດທິມະນຸດແຫ່ງຊາດ ແລະ ພາກສ່ວນທີ່ເປັນລັດ ແລະ ບໍ່ ແມ່ນລັດ ມີບົດບາດສຳຄັນໃນການສະໜັບສະໜູນຜູ້ຖືກເຄາະຮ້າຍ. ໜ່ວຍງານທີ່ເຮັດວຽກຕ້ານການຄ້າມະນຸດ ຄວນສ້າງເຄືອຂ່າຍຜູ້ປະຕິບັດ ຕົວຈິງທີ່ເຂັ້ມແຂງ ເພື່ອໃຫ້ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍທີ່ຕິດຕໍ່ພົວພັນກັບຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຮູ້ວ່າຈະຕິດຕໍ່ ຫາໃຜ ເພື່ອຂໍຄຳແນະນຳ ແລະ ການສະໜັບສະໜູນ, ແລະ ມີຂໍ້ມູນຕິດຕໍ່ທີ່ຖືກຕ້ອງ ໃນກໍລະນີທີ່ເຂົາເຈົ້າກຳນົດຕົວຜູ້ທີ່ອາດຈະເປັນຜູ້ຖືກເຄາະ ຮ້າຍຈາກການຄ້າມະນຸດ. ການນຳໃຊ້ທີມງານສະຫະວິຊາຊີບ ເພື່ອໃຫ້ການສະໜັບສະໜູນຂະບວນການກັ່ນກ່ອງ ແລະ ການກຳນົດຕົວສາມາດ

74 ຄຳແນະນຳກ່ຽວກັບບັນຫາການຕອບໂຕ້ຄວາມຍຸຕິທຳທາງອາຍາທີ່ເໝາະສົມຕໍ່ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດ ຍ້ອນຖືກຄ້າມະນຸດ: ເອກະສານຄວາມເປັນມາ ກະກຽມໂດຍ ກອງ ເລຂາ ຄະນະປະຕິບັດງານຕ້ານການຄ້າມະນຸດ, ວຽນນາ ວັນທີ 10 ແລະ 11 ກັນຍາ 2020, UN Doc. CTOC/COP/WG.4/2020/2 (ວັນທີ 15 ມິຖຸນາ 2020), ວັກທີ 40–42.

75 ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, Maria Grazia Giammarinaroວັນທີ 6 ເມສາ 2020, UN Doc A/HRC/44/45 ວັກ ທີ 29

76 Marcelo Colombo, ຫົວໜ້າໄອຍະການ, ສຳນັກງານພິເສດສຳລັບການສືບສວນຄະດີການລັກພາຕົວ ແລະ ການຄ້າມະນຸດ (PROTEX), ປະເທດອາເຈນຕິນາ ໄດ້ກ່າວເຖິງຫຼັກການບໍ່ ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊິ່ງເປັນກອງປະຊຸມຄູ່ຂະໜານ ຂອງສະພາສິດທິມະນຸດ ຄັ້ງທີ 47, ວັນທີ 30 ມິຖຸນາ 2021, 3:00 – 14:30 CET.

ເຮັດໃຫ້ມີປະສິດທິພາບດ້ວຍການຮັບປະກັນວ່າ ມີການນຳໃຊ້ຫຼັກການບໍ່ລົງໂທດ ຕໍ່ກັບຜູ້ຖືກສົມມຸດ ຖານວ່າເປັນຜູ້ຖືກເຄາະຮ້າຍ ໃນຕະຫຼອດໄລຍະຂັ້ນຕອນຂອງການກຳນົດຕົວ. ເຄືອຂ່າຍຜູ້ປະຕິບັດຕົວຈິງທີ່ກວ້າງຂວາງ ຈຳເປັນຕ້ອງມີການປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຈາກຄວາມສ່ຽງທີ່ເຂົາເຈົ້າໄດ້ພົບ ໂດຍສະເພາະ ກໍລະນີທີ່ເຂົາເຈົ້າຕົກເປັນຜູ້ຖືກເຄາະຮ້າຍຈາກອາຊະຍາກຳທີ່ມີການຈັດຕັ້ງ.

ສຳຄັນໄປກວ່ານັ້ນ, ເມື່ອເວລາທີ່ມີການດຳເນີນການບັງຄັບໃຊ້ກົດໝາຍ ບໍ່ວ່າຈະຢູ່ໃນບ່ອນທີ່ມີການສໍ້ໂກງທາງໂທລະຄົມ ຫຼື ບ່ອນທີ່ມີບຸກຄົນທີ່ອາດຈະຖືກຄ້າມະນຸດເຊັ່ນ: ຂົງເຂດກະສິກຳ, ອຸດສາຫະກຳອາຫານທະເລ, ຫຼື ອຸດສາຫະກຳດ້ານເພດ, ຄວນມີການວາງແຜນທີ່ລະອຽດ ແລະ ພິເສດເພື່ອກຳນົດບຸກຄົນທີ່ຈະຮັບຜິດຊອບ ໃນການກຳນົດຕົວບຸກຄົນທີ່ພົບເຫັນເຊິ່ງອາດຈະເປັນຜູ້ຖືກເຄາະຮ້າຍ ແລະ ບຸກຄົນທີ່ຮັບຜິດຊອບໃນການປົກປ້ອງ ແລະ ຊ່ວຍເຫຼືອເຂົາເຈົ້າ. ທັດສະນະມຸມມອງຂອງເຈົ້າໜ້າທີ່ ທີ່ໄດ້ຮັບການຝຶກອົບຮົມການກຳນົດຕົວຜູ້ຖືກເຄາະຮ້າຍ ຄວນມີມຸມມອງທີ່ເໜືອກວ່າ ທັດສະນະມຸມມອງຂອງພາກສ່ວນ ອື່ນໃນການກຳນົດຕົວຜູ້ຖືກເຄາະຮ້າຍ.

## ລຶບລ້າງສິ່ງທີ່ບໍ່ສ້າງແຮງຈູງໃຈ ແລະ ສ້າງແຮງຈູງໃຈ ໃນການນຳໃຊ້ຫຼັກການບໍ່ລົງໂທດ

ໃນເວລາທີ່ມີການວັດແທກການປະຕິບັດງານຂອງເຈົ້າໜ້າທີ່ຕຳຫຼວດ ແມ່ນວັດແທກດ້ວຍຈຳນວນຂອງການຈັບຕົວ ແລະ ການຕັ້ງຂໍ້ກ່າວຫາ, ເຈົ້າໜ້າທີ່ ອາດຈະບໍ່ມີແຮງຈູງໃຈໃນການນຳໃຊ້ຫຼັກການບໍ່ລົງໂທດ ຕໍ່ກັບຜູ້ທີ່ອາດຈະເປັນຜູ້ຖືກເຄາະ ຮ້າຍ ທີ່ເຂົາເຈົ້າພົບເຫັນໃນຖານະຜູ້ກະທຳຜິດ. ຄວນມີການພິຈາລະນາວ່າ ເຈົ້າໜ້າທີ່ຕຳຫຼວດ ຈະມີການນຳໃຊ້ແຮງຈູງໃຈ ແນວໃດ ຕໍ່ກັບການນຳໃຊ້ຫຼັກການບໍ່ລົງໂທດ ລວມທັງ ການວັດແທກການປະຕິບັດງານ ເພື່ອສະທ້ອນໃຫ້ເຫັນເຖິງການ ນຳໃຊ້ຫຼັກການທີ່ເໝາະສົມຂອງເຂົາເຈົ້າໃນພາກປະຕິບັດຕົວຈິງ. ຕົວຢ່າງ ການສົ່ງຕໍ່ບຸກຄົນ ຜູ້ທີ່ຖືກຢືນຢັນ ວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະນຳໃຊ້ເປັນມາດຕະການທາງບວກຕໍ່ກັບການວັດແທກຜົນການປະຕິບັດງານຂອງເຈົ້າໜ້າທີ່ຕຳຫຼວດ.

ຄວນມີການນຳໃຊ້ມາດຕະການ ເພື່ອຮັບປະກັນວ່າເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ທີ່ບໍ່ໄດ້ມີການຈັບຕົວ ແລະ ຕັ້ງຂໍ້ກ່າວຫາ ຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບົນພື້ນຖານຫຼັກການບໍ່ລົງໂທດ ຕ້ອງບໍ່ມີຄວາມຮັບຜິດຊອບຕໍ່ການກ່າວຫາ ການປະລະໜ້າທີ່ຂອງເຂົາເຈົ້າ, ແຕ່ຕ້ອງໄດ້ຮັບການຍ້ອງຍໍຕໍ່ກັບການນຳໃຊ້ຫຼັກການບໍ່ລົງໂທດ. ແຮງຈູງໃຈດັ່ງກ່າວຄວນ ໄດ້ຮັບການອອກແບບ ໂດຍບໍ່ເປັນການຫຼຸດຮອນພັນທະອັນກວ້າງຂວາງຂອງເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຕໍ່ກັບການສືບສວນ-ສອບສວນ ແລະ ຈັບຕົວຜູ້ກະທຳຜິດທາງອາຍາ. ຄວນມີການພິຈາລະນາໃຫ້ລາງວັນແກ່ເຈົ້າໜ້າທີ່ ທີ່ມີຫຼັກຖານ ເພື່ອເອົາຜິດອາຊະຍາກອນ ລວມທັງ ການນຳໃຊ້ທັກສະທີ່ດີ ໃນການສືບສວນ-ສອບສວນຜູ້ກະທຳຜິດ ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ແລະ ພະຍານໃນຄະດີຄ້າມະນຸດ ແລະ ອາຊະຍາກຳທີ່ມີການຈັດຕັ້ງທີ່ຮ້າຍແຮງອື່ນໆ.

## ຮັບປະກັນວ່າເຈົ້າໜ້າທີ່ຮູ້ວິທີການສົ່ງຕໍ່ຜູ້ຖືກເຄາະຮ້າຍເຂົ້າສູ່ຊ່ອງທາງການປົກປ້ອງ

ລັດຈຳເປັນຕ້ອງມີກົນໄກ ແລະ ຂັ້ນຕອນເພື່ອຮັບປະກັນວ່າ ຕຳຫຼວດ, ເຈົ້າໜ້າທີ່ກວດຄົນເຂົ້າ–ອອກເມືອງ ແລະ ເຈົ້າໜ້າທີ່ດ້ານແຮງງານ ທີ່ພົບເຫັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສາມາດສົ່ງຕໍ່ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ເຂົ້າສູ່ກົນໄກການສົ່ງຕໍ່ແຫ່ງຊາດໄດ້ທັນທີ ຕາມທີ່ກຳນົດໄວ້ໃນມາດຕາ 14(1).[77] ຊ່ອງທາງການປົກປ້ອງດັ່ງກ່າວ ຕ້ອງມີຄວາມເໝາະສົມໃນການປົກປ້ອງສິດທິມະນຸດຂອງຜູ້ຖືກເຄາະຮ້າຍ ລວມທັງຄຳນຶງເຖິງອາຍຸ ແລະ ເພດພາວະ, ການຮັບຮູ້ເຖິງຄວາມບອບຊ້ຳດ້ານຈິດໃຈ ແລະ ບໍ່ມີການຈຳແນກໃດໆ.

ກໍລະນີທີ່ກົນໄກການສົ່ງຕໍ່ແຫ່ງຊາດ ຍັງບໍ່ໄດ້ຖືກນຳໃຊ້ຢ່າງມີປະສິດທິພາບ ແລະ ບໍ່ຖືກນຳໃຊ້ເພື່ອປ້ອງກັນຜູ້ຖືກເຄາະຮ້າຍຈາກການລົງໂທດ, ອຸປະສັກຕໍ່ກັບຄວາມຈຳເປັນໃນການປົກປ້ອງ ຕ້ອງໄດ້ຮັບການກຳນົດຂຶ້ນ ແລະ ແກ້ໄຂ ບໍ່ວ່າຈະເປັນການເຜີຍແຜ່ຂໍ້ມູນ, ຈັດຝຶກອົບຮົມດ້ານທັກສະຕ່າງໆ ແລະ ມາດຕະການອື່ນໆ. ບຸກຄົນທີ່ ຕິດຕໍ່ພົວພັນກັບຜູ້ຖືກເຄາະຮ້າຍ ຄວນມີຂໍ້ມູນຂອງພາກສ່ວນທີ່ກ່ຽວຂ້ອງເພື່ອໃຊ້ໃນການຕິດຕໍ່ຫາ ໃນກໍລະນີທີ່ພົບເຫັນຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງ ອົງການທີ່ໃຫ້ການປົກປ້ອງເດັກ ກໍລະນີທີ່ຜູ້ຖືກເຄາະຮ້າຍຍັງເປັນເຍົາວະຊົນ.

ກໍລະນີຜູ້ກະທຳຜິດທີ່ເປັນເດັກ ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ເຈົ້າໜ້າທີ່ດ່ານໜ້າ ຄວນສົມທົບກັບ ໜ່ວຍງານທີ່ໃຫ້ການປົກປ້ອງເດັກ ໃນເບື້ອງຕົ້ນເທົ່າທີ່ຈະເປັນໄປໄດ້. ການສັນນິຖານວ່າເປັນຄົນໜຸ່ມນ້ອຍ ຄວນມີການ ປະຕິບັດຕໍ່ກັບເຂົາເຈົ້າໃນຖານະທີ່ອາດຈະເປັນເດັກ ຖ້າຫາກຍັງບໍ່ມີຫຼັກຖານທີ່ພິສູດເລື່ອງອາຍຸ. ເດັກ ທີ່ມີບັນຫາຂໍ້ຂັດແຍ່ງ ທາງດ້ານກົດໝາຍ ລວມທັງອາຊະຍາກຳທີ່ຮ້າຍແຮງ ທີ່ຢູ່ໃນບໍລິບົດຂອງກຸ່ມກໍ່ການຮ້າຍ ຫຼື ກຸ່ມປະກອບອາວຸດ, ຄວນໄດ້ຮັບຜົນປະໂຫຍດຈາກຫຼັກການບໍ່ລົງໂທດ ແລະ ຄວນຖືກຮັບຮູ້ໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ໃນຖານະຜູ້ຖືກເຄາະຮ້າຍຈາກການລະເມີດສິດທິມະນຸດ ແລະ ກົດໝາຍດ້ານມະນຸດສະທຳ ຢ່າງຮ້າຍແຮງ.

77 ມາດຕາ 14(1) ຂອງສົນທິສັນຍາ ACTIP ກຳນົດວ່າ "ແຕ່ລະລັດພາຄີຕ້ອງສ້າງຂັ້ນຕອນ ຫຼື ຄຳແນະນຳລະດັບຊາດ ສຳລັບການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢ່າງເໝາະສົມ ແລະ ໃນກໍລະນີທີ່ເໝາະສົມ ອາດຈະຮ່ວມມືກັບ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ເປັນອົງການໃຫ້ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ"

ການຟື້ນຟູ, ການກັບຄືນສູ່ສັງຄົມ ແລະ ຮອມຕົວກັນຂອງເຂົາເຈົ້າຄວນຖືເປັນບູລິມະສິດ.[78] ອາຍຸທີ່ມີຄວາມຮັບຜິດຊອບທາງອາຍາ ຍັງກ່ຽວຂ້ອງກັບການປະຕິບັດຕໍ່ເດັກ ທີ່ເຂົ້າຮ່ວມກັບການກະທຳທີ່ຜິດກົດໝາຍ ໃນກໍລະນີທີ່ຖືກຄ້າມະນຸດ ແລະ ອາດຕ້ອງໄດ້ຮັບການເບິ່ງແຍງລ້ຽງດູ.[79]

### ຄຳແນະນຳຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ

ການຮັບຮູ້ວ່າການຄ້າມະນຸດແມ່ນການລະເມີດສິດທິມະນຸດຢ່າງຮ້າຍແຮງ, ການນຳໃຊ້ຫຼັກການບໍ່ລົງໂທດ ບໍ່ຄວນເປັນເງື່ອນໄຂໃນການກຳນົດຕົວຜູ້ຖືກເຄາະຮ້າຍຢ່າງເປັນທາງການ ຫຼື ການດຳເນີນຄະດີຕໍ່ຜູ້ຖືກຫາ ທີ່ເປັນຜູ້ຄ້າມະນຸດ. ການນຳໃຊ້ຫຼັກການບໍ່ລົງໂທດ ບໍ່ຄວນເປັນເງື່ອນໄຂ ຂອງຜູ້ຖືກເຄາະຮ້າຍທີ່ຈະຮ່ວມມືໃນການດຳເນີນຄະດີທາງອາຍາ.

ເພື່ອຮັບປະກັນໃຫ້ມີຄວາມສອດຄ່ອງກັບຫຼັກການບໍ່ລົງໂທດ, ຜູ້ທີ່ຖືກສັນນິຖານ ຫຼື ຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍທຸກຄົນ ຕ້ອງຖືກໂຍກຍ້າຍອອກຈາກສະຖານທີ່ກັກຂັງ ຫຼື ໃນສະຖານະການໃດໜຶ່ງທີ່ເປັນການຈຳກັດເສລີພາບ ໂດຍທັນທີ ແລະ ຕ້ອງໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອ.

ຫຼັກການການບໍ່ລົງໂທດ ຕ້ອງໄດ້ຖືກນຳໃຊ້ໂດຍປາສະຈາກການຈຳແນກ ຕໍ່ກັບຜູ້ຖືກເຄາະຮ້າຍທຸກຄົນ ລວມທັງ ບຸກຄົນທີ່ຖືກຄ້າມະນຸດ ທີ່ຊອກຫາການລີ້ໄພ ຫຼື ຮູບແບບອື່ນໆຂອງການປົກປ້ອງລະຫວ່າງປະເທດ.[80]

## [6] ຮັບປະກັນວ່າເຈົ້າໜ້າທີ່ ທີ່ມີໜ້າທີ່ຈັບຕົວ ປະຕິບັດໜ້າທີ່ຂອງຕົນໃນການຈັບຕົວບຸກຄົນ

ການຈັບຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະຂັດກັບວິທີການເອົາຜູ້ຖືກເຄາະຮ້າຍເປັນໃຈກາງ ຕໍ່ກັບການ ຄ້າມະນຸດ ແລະ ພັນທະຂອງລັດໃນການປົກປ້ອງຜູ້ຖືກເຄາະຮ້າຍ. ເຖິງຢ່າງໃດກໍຕາມ, ໃນກໍລະນີອື່ນໆນັ້ນ ເຊິ່ງອາດຈະມີຄວາມເໝາະສົມທີ່ຈະຈັບຕົວ ຜູ້ຖືກເຄາະຮ້າຍ–ຜູ້ກະທຳຜິດ ຕໍ່ກັບການກະທຳທີ່ຜິດກົດໝາຍ ທີ່ບໍ່ກ່ຽວຂ້ອງ ໂດຍກົງກັບການຖືກຄ້າມະນຸດນັ້ນ. ໃນເວລາທີ່ເຈົ້າໜ້າທີ່ທີ່ມີໜ້າທີ່ຈັບຕົວ ເລືອກທີ່ຈະຈັບຕົວ ບຸກຄົນທີ່ອາດຈະເປັນ ຜູ້ຖືກເຄາະຮ້າຍ, ເຊິ່ງເປັນສິ່ງສຳຄັນທີ່ເຂົາເຈົ້າໄດ້ປະຕິບັດໜ້າທີ່ຂອງຕົນ – ລວມທັງພັນທະພື້ນຖານດ້ານສິດທິມະນຸດ – ຕໍ່ກັບບຸກຄົນທີ່ເຂົາເຈົ້າໄດ້ຈັບຕົວ, ເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ກັບໄພອັນຕະລາຍເພີ່ມເຕີມ.

### ສ້າງຄວາມຮັບຮູ້ໃຫ້ແກ່ເຈົ້າໜ້າທີ່ດ່ານໜ້າກ່ຽວກັບກັບຜົນກະທົບຂອງການຈັບຕົວຜູ້ຖືກເຄາະຮ້າຍ

ເຈົ້າໜ້າທີ່ດ່ານໜ້າ ຕ້ອງຄຳນຶງເຖິງຜົນກະທົບໃນການຈັບຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງ ການເປັນຜູ້ຖືກເຄາະຮ້າຍຊ້ຳຄືນອີກຈາກການກະທຳຂອງລັດ ແລະ ຄວາມອັບອາຍໃນການຖືກຈັບຕົວ, ການຖ່າຍຮູບ, ການພິມລາຍນີ້ວມື, ການໃສ່ກັບມື ແລະ ບາງຄັ້ງຍັງຖືກບັງຄັບໃຫ້ມີການກວດສຸຂະພາບໂດຍບໍ່ໄດ້ຮັບການຍິນຍອມ. ເຂົາເຈົ້າ ຕ້ອງເຂົ້າໃຈວ່າການຈັບຕົວຈະເປັນຄວາມລັງກຽດແນວໃດຕໍ່ກັບຜູ້ຖືກເຄາະຮ້າຍ ແລະ ຍັງຂັດຂວາງການຟື້ນຟູ ແລະ ການກັບຄືນສູ່ສັງຄົມ ພາຍຫຼັງທີ່ຖືກຄ້າມະນຸດອີກ.

ນອກນັ້ນ, ເຈົ້າໜ້າທີ່ດ່ານໜ້າ ຕ້ອງຮັບຮູ້ວ່າການຈັບຕົວຜູ້ຖືກເຄາະຮ້າຍ ເປັນໄພອັນຕະລາຍຕໍ່ການຕອບໂຕ້ດ້ານຍຸຕິທຳທາງອາຍາແນວໃດ ໃນວຽກງານຄ້າມະນຸດ. ກໍລະນີທີ່ ເຈົ້າໜ້າທີ່ສືບສວນ-ສອບສວນ ບໍ່ໄດ້ມີການສືບສວນ-ສອບສວນການຄ້າມະນຸດຢ່າງຕັ້ງໜ້າ, ຜູ້ຖືກເຄາະຮ້າຍອາດຈະເປັນບຸກຄົນສຳຄັນ ຫຼື ເປັນຫຼັກຖານດຽວໃນຄະດີຄ້າມະນຸດ. ກໍລະນີທີ່ ຜູ້ຖືກເຄາະຮ້າຍ ສູນເສຍຄວາມໄວ້ໃຈຕໍ່ເຈົ້າໜ້າທີ່ແລ້ວ, ເຂົາເຈົ້າອາດຈະບໍ່ໃຫ້ການຮ່ວມມືໃນຂະບວນຍຸຕິທຳທາງອາຍາ ເພື່ອເອົາຜິດຕໍ່ກັບຜູ້ຄ້າມະນຸດ.

78 ເບິ່ງທີ່ມະຕິສະພາຄວາມໝັ້ນຄົງ ເລກທີ 2388 (2017)

79 ເບິ່ງຄູ່ມືແນະນຳ 2.

80 ແຫຼ່ງຂໍ້ມູນ: ບົດລາຍງານການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, Siobhán Mullaly, UN Doc. A/HRC/47/34, ວັນທີ 17 ພຶດສະພາ 2021, [58-60]

### ຮັບປະກັນວ່າ ເຈົ້າໜ້າທີ່ ທີ່ມີໜ້າທີ່ຈັບຕົວ ຍຶດໝັ້ນຕໍ່ກັບສິດໃນການເຂົ້າເຖິງຂໍ້ມູນຂອງຜູ້ທີ່ຖືກຈັບຕົວ

ລັດມີພັນທະຕໍ່ກັບບຸກຄົນທີ່ເຂົາເຈົ້າໄດ້ຈັບຕົວ. ການປະຕິບັດຕາມພັນທະດັ່ງກ່າວມີຄວາມສຳຄັນ ເພື່ອຮັບປະກັນວ່າ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຖືກຈັບຕົວນັ້ນ ໄດ້ຮັບຄຳແນະນຳ ແລະ ການສະໜັບສະໜູນທີ່ເໝາະສົມຈາກ ເຈົ້າໜ້າທີ່ ເພື່ອຫຼີກລ້ຽງການລົງໂທດເພີ່ມເຕີມຈາກອາຊະຍາກຳທີ່ເຂົາເຈົ້າໄດ້ກະທຳ ທີ່ເປັນຜົນສະທ້ອນຈາກການຖືກຄ້າ ມະນຸດ. ລັດຕ້ອງໄດ້ປະຕິບັດໜ້າທີ່ ເພື່ອຮັບປະກັນວ່າເຈົ້າໜ້າທີ່ມີຄວາມສາມາດພຽງພໍ ໃນການປະຕິບັດພັນທະຕາມ ສິດທິມະນຸດຕໍ່ກັບບຸກຄົນທີ່ຖືກຈັບຕົວ. ສຳຄັນກວ່ານັ້ນ, ຜູ້ທີ່ຖືກຈັບຕົວ – ລວມທັງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ – ມີສິດໄດ້ຮັບການແຈ້ງເຫດຜົນທີ່ເຂົາເຈົ້າຖືກຈັບຕົວ ແລະ ການຕັ້ງຂໍ້ກ່າວຫາແກ່ເຂົາເຈົ້າ ແລະ ຖືກນຳຕົວໄປຕໍ່ໜ້າສານ ຫຼື ເຈົ້າໜ້າທີ່ອື່ນໆ ໂດຍທັນທີ.[81]

ມາດຕາ 36 ຂອງສົນທິສັນຍາວຽນນາວ່າດ້ວຍການພົວພັນຂອງກົງສູນ ຮຽກຮ້ອງໃຫ້ຄົນຕ່າງປະເທດ ທີ່ຖືກຈັບຕົວ ຫຼື ຖືກກັກຂັງ ໄດ້ຮັບຂໍ້ມູນກ່ຽວກັບສິດຂອງຕົນ ໃນການແຈ້ງໃຫ້ສະຖານທູດຂອງຕົນຊາບ ເພື່ອໃຫ້ເຂົາເຈົ້າສາມາດໄດ້ຮັບຄຳແນະນຳ ແລະ ການສະໜັບສະໜູນຈາກກົງສູນ. ເຂົາເຈົ້າ ຄວນຖືກແຈ້ງໃຫ້ຊາບກ່ຽວກັບສິດໃນການເຂົ້າເຖິງໜ່ວຍງານຜູ້ຕາງໜ້າກົງສູນ ແລະຜູ້ຕາງໜ້າທູດ ທີ່ເປັນລັດຂອງສັນຊາດຕົນ, ໂດຍຮັບຮູ້ວ່າ ຜູ້ອົບພະຍົບ ຫຼື ຜູ້ຂໍລີ້ໄພ ອາດຈະບໍ່ຕ້ອງການຕິດຕໍ່ ຫຼື ແບ່ງປັນ ຂໍ້ມູນໃຫ້ກັບໜ່ວຍງານຕາງໜ້າຂອງລັດ. ວິທີການນີ້ ແມ່ນສອດຄ່ອງກັບມາດຕາ 14(3) ຂອງສົນທິສັນຍາ ACTIP ເຊິ່ງກຳນົດ ໄວ້ວ່າ ການກຳນົດຕົວ ຄວນແຈ້ງໄປຍັງປະເທດທີ່ສົ່ງ ໂດຍບໍ່ມີເຫດຜົນອັນສົມຄວນທີ່ຈະເຮັດໃຫ້ມີຄວາມຊັກຊ້າ "ເວັ້ນແຕ່ ຜູ້ຖືກເຄາະຮ້າຍຈະແຈ້ງເປັນຢ່າງອື່ນ".

## [7] Recognise victim status of persons identified in other ASEAN Member States

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ໄດ້ຮັບການກຳນົດຕົວໃນບັນດາປະເທດສະມາຊິກອາຊຽນໃດໜຶ່ງ ສະຖານະຂອງເຂົາ ເຈົ້າ ຄວນຖືກຮັບຮູ້ໃນປະເທດອື່ນໃນພາກພື້ນ ໂດຍສອດຄ່ອງກັບ ມາດຕາ 14(2) ຂອງສົນທິສັນຍາ ACTIP:

> ໃນກໍລະນີ ທີ່ມີການຄ້າມະນຸດເກີດຂຶ້ນໃນຫຼາຍກວ່າໜຶ່ງປະເທດ, ແຕ່ລະລັດພາຄີ ຄວນເຄົາລົບ ແລະ ຮັບຮູ້ການກຳນົດຕົວຂອງຜູ້ຖືກເຄາະຮ້າຍ ທີ່ໄດ້ກຳນົດຕົວໂດຍ ເຈົ້າໜ້າທີ່ຂອງປະເທດຜູ້ຮັບ.

ກໍລະນີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ບໍ່ຖືກຮັບຮູ້ ໃນຂອບເຂດອຳນາດຂອງປະເທດອື່ນ, ເຊິ່ງມີຄວາມສ່ຽງທີ່ຜູ້ຖືກ ເຄາະຮ້າຍ ທີ່ໄດ້ຮັບການປົກປ້ອງຈາກປະເທດໜຶ່ງ ແຕ່ຈະຖືກລົງໂທດໃນປະເທດອື່ນ.

### ຄົ້ນຄ້ວາປັບປຸງຂໍ້ຕົກລົງສອງຝ່າຍທີ່ມີຢູ່ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການນຳໃຊ້ຫຼັກການບໍ່ລົງໂທດ

ບົດບັນທຶກຄວາມເຂົ້າໃຈ (MOUs) ແລະ ຂໍ້ຕົກລົງສອງຝ່າຍຫຼາຍສະບັບ ລະຫວ່າງບັນດາປະເທດສະມາຊິກອາຊຽນ ທີ່ປະກອບມີ ຂໍ້ກຳນົດການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄວ້ຢ່າງຈະແຈ້ງ (ເບິ່ງທີ່ເອກະສານຊ້ອນທ້າຍ 3). ເຖິງຢ່າງໃດກໍຕາມ, ບາງຂໍ້ກຳນົດແມ່ນນຳໃຊ້ສະເພາະບາງການກະທຳຜິດເທົ່ານັ້ນ (ຕົວຢ່າງ ຄວາມຜິດກ່ຽວກັບການເຂົ້າ–ອອກເມືອງ ແລະ ການເປັນໂສເພນີ). ບາງຂໍ້ກຳນົດກໍມີການຈຳແນກ ການນຳໃຊ້ຫຼັກການດັ່ງກ່າວ ຕໍ່ຜູ້ຖືກເຄາະຮ້າຍບາງຄົນ (ຕົວຢ່າງ ແມ່ຍິງ ແລະ ເດັກ) ແຕ່ບໍ່ຈຳແນກຜູ້ຖືກເຄາະຮ້າຍອື່ນໆ (ຕົວຢ່າງ ຜູ້ຊາຍ).

ລັດ ຄວນພິຈາລະນາ ປັບປຸງຂໍ້ຕົກລົງສອງຝ່າຍ ເພື່ອໃຫ້ກວມເອົາຫຼັກການບໍ່ລົງໂທດ ເພື່ອໃຫ້ສອດຄ່ອງກັບ ກົດໝາຍພາຍໃນ ແລະ ສາກົນ, ເພື່ອຮັບປະກັນວ່າ:

a) ການຄ້າມະນຸດ ແມ່ນມີຄວາມເຂົ້າໃຈວ່າມັນສອດຄ່ອງກັບຄຳນິຍາມຂອງພາກພື້ນ ແລະ ສາກົນ ໃນຈຸດປະສົງຂອງຂໍ້ຕົກລົງສອງຝ່າຍ, ສະນັ້ນຄຳນິຍາມໃດໜຶ່ງທີ່ມີຄວາມແຕກຕ່າງກັນໃນກົດໝາຍພາຍໃນ ຈະໄດ້ຮັບການປັບປຸງໃຫ້ສອດຄ່ອງກັນກັນ ເພື່ອຈຸດປະສົງຂອງການກຳນົດຕົວ;
b) ຂໍ້ກຳນົດຫຼັກການບໍ່ລົງໂທດ ແມ່ນບໍ່ມີການຈຳແນກໃດໆ ເພື່ອໃຫ້ເຂົາເຈົ້າສາມາດນຳໃຊ້ກັບຜູ້ຖືກເຄາະຮ້າຍທຸກຄົນ ໂດຍບໍ່ກ່ຽວຂ້ອງກັບ ອາຍຸ, ເພດ, ສັນຊາດ ແລະ ສະຖານະອື່ນໆຂອງເຂົາເຈົ້າ
c) ຂອບເຂດຂອງຫຼັກການບໍ່ລົງໂທດ ນຳໃຊ້ໂດຍບໍ່ມີຂໍ້ຈຳກັດ ແຕ່ຍັງນຳໃຊ້ກັບການກະທຳທີ່ຜິດກົດໝາຍໃດໜຶ່ງ ຫຼື ການກະທຳຜິດກົດໝາຍທັງໝົດ ຫຼື ຄວາມຜິດທີ່ຜູ້ຖືກເຄາະຮ້າຍທີ່ອາດຈະມີສ່ວນກ່ຽວຂ້ອງ ເຊິ່ງເປັນຜົນໂດຍກົງຈາກການຖືກຄ້າມະນຸດ.

81 ມາດຕາ 9(2) ສົນທິສັນຍາສາກົນວ່າດ້ວຍສິດທິຂອງພົນລະເຮືອນ ແລະ ສິດທິທາງການເມືອງ

ໃນກໍລະນີທີ່ບໍ່ມີຂໍ້ຕົກລົງສອງຝ່າຍທີ່ພຽງພໍ, ບັນດາປະເທດສະມາຊິກອາຊຽນຄວນພິຈາລະນານໍາໃຊ້ສົນທິສັນຍາ ACTIP ເຊິ່ງເປັນພື້ນຖານໃນການຮັບຮູ້ເຊິ່ງກັນ ແລະ ກັນກ່ຽວກັບສະຖານະຂອງຜູ້ຖືກເຄາະຮ້າຍ ຫຼື ສົນທິສັນຍາ UNTOC ແລະ ອານຸສັນຍາເພີ່ມເຕີມໃຫ້ແກ່ການຄ້າມະນຸດ ທີ່ກ່ຽວຂ້ອງກັບປະເທດຕົ້ນທາງ, ປະເທດທາງຜ່ານ ແລະ/ຫຼື ປະເທດປາຍທາງຂອງການຄ້າມະນຸດ ທີ່ນອກເໜືອຈາກພາກພື້ນອາຊຽນ.

## ຈັດຕັ້ງປະຕິບັດຂໍ້ຕົກລົງທີ່ມີຢູ່ ທີ່ກ່ຽວຂ້ອງກັບຫຼັກການບໍ່ລົງໂທດ

ເຈົ້າໜ້າທີ່ຕ້ານການຄ້າມະນຸດໃນບັນດາປະເທດສະມາຊິກອາຊຽນ ຕ້ອງສ້າງຄວາມຮັບຮູ້ໃຫ້ແກ່ຜູ້ປະຕິບັດຕົວຈິງ ຕໍ່ກັບຂໍ້ຕົກລົງສອງຝ່າຍ ທີ່ປະກອບມີຂໍ້ກໍານົດກ່ຽວກັບຫຼັກການບໍ່ລົງໂທດ (ລວມທັງ ຂໍ້ກໍານົດໄວ້ໃນເອກະສານຊ້ອນທ້າຍ 3). ເຂົາເຈົ້າຄວນຈະສະໜັບສະໜູນຜູ້ປະຕິບັດຕົວຈິງດ້ານຍຸຕິທໍາທາງອາຍາ ໃຫ້ນໍາໃຊ້ຫຼັກການເຫຼົ່ານີ້ ເພື່ອຍົກເລີກບໍ່ໃຫ້ຕັ້ງຂໍ້ກ່າວຫາແກ່ຜູ້ຖືກເຄາະຮ້າຍ; ຮັບຮູ້ສະຖານະຂອງຜູ້ຖືກເຄາະຮ້າຍ ທີ່ໄດ້ຮັບການກໍານົດຕົວໃນປະເທດອື່ນ; ແລະ/ຫຼື ນໍາໃຊ້ຂໍ້ຕົກລົງສອງຝ່າຍ ເພື່ອສະໜັບສະໜູນຫຼັກການບໍ່ລົງໂທດ. ຜູ້ທີ່ເຮັດວຽກຕ້ານການຄ້າມະນຸດ ຄວນນໍາເອົາການປະຕິບັດໃນຂອບເຂດດັ່ງກ່າວ ເພື່ອສ້າງຄວາມເຂົ້າໃຈວ່າເປັນຫຍັງຂໍ້ຕົກລົງສອງຝ່າຍທີ່ກ່ຽວຂ້ອງກັບຫຼັກການບໍ່ລົງໂທດ ບໍ່ໄດ້ຮັບການຈັດຕັ້ງປະຕິບັດໃນພາກປະຕິບັດຕົວຈິງ ແລະ ຄວນນໍາໃຊ້ມາດຕະການ ເພື່ອແກ້ໄຂສິ່ງທ້າທາຍຕ່າງໆ ທີ່ກໍານົດໄວ້ໃນກົດໝາຍ, ນະໂຍບາຍ ແລະ ພາກປະຕິບັດຕົວຈິງ.

ພາກທີ 4



# ການນຳໃຊ້ຫຼັກການບໍ່ລົງໂທດ ໃນເວລາຜູ້ຖືກເຄາະຮ້າຍເຂົ້າສູ່ ການພິຈາລະນາຄະດີ

## ພາກທີ 4: ການນຳໃຊ້ຫຼັກການບໍ່ລົງໂທດ ໃນເວລາຜູ້ຖືກເຄາະຮ້າຍເຂົ້າສູ່ການພິຈາລະນາຄະດີ

ເມື່ອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດບໍ່ໄດ້ຖືກກຳນົດຕົວ ເຂົາເຈົ້າມີຄວາມສ່ຽງຖືກດຳເນີນຄະດີ ໃນຄວາມຜິດ ທີ່ໄດ້ກະທຳໃນເວລາທີ່ຖືກຄ້າມະນຸດ. ໃນສະຖານະການອື່ນໆ, ຜູ້ຖືກເຄາະຮ້າຍຖືກກຳນົດຕົວ ແຕ່ຍັງຕັດສິນໃຈດຳເນີນຄະດີເຂົາເຈົ້າ. ໃນທັງສອງກໍລະນີ ຄວາມຮັບຜິດຊອບໃນການນຳໃຊ້ຫຼັກການບໍ່ລົງໂທດແມ່ນຂຶ້ນຢູ່ກັບຜູ້ປະຕິບັດຕົວຈິງ ດ້ານຄວາມຍຸຕິທຳທາງອາຍາ ເຊິ່ງເປັນຜູ້ທີ່ກຳລັງດຳເນີນຄະດີ ຫຼື ປົກປ້ອງຜູ້ຖືກເຄາະຮ້າຍທີ່ກະທຳຜິດ ແລະ ຕ້ອງປົກປ້ອງ ສິດໃນການພິຈາລະນາຄະດີຢ່າງເປັນທຳ.[82]

ຜູ້ປະຕິບັດຕົວຈິງ ໄດ້ຮັບການສະໜັບສະໜູນໃນການປະຕິບັດພັນທະໜ້າທີ່ຂອງຕົນ ເຊິ່ງກົດໝາຍພາຍໃນຂອງເຂົາເຈົ້າ ໄດ້ກວມເອົາຫຼັກການບໍ່ລົງໂທດ ແລະ ບໍ່ໄດ້ຈຳກັດສະເພາະການກະທຳຜິດບາງຢ່າງເທົ່ານັ້ນ (ເບິ່ງຄຳແນະນຳ ທີ 1). ເຖິງຢ່າງໃດກໍ່ຕາມ, ບັນດາປະເທດສະມາຊິກອາຊຽນແມ່ນຢູ່ໃນຂັ້ນຕອນທີ່ແຕກຕ່າງກັນ ໃນການນຳເອົານິຕິກຳຂອງຕົນ ໄປປະຕິບັດໃຫ້ສອດຄ່ອງກັບພັນທະພາກພື້ນ ແລະ ສາກົນ. ໃນຊ່ວງໄລຍະເວລາທີ່ຫຼັກການບໍ່ລົງໂທດ ຍັງບໍ່ມີຄວາມຊັດເຈນ ຫຼື ໃນກໍລະນີທີ່ຂໍ້ກຳນົດກ່ຽວກັບການບໍ່ລົງໂທດທີ່ມີຢູ່ໄດ້ຈຳກັດຂອບເຂດການປົກປ້ອງ, ຜູ້ປະຕິບັດຕົວຈິງ ຈະຕ້ອງພະຍາຍາມປະຕິບັດຕາມຫຼັກການບໍ່ລົງໂທດ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 14(7) ຂອງສົນທິສັນຍາ ACTIP ແລະ ພັນທະສາກົນ.

ພະນັກງານໄອຍະການ ຕ້ອງມີຄວາມສາມາດໃນການກຳນົດເວລາທີ່ເໝາະສົມ ຫຼື ບໍ່ເໝາະສົມໃນການດຳເນີນຄະດີຜູ້ຖືກ ເຄາະຮ້າຍຈາກການຄ້າມະນຸດ ໂດຍຂຶ້ນກັບຄວາມເຊື່ອມໂຍງລະຫວ່າງ ກິດຈະກຳທີ່ຜິດກົດໝາຍ ແລະ ການຄ້າມະນຸດ. ເຂົາເຈົ້າຕ້ອງເຂົ້າໃຈໃນການນຳໃຊ້ດຸນພິນິດຂອງຕົນ ແລະ ນຳໃຊ້ຂໍ້ກຳນົດ ການບໍ່ລົງໂທດ ເຊັ່ນດຽວກັບການປ້ອງກັນທີ່ອາດມີຢູ່ໃນກົດໝາຍພາຍໃນ. ຖ້າຫາກຫຼັກການບໍ່ລົງໂທດບໍ່ໄດ້ຖືກນຳມາໃຊ້ ເພື່ອປ້ອງກັນບໍ່ໃຫ້ຜູ້ຖືກເຄາະຮ້າຍຖືກພາຕົວຂຶ້ນສານ, ທະນາຍຄວາມທີ່ໃຫ້ການປົກປ້ອງ ຈະຕ້ອງມີຄວາມສາມາດໃນການນຳໃຊ້ການປ້ອງກັນຢ່າງມີປະສິດທິພາບ ເພື່ອຜົນປະໂຫຍດຂອງລູກຄວາມເຂົາເຈົ້າ. ສະມາຊິກຕຸລາການ ຈະຕ້ອງເຂົ້າໃຈບົດບາດຂອງຕົນໃນການຍຶດໝັ້ນຫຼັກການບໍ່ລົງໂທດໃນຂະບວນການຍຸຕິທຳ.

ຄຳແນະນຳຕໍ່ໄປນີ້ ແມ່ນເພື່ອສະໜັບສະໜູນໃຫ້ລັດຕ່າງໆ ເພີ່ມທະວີຄວາມສາມາດຂອງພະນັກງານໄອຍະການ, ທະນາຍຄວາມທີ່ໃຫ້ການປົກປ້ອງ ແລະ ສະມາຊິກຕຸລາການ ເພື່ອນຳໃຊ້ຫຼັກການບໍ່ລົງໂທດ ເມື່ອຜູ້ຖືກເຄາະຮ້າຍເຂົ້າສູ່ການພິຈາລະນາຄະດີ.

### [8] ເສີມສ້າງຄວາມສາມາດໃຫ້ພະນັກງານໄອຍະການ ເພື່ອນຳໃຊ້ຫຼັກການບໍ່ລົງໂທດ

ເພື່ອໃຫ້ຜູ້ຖືກເຄາະຮ້າຍໄດ້ຮັບຜົນປະໂຫຍດຈາກຫຼັກການບໍ່ລົງໂທດ ຈະຕ້ອງມີຄວາມເຊື່ອມໂຍງກັນລະຫວ່າງ ການກະທຳຜິດ ແລະ ການຄ້າມະນຸດ ບໍ່ວ່າຈະເປັນຍ້ອນຜູ້ຖືກເຄາະຮ້າຍຖືກບັງຄັບຈາກຜູ້ຄ້າມະນຸດໃຫ້ກະທຳຜິດ (ການບັງຄັບ) ຫຼື ຄວາມຜິດນັ້ນແມ່ນຜົນສະທ້ອນໂດຍກົງທີ່ຜູ້ຖືກເຄາະຮ້າຍຖືກຄ້າມະນຸດ (ສາເຫດ). ເຖິງຈະບໍ່ມີການເຊື່ອມໂຍງລະຫວ່າງ ການກະທຳຜິດ ແລະ ການຄ້າມະນຸດ, ລັດກໍ່ອາດຈະຕັດສິນໃຈທີ່ຈະບໍ່ດຳເນີນຄະດີກັບຜູ້ຖືກເຄາະຮ້າຍ ເພາະການກະທຳດັ່ງກ່າວເປັນການປະຕິບັດພັນທະຂອງລັດໃນການປົກປ້ອງຜູ້ຖືກເຄາະຮ້າຍ ແລະ ພັນທະໃນການສືບສວນ-ສອບສວນ ແລະ ການດຳເນີນຄະດີກັບຜູ້ຄ້າມະນຸດ ຫຼື ອາດຈະບໍ່ເປັນຜົນປະໂຫຍດແກ່ສາທາລະນະ. ກໍລະນີທີ່ມີ ການຕັດສິນໃຈດຳເນີນຄະດີກັບຜູ້ຖືກເຄາະຮ້າຍ, ຕ້ອງມີການອະທິບາຍເຫດຜົນທີ່ຊັດເຈນຕໍ່ກັບການຕັດສິນໃຈດັ່ງກ່າວ ແລະ ຕ້ອງມີຄວາມໂປ່ງໃສ.

ໃນທາງປະຕິບັດ, ພະນັກງານໄອຍະການຈະມີຄວາມສະດວກໃຈໃນການດຳເນີນຄະດີຕາມປະມວນກົດໝາຍອາຍາ ຫຼາຍກວ່າ ການທີ່ຈະບໍ່ດຳເນີນຄະດີຕາມກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ. ສະນັ້ນ, ຂະແໜງການກ່ຽວຂ້ອງ ທີ່ ເຮັດວຽກຕ້ານການຄ້າມະນຸດ ຈະຕ້ອງສະໜັບສະໜູນໃຫ້ພະນັກງານໄອຍະການມີຄວາມເຂົ້າໃຈ ແລະ ປະຕິບັດໜ້າທີ່ ຂອງຕົນດ້ວຍການບໍ່ດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຄວາມຜິດທີ່ເປັນຜົນໂດຍກົງ ຈາກການຄ້າມະນຸດ ຫຼື ຢຸດຕິການດຳເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນກໍລະນີທີ່ມີຫຼັກຖານ ແລະ ເພື່ອຜົນປະໂຫຍດສາທາລະນະ ເພື່ອປະກອບສ່ວນເຂົ້າໃນການຕັດສິນໃຈດັ່ງກ່າວ.

82 ສິດໃນການໄຕ່ສວນຄະດີທີ່ເປັນທຳ ຕາມທີ່ກຳນົດໄວ້ໃນມາດຕາ 14 ຂອງສົນທິສັນຍາສາກົນວ່າດ້ວຍສິດທິຂອງພົນລະເຮືອນ ແລະ ສິດທິທາງດ້ານການເມືອງ ແລະ ມາດຕາ 20(1) ຂອງຖະແຫຼງການອາຊຽນວ່າດ້ວຍສິດທິມະນຸດ

## ຊີ້ແຈງຄວາມສຳພັນ ລະຫວ່າງ ສະຖານະຂອງຜູ້ຖືກເຄາະຮ້າຍ ແລະ ການບໍ່ດຳເນີນຄະດີ

ບັນດາປະເທດສະມາຊິກອາຊຽນ ຕ້ອງກຳນົດຜົນກະທົບທີ່ມີຕໍ່ການພິຈາລະນາການກຳນົດສະຖານະຂອງຜູ້ຖືກເຄາະຮ້າຍ ເຖິງຄວາມເປັນໄປໄດ້ໃນການດຳເນີນຄະດີ ຫຼື ຄວາມເປັນໄປບໍ່ໄດ້ ໃນການດຳເນີນຄະດີຕໍ່ຜູ້ຖືກເຄາະຮ້າຍ.[83] ຂະແໜງການກ່ຽວຂ້ອງກັບການຕ້ານການຄ້າມະນຸດສ້າງຄວາມເຂົ້າໃຈໃຫ້ພະນັກງານໄອຍະການເຖິງຜົນກະທົບຂອງການກຳນົດສະຖານະຂອງຜູ້ຖືກເຄາະຮ້າຍ ໂດຍການຕັດສິນໃຈຂອງເຂົາເຈົ້າ ຊຶ່ງລວມເຖິງການໃຫ້ຂໍ້ມູນກ່ຽວກັບອາຊະຍາກຳການຄ້າມະນຸດ ແລະ ການນຳໃຊ້ຫຼັກການບໍ່ລົງໂທດ.

ພະນັກງານໄອຍະການຄວນທຳຄວາມຄຸ້ນເຄີຍກັບຄຳນິຍາມຂອງການຄ້າມມະນຸດ, ຕົວຊີ້ວັດຂອງການຄ້າມະນຸດ ແລະ ກົນໄກໃນການເອົາຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍອອກຈາກລະບົບຍຸຕິທຳທາງອາຍາ ແລະ ສົ່ງຕໍ່ໄປຫາໜ່ວຍງານທີ່ມີ ອຳນາດໃນການກຳນົດຕົວຢ່າງເປັນທາງການ. ນອກນັ້ນ, ເຂົາເຈົ້າຄວນທຳຄວາມຄຸ້ນເຄີຍ ກັບຂໍ້ກຳນົດການບໍ່ລົງໂທດ ໃນກົດໝາຍ, ນະໂຍບາຍ ແລະ ບັນດາເອກະສານແນະນຳ ທີ່ມີຢູ່, ຕະຫຼອດຮອດເອກະສານການຮ່ວມມືສາກົນ ແລະ ການຮ່ວມມືສອງຝ່າຍ ໃນສະຖານະການທີ່ບຸກຄົນດັ່ງກ່າວ ທີ່ໄດ້ຮັບການກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຂອບເຂດອຳນາດຂອງປະເທດນັ້ນ.

## ຮັບປະກັນວ່າພະນັກງານໄອຍະການເຂົ້າໃຈດຸນພິນິດຂອງຕົນ ແລະ ຮູ້ວ່າຈະນຳໃຊ້ດຸນພິນິດຂອງຕົນແນວໃດ

ພະນັກງານໄອຍະການຄວນມີໜ້າທີ່ທີ່ຊັດເຈນ ທີ່ຈະບໍ່ດຳເນີນຄະດີ ຫຼື ຢຸດຕິການດຳເນີນຄະດີຕໍ່ຜູ້ຖືກເຄາະຮ້າຍ ໃນຄວາມຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ. ໃນບາງເຂດອຳນາດຂອງສານ ອາດຈະບັງຄັບໃຫ້ດຳເນີນຄະດີ ກັບບຸກຄົນທີ່ຖືກກ່າວຫາວ່າກະທຳຜິດ. ໃນບາງເຂດອຳນາດຂອງສານ, ເຂົາເຈົ້າອາດມີດຸນພິນິດ ທີ່ຈະບໍ່ດຳເນີນ ຄະດີອາຍາຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຫຼື ໃນກໍລະນີທີ່ພວມດຳເນີນຄະດີຢູ່ ອາດຢຸດຕິການການດຳເນີນຄະດີ ຫາກມີຫຼັກຖານສະແດງໃຫ້ເຫັນວ່າ ບຸກຄົນທີ່ຢູ່ໃນລະຫວ່າງການດຳເນີນຄະດີ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ໃນການຕັດສິນໃຈວ່າ ຄວນດຳເນີນຄະດີຫຼືບໍ່ນັ້ນ ພະນັກງານໄອຍະການອາດປະເມີນວ່າ ເຂົາເຈົ້າເຊື່ອໃນຫຼັກຖານວ່າ ມີພຽງພໍທີ່ຈະດຳເນີນຄະດີຫຼືບໍ່ ໂດຍພິຈາລະນາຈາກອົງປະກອບພື້ນຖານຂອງອາຊະຍາກຳທີ່ເປັນບັນຫາ (ລວມທັງ ອົງປະກອບຂອງຄວາມຜິດ) ໂດຍຄຳນຶງເຖິງການປ້ອງກັນທີ່ມີຢູ່ ແລະ ພິຈາລະນາເຖິງຜົນປະໂຫຍດຂອງສາທາລະນະທີ່ສະໜັບສະໜູນ ຫຼື ຄັດຄ້ານການດຳເນີນຄະດີ.[84]

83 ສິ່ງສຳຄັນ, ການບໍ່ລົງໂທດຜູ້ຖືກເຄາະຮ້າຍຕັ້ງແຕ່ຕົ້ນ ບໍ່ຄວນຂຶ້ນກັບການກຳນົດຕົວຜູ້ຖືກເຄາະຮ້າຍຢ່າງເປັນທາງການ ຫຼື ຜູ້ຄ້າມະນຸດ; ຫຼັກເກນສຳຄັນທີ່ໃຊ້ໃນຄັ້ງທຳອິດ ແມ່ນຕ້ອງສົມເຫດສົມຜົນທີ່ໜ້າເຊື່ອຖືວ່າ ມີການຄ້າມະນຸດເກີດຂຶ້ນ.

84 ກຸ່ມປະສານງານລະຫວ່າງໜ່ວຍງານຕ່າງໆກ່ຽວກັບການຄ້າມະນຸດ, ການບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (ICATສະບັບຫຍໍ້8/2020) 4; ຄຳແນະນຳກ່ຽວກັບບັນຫາການຕອບໂຕ້ຄວາມຍຸຕິທຳທາງອາຍາທີ່ເໝາະສົມຕໍ່ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດຍ້ອນຖືກຄ້າມະນຸດ: ເອກະສານຄວາມເປັນມາ ກະກຽມໂດຍ ກອງເລຂາ ຄະນະປະຕິບັດງານຕ້ານການຄ້າມະນຸດ, ວຽນນາ ວັນທີ 10 ແລະ 11 ກັນຍາ 2020, UN Doc. CTOC/COP/WG.4/2020/2 (ວັນທີ 15 ມິຖຸນາ 2020), ວັກທີ 44–45.

### ກ່ອງຂໍ້ມູນ: ຕົວຢ່າງ (ການຄາດຕະກໍາ)

A ຖືກກັກຂັງຢູ່ໃນເຮືອຢູ່ກາງທະເລ ເປັນເວລາຫຼາຍເດືອນ ແລະ ເຮັດວຽກຢູ່ໃນສະພາບແວດລ້ອມທີ່ໂຫດຮ້າຍ ແລະ ຮຸນແຮງ, ລາວ ແລະ ຜູ້ອື່ນໆຢູ່ໃນເຮືອຖືກຈັບໄປທຸບຕີ ໂດຍຜູ້ຄຸມເລື້ອຍໆ. ມື້ໜຶ່ງ ໝູ່ຂອງ A (F) ເກືອບສູນ ເສຍມືຂອງລາວໃນຕາໜ່າງຫາປາ. ເຂົາເຈົ້າຂໍຮ້ອງໃຫ້ຜູ້ຄຸມ ຈັດຫາຢາມາຊ່ວຍໝູ່ ແຕ່ແທນທີ່ຜູ້ຄຸມຈະຊ່ວຍລາວ ຜູ້ຄຸມພັດບັງຄັບໃຫ້ A ຍູ້ F ລົງນໍ້າ ເພື່ອເປັນບົດຮຽນໃຫ້ຜູ້ອື່ນໆ ຮູ້ກ່ຽວກັບຜົນສະທ້ອນຈາກການບາດເຈັບ.

ມື້ໜຶ່ງ, ເຈົ້າໜ້າທີ່ກວດກາເຮືອປະມົງຂຶ້ນເຮືອເພື່ອກວດເອກະສານຂອງກໍາມະກອນ. A ຄິດວ່ານີ້ແມ່ນໂອກາດ ຂອງລາວທີ່ຈະຫຼົບໜີ. ດ້ວຍເຫດນັ້ນ, ຈຶ່ງເລີ່ມບອກຜູ້ກວດກາວ່າລາວຕ້ອງການອອກຈາກເຮືອ. ກ່ອນທີ່ລາວຈະເຮັດໄດ້, ນາຍເຮືອບອກເຈົ້າໜ້າທີ່ວ່າ A ໄດ້ສັງຫານລູກເຮືອຄົນໜຶ່ງ. A ສາລະພາບວ່າໄດ້ຂ້າ F ແລະ ຖືກດໍາເນີນ ຄະດີໃນຂໍ້ຫາຄາດຕະກໍາ.

*<u>ການນໍາໃຊ້ຫຼັກການບໍ່ລົງໂທດ:</u>* ທະນາຍຄວາມທີ່ໃຫ້ການປົກປ້ອງ ໄດ້ຮັບການມອບໝາຍໃຫ້ເປັນຜູ້ຕາງໜ້າ A ເຊິ່ງລາວບໍ່ມີປະສົບການໃນຄະດີຄ້າມະນຸດ ຈຶ່ງບໍ່ຮູ້ສະພາບຂອງ A ວ່າ ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ທະນາຍຄວາມອະທິບາຍໃຫ້ A ຟັງວ່າ ຈະປົກປ້ອງລາວໂດຍເຫດຜົນທີ່ລາວຖືກຂົ່ມຂູ່ ຍ້ອນການຄຸກຄາມ ແລະ ທໍາຮ້າຍຮ່າງກາຍທີ່ຮຸນແຮງ ທີ່ລາວປະເຊີນ. ພະນັກງານໄອຍະການ ທີ່ຖືກແຕ່ງຕັ້ງດໍາເນີນຄະດີ A ມີປະສົບການໃນການດໍາເນີນຄະດີຄ້າມະນຸດ ແລະ ສົງໄສວ່າ A ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.

ລາວໄດ້ຮ້ອງຂໍໃຫ້ຢຸດຕິການດໍາເນີນຄະດີ ແລະ ແນະນໍາໃຫ້ສົ່ງຕໍ່ລາວ ເພື່ອໃຫ້ໄດ້ຮັບການປົກປ້ອງ. A ຖືກຍ້າຍອອກຈາກສູນກັກຂັງ ແລະ ຖືກສົ່ງຕໍ່ໄປເພື່ອກັ່ນກອງ ແລະ ປົກປ້ອງຜ່ານກົນໄກການສົ່ງຕໍ່ແຫ່ງຊາດ. ການສືບສວນ-ສອບສວນໄດ້ເລີ່ມຕົ້ນຂຶ້ນກ່ຽວກັບກິດຈະການ ຢູ່ເທິງເຮືອ ບ່ອນທີ່ A ຖືກຈັບຕົວ.

### ຄໍາແນະນໍາຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ, ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ

ເພື່ອຮັບປະກັນການປະຕິບັດຕາມຫຼັກການບໍ່ລົງໂທດ ໃນການຕັດສິນໃຈຂອງພະນັກງານໄອຍະການ ລັດຕ້ອງຮັບປະກັນວ່າ:

(a) ພະນັກງານໄອຍະການມີໜ້າທີ່ຢຸດຕິການດໍາເນີນຄະດີຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສໍາລັບຄວາມຜິດທັງໝົດ ທີ່ເກີດຂຶ້ນອັນສືບເນື່ອງມາຈາກສະພາບການຂອງເຂົາເຈົ້າໃນຖານະຜູ້ຖືກຄ້າມະນຸດ. ຖ້າຫາກພະນັກງານໄອຍະການ ບໍ່ປະຕິບັດ, ສານພາຍໃນປະເທດຄວນມີອໍານາດໃນການສັ່ງຢຸດຕິການດໍາເນີນຄະດີ ດ້ວຍເຫດຜົນທີ່ບໍ່ປະຕິບັດຕາມ ຂັ້ນຕອນ ຫຼື ຍ້ອນການດໍາເນີນຄະດີແມ່ນລະເມີດພັນທະກ່ຽວກັບການບໍ່ລົງໂທດ.

(b) ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ພະນັກງານໄອຍະການທັງໝົດ ຕ້ອງໄດ້ຮັບການຝຶກອົບຮົມຢ່າງຄົບຖ້ວນ ກ່ຽວກັບການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ການກະທໍາຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ ແລະ ອອກຄໍາສັ່ງ ຫຼື ຮ້ອງຂໍໃຫ້ຢຸດຕິການດໍາເນີນຄະດີໄວທີ່ສຸດ.[85]

85 ແຫຼ່ງຂໍ້ມູນ: ບົດລາຍງານການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ,Siobhán Mullally, UN Doc. A/HRC/47/34, ວັນທີ 17 ພຶດສະພາ 2021, [64]

## ຮຽກຮ້ອງໃຫ້ພະນັກງານໄອຍະການກວດກາອົງປະກອບດ້ານ ເຈດຕະນາ (mens rea) ຂອງຜູ້ຖືກເຄາະຮ້າຍທີ່ຖືກກ່າວຫາວ່າມີຄວາມຜິດ

ພະນັກງານໄອຍະການຕ້ອງເຂົ້າໃຈ ແລະ ກວດກາອົງປະກອບດ້ານເຈດຕະນາ (the mens rea) ສໍາລັບອາຊະຍາກໍາທີ່ຕົນດໍາເນີນຄະດີ. ເຂົາເຈົ້າຄວນປະເມີນວ່າ ວິທີການໃດທີ່ຜູ້ຄ້າມະນຸດໃຊ້ (ເຊັ່ນວ່າ ການບັງຄັບ, ການຫຼອກລວງ, ການຂົ່ມຂູ່ ຫຼື ວິທີການ ສະເພາະທີ່ກໍານົດໄວ້ໃນມາດຕາ 3(a) ຂອງອານຸສັນຍາວ່າດ້ວຍການຄ້າມະນຸດ ແລະ ມາດຕາ 2(a) ຂອງ ສົນທິສັນຍາ ACTIP) ອາດຈະສ້າງຄວາມເສຍຫາຍຕໍ່ເຈດຕະນາຂອງຜູ້ຖືກຫາ ໃນການກໍ່ອາຊະຍາກໍາທີ່ຖືກກ່າວຫາ ຫຼື ບໍ່.[86] ການດໍາເນີນການກວດກາ ອາດຫຼີກລ້ຽງສະຖານະການ ທີ່ຜູ້ຖືກເຄາະຮ້າຍຖືກນໍາຕົວຂຶ້ນສານ ແລະ ດໍາເນີນຄະດີໃນຄວາມຜິດທີ່ບໍ່ໄດ້ຕັ້ງໃຈກໍ່ຂຶ້ນ.

ໃນກໍລະນີທີ່ເປັນເດັກ ບໍ່ຈໍາເປັນຕ້ອງມີວິທີການເພື່ອພິສູດສະຖານະຂອງເຂົາເຈົ້າວ່າເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ເຊິ່ງພຽງພໍທີ່ຈະສ້າງສາຍພົວພັນລະຫວ່າງ ການກະທໍາຜິດ ແລະ ສະຖານະ ຂອງເດັກ ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອຈະບໍ່ໃຫ້ມີການເລີ່ມຕົ້ນການດໍາເນີນຄະດີ ຫຼື ຢຸດຕິທຸກຄະດີທີ່ກ່ຽວຂ້ອງກັບເດັກ.

ໂດຍທົ່ວໄປແລ້ວ ປະສິດທິພາບຂອງພະນັກງານໄອຍະການແມ່ນວັດແທກຈາກການດໍາເນີນຄະດີ ຫຼາຍກວ່າ ການທີ່ບໍ່ດໍາເນີນຄະດີ. ເຂົາເຈົ້າອາດມີຄວາມຢ້ານກົວຕໍ່ການຖືກກ່າວຫາວ່າປະລະໜ້າທີ່ ຫາກເຂົາເຈົ້າບໍ່ດໍາເນີນຄະດີ. ເພື່ອຊຸກຍູ້ໃຫ້ພະນັກງານໄອຍະການນໍາໃຊ້ຫຼັກການບໍ່ລົງໂທດ ຈະຕ້ອງໄດ້ມີການວັດແທກຜົນຂອງການປະຕິບັດໜ້າທີ່ ຂອງເຂົາເຈົ້າ ດ້ວຍການກວດເບິ່ງວ່າ ເຂົາເຈົ້າໄດ້ກວດກາອົງປະກອບດ້ານເຈດຕະນາກະທໍາຜິດທີ່ຖືກກ່າວຫາກ່ອນ ຈະດໍາເນີນຄະດີ.

## ສະໜັບສະໜູນພະນັກງານໄອຍະການໃຊ້ເຫດຜົນໃນການຕັດສິນໃຈວ່າ ຄວນດໍາເນີນຄະດີຕໍ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຫຼື ບໍ່

ໃນການປະເມີນແຕ່ລະຄະດີ, ພະນັກງານໄອຍະການຈະພິຈາລະນາປັດໄຈທັງໝົດຢ່າງຮອບຄອບ ກ່ອນຕັດສິນໃຈວ່າຈະດໍາເນີນຄະດີຕໍ່ກັບບຸກຄົນຜູ້ທີ່ໄດ້ຖືກກໍານົດຕົວວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ຕົວຢ່າງ: ເຫດຜົນຂອງເຂົາເຈົ້າໃນການດໍາເນີນຄະດີຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດຈະແມ່ນຍ້ອນບໍ່ມີ ການເຊື່ອມໂຍງລະຫວ່າງການກະທໍາຜິດຂອງບຸກຄົນກັບການຄ້າມະນຸດ ແລະ ຍ້ອນການດໍາເນີນຄະດີຕໍ່ຜູ້ຖືກເຄາະຮ້າຍ ແມ່ນເປັນໄປເພື່ອຜົນປະໂຫຍດຕໍ່ສາທາລະນະ.
ສານເອີຣົບດ້ານສິດທິມະນຸດ ໃນຄະດີຂອງV.C.L ແລະ A.N. v ກັບ ຣາຊະອານາຈັກອັງກິດ (ບົດສະຫຼຸບຢູ່ເອກະສານຊ້ອນທ້າຍທີ 4) ໃຫ້ຂໍ້ມູນທີ່ເປັນປະໂຫຍດກ່ຽວກັບຄວາມສໍາຄັນຂອງການປະເມີນ ການຄ້າມະນຸດໂດຍໜ່ວຍງານທີ່ມີອໍານາດ. ໃນກໍລະນີນີ້ ສານເອີຣົບດ້ານສິດທິມະນຸດພົບວ່າ ການຕັດສິນໃຈຂອງ ຣາຊະອານາຈັກອັງກິດ ໃນການດໍາເນີນຄະດີກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຄະດີຜະລິດກັນຊາເຊິ່ງໄດ້ລະເມີດສິດທິມະນຸດຂອງຜູ້ຖືກເຄາະຮ້າຍ.[87]

> …ເນື່ອງຈາກສະຖານະພາບຂອງບຸກຄົນທີ່ເປັນຜູ້ຖືກເຄາະຮ້າຍຈາການຄ້າມະນຸດ ອາດສົ່ງຜົນກະທົບວ່າມີຫຼັກຖານພຽງພໍໃນການດໍາເນີນຄະດີ ຫຼື ບໍ່ ແລະ ການປະຕິບັດເຊັ່ນນີ້ ເປັນປະໂຫຍດຕໍ່ສາທາລະນະ ຫຼື ບໍ່, ສະນັ້ນ ການຕັດສິນໃຈວ່າຈະດໍາ ເນີນຄະດີກັບຜູ້ອາດຈະເປັນຜູ້ຖືກເຄາະຮ້ານຈາກການຄ້າະນຸດຫຼືບໍ່–ເທົ່າທີ່ເປັນໄປໄດ້ຫຼາຍທີ່ ສຸດ–ເມື່ອມີການປະເມີນການຄ້າມະນຸດໂດຍບຸກຄົນທີ່ມີຄຸນວຸດທິ. ນີ້ ແມ່ນສິ່ງສໍາຄັນເມື່ອກ່ຽວຂ້ອງກັບເດັກນ້ອຍ.[88]

ໃນກໍລະນີ, ສານເອີຣົບດ້ານສິດທະມະນຸດ ເນັ້ນວ່າ ບໍ່ມີຂໍ້ຫ້າມາມທົ່ວໄປໃນການດໍາເນີນຄະດີກັບຜູ້ຖືກ ເຄາະຮ້າຍຈາກການຄ້າມະນຸດ. ເຖິງຢ່າງໃດກໍ່ຕາມ, ຣາຊະອານາຈັກອັງກິດບໍ່ສາມາດໃຫ້ເຫດຜົນ ໃນການດໍາເນີນຄະດີກັບຜູ້ກ່ຽວຂ້ອງ ເຖິງແມ່ນວ່າ ຍັງມີຄວາມສົງໄສທີ່ໜ້າເຊື່ອຖືວ່າ ເຂົາເຈົ້າເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈາກກໍລະນີປູກກັນຊາ. ສານເອີຣົບ ອະທິບາຍໄວ້ໃນດ້ານທີ່ເປັນປະໂຫຍດຕໍ່ແນວທາງການຕັດສິນໃຈຂອງພະນັກງານໄອຍະການໃນອາຊຽນ ວ່າ:

86 “ວິທີການ” ທີ່ກໍານົດໄວ້ໃນມາດຕາ 3 ຂອງອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ ແລະ ມາດຕາ 2 (a) ຂອງສົນທິສັນຍາ ACTIP ແມ່ນການຂົ່ມຂູ່ ຫຼື ການໃຊ້ກໍາລັງ ຫຼື ຮູບແບບອື່ນໆ ຄື ການບັງຄັບ, ການຈອບອອຍ, ການສໍ້ໂກງ, ການຕົວະຍົວະຫຼອກລວງ,ການສວຍໃຊ້ອໍານາດ, ຫຼື ໃນຕໍາແໜ່ງທີ່ສ່ຽງຕໍ່ການຖືກໂຈມຕີ ຫຼື ການມອບ ຫຼື ຮັບເງິນ ຫຼື ຜົນປະໂຫຍດໃດໆແກ່ບຸກຄົນທີ່ມີອໍານາດຄວາມຄຸມຜູ້ຖືກເຄາະຮ້າຍ

87 ໂດຍສະເພາະຢ່າງຍິ່ງ, ມາດຕາ 4 ຂອງສົນທິສັນຍາສະຫະພາບເອີຣົບວ່າດ້ວຍສິດທິມະນຸດ ຫ້າມການເປັນຂ້າທາດ ຫຼື ຮັບໃຊ້ແບບຂ້າທາດ ແລະ ການບັງຄັບ ຫຼື ແຮງງານແບບບັງຄັບ ແລະ ມາດຕາ 6 ທີ່ກ່ຽວຂ້ອງກັບສິດໃນການໄຕ່ສວນຄະດີທີ່ເປັນທໍາ

88 ຄະດີຂອງ V.C.L ແລະ A.N. v ສະຫະຣາດຊະອານາຈັກອັງກິດ, (ຄໍາຮ້ອງເລກທີ. 77587/12 ແລະ 74603/12) ຄໍາຕັດສິນຂອງສະຕຣາເບີສ (Strasbourg), ວັນທີ 16 ກຸມພາ 2021, ວັກທີ. 161.

ເມື່ອການປະເມີນການຄ້າມະນຸດ ຖືກດຳເນີນໂດຍຜູ້ທີ່ມີຄຸນວຸດທິ ການຕັດສິນໃຈຂອງພະນັກງານໄອຍະການໃນຄັ້ງຕໍ່ໄປ ຈະຕ້ອງໄດ້ເອົາຜົນຂອງການປະເມີນດັ່ງກ່າວ ມາພິຈາລະນານຳ. ແຕ່ກໍລະນີທີ່ພະນັກງານໄອຍະການ ອາດຈະບໍ່ມີຂໍ້ຜູກພັນກ່ຽວກັບ ຜົນໄດ້ຮັບຈາກການປະເມີນການຄ້າມະນຸດນັ້ນ, ພະນັກງານໄອຍະການ ຕ້ອງມີເຫດຜົນທີ່ຊັດເຈນ ເຊິ່ງສອດຄ່ອງກັບຄຳນິຍາມຂອງການຄ້າມະນຸດທີ່ມີຢູ່ໃນອານຸສັນຍາປາເຣໂມ ແລະ ສົນທິສັນຍາວ່າດ້ວຍການຕ້ານການຄ້າມະນຸດ.[89]

### ກ່ອງຂໍ້ມູນ: ຕົວຢ່າງ (ການຄ້າມະນຸດ)

A ໄດ້ຖືກຈັບຕົວພ້ອມກັບບຸກຄົນອື່ນ ເຊິ່ງແມ່ນ (B) ທີ່ຖືກສົງໄສວ່າຄ້າມະນຸດໂດຍການຂູດຮີດທາງເພດ. ໃນສະຖານທີ່ບໍລິການທາງເພດ, A ໄດ້ຈັບຕາເບິ່ງແມ່ຍິງຄົນອື່ນ ແຕ່ບໍ່ໄດ້ໃຊ້ການບັງຄັບຂົ່ມຂູ່ແກ່ບຸກຄົນອື່ນ. ຄຳໃຫ້ການຈາກຜູ້ຖືກເຄາະຮ້າຍທີ່ຖືກກຳນົດຕົວໃນສະຖານທີ່ບໍລິການທາງເພດ ໄດ້ມີການເປີດເຜີຍການລາຍງານວ່າ ຜູ້ຖືກເຄາະຮ້າຍ ບໍ່ໄດ້ເບິ່ງ A ເປັນຜູ້ຖືກຫາ ແຕ່ເປັນຜູ້ຖືກເຄາະຮ້າຍອີກຄົນ. A ຍັງເຮັດວຽກໃນອຸດສາຫະກຳ ທາງເພດ ແລະ ມອບເງິນທີ່ຫາມາໄດ້ໃຫ້ແກ່ຜູ້ຖືກຫາ. A ຢູ່ພາຍໃຕ້ອຳນາດຂອງ B ຜູ້ທີ່ສັນຍາວ່າຈະຄົບກັບລາວ ໃນອະນາຄົດ ແລະ ລາວກໍຮັກ B. A ຄວບຄຸມແມ່ຍິງຜູ້ອື່ນໆ ເພື່ອປ້ອງກັນບໍ່ໃຫ້ຜູ້ຖືກຫາທຳຮ້າຍ ຫຼື ຂົ່ມຂູ່ລາວອີກຄັ້ງ ແລະ ລາວເອງກໍຢ້ານ B

*<u>ການນຳໃຊ້ຫຼັກການບໍ່ລົງໂທດ:</u>* ສານຂັ້ນຕົ້ນເຫັນວ່າ A ບໍ່ແມ່ນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນເວລາທີ່ລາວກະທຳຜິດອາຊະຍາກຳ, ເນື່ອງຈາກວ່າລາວກາຍເປັນຜູ້ຄ້າມະນຸດ. ທັງ A ແລະ B ຖືກສານຕັດສິນໃນສະຖານການຄ້າມະນຸດ. ໃນຂັ້ນອຸທອນ, ສານອຸທອນໄດ້ໃຊ້ເຫດຜົນຂອງຫຼັກການບໍ່ລົງໂທດ ເພື່ອປ້ອງກັນຜູ້ຖືກເຄາະຮ້າຍຈາກການລົງໂທດ ສຳລັບການກະທຳຜິດທາອາຍາ ທີ່ເຂົາເຈົ້າໄດ້ກະທຳເນື່ອງຈາກການຖືກ ບັງຄັບຂົ່ມຂູ່. ເຂົາເຈົ້າໃຫ້ເຫດຜົນວ່າ ພະນັກງານໄອຍະການ ຄວນມີບົດສະຫຼຸບຄືກັນກັບຫຼັກຖານທີ່ໄດ້ຈາກການລັກຟັງ ແລະ ຄຳໃຫ້ການຂອງຜູ້ຖືກເຄາະຮ້າຍຜູ້ອື່ນໆ. ສານຕັດສິນໃຫ້ A ບໍ່ມີຄວາມຜິດ ແລະ ໃຫ້ B ເປັນຄົນຈ່າຍຄ່າເສຍຫາຍ.[90]

## ຮັບປະກັນວ່າ ມີການສະໜອງຂໍ້ມູນແກ່ຜູ້ຖືກເຄາະຮ້າຍ ກ່ຽວກັບການຕັດສິນໃຈໃນການດຳເນີນຄະດີຕໍ່ເຂົາເຈົ້າ

ຄວນມີການອະທິບາຍຂັ້ນຕອນ ແລະ ຄຳຕັດສິນຂອງສານ ໃຫ້ແກ່ບຸກຄົນທີ່ຖືກດຳເນີນຄະດີ. ສານຄວນສະໜອງຂໍ້ມູນ ທີ່ເຂົ້າໃຈງ່າຍ, ເໝາະສົມກັບເກນອາຍຸ, ໂດຍລວມເອົາຜູ້ທີ່ມີຄວາມພິການ, ບໍ່ໃຊ້ຄຳສັບທາງກົດໝາຍ ແລະ ຕ້ອງເປັນພາສາທີ່ເຂົາເຈົ້າສາມາດເຂົ້າໃຈໄດ້ ລວມທັງ ຫຼັກການບໍ່ລົງໂທດເພື່ອໃຫ້ເຂົ້າໃຈວ່າເຂົາເຈົ້າບໍ່ຄວນຈະຖືກລົງໂທດ ຕໍ່ກັບອາຊະຍາກຳໃດໜຶ່ງ ທີ່ກ່ຽວຂ້ອງໂດຍກົງກັບການຖືກຄ້າມະນຸດ.[91]

ຕົວຢ່າງ, ສປປ ລາວ ມີຄູ່ມືກ່ຽວກັບການດຳເນີນຄະດີຄ້າມະນຸດຂອງສານ ເຊິ່ງກຳນົດວ່າສານຄວນສະໜອງຂໍ້ມູນ ແລະ ເອກະສານທີ່ເໝາະສົມໃນຫຼາຍຮູບແບບແກ່ຜູ້ຖືກເຄາະຮ້າຍ ໃນຮູບແບບທີ່ງ່າຍດາຍ ໂດຍບໍ່ໃຊ້ຄຳສັບທາງກົດໝາຍ ແລະ ໃຊ້ພາສາທີ່ເຂົ້າໃຈງ່າຍ. ຂໍ້ມູນທີ່ສະໜອງໃຫ້ລວມມີຂໍ້ມູນກ່ຽວກັບຫຼັກການບໍ່ລົງໂທດ ເພື່ອທີ່ຜູ້ຖືກເຄາະຮ້າຍເຂົ້າໃຈ ວ່າເຂົາເຈົ້າບໍ່ມີຄວາມຮັບຜິດຊອບທາງບໍລິຫານ ຫຼື ທາງອາຍາ ຕໍ່ກັບການກະທຳຜິດກົດໝາຍ ທີ່ເຂົາເຈົ້າໄດ້ເຮັດ ຖ້າຫາກການກະທຳດັ່ງກ່າວ ເປັນຜົນໂດຍກົງຈາກການຖືກຄ້າມະນຸດ ໂດຍສອດຄ່ອງກັບມາດຕາ 14(7) ຂອງສົນທິສັນຍາ ACTIP. ສິ່ງນີ້ແມ່ນວິທີການດຽວກັບການສະໜອງຂໍ້ມູນແກ່ຜູ້ຖືກເຄາະຮ້າຍ ເຊິ່ງຄວນນຳໃຊ້ໃນເວລາທີ່ມີການໄຕ່ສວນຄະດີ ຕໍ່ກັບການກະທຳທີ່ຜິດກົດໝາຍທີ່ເຂົາເຈົ້າມີສ່ວນກ່ຽວຂ້ອງ ທີ່ເປັນຜົນໂດຍກົງຈາກການຄ້າມະນຸດ.

89 ຄະດີຂອງ V.C.L ແລະ A.N. v ສະຫະຣາດຊະອານາຈັກອັງກິດ, (ຄຳຮ້ອງເລກທີ. 77587/12 ແລະ 74603/12) ຄຳຕັດສິນຂອງສະຕຣາເບີສ (Strasbourg), ວັນທີ 16 ກຸມພາ 2021, ວັກທີ. 162.

90 ຕົວຢ່າງນີ້ແມ່ນອີງຕາມກໍລະນີ ECLI:NL:RBSGR:2009:BK8237, ເປັນກໍລະນີຈາກ ຣາຊະນາອາຈັກເນເທີແລນ ເຊິ່ງມີການນຳໃຊ້ ມາດຕາ 26 ຂອງສົນທິສັນຍາຂອງສະພາເອີຣົບວ່າດ້ວຍການປະຕິບັດເພື່ອຕ້ານການຄ້າມະນຸດ (ບໍ່ລົງໂທດ)

91 ຕົວຊີ້ວັດການຄຳນຶງເຖິງການຄ້າມະນຸດຂອງສານ, ແຜນງານ ASEAN-ACT, 4.1(b). ສາມາດເບິ່ງໄດ້ທີ່ ການຄຳນຶງເຖິງຜູ້ຖືກເຄາະຮ້າຍໃນສານ: ຄູ່ມືສຳລັບປະເທດສະມາຊິກອາຊຽນ (ແຜນງານASEAN-ACT, 2022) ໄດ້ຮັບການພັດທະນາໂດຍແຜນງານ ASEAN-ACT ຮ່ວມກັບບັນດາປະເທດສະມາຊິກອາຊຽນ

## [9] ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ທະນາຍຄວາມທີ່ໃຫ້ການປົກປ້ອງ ເພື່ອນໍາໃຊ້ຫຼັກການບໍ່ລົງໂທດ

ເຊິ່ງຍັງບໍ່ພຽງພໍ ຕໍ່ກັບຂໍ້ກໍານົດຫຼັກການບໍ່ລົງໂທດທີ່ຊັດເຈນ ທີ່ກວມໃນນິຕິກໍາວ່າດ້ວຍ ການຕ້ານການຄ້າມະນຸດ ແລະ ການປ້ອງກັນທີ່ມີຢູ່ ໃນປະມວນກົດໝາຍອາຍາ. ຂໍ້ກໍານົດເຫຼົ່ານີ້ ຕ້ອງນໍາໃຊ້ໃນພາກປະຕິບັດຕົວຈິງ ໂດຍຜູ້ຊ່ຽວຊານດ້ານກົດໝາຍ ເຊິ່ງເປັນຜູ້ທີ່ມີທັກສະທີ່ພຽງພໍໃນການນໍາໃຊ້ຫຼັກການດັ່ງກ່າວ ຕໍ່ກັບສະຖານະການທີ່ຜູ້ຖືກເຄາະຮ້າຍປະເຊີນໜ້າກັບການດໍາເນີນຄະດີ ໂດຍສອດຄ່ອງກັບສິດທິຂອງຜູ້ຖືກເຄາະຮ້າຍທີ່ຈະໄດ້ຮັບການພິຈາລະນາຄະດີທີ່ເປັນທໍາ. ນອກນັ້ນ, ຜູ້ປະຕິບັດຕົວຈິງດ້ານກົດໝາຍ ຕ້ອງໄດ້ຮັບການຝຶກອົບຮົມຢ່າງຕໍ່ເນື່ອງ ເພື່ອຮັບປະກັນວ່າເຂົາເຈົ້າເຂົ້າໃຈກ່ຽວກັບຫຼັກການບໍ່ລົງໂທດ ແລະ ຕ້ອງມີກົນໄກໃນການຕິດຕາມ ເພື່ອຮັບປະກັນວ່າເຂົາເຈົ້ານໍາໃຊ້ຫຼັກການບໍ່ລົງໂທດໃນພາກປະຕິບັດຕົວຈິງ.

### ຮັບປະກັນວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ປະເຊີນໜ້າກັບການລົງໂທດ ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ

ການຊ່ວຍເຫຼືອທາງດ້ານກົດໝາຍ ແມ່ນອົງປະກອບທີ່ຈໍາເປັນຂອງສິດທິມະນຸດ ຕໍ່ກັບການພິຈາລະນາຄະດີທີ່ເປັນທໍາ.[92] ບັນດາປະເທດສະມາຊິກອາຊຽນມີພັນທະໃນການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ໃຫ້ແກ່ບຸກຄົນຕໍ່ກັບການໄຕ່ສວນ, ລວມທັງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ປະເຊີນໜ້າກັບການດໍາເນີນຄະດີ. ເຊິ່ງມີຜົນກະທົບສູງ ໂດຍສະເພາະ ໃນສະພາບການທີ່ຜູ້ຖືກເຄາະຮ້າຍປະເຊີນໜ້າກັບການຖືກລົງໂທດທາງຮ່າງກາຍ ແລະ ຖືກລົງໂທດປະຫານຊີວິດ ຕໍ່ກັບຄວາມຜິດທີ່ກ່ຽວຂ້ອງກັບການຄ້າມະນຸດ.

ການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍແມ່ນເປັນພັນທະຂອງລັດ, ແຕ່ພາກສ່ວນທີ່ກ່ຽວຂ້ອງໃນຂົງເຂດກົດໝາຍ, ອົງການ CSO ແລະ NGO ອາດຈະມີສ່ວນກ່ຽວຂ້ອງໃນການສະໜອງທຶນໃຫ້ແກ່ການຊ່ວຍເຫຼືອທາງດ້ານກົດໝາຍ.[93] ອົງການ CSO ແລະ NGO ມີບົດບາດທີ່ສໍາຄັນໃນການສົ່ງເສີມໃຫ້ລັດ ສະໜອງການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ໃຫ້ການຊ່ວຍເຫຼືອແກ່ຜູ້ຖືກເຄາະຮ້າຍໃນການໄຕ່ສວນ ເພື່ອໃຫ້ເຂົາເຈົ້າເຂົ້າໃຈຂະບວນການຂອງສານ ແລະ ຂັ້ນຕອນການຂໍອຸທອນ. ດ້ວຍເຫດນັ້ນ, ຈຶ່ງຕ້ອງມີກົນໄກການຮ່ວມມືລະຫວ່າງພາກລັດ ແລະ ອົງການ CSO ແລະ NGO. ຕົວຢ່າງ ໂດຍຜ່ານການສ້າງການປະສານງານຮ່ວມກັນ, ການແບ່ງປັນຊັບພະຍາກອນ ແລະ ຂໍ້ມູນກ່ຽວກັບການປະຕິບັດທີ່ດີໃນການຊ່ວຍເຫຼືອທາງດ້ານກົດໝາຍ.

**ກ່ອງຂໍ້ມູນ: ຕົວຢ່າງ (ຄວາມຜິດທາງບໍລິຫານ)**

ໃນຊ່ວງການແຜ່ລະບາດຂອງເຊື້ອພະຍາດໂຄວິດ–19, ລູກຄ້າ ຢຸດຕິການມາທ່ຽວສະຖານທີ່ບໍລິການທາງເພດ ເຊິ່ງເປັນບ່ອນທີ່ A ເຮັດວຽກ. ຜູ້ຈັດການຂອງ A ໄດ້ໃຫ້ລາວໄປບ້ານສ່ວນຕົວ ເພື່ອໃຫ້ບໍລິການລູກຄ້າ ເພື່ອໃຫ້ສືບຕໍ່ຈ່າຍໜີ້ສິນຂອງ A. ໃນຄືນໜຶ່ງ, ໃນເວລາທີ່ລາວກັບມາສະຖານທີ່ບໍລິການທາງເພດ ພາຍຫຼັງທີ່ໄປບ້ານຂອງ ລູກຄ້າ, ລາວໄດ້ຖືກເຈົ້າໜ້າທີ່ຈັບຕົວ ແລະ ຕັ້ງຂໍ້ຫາການລະເມີດພາວະສຸກເສີນ (curfews). ນາງ A ຢ້ານທີ່ຈະຖືກຕັ້ງຂໍ້ກ່າວຫາການມີສ່ວນຮ່ວມໃນອຸດສາຫະກໍາທາງເພດ ແລະ ລາວບໍ່ໄດ້ເວົ້າຫຍັງເລີຍແກ່ເຈົ້າໜ້າທີ່ຕໍາຫຼວດຕໍ່ກັບ ສະຖານະການຂອງລາວ.

*ການນໍາໃຊ້ຫຼັກການບໍ່ລົງໂທດ:* A ໄດ້ແຕ່ງຕັ້ງທະນາຍຄວາມຊ່ວຍເຫຼືອທາງດ້ານກົດໝາຍ ເພື່ອຕາງໜ້າໃຫ້ແກ່ລາວ. ພາຍຫຼັງທີ່ມີບົດສົນທະນາຮ່ວມກັນຫຼາຍຄັ້ງ, ສຸດທ້າຍແລ້ວ A ໄດ້ບອກທະນາຍຄວາມວ່າ ລາວມາແຕ່ໃສ ແລະ ກໍາລັງຈະໄປໃສ ໃນຄໍ່າຄືນນັ້ນ ແລະ ໄດ້ໃຫ້ລາຍລະອຽດບາງຢ່າງກ່ຽວກັບສະຖານະການຂອງລາວ. ທະນາຍຄວາມ ສົງໄສວ່າ A ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດກ ລາວໄດ້ສົ່ງຕໍ່ A ໄປຍັງກົນໄກການສົ່ງຕໍ່ແຫ່ງຊາດ ແລະ ກະກຽມການຕໍ່ສູ້ເພື່ອໃຫ້ມີການຍົກເລີກຂໍ້ກ່າວຫາແກ່ລາວ. ເຈົ້າໜ້າທີ່ຕໍາຫຼວດ ໄດ້ເລີ່ມການສືບສວນ-ສອບສວນແກ່ຜູ້ຈັດການຂອງ A ທີ່ສະຖານທີ່ໃຫ້ບໍລິການທາງເພດ.

92 ICCPR, ມາດຕາ 14, ຖະແຫຼງການອາຊຽນ ວ່າດ້ວຍສິດທິມະນຸດ, ມາດຕາ 20(1).

93 ຄະນະກໍາມາທິການອາຊຽນລະຫວ່າງລັດຖະບານຂອງອາຊຽນວ່າດ້ວຍສິດທິມະນຸດ (AICHR) - ຫົວຂໍ້ການຄົ້ນຄວ້າ ການຊ່ວຍເຫຼືອທາງດ້ານກົດໝາຍ (ຈາກາຕ້າ, ກອງເລຂາອາຊຽນ, ກໍລະກົດ 2019) ໜ້າ 13

### ຮັບປະກັນວ່າທະນາຍຄວາມທີ່ໃຫ້ການປົກປ້ອງ ຮູ້ນຳໃຊ້ການປ້ອງກັນແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕາມທີ່ກຳນົດໄວ້ໃນນິຕິກຳພາຍໃນ

ໂດຍສະເພາະ ໃນບັນດາປະເທດທີ່ບໍ່ໄດ້ກຳນົດ ຂໍ້ກຳນົດສະເພາະກ່ຽວກັບການບໍ່ລົງໂທດຕໍ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ໃນນິຕິກຳວ່າດ້ວຍການຕ້ານການຄ້າມະນຸດ, ຜູ້ປະຕິບັດຕົວຈິງດ້ານຍຸຕິທຳທາງອາຍາ ຕ້ອງໄດ້ອີງໃສ່ ການປ້ອງກັນທົ່ວໄປ ທີ່ກຳນົດໄວ້ໃນນິຕິກຳທາງອາຍາຂອງປະເທດຕົນແທນ. ການປ້ອງກັນ ອາດຈະກ່ຽວຂ້ອງກັບ ການປ້ອງກັນຜູ້ຖືກເຄາະຮ້າຍ ລວມທັງ ການບັງຄັບ, ຫຼອກລວງ, ຄວາມຈຳເປັນ ແລະ ການປ້ອງກັນຕົນເອງ. ຕົວຢ່າງ ບຸກຄົນໃດໜຶ່ງ ອາດຈະກະທຳຜິດທາງອາຍາ ເນື່ອງຈາກບຸກຄົນອື່ນໄດ້ຂົ່ມຂູ່ເຂົາເຈົ້າວ່າຈະຂ້າຖິ້ມ ຫຼື ມີໄພອັນຕະລາຍທີ່ຮ້າຍແຮງຕໍ່ຜູ້ຖືກເຄາະຮ້າຍ ຫຼື ຄອບຄົວຂອງເຂົາເຈົ້າ ຖ້າຫາກເຂົາເຈົ້າປະຕິເສດທີ່ຈະບໍ່ປະຕິບັດຕາມ.

ໜ່ວຍງານຕ້ານການຄ້າມະນຸດ ຄວນຮັບປະກັນກ່ຽວກັບໂອກາດໃນການສ້າງຄວາມອາດສາມາດ ແລະ ກະກຽມເອກະສານຄຳແນະນຳໃຫ້ແກ່ທະນາຍຄວາມທີ່ໃຫ້ການປົກປ້ອງ ກ່ຽວກັບວິທີການໃນການກຳນົດຕົວຜູ້ຖືກເຄາະຮ້າຍ ແລະ ນຳໃຊ້ການປ້ອງກັນທົ່ວໄປ ທີ່ກຳນົດໄວ້ໃນປະມວນ ຫຼື ກົດໝາຍອາຍາ ໃນການປ້ອງກັນຜູ້ຖືກເຄາະຮ້າຍ–ຜູ້ກະທຳຜິດ ໃນເວລາໄຕ່ສວນຄະດີ.[94]

**ກ່ອງຂໍ້ມູນ: ຕົວຢ່າງ (ການຄາດຕະກຳໂດຍບໍ່ເຈດຕະນາ)**

A ຕົກຢູ່ໃນສະຖານະການ ການຂູດຮີດທາງເພດເປັນເວລາຫຼາຍເດືອນ. ລາວຖືກຄວບຄຸມໂດຍຜູ້ຊາຍຄົນໜຶ່ງ (B) ຜູ້ທີ່ຈັບຕາເບິ່ງທຸກໆການເຄື່ອນໄຫວຂອງລາວ ແລະ ຈະລົງໂທດລາວດ້ວຍການທຸບຕີ ຖ້າຫາກ ລາວບໍ່ປະຕິບັດຕາມການຮ້ອງຂໍໃນການໃຫ້ບໍລິການລູກຄ້າ. ມື້ໜຶ່ງ A ເຫັນໂອກາດທີ່ຈະຫຼົບໜີ. ໃນເວລາ B ນອນຢູ່ຂັ້ນໄດຊັ້ນເທິງ, A ໄດ້ຍູ້ B ດ້ວຍແຮງທີ່ລາວມີທັງໝົດ. B ຕົກລົງຈາກບ່ອນນອນຊັ້ນເທິງ ແລະ ຄໍ ຫັກ. A ໄດ້ຫຼົບໜີ ແລະ ຂໍການຊ່ວຍເຫຼືອ. A ໄດ້ຊອກຫາທາງເພື່ອໄປສະຖານີຕຳຫຼວດ ແລະ ບອກຕຳຫຼວດຕໍ່ກັບສິ່ງທີ່ໄດ້ກະທຳ. A ຖືກຕຳຫຼວດຈັບໃນສະຖານການຄາດຕະກຳໂດຍບໍ່ເຈດຕະນາ.

*ການນຳໃຊ້ຫຼັກການບໍ່ລົງໂທດ:* ການນຳໃຊ້ ຂໍ້ກຳນົດຫຼັກການບໍ່ລົງໂທດ ໃນປະເທດທີ່ບໍ່ໄດ້ໃຫ້ການປົກປ້ອງ A ຈາກຂໍ້ຫາ ການຄາດຕະກຳ. ລາວຖືກຮັບຮູ້ວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ທະນາຍຄວາມທີ່ໃຫ້ການປົກປ້ອງ A ໄດ້ສະເໜີຫຼັກຖານແກ່ສານເພື່ອສະແດງໃຫ້ເຫັນເຖິງເງື່ອນໄຂ ທີ່ A ຕ້ອງມີຈຸດຈົບດັ່ງກ່າວ ແລະ ຍົກໃຫ້ເຫັນ ເຫດຜົນໃນການປ້ອງກັນຕົນເອງ. ສານໄດ້ຍົກເລີກການດຳເນີນຄະດີຕໍ່ກັບ A.

**ກ່ອງຂໍ້ມູນ: ຕົວຢ່າງ (ການລັກເຄື່ອງໃນຮ້ານຄ້າ)**

A ເຮັດວຽກເພື່ອໃຊ້ແທນໜີ້ສິນ ໃຫ້ແກ່ບຸກຄົນທີ່ພາລາວມາໃນເມືອງ ເພື່ອເຮັດວຽກໃນໂຮງງານ. ເຂົາເຈົ້າບອກລາວວ່າ ລາວບໍ່ສາມາດອອກຈາກວຽກໄດ້ຈົນກວ່າລາວຈະໃຊ້ໜີ້ໝົດ. ຄ່າທີ່ພັກຂອງລາວ ໄດ້ຖືກຫັກຈາກເງິນເດືອນ ແລະ ລາຄາອາຫານທີ່ລາວຊື້ຈາກເຂົາເຈົ້າຈະເພີ່ມຂຶ້ນໃນໜີ້ສິນຂອງລາວເປັນສາມເທົ່າ ທຽບໃສ່ລາຄາທີ່ລາວຊື້ຈາກບ່ອນອື່ນ. ເພື່ອທີ່ຈະທ້ອນເງິນ ແລະ ເຮັດໃຫ້ເວລາທີ່ລາວຈະຢູ່ສະຖານທີ່ດັ່ງກ່າວສັ້ນລົງ, ລາວກິນໜ້ອຍຫຼາຍກວ່າຄວາມຕ້ອງການ ຂອງຕົນ ແລະ ມັກຈະຫິວຕະຫຼອດ. ມື້ໜຶ່ງ, ລາວໄປຮ້ານຄ້າໃນທ້ອງຖິ່ນ ລາວຊື້ອາຫານຈຳນວນໜຶ່ງ ແລະ ລັກເອົາອາຫານບາງຢ່າງໃສ່ກະເປົາລາວ. ລາວຖືກຈັບໄດ້ ແລະ ຖືກຈັບຕົວ ໃນສະຖານການລັກເຄື່ອງ.

*ການນຳໃຊ້ຫຼັກການບໍ່ລົງໂທດ:* ຜູ້ຕາງໜ້າທາງດ້ານກົດໝາຍຂອງ A ຮູ້ເຖິງສະພາບແວດລ້ອມທີ່ A ຕ້ອງລັກເຄື່ອງໃນຮ້ານຄ້າ. ລາວໄດ້ແຈ້ງໃຫ້ໜ່ວຍງານຕ້ານການຄ້າມະນຸດຊາບ ກ່ຽວກັບຄວາມສົງໄສຂອງລາວທີ່ວ່າ A ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ສະໜອງຫຼັກຖານແກ່ເຂົາເຈົ້າ ເທົ່າທີ່ເຮັດໄດ້ ເພື່ອໃຫ້ການສະໜັບສະໜູນ ໂດຍມີຄວາມຫວັງວ່າ ຕຳຫຼວດຈະດຳເນີນການສືບສວນ-ສອບສວນ. ໃນເວລາດຽວກັນ, ໃນເວລາໄຕ່ສວນ ລາວໄດ້ຍົກປະເດັນກ່ຽວກັບຫຼັກການບໍ່ລົງໂທດ ບົນພື້ນຖານນິຕິກຳໃນປະເທດຂອງລາວ ເຊິ່ງມີການກຳນົດ ການປ້ອງກັນຜູ້ຖືກເຄາະຮ້າຍຈາກການລົງໂທດ ສຳລັບຄວາມຜິດທີ່ເຂົາເຈົ້າໄດ້ກະທຳ ທີ່ເປັນຜົນສະທ້ອນໂດຍກົງຈາກອາຊະຍາກຳ. ເຖິງຢ່າງໃດກໍຕາມ, ຈຸດຢືນຂອງຕຳຫຼວດ, ພະນັກງານໄອຍະການ ເຫັນວ່າ ຂໍ້ກຳນົດດັ່ງກ່າວ ມີສະເພາະຄວາມຜິດທີ່ກ່ຽວຂ້ອງກັບການເຂົ້າອອກ–ເມືອງ ແລະ ການເປັນໂສເພນີເທົ່ານັ້ນ. ທະນາຍຄວາມຂອງ A ໄດ້ຍົກປະເດັນຄວາມຈຳເປັນໃນການປ້ອງກັນແທນ. ລາວໄດ້ສະໜັບສະໜູນ ຂໍ້ໂຕ້ແຍ່ງຂອງລາວໂດຍຄຳໃຫ້ການຂອງ ພະຍານທີ່ເປັນຜູ້ຊ່ຽວຊານ ເຊິ່ງເປັນທ່ານໝໍ ເຊິ່ງຢືນຢັນວ່າ ໃນເວລາທີ່ A ຖືກຈັບຕົວ ລາວຢູ່ໃນສະພາບການທີ່ອ່ອນເພຍ.

94 ຕົວຢ່າງ, ມາດຕາ 35 ຂອງປະມວນກົດໝາຍອາຍາ ປີ 2017 ຂອງ ສປປ ລາວ ຍົກເວັ້ນຄວາມຮັບຜິດຊອບຕໍ່ການກະທຳຜິດໃດໜຶ່ງ ທີ່ຢູ່ພາຍໃຕ້ການບັງຄັບ ຫຼື ບີບບັງຄັບ, ມາດຕາ 65 ການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ ກໍລະນີການກະທຳຜິດອາຍາທີ່ຮ້າຍແຮງ ເນື່ອງຈາກຖືກບັງຄັບ ຫຼື ຂົ່ມຂູ່ ຫຼື ບີບບັງຄັບ. ເຊັ່ນດຽວກັບມາດຕາ 22 ຂອງປະມວນກົດໝາຍອາຍາຂອງຫວຽດນາມ ທີ່ກຳນົດວ່າ “ການປ້ອງກັນທີ່ສົມເຫດສົມຜົນ” ຈະບໍ່ມີຄວາມຜິດທາງອາຍາ.

## ສົ່ງເສີມການຕີຄວາມໝາຍຢ່າງກວ້າງຂວາງ ແລະ ການນຳໃຊ້ການປ້ອງກັນ ໃນບໍລິບົດຂອງການຄ້າມະນຸດ

ການນຳໃຊ້ວິທີການທີ່ເຂັ້ມງວດໃນການປ້ອງກັນທົ່ວໄປ ອາດຈະເຮັດໃຫ້ບໍ່ສາມາດກວມເອົາຄວາມສະລັບ ຊັບຊ້ອນຂອງການຄ້າມະນຸດໄດ້ ແລະ ອາດເປັນອຸປະສັກໃນການປົກປ້ອງຈາກການລົງໂທດ. ເຊິ່ງຂຶ້ນກັບວິທີການສະແດງ ແລະ ການຕີຄວາມໝາຍ ຂອງການປ້ອງກັນກັບການບີບບັງຄັບ, ມີຄວາມສ່ຽງທີ່ອາດຈະກວມເອົາສະເພາະ ສະຖານະການທີ່ຜູ້ຖືກເຄາະຮ້າຍໄດ້ກະທຳ ເນື່ອງຈາກການຂົ່ມຂູ່ທີ່ຮຸນແຮງ ຫຼື ຮ້າຍແຮງ ແຕ່ບໍ່ສາມາດກວມ ເອົາວິທີການທີ່ເໜືອກວ່ານັ້ນ ທີ່ຜູ້ຄ້າມະນຸດ ນຳໃຊ້ເພື່ອບັງຄັບ ຫຼື ຈັດການກັບຜູ້ຖືກເຄາະຮ້າຍ ເຊັ່ນ ການນຳໃຊ້ອຳນາດຂົ່ມຂູ່.

ຕົວຢ່າງ, ການພິຈາລະນາ ສະຖານະການຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈາກການຖືກຂູດຮີດທາງເພດ ເຊິ່ງຜັນຕົວຈາກການບໍລິການລູກຄ້າ ໄປເປັນຜູ້ຄວບຄຸມຜູ້ຖືກເຄາະຮ້າຍຄົນອື່ນແທນ. ສະຖານະການນີ້ ເກີດຂຶ້ນໂດຍ ຜ່ານຄວາມສຳພັນແບບຄວາມຮັກຂອງລາວ ແລະ ສະພາບການທີ່ຂຶ້ນກັບຜູ້ຄ້າມະນຸດ. ສານ ນຳໃຊ້ວິທີການທີ່ຈຳກັດ ຕໍ່ກັບການປ້ອງກັນຈາກການບີບບັງຄັບ, ອາດຈະບໍ່ໄດ້ພິຈາລະນາວ່າຜູ້ຖືກເຄາະຮ້າຍ ໄດ້ຖືກບັງຄັບໃຫ້ປະຕິບັດໜ້າທີ່ ເຊິ່ງຈະເຮັດໃຫ້ມີການປະຕິບັດຕໍ່ລາວໃນຖານະຜູ້ຄ້າມະນຸດ ໂດຍບໍ່ນຳໃຊ້ຫຼັກການບໍ່ລົງໂທດ. ວິທີການທີ່ກວ້າງຂວາງຂຶ້ນ ຕໍ່ກັບການປ້ອງກັນຈາກການບີບບັງຄັບ ອາດຈະຕ້ອງໄດ້ພິຈາລະນາຕໍ່ກັບສະພາບແວດລ້ອມຂອງຜູ້ຖືກເຄາະຮ້າຍລວມທັງ ສະຖານະຄວາມສ່ຽງຂອງຜູ້ຖືກເຄາະຮ້າຍ, ຄວາມສຳພັນທີ່ຂຶ້ນກັບບຸກຄົນອື່ນ ແລະ ຄວາມຢ້ານກົວຕໍ່ກັບຜູ້ຄ້າມະນຸດ ຈະຊ່ວຍໃຫ້ຜູ້ຖືກເຄາະຮ້າຍ ຫຼຸດຜ່ອນສະຖານະການຂອງຕົນເອງອີກຄັ້ງ. ວິທີການທີ່ກວ້າງຂວາງນັ້ນ ອາດຮັບຮູ້ເຖິງ ຮູບແບບການບັງຄັບທີ່ສະລັບຊັບຊ້ອນທີ່ຖືກນຳໃຊ້ນັ້ນ ເພື່ອໃຫ້ສາມາດນຳໃຊ້ກັບການປ້ອງກັນຈາກການບີບບັງຄັບ ແລະ ການປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ.[95]

ກ່ອງຂໍ້ມູນ: ຕົວຢ່າງ (ການຄ້າມະນຸດ)

ມີສອງຄົນ ທີ່ຖືກຈັບ (A ແລະ B) ແລະ ຖືກຕັ້ງຂໍ້ຫາກ່ຽວກັບການຄ້າມະນຸດ ບົນພື້ນຖານທີ່ເຂົາເຈົ້າ ໄດ້ສວຍໃຊ້ອຳນາດຂົ່ມຂູ່ເດັກຍິງສອງຄົນ ແລະ ຍິງໄວໜຸ່ມໜຶ່ງຄົນ ເພື່ອຂົ່ມຂູ່ ແລະ ນຳພາເຂົາເຈົ້າມາໃນຕົວເມືອງ ເພື່ອຈຸດປະສົງໃນການຂູດຮີດເຂົາເຈົ້າໃຫ້ເປັນໂສເພນີ. ທັງ A ແລະ B ຖືກຈັບຕົວ ແລະ ຕັ້ງຂໍ້ຫາການຄ້າມະນຸດ.

*ການນຳໃຊ້ຫຼັກການບໍ່ລົງໂທດ:* ສານຂັ້ນຕົ້ນ ເຫັນວ່າ A ບໍ່ແມ່ນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນເວລາທີ່ລາວກະທຳຜິດທາງອາຍາ. ໃນເວລາທີ່ລາວຖືກຄ້າມະນຸດ ໃນເບື້ອງຕົ້ນນັ້ນ ລາວໄດ້ອອກຈາກການເປັນ ຜູ້ຖືກເຄາະຮ້າຍ ແລະ ກາຍມາເປັນຜູ້ຄ້າມະນຸດ ແລະ ໃນເວລາເປັນຜູ້ຄ້າມະນຸດ ລາວໄດ້ກະທຳຜິດທາງອາຍາ. ສານຂັ້ນອຸທອນ ໄດ້ຍົກເລີກຄະດີ ຕໍ່ກັບ A ເນື່ອງຈາກວ່າ ລາວຢູ່ໃນກຸ່ມດຽວກັບກຸ່ມສ່ຽງ ແລະ ກຸ່ມຄົນທຸກຍາກ ເຊິ່ງຖືກລ່ວງລະເມີດໂດຍຜູ້ຖືກຫາອື່ນ ແລະ ເນື່ອງຈາກວ່າລາວໄດ້ໜີອອກຈາກການເປັນໂສເພນີ, ລາວໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນຈາກຈຳເລີຍ.[96]

## ຮັບປະກັນວ່າທະນາຍຄວາມທີ່ໃຫ້ການປົກປ້ອງ ເຂົ້າໃຈ ຄວາມບໍ່ກ່ຽວຂ້ອງຂອງການຍິນຍອມ ໃນປ້ອງກັນການຄ້າມະນຸດ

ອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ ແລະ ສົນທິສັນຍາ ACTIP ໄດ້ລະບຸວ່າ ຄວາມຍິນຍອມຂອງຜູ້ຖືກເຄາະຮ້າຍ ໃນການຂູດຮີດແມ່ນບໍ່ມີຄວາມກ່ຽວຂ້ອງ (ທີ່ເປັນການປ້ອງກັນ) ກໍລະນີທີ່ ວິທີການຖືກນຳໃຊ້ກັບຜູ້ໃຫຍ່ ແລະ ບໍ່ຈຳເປັນຕ້ອງມີການພິສູດວິທີການ ຕໍ່ກັບກໍລະນີທີ່ກ່ຽວຂ້ອງກັບເດັກ.[97]

ທະນາຍຄວາມ ທີ່ຕາງໜ້າໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ເປັນຜູ້ໃຫຍ່ ທີ່ຖືກດຳເນີນຄະດີ ຄວນເຂົ້າໃຈຄວາມບໍ່ກ່ຽວຂ້ອງ ກ່ຽວກັບການຍິນຍອມຂອງຜູ້ຖືກເຄາະຮ້າຍ ເພື່ອໃຫ້ເຂົາເຈົ້າສາມາດນຳເອົາຂໍ້ດັ່ງກ່າວ ມາໂຕ້ແຍ່ງກັບພະນັກງານໄອຍະການທີ່ກ່າວວ່າ ຜູ້ຖືກເຄາະຮ້າຍຍິນຍອມເຂົ້າຮ່ວມການກະທຳທີ່ຜິດກົດໝາຍ.[98] ທະນາຍຄວາມທີ່ໃຫ້ການປົກປ້ອງ ຄວນມີຄວາມພ້ອມໃນການໂຕ້ຖຽງກ່ຽວກັບອົງປະກອບດ້ານເຈດຕະນາຂອງການກະທຳຜິດ (mens rea) ທີ່ພະນັກງານໄອຍະການ ນຳມາພິສູດກ່ຽວກັບການກ່າວຫາຄວາມຜິດຂອງຜູ້ຖືກເຄາະຮ້າຍ. ດ້ວຍການສະແດງໃຫ້ເຫັນວ່າ ການນຳໃຊ້ວິທີການ ຂອງຜູ້ຖືກເຄາະຮ້າຍ ຫຼື ໂດຍຜູ້ຖືກເຄາະຮ້າຍ, ຫຼຸດຜ່ອນການຍິນຍອມຂອງຜູ້ຖືກເຄາະຮ້າຍ ໃນການເຂົ້າຮ່ວມ

95 ເບິ່ງຕົວຢ່າງຂອງຄະດີ C.M.S y Guillemet Gastón, ສັງລວມໄວ້ບ່ອນນີ້: https://sherloc.unodc.org/cld//case-law-doc/traffickingpersonscrimetype/arg/2018/c.m.s._y_guillemet_gaston_.html?lng=en&tmpl=sherloc

96 ຄະດີນີ້ອີງຕາມຄະດີປະເທດອາເຈນຕິນາ C.M.S y Guillemet Gastón,

97 ເບິ່ງມາດຕາ 2(b) ຂອງສົນທິສັນຍາ ACTIP ແລະ ມາດຕາ 3(b) ຂອງອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ

98 ຂໍ້ມູນເພີ່ມເພີ່ມກ່ຽວກັບ ຄວາມບໍ່ກ່ຽວຂ້ອງກັບການຍິນຍອມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ເບິ່ງເພີ່ມເຕີມໄດ້ທີ່: ບົດບາດຂອງ 'ການຍິນຍອມ' ໃນອານຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ (UNODC, 2014)

ການກະທຳທີ່ຜິດກົດໝາຍ, ເຂົາເຈົ້າສາມາດພິສູດວ່າ ຜູ້ຖືກເຄາະຮ້າຍ ບໍ່ມີເຈດຕະນາທີ່ຈະກະທຳຜິດ ເຊິ່ງບໍ່ຈຳເປັນຕ້ອງມີຄວາມຮັບຜິດຊອບທາງອາຍາ ທີ່ເຂົາເຈົ້າຖືກຫາວ່າກະໄດ້ທຳ.[99]

ຕາມທີ່ໄດ້ອະທິບາຍໄວ້ຂ້າງເທິງ, ວິທີການທີ່ຜູ້ຖືກເຄາະຮ້າຍນຳໃຊ້ ເພື່ອທຳລາຍຄວາມຍິນຍອມຂອງຜູ້ຖືກເຄາະຮ້າຍ ທີ່ອາດຈະຍິນຍອມໃຫ້ຂູດຮີດເຂົາເຈົ້າ, ອາດເປັນວິທີການທີ່ຈະແຈ້ງ (ເຊັ່ນ ການບັງຄັບ) ລວມທັງວິທີການທີ່ຊັບຊ້ອນ (ເຊັ່ນການບີບບັງຄັບ ແລະ ການສວຍໃຊ້ສະຖານະຄວາມສ່ຽງທີ່ຜູ້ຖືກເຄາະຮ້າຍຈະຖືກລະເມີດ). ນີ້ແມ່ນເປັນຄວາມສ່ຽງ ກ່ຽວກັບພັນທະໃນການພິສູດ ເຊິ່ງອາດຈະຕົກມາເປັນພັນທະຂອງຜູ້ຖືກເຄາະຮ້າຍ ໃນການນຳເອົາຫຼັກຖານມາພິສູດຕໍ່ກັບການຂົ່ມຂູ່ນັ້ນ, ໝາຍຄວາມວ່າ ການປ້ອງກັນ ອາດຈະມີຂໍ້ຈຳກັດຫຼາຍວ່າຫຼັກການບໍ່ລົງໂທດ.[100] ນອກນັ້ນ, ການປ້ອງກັນທົ່ວໄປ ຄວນຈະມີການຕີຄວາມໝາຍຢ່າງກວ້າງຂວາງ ເພື່ອຮັບປະກັນວ່າໄດ້ກວມເອົາຮູບແບບການບັງຄັບທີ່ຊັບຊ້ອນ ລວມທັງ “ວິທີການ” ທັງໝົດ ທີ່ກຳນົດໄວ້ໃນນິຍາມຂອງການຄ້າມະນຸດໃນມາດຕາ 3 ຂອງອາຍຸສັນຍາວ່າດ້ວຍການຕ້ານການຄ້າມະນຸດ ແລະ ມາດຕາ 2 (a) ຂອງ ສົນທິສັນຍາ ACTIP.[101] ໃນກໍລະນີທີ່ເປັນເດັກ ບໍ່ຈຳເປັນຕ້ອງມີການພິສູດ ວິທີການ ທີ່ເຮັດໃຫ້ເຂົາເຈົ້າຖືກຄ້າມະນຸດ, ຄວນມີການນຳໃຊ້ການປ້ອງກັນ ທີ່ກຳນົດໄວ້ໃນນິຕິກຳພາຍໃນ ບໍ່ວ່າຈະເປັນ “ວິທີການ” ໃດກໍຕາມ ທີ່ນຳໃຊ້ເພື່ອຄ້າມະນຸດແກ່ເຂົາເຈົ້າ.

ເພື່ອໃຫ້ການສະໜັບສະໜູນວຽກງານຂອງທະນາຍຄວາມທີ່ໃຫ້ການປົກປ້ອງ, ລັດ ຄວນພິຈາລະນາຝຶກອົບຮົມໃຫ້ແກ່ ຜູ້ປະຕິບັດຕົວຈິງ ເພື່ອສັງລວມ ແລະ ນຳສະເໜີຫຼັກຖານກ່ຽວກັບ “ວິທີການ” ທີ່ຜູ້ຄ້າມະນຸດນຳໃຊ້ ເພື່ອຄວບຄຸມຜູ້ຖືກ ເຄາະຮ້າຍ ແລະ ທຳລາຍການຍິນຍອມຂອງເຂົາເຈົ້າ. ການສ້າງຄວາມອາດສາມາດ ຄວນລວມມີການຝຶກອົບຮົມສະເພາະ ດ້ານ ຜ່ານກໍລະນີສຶກສາ, ກໍລະນີສົມມຸດ ແລະ ວິທີການການປ້ອງກັນທີ່ມີການອັບເດດຢ່າງເປັນປົກກະຕິ. ຈຳເປັນຕ້ອງມີ ຊັບພະຍາກອນທີ່ພຽງພໍ ເພື່ອຈັດຫາໃຫ້ແກ່ທະນາຍຄວາມ ໃນການເຂົ້າເຖິງເຄື່ອງມືແນະນຳ ແລະ ການສະໜັບສະໜູນດ້ານ ວິຊາການ ເພື່ອຮັບມືກັບຄະດີທີ່ມີຄວາມຊັບຊ້ອນ.

**ຄຳແນະນຳຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ**

ໃນເວລາລໍຖ້າການຈັດຕັ້ງປະຕິບັດ ຂໍ້ກຳນົດສະເພາະທາງດ້ານກົດໝາຍກ່ຽວກັບການບໍ່ລົງໂທດ, ລັດ ຄວນປະຕິບັດໃຫ້ສອດຄ່ອງກັບພັນທະຂອງຕົນກ່ຽວກັບຫຼັກການບໍ່ລົງໂທດ ດ້ວຍການຕີຄວາມໝາຍ ບັນຖັດຖານທາງດ້ານກົດໝາຍພາຍໃນທີ່ມີຢູ່ ລວມທັງການປ້ອງກັນ ການບີບບັງຄັບ ຫຼື ສະພາວະຄວາມຈຳເປັນ ເຊິ່ງເປັນຂໍ້ກຳນົດທົ່ວໄປໃນການຍົກເວັ້ນ ຄວາມຮັບຜິດຊອບ. ລັດຄວນຮັບປະກັນວ່າ ການປ້ອງກັນເຫຼົ່ານັ້ນ ໄດ້ຖືກດັດປັບ ໃຫ້ເຂົ້າກັບບໍລິບົດຂອງການຄ້າມະນຸດ, ຮັບຮູ້ເຖິງຮູບແບບຕ່າງໆຂອງການບັງຄັບທີ່ມີຄວາມສະຫລັບຊັບຊ້ອນ ທີ່ຜູ້ຖືກເຄາະຮ້າຍເຄີຍມີປະສົບການຜ່ານມາ, ລວມທັງ ການສວຍໃຊ້ສະຖານະຄວາມສ່ຽງທີ່ຈະຖືກລະເມີດ ແລະ ວິທີການທັງໝົດ ຕາມທີ່ກຳນົດໄວ້ໃນນິຍາມການຄ້າມະນຸດ.[102]

## [10] ສ້າງຄວາມອາດສາມາດໃຫ້ແກ່ສະມາຊິກຕຸລາການ ເພື່ອນຳໃຊ້ຫຼັກການບໍ່ລົງໂທດ

ຜູ້ພິພາກສາ ທີ່ເປັນຜູ້ຕັດສິນຄະດີ ສຳລັບຄວາມຜິດຂອງຜູ້ຖືກເຄາະຮ້າຍ ເຊິ່ງຈະໄດ້ໄຕ່ສວນໃນທີ່ປະຊຸມສານ ກ່ຽວກັບຄວາມຜິດດັ່ງກ່າວ, ອາດຈະບໍ່ມີຄວາມຄຸ້ນເຄີຍຕໍ່ກັບຄວາມຊັບຊ້ອນຂອງອາຊະຍາກຳການຄ້າມະນຸດ. ກໍລະນີທີ່ເຂົາເຈົ້າ ບໍ່ມີຄວາມເຂົ້າໃຈກ່ຽວກັບການຄ້າມະນຸດ, ເຂົາເຈົ້າອາດຈະບໍ່ພິຈາລະນາ ການເຊື່ອມໂຍງລະຫວ່າງ ຄວາມຜິດຂອງບຸກຄົນທີ່ຖືກກ່າວຫາ ແລະ ສະຖານະຂອງເຂົາເຈົ້າໃນຖານະຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ເຂົາເຈົ້າອາດຈະບໍ່ຮັບຮູ້ເຖິງຫຼັກການບໍ່ລົງໂທດ. ສະມາຊິກຕຸລາການ ຈຳເປັນຕ້ອງຄຳນຶງເຖິງການຄ້າມະນຸດ.

99 “ວິທີການ” ຕາມທີ່ກຳນົດໄວ້ໃນມາດຕາ 3 ຂອງອານຸສັນຍາວ່າດ້ວຍຕ້ານການຄ້າມະນຸດ ແລະ ມາດຕາ 2(a) ຂອງສົນທິສັນຍາ ACTIP ມີ: ການຂົ່ມຂູ່ ຫຼື ນຳໃຊ້ການບັງຄັບ ຫຼື ຮູບແບບການບັງຄັບອື່ນ, ການລັກພາຕົວ, ສໍ້ໂກງ, ຫຼອກລວງ, ສວຍໃຊ້ອຳນາດ ຫຼື ໃຊ້ອຳນາດແກ່ບຸກຄົນທີ່ອ່ອນແອກວ່າ, ການໃຫ້ ຫຼື ຮັບເງິນ ຫຼື ຜົນປະໂຫຍດແກ່ບຸກຄົນ ເພື່ອຄວບຄຸມຜູ້ຖືກເຄາະຮ້າຍ.

100 ຕົວຢ່າງ, ຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໄດ້ກ່າວເຖິງຄວາມແຕກຕ່າງລະຫວ່າງ ການປ້ອງກັນຕົນຈາກການບີບບັງຄັບ ຕາມທີ່ກຳນົດໄວ້ໃນທຳມະນູນຂອງສານອາຍາສາກົນ, ແລະ ມັນຖືກນຳໃຊ້ໃນຄະດີ ລະຫວ່າງ ພະນັກງານໄອຍະການ ແລະ Dominic Ongwen ຈາກຫຼັກການບໍ່ລົງໂທດຢ່າງກວ້າງຂວາງ. ເບິ່ງທີ່ ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດບົດລາຍງານຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ , Siobhán Mullaly, UN Doc. A/HRC/47/34 (ວັນທີ 17 ພຶດສະພາ 2021, ວັກທີ 51

1 1 ເບິ່ງທີ່ ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດບົດລາຍງານຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ , Siobhán Mullaly, UN Doc. A/HRC/47/34 (ວັນທີ 17 ພຶດສະພາ 2021, ວັກທີ 58

102 ແຫຼ່ງຂໍ້ມູນ: ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ບົດລາຍງານຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ , Siobhán Mullaly, UN Doc. A/HRC/47/34 ວັນທີ 17 ພຶດສະພາ 2021, [67]

## ສ້າງຄວາມເຂົ້າໃຈໃຫ້ແກ່ຜູ້ພິພາກສາ ຮູ້ເຖິງອົງປະກອບຂອງການຄ້າມະນຸດ ແລະ ນໍາໃຊ້ຫຼັກການບໍ່ລົງໂທດ

ພາກສ່ວນທີ່ກ່ຽວຂ້ອງທີ່ເຮັດວຽກງານຕ້ານການຄ້າມະນຸດ ຄວນສ້າງຄວາມເຂົ້າໃຈໃຫ້ແກ່ສະມາຊິກຕຸລາການ ກ່ຽວກັບຄໍານິຍາມຂອງການຄ້າມະນຸດ ແລະ ປະຕິສໍາພັນລະຫວ່າງ ອົງປະກອບຂອງການຄ້າມະນຸດ ແລະ ຄວາມຜິດຂອງຜູ້ຖືກເຄາະຮ້າຍ. ຜູ້ພິພາກສາຄວນຈະສ້າງຄວາມຄຸ້ນເຄີຍໃຫ້ແກ່ຕົນເອງ ກ່ຽວກັບຫຼັກການບໍ່ລົງໂທດໃນກົດໝາຍພາຍໃນ, ນະໂຍບາຍ ແລະ ເອກະສານແນະນໍາ ລວມທັງ ຂໍ້ຕົກລົງລະຫວ່າງປະເທດ ແລະ ຂໍ້ຕົກລົງສອງຝ່າຍ ແລະ ແຈ້ງໃຫ້ເຂົາເຈົ້າຮັບຮູ້ກ່ຽວກັບ ໂອກາດທີ່ເຂົາເຈົ້າຈະຢຸດຕິການດໍາເນີນຄະດີຕໍ່ຜູ້ຖືກເຄາະຮ້າຍ ກໍລະນີທີ່ມີຄວາມເຊື່ອມໂຍງລະຫວ່າງ ການຄ້າມະນຸດ ແລະ ຄວາມຜິດຂອງເຂົາເຈົ້າ. ຜູ້ພິພາກສາ ຄວນໄດ້ຮັບໂອກາດໃນການສ້າງຄວາມອາດສາມາດຢ່າງຕໍ່ເນື່ອງ ລວມທັງ ສິ່ງທີ່ຕິດພັນກັບພັນທະໃນກົດໝາຍພາຍໃນ ແລະ ກົດໝາຍວ່າດ້ວຍສິດທິມະນຸດລະຫວ່າງປະເທດ ຄຽງຄູ່ກັບ ການບໍ່ລົງໂທດ, ເພື່ອໃຫ້ເຂົາເຈົ້າ ມີຄວາມຮູ້ທັນກັບເຫດການ ແລະ ຄວາມຮູ້ທີ່ກ່ຽວຂ້ອງແລະ ເພື່ອຮັບປະກັນເຂົາເຈົ້າປົກປ້ອງສິດທິຂອງພາກສ່ວນທີ່ກ່ຽວຂ້ອງຢ່າງເໝາະສົມ.

ຜູ້ພິພາກສາ ຄວນພິຈາລະນາວ່າ ລະບົບກົດໝາຍຂອງຕົນ ສາມາດອໍານວຍຄວາມສະດວກ ໃຫ້ມີປະສິດທິພາບແນວໃດ ກ່ຽວກັບ ການນໍາໃຊ້ການປ້ອງກັນທີ່ກ່ຽວຂ້ອງ ໂດຍບໍ່ເອື່ອຍອີງໃສ່ຂໍ້ລິເລີ່ມການປ້ອງກັນ ຫຼື ການດໍາເນີນຄະດີ ພຽງຢ່າງ ດຽວ. ເຊິ່ງເປັນການປະຕິບັດທີ່ເປັນຕົວແບບທີ່ດີ ສໍາລັບສານເພື່ອພິຈາລະນາ ການປ້ອງກັນທີ່ກ່ຽວຂ້ອງ ທີ່ອາດຈະມີຢູ່ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຖິງວ່າ ການປ້ອງກັນ ຫຼື ການດໍາເນີນຄະດີ ຈະບໍ່ໄດ້ກ່າວເຖິງກໍຕາມ.[103]

## ຮັບປະກັນວ່າ ຜູ້ພິພາກສາເຂົ້າໃຈບົດບາດ ແລະ ຄວາມຮັບຜິດຊອບຂອງເຂົາເຈົ້າ ໃນການກັກຂັງຜູ້ຖືກເຄາະຮ້າຍ

ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຄວນໄດ້ຮັບການປົກປ້ອງຈາກການຖືກກັກຂັງ ໂດຍບໍ່ມີເຫດຜົນ ໃນບໍລິບົດຂອງການກະທໍາຜິດທາງອາຍາ ຫຼື ບໍລິບົດການເຂົ້າ–ອອກເມືອງ ແລະ ໃນບໍລິບົດທີ່ໃຫ້ພັກອາໄສຢູ່ໃນສູນພັກເຊົາແບບປິດ. ຖະແຫຼງການຂອງອາຊຽນວ່າດ້ວຍສິດທິມະນຸດ ແລະ ສົນທິສັນຍາສາກົນວ່າດ້ວຍສິດທິດ້ານພົນລະເມືອງ ແລະ ການເມືອງ ໄດ້ປົກປ້ອງສິດທິຂອງບຸກຄົນ ທີ່ຈະບໍ່ຖືກກັກຂັງໂດຍບໍ່ມີເຫດຜົນ. ຜູ້ພິພາກສາມີບົດບາດສໍາຄັນ ໃນການສັ່ງ ໃຫ້ປ່ອຍຕົວບຸກຄົນໃດໜຶ່ງອອກຈາກສະຖານທີ່ກັກຂັງ ເຊິ່ງຖືກກັກຂັງໂດຍບໍ່ມີເຫດຜົນ[104] ເຊິ່ງຂັດກັບຫຼັກການບໍ່ລົງໂທດ ແລະ ພັນທະດ້ານສິດທິມະນຸດອື່ນໆ ດ້ວຍການສັ່ງໃຫ້ມີການປຽວຢາ, ລວມທັງ ໄດ້ຮັບຄ່າຊົດເຊີຍໃນການກັກຂັງໂດຍບໍ່ຖືກຕ້ອງຈາກລັດ. ຕົວຢ່າງ, ນິຕິກໍາຂອງປະເທດຟີລິບປິນ ໃຫ້ສິດແກ່ບຸກຄົນທີ່ຖືກກັກຂັງແບບບໍ່ເປັນທໍາ ຫຼື ແບບບໍ່ມີເຫດຜົນໂດຍໜ່ວຍງານພາກລັດ ເພື່ອໃຫ້ສິດໃນການຮ້ອງຂໍຄ່າຊົດເຊີຍ.[105]

ໜ່ວຍງານຕ້ານການຄ້າມະນຸດ ແລະ ສະຖາບັນສິດທິມະນຸດແຫ່ງຊາດ (ບ່ອນທີ່ມີຢູ່) ຄວນສະໜັບສະໜູນສະມາຊິກ ຝ່າຍຕຸລາການໃຫ້ເຂົ້າໃຈບົດບາດຂອງຫຼັກການບໍ່ລົງໂທດ ໃນການໄຕ່ສວນຄະດີ ໃນການຮຽກຮ້ອງໃຫ້ມີຄໍາສັ່ງຂອງສານ (habeas corpus) ກ່ອນທີ່ຈະມີການກັກຂັງຜູ້ຖືກເຄາະຮ້າຍ. ລັດຄວນຮັບປະກັນວ່າ ມີຄູ່ມືແນະນໍາ ເພື່ອໃຫ້ ຜູ້ຖືກເຄາະຮ້າຍທີ່ຖືກຕັດສິນໂດຍບໍ່ຖືກຕ້ອງ ເຂົ້າໃຈວິທີການໃນການເຂົ້າເຖິງຊ່ອງທາງການຂໍຄ່າຊົດເຊີຍ.

ກົນໄກການເບິ່ງແຍງດູແລ / ຫຼື ການປະເມີນ ສາມາດເປັນປະໂຫຍດແກ່ການສ້າງຄວາມເຂົ້າໃຈວ່າ ຫຼັກການບໍ່ລົງໂທດ ໄດ້ຖືກນໍາໃຊ້ ຫຼື ບໍ່. ໜ່ວຍງານຕ້ານການຄ້າມະນຸດ ແລະ ສະຖາບັນສິດທິມະນຸດແຫ່ງຊາດ ມີບົດບາດມີຫ້າວຫັນໃນ ການສະໜັບສະໜູນການຕິດຕາມກວດກາ ແລະ ປະເມີນ ການນໍາໃຊ້ຫຼັກການບໍ່ລົງໂທດ ໃນເວລາທີ່ຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດປະເຊີນໜ້າກັບການໄຕ່ສວນຄະດີ.

103 ຄໍາແນະນໍາກ່ຽວກັບບັນຫາການຕອບໂຕ້ຄວາມຍຸຕິທໍາທາງອາຍາທີ່ເໝາະສົມຕໍ່ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທໍາຜິດຍ້ອນຖືກຄ້າມະນຸດ: ເອກະສານຄວາມເປັນມາ ກະກຽມໂດຍ ກອງເລຂາ ຄະນະປະຕິບັດງານຕ້ານການຄ້າມະນຸດ, ວຽນນາ ວັນທີ 10 ແລະ 11 ກັນຍາ 2020, UN Doc. CTOC/COP/WG.4/2020/2 (ວັນທີ 15 ມິຖຸນາ 2020), ວັກທີ 66

104 ICCPR, ມາດຕາ 9(4) ແລະ ຖະແຫຼງການອາຊຽນວ່າດ້ວຍສິດທິມະນຸດ, ມາດຕາ 12.

105 ກົດໝາຍວ່າດ້ວຍສາທາລະນະ ປະເທດຟີລິປິນ (ວັນທີ 30 ມີນາ 1992) (ກົດໝາຍວ່າດ້ວຍການສ້າງຕັ້ງຄະນະບໍລິຫານເພື່ອຮຽກຮ້ອງ ພາຍໃຕ້ກະຊວງຍຸຕິທໍາ ສໍາລັບຜູ້ຖືກເຄາະຮ້າຍ ທີ່ຖືກກັກຂັງ ຫຼື ລົງໂທດຕັດອິດສະລະພາບໂດຍບໍ່ເປັນທໍາ ແລະ ຜູ້ຖືກເຄາະຮ້າຍຈາກການລະເມີດອາຊະຍາກໍາທີ່ຮຸນແຮງ ແລະ ເພື່ອຈຸດປະສົງອື່ນໆ) ເພື່ອໃຫ້ສິດແກ່ບຸກຄົນດັ່ງກ່າວ ໃນການຮ້ອງຂໍເອົາຄ່າຊົດເຊີຍ ລວມທັງບຸກຄົນທີ່ຖືກກັກໂດຍບໍເປັນທໍາ ແລະ ຖືກປ່ອຍຕົວ ໂດຍບໍ່ມີຂໍ້ຫາໃດໆ ຫຼື ບຸກຄົນທີ່ຖືກກັກຂັງໂດຍພະລະການຂອງເຈົ້າໜ້າທີ່.

### ສ້າງຄວາມເຂົ້າໃຈໃຫ້ແກ່ຜູ້ພິພາກສາ ກ່ຽວສິດທິໃນການໄຕ່ສວນຄະດີທີ່ເປັນທຳນັ້ນ ເປັນການສະໜັບສະໜູນການບໍ່ລົງໂທດແນວໃດ

ສິດໃນການພິຈາລະນາຄະດີທີ່ເປັນທຳ ແລະ ຂະບວນການທາງກົດໝາຍ ແມ່ນມີຄວາມສຳຄັນໃນການນຳໃຊ້ຫຼັກການບໍ່ລົງ ໂທດຢ່າງມີປະສິດທິພາບ ໃນຄະດີທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີການໄຕ່ສວນຄະດີ. ມາດຕາ 20(1) ຂອງຖະແຫຼງການອາຊຽນວ່າດ້ວຍສິດທິມະນຸດ ໄດ້ກ່າວວ່າ:

ທຸກຄົນທີ່ຖືກຕັ້ງຂໍ້ກ່າວຫາກ່ຽວກັບຄວາມຜິດທາງອາຍາ ຕ້ອງຖືກສັນນິຖານວ່າເປັນຜູ້ບໍລິ ສຸດ ຈົນກວ່າຈະມີການພິສູດວ່າມີຄວາມຜິດຕາມກົດໝາຍ ໃນການໄຕ່ສວນຄະດີທີ່ເປັນ ທຳ ແລະ ເປີດເຜີຍ ໂດຍສານທີ່ມີສິດອຳນາດ, ມີຄວາມເປັນເອກະລາດ ແລະ ມີຄວາມເປັນກາງ ເຊິ່ງຜູ້ຖືກຫາໄດ້ຮັບຮອງສິດໃນການປ້ອງກັນຕົນເອງ.

ໃນກໍລະນີທີ່ມີການປ້ອງກັນ, ໃນຫຼາຍປະເທດອາດຈະໃຊ້ວິທີການທີ່ແຕກຕ່າງກັນ ເຊິ່ງມີການກຳນົດມາດຕະຖານ ແລະ ພາລະໜ້າທີ່ໃນການພິສູດ. ໃນບາງປະເທດ, ພັນທະໃນການພິສູດ ອາດຈະຕົກເປັນຂອງຜູ້ຖືກຫາ ເພື່ອຍົກໃຫ້ເຫັນສະຖາ ນະການຖືກຄ້າມະນຸດ ເພື່ອອ້າງເຖິງການປ້ອງກັນຕົວ, ແຕ່ພັນທະໃນການປ້ອງກັນການນຳໃຊ້ ການປ້ອງກັນນັ້ນ ຍັງຮັກສາ ໄວ້ກັບການປ້ອງກັນຕົວ. ໃນບ່ອນອື່ນໆ ຜູ້ຖືກຄ້າມະນຸດອາດຈະຕ້ອງພິສູດວ່າເຂົາເຈົ້າຖືກຄ້າມະນຸດ ແລະ ໃນເວລາທີ່ກະທຳຜິດທາງອາຍາ ແມ່ນຜົນມາຈາກການຄ້າມະນຸດ. ຫຼື ຜູ້ຖືກຫາອາດຈະໄດ້ຍົກການປ້ອງກັນຕົວ, ໂດຍມອບພັນທະໃຫ້ແກ່ລັດ ເພື່ອພິສູດຂໍ້ສົງໄສທີ່ສົມເຫດສົມຜົນວ່າຈຳເລີຍບໍ່ໄດ້ຖືກຄ້າມະນຸດ. ສາດອາດຈະນຳໃຊ້ວິທີການຕ່າງໆທີ່ແຕກຕ່າງກັນ ຕໍ່ກັບການຕັດສິນໃຈກ່ຽວກັບຄຸນຄ່າຂອງຫຼັກຖານ ຂອງໜ່ວຍງານທີ່ມີສິດອຳນາດ ກ່ຽວກັບສະຖານະຂອງຜູ້ຖືກເຄາະຮ້າຍ ໂດຍການໃຫ້ນ້ຳໜັກຂອງຫຼັກຖານໃນບາງກໍລະນີ ແລະ ບໍ່ຈຳເປັນຕ້ອງໃຫ້ບຸກຄົນດັ່ງກ່າວ ໄດ້ຮັບການກຳນົດຕົວຢ່າງເປັນທາງການຄືກັບກໍລະນີອື່ນໆ.[106]

ນອກນັ້ນ, ຜູ້ພິພາກສາ ຍັງຕ້ອງເຂົ້າໃຈກ່ຽວກັບພັນທະການພິສູດຫຼັກຖານ ທີ່ຢູ່ໃນຂອບເຂດສິດອຳນາດຂອງຕົນ ເພື່ອ ຮັບປະກັນວ່າ ມີການນຳໃຊ້ຫຼັກການບໍ່ລົງໂທດຢ່າງມີປະສິດທິພາຍໃນການໄຕ່ສວນຄະດີທີ່ເຂົາເຈົ້າຕັດສິນ. ເຂົາເຈົ້າຕ້ອງເຂົ້າໃຈຄວາມຮັບຜິດຊອບຂອງຕົນເອງ ຕໍ່ກັບພັນທະດັ່ງກ່າວ ລວມທັງ ແຕ່ບໍ່ຈຳກັດການແຕ່ງຕັ້ງທະນາຍຄວາມທີ່ ໃຫ້ການປົກປ້ອງ ເພື່ອຕາງໜ້າຜູ້ຖືກເຄາະຮ້າຍ ທີ່ມີຄວາມສາມາດພຽງພໍໃນການນຳໃຊ້ຫຼັກການບໍ່ລົງໂທດ ເພື່ອໃຫ້ສາມາດ ນຳໃຊ້ການປ້ອງກັນຕົວຢ່າງມີປະສິດທິພາບແກ່ຜູ້ຖືກເຄາະຮ້າຍ ໃນເວລາທີ່ເຂົາເຈົ້າໄຕ່ສວນຢູ່ສານ.
ຜູ້ພິພາກສາຕ້ອງຮັບປະກັນວາ ຜູ້ຖືກເຄາະຮ້າຍທີ່ໄຕ່ສວນນັ້ນ ໄດ້ເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍ. ໜ່ວຍງານຕ້ານການຄ້າມະນຸດຄວນສະໜອງຄູ່ມື ແລະ ມາດຕະຖານແກ່ຜູ້ພິພາກສາ ເພື່ອຮັບປະກັນວ່າ ມີການຊ່ວຍເຫຼືອທາງດ້ານກົດໝາຍແກ່ຜູ້ຖືກເຄາະຮ້າຍ ຢ່າງມີຄຸນນະພາບສູງ.[107]

## [11] ນຳໃຊ້ຮູບແບບການຟື້ນຟູ ແທນທີ່ ການລົງໂທດທາງອາຍາ ແກ່ຜູ້ຖືກເຄາະຮ້າຍ–ຜູ້ກະທຳຜິດ

ອາດຈະມີທາງເລືອກໃນການຕັດສິນລົງໂທດ ແລະ ການຄຸມຂັງ ສຳລັບບາງກຸ່ມຄົນທີ່ເປັນຜູ້ກະທຳຜິດບາງປະເພດ, ເຊິ່ງມີມຸມມອງທີ່ຈະປະຕິບັດການຟື້ນຟູແທນທີ່ການລົງໂທດທາງອາຍາ. ໃນກໍລະນີຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ການນຳໃຊ້ການລົງໂທດທາງອາຍາ ອາດຈະເປັນການຫັນທິດໃຫ້ຜູ້ຖືກເຄາະຮ້າຍ ຫ່າງໄກອອກຈາກຂະບວນການຍຸຕິ ທຳທາງອາຍາ ຕໍ່ກັບການປົກປ້ອງ ແລະ ການຊ່ວຍເຫຼືອ. ບັນດາປະເທດສະມາຊິກອາຊຽນຄວນຄົ້ນຄ້ວາວິທີການຂອງສານ ແລະ ຂະບວການຂອງສານ ສາມາດນຳໃຊ້ການຟື້ນຟູທາງຍຸຕິທຳ ໂດຍຫຼີກລ້ຽງການລົງໂທດຜູ້ຖືກເຄາະຮ້າຍ ທີ່ໄດ້ກະທຳຜິດເນື່ອງຈາກການຄ້າມະນຸດໄດ້.

106 Jean-Pierre Gauci ແລະ Noemi Magugliani, ການຄ້າມະນຸດ ແລະ ສິດທິຂອງຜູ້ຖືກເຄາະຮ້າຍ: ການວິເຄາະກ່ຽວກັບການນຳໃຊ້ຫຼັກການບໍ່ລົງໂທດ, (BIICL and IBA, 2023), ໜ້າທີ 37-39)

107 ເບິ່ງຕົວຢ່າງ: ຄະນະກຳມາທິການລະຫວ່າງລັດຖະບານອາຊຽນວ່າດ້ວຍສິດທິມະນຸດ (AICHR) – ການຄົ້ນຄວ້າກ່ຽວກັບການຊ່ວຍເຫຼືອທາງດ້ານກົດໝາຍ (ຈາກາຕ້າ, ກອງເລຂາອາຊຽນ, ກໍລະກົດ 2019.

## ຄົ້ນຄວ້າຊອກຫາໂອກາດ ນຳໃຊ້ຮູບແບບການຟື້ນຟູທາງຍຸຕິທຳແກ່ຜູ້ຖືກເຄາະຮ້າຍ ທີ່ຢູ່ໃນການໄຕ່ສວນຄະດີ

ສະມາຊິກຝ່າຍຕຸລາການ ຄວນພິຈາລະນານຳໃຊ້ວິທີການຟື້ນຟູຄືນທາງຍຸຕິທຳ ເພື່ອຫັນເອົາຜູ້ຖືກເຄາະຮ້າຍອອກຈາກການຂະບວນການລົງໂທດທາງອາຍາ. ເຂົາເຈົ້າຄວນຊອກຫາໂອກາດໃນການສ້າງຄວາມຄຸ້ນເຄີຍໃຫ້ແກ່ຕົນເອງ ໃນເວລາທີ່ມີໂອກາດນຳໃຊ້ໄດ້ ແລະ ໂອກາດດັ່ງກ່າວສາມາດດັດປັບໃຫ້ເຂົ້າກັບບໍລິບົດຂອງຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ທີ່ກະທຳຄວາມຜິດ.

ເພື່ອສະໜັບສະໜູນຕຸລາການໃນວຽກນີ້, ໜ່ວຍງານຕ້ານການຄ້າມະນຸດ ແລະ ສະຖາບັນສິດທິມະນຸດແຫ່ງຊາດ ໃນບັນດາປະເທດສະມາຊິກອາຊຽນທີ່ມີໜ່ວຍງານດັ່ງກ່າວ ຄວນປະເມີນໂອກາດໃນການຟື້ນຟູຄືນດ້ານຍຸຕິທຳ ເຊິ່ງສານ ແລະ ຂະບວນການຂອງສານສາມາດນຳໃຊ້ໂອກາດດັ່ງກ່າວ ເພື່ອຜົນປະໂຫຍດແກ່ຜູ້ຖືກເຄາະຮ້າຍທີ່ເປັນເດັກ ແລະ ຜູ້ໃຫຍ່. ພາກສ່ວນທີ່ກ່ຽວຂ້ອງນີ້ ມີບົດບາດສຳຄັນຕໍ່ກັບທາງເລືອກ ທີ່ເຮັດໃຫ້ຜູ້ຖືກເຄາະຮ້າຍຫັນອອກຈາກການລົງໂທດ. ບັນດາປະເທດສະມາຊິກອາຊຽນຄວນພັດທະນາ ແລະ ຮັບຮອງ ຄູ່ມື ແລະ ຕົວແບບ ທີ່ເປັນອັນສະເພາະ ສຳລັບການຟື້ນຟູດ້ານຍຸຕິທຳ ເພື່ອຈັດຕັ້ງປະຕິບັດໃນກໍລະນີຄ້າມະນຸດ. ຕົວແບບດັ່ງກ່າວຄວນຄຳນຶງເຖິງບໍລິບົດຂອງຂັ້ນທ້ອງຖິ່ນ ແລະເງື່ອນໄຂ ທີ່ຮັບປະກັນໃຫ້ວິທີການດັ່ງກ່າວໄດ້ນຳໃຊ້ຢ່າງມີປະສິດທິພາບ ແລະ ຄຳນຶງເຖິງຄວາມຕ້ອງການຂອງພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ.

ທະນາຍຄວາມທີ່ໃຫ້ການປົກປ້ອງ, ພະນັກງານໄອຍະການ ແລະ ຜູ້ພິພາກສາ ຄວນໄດ້ຮັບການຝຶກອົບຮົມທີ່ເໝາະສົມ ແລະ ຕໍ່ເນື່ອງ ເພື່ອຮັບປະກັນວ່າມີການນຳໃຊ້ຫຼັກການຟື້ນຟູດ້ານຍຸຕິທຳ ເຊິ່ງຖືກນຳໃຊ້ໃນພາກປະຕິບັດຕົວຈິງຢ່າງເໝາະສົມ. ການຝຶກອົບຮົມດັ່ງກ່າວ ຄວນລວມເອົາວິທີການກຳນົດກໍລະນີທີ່ເໝາະສົມ ໃນການນຳໃຊ້ວິທີການ ດັ່ງກ່າວ ແລະ ວິທີການຄຸ້ມຄອງຂະບວນການຟື້ນຟູດ້ານຍູຕິທຳ ໂດຍຄຳນຶງເຖິງຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍ–ຜູ້ກະທຳຜິດ.

ໜ່ວຍງານຕ້ານການຄ້າມະນຸດ ແລະ ສະຖາບັນສິດທິມະນຸດແຫ່ງຊາດ ມີບົດບາດສຳຄັນໃນການສົ່ງເສີມມາດຕະຖານເຫຼົ່ານີ້ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຂອງລັດໃນປະເທດຕົນ. ພາກສ່ວນທີ່ກ່ຽວຂ້ອງເຫຼົ່ານີ້ ຄວນປະເມີນກົນໄກການຟື້ນຟູ ດ້ານຍຸຕິທຳທີ່ມີຢູ່ ເພື່ອຮັບປະກັນການພິຈາລະນາຄະດີທີ່ເປັນທຳ ແລະ ນຳໃຊ້ວິທີການດັ່ງກ່າວຕໍ່ກັບປະເພດຂອງ ຜູ້ເຄາະຮ້າຍທີ່ແຕກຕ່າງກັນ ໃຫ້ມີປະສິດທິພາບ ລວມທັງ ເດັກໃນກຸ່ມຄົນດັ່ງກ່າວ. ພື້ນຖານການປະເມີນດັ່ງກ່າວ ອາດຈະຕ້ອງມີການປັບປຸງ ເພື່ອຮັບປະກັນວ່າກົນໄກການຟື້ນຟູດ້ານຍຸຕິທຳເໝາະສົມກັບກໍລະນີທີ່ຜູ້ຖືກເຄາະຮ້າຍ ເປັນຜູ້ກະທຳຜິດ.

ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ມີປະສົບການນຳໃຊ້ການຟື້ນຟູດ້າຍຸຕິທຳ ແລະ ການປົກປ້ອງເດັກ ໃນສະພາບການທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ປະເຊີນໜ້າກັບການໄຕ່ສວນຄະດີ ເຊິ່ງຄວນໃຫ້ມີສ່ວນຮ່ວມໃນການອອກແບບ ແລະ ຈັດຕັ້ງປະຕິບັດກົນໄກການຟື້ນຟູຄືນດ້ານຍຸຕິທຳ. ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ອາດຈະສາມາດໃຫ້ທັດສະນະອື່ນໆເພີ່ມເຕີມ ຫຼື ລວມທັງ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ – ສະໜັບສະໜູນການພັດທະນາ ແລະ ບັນລຸຜົນຕໍ່ກັບການປະຕິບັດ ທີ່ເປັນຕົວແບບທີ່ດີ.

## ຮັບປະກັນວ່າ ວິທີການຟື້ນຟູດ້ານຍຸຕິທຳແມ່ນຖືກນຳໃຊ້ກັບຜູ້ຖືກເຄາະຮ້າຍທີ່ເປັນເດັກທີ່ກະທຳຜິດທາງອາຍາ

ໃນກໍລະນີສະເພາະຂອງເດັກທີ່ກະທຳຜິດອາຍາ ໃນບໍລິບົດທີ່ຖືກຄ້າມະນຸດ, ມີແນະນຳໃຫ້ນຳໃຊ້ມາດຕະການ ທີ່ບໍ່ແມ່ນທາງດ້ານຕຸລາການ ໂດຍເນັ້ນໃສ່ການຟື້ນຟູ ແລະ ການກັບຄືນສູ່ສັງຄົມຂອງເດັກ ເຊິ່ງເປັນທາງເລືອກໜຶ່ງແທນການດຳເນີນຄະດີ ແລະ ຄວາມຈຳເປັນຕາມຂັ້ນຕອນທາງກົດໝາຍ ສຳລັບເດັກທຸກຄົນ ທີ່ກ່ຽວຂ້ອງກັບການບັງຄັບໃຫ້ເຂົ້າກຸ່ມປະກອບອາວຸດ ແລະ ກຸ່ມອື່ນໆ. ຫຼັກການບໍ່ລົງໂທດ ກໍຄຽງຄູ່ກັບການນຳໃຊ້ຂັ້ນ ຕອນຕາມກົດໝາຍ.[108]

ຈຸດສຸມຕົ້ນຕໍກ່ຽວກັບກໍລະນີຂອງເດັກ ຄວນເນັ້ນໃສ່ການຟື້ນຟູຄືນ, ການກັບຄືນສູ່ສັງຄົມ ແລະ ການຮວມຕົວອີກຄັ້ງ. ການປະເມີນຜົນປະໂຫຍດສູງສຸດ ແລະ ການກຳນົດຜົນປະໂຫຍດສູງສຸດ ຄວນດຳເນີນການຕໍ່ກັບເດັກທຸກຄົນ ທີ່ມີ ຂໍ້ຂັດແຍ່ງທາງກົດໝາຍ ລວມທັງ ຜູ້ຖືກເຄາະຮ້າຍທີ່ກ່ຽວຂ້ອງກັບກິດຈະກຳທີ່ຜິດກົດໝາຍ. ບຸລິມະສິດໃນບັນດາ ຄະດີເຫຼົ່ານີ້ ແມ່ນສະໜອງຕາມຄວາມຕ້ອງການຂອງເດັກຢ່າງມີປະສິດທິພາບ ແລະ ພັດທະນາແຜນຢ່າງຮອບດ້ານ ເພື່ອຟື້ນຟູ ແລະ ການກັບຄືນສູ່ສັງຄົມຂອງເດັກ.

ຕົວຢ່າງ, ກໍລະນີເດັກທີ່ມີຂໍ້ຂັດແຍ່ງທາງດ້ານກົດໝາຍຢູ່ໃນປະເທດຟີລິບປິນເຊິ່ງເຫັນວ່າ ຄວາມຮັບຜິດຊອບກ່ຽວກັບ ຄວາມຜິດ ເຊິ່ງແມ່ນຄະນະກຳມະການດ້ານຄວາມຫຼາກຫຼາຍ (Diversion Committee) ອາດກຳນົດວ່າເດັກ ຄວນຖືກຫັນປ່ຽນທິດ ແລະ ສົ່ງຕໍ່ ເພື່ອໃຫ້ມີມາດຕະການ ການແກ້ໄຂທາງອື່ນ ຫຼື ການບໍລິການອື່ນ. ເຊັ່ນດຽວກັບ ປະເທດໄທ ທີ່ມອບໃຫ້ກົມສັງເກດການ ແລະ ການປົກປ້ອງເຍົາວະຊົນ ໄດ້ມີການນຳສະເໜີໃຫ້ມີແຜນງານ ທີ່ມີຄວາມຫຼາກຫຼາຍ ອີງຕາມການຟື້ນຟູດ້ານຍຸຕິທຳ.

108 ໂການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດ: ບົດລາຍງານຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ , Siobhán Mullaly, UN Doc. A/HRC/47/34 (ວັນທີ 17 ພຶດສະພາ 2021, ວັກທີ 39.

ໃນກໍລະນີຂອງເດັກ ທີ່ຖືກຄ້າມະນຸດ ເຂົ້າໃນກຸ່ມປະກອບອາວຸດ ຫຼື ກໍ່ການຮ້າຍ ເຊິ່ງມີຄວາມສ່ຽງສູງທີ່ຈະຖືກລົງໂທດ, ມະຕິຂອງສະພາຄວາມໝັ້ນຄົງ ເລກທີ 2388 (2017) ຮຽກຮ້ອງໃຫ້ປະເທດສະມາຊິກ ບໍ່ໃຫ້ລົງໂທດເດັກທີ່ຖືກຄ້າມະ ນຸດ. ມະຕິເລກທີ 2427 (2018) ອ້າງອີງເຖິງການປະຕິບັດຕໍ່ເດັກ ທີ່ກ່ຽວຂ້ອງກັບກຸ່ມປະກອບອາວຸດທີ່ບໍ່ແມ່ນຂອງລັດ ລວມທັງ ບຸກຄົນທີ່ກະທຳຜິດກ່ຽວກັບການກໍ່ການຮ້າຍ ແລະ ຮຽກຮ້ອງໃຫ້ມີການສ້າງຂັ້ນຕອນມາດຕະຖານ ການປະຕິບັດງານ ເພື່ອຮັບປະກັນວ່າມີການປະຕິບັດທີ່ເໝາະສົມແກ່ເດັກ.

ໜ່ວຍງານຕ້ານການຄ້າມະນຸດໃນບັນດາປະເທດສະມາຊິກອາຊຽນ ຄວນຕິດຕາມກວດການມະຕິຂອງສະພາຄວາມໝັ້ນຄົງ. ບັນດາປະເທດສະມາຊິກອາຊຽນຍັງຄວນຮັບຮອງເອົາມາດຕະຖານການປະຕິບັດງານ ແລະ ຄູ່ມືແນະນຳທີ່ມີຄວາມຊັດເຈນ ເພື່ອຮັບປະກັນວ່າເດັກທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງດ້ານອາວຸດ ຫຼື ກຸ່ມປະກອບອາວຸດ ໄດ້ຮັບການປະຕິບັດຕາມມະຕິຂອງ ສະພາຄວາມໝັ້ນຄົງ. ການພັດທະນາ ຂັ້ນຕອນມາດຕະຖານການປະຕິບັດງານ ຄວນໃຫ້ພາກສ່ວນທີ່ກ່ຽວຂ້ອງ ມີສ່ວນຮ່ວມນຳ ລວມທັງແຕ່ບໍ່ຈຳກັດ ໜ່ວຍງານປົກປ້ອງເດັກ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ກຸ່ມຊຸມຊົນທ້ອງຖິ່ນ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດຕໍ່ເດັກ ທີ່ກ່ຽວຂ້ອງກັບກຸ່ມປະກອບອາວຸດ ໃຫ້ມີຄວາມສອດຄ່ອງ ແລະ ມີປະສິດທິພາບ.

ສະຖາບັນສິດທິມະນຸດແຫ່ງຊາດ ໃນບັນດາປະເທດສະມາຊິກອາຊຽນຄວນສົ່ງເສີມຄວາມຮັບຮູ້ຢ່າງຕໍ່ເນື່ອງ ແລະ ສອດຄ່ອງກັບມາດຕະຖານສາກົນ ກ່ຽວກັບການປະຕິບັດຕໍ່ເດັກ ທີ່ກ່ຽວຂ້ອງກັບກຸ່ມປະກອບອາວຸດ. ການສົ່ງເສີມນີ້ ມີຄວາມສຳຄັນທີ່ຈະສົ່ງຜົນຕໍ່ດ້ານນະໂຍບາຍ ແລະ ການປະຕິບັດທັງໃນລະດັບຊາດ ແລະ ທ້ອງຖິ່ນ.

ລັດຖະບານໄທ ໄດ້ສະໜັບສະໜູນອົງການສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ ໂດຍການຮ່ວມມືກັບສະຖາບັນຍຸຕິທຳແຫ່ງປະເທດໄທ ສ້າງ ປຶ້ມຄູ່ມືການຟື້ນຟູດ້ານຍຸຕິທຳ.[109] ແຫຼ່ງຂໍ້ມູນນີ້ ໄດ້ແນະນຳໃຫ້ສະໜັບສະໜູນການນຳໃຊ້ວິທີການຟື້ນຟູໃນບໍລິບົດຂອງການຄ້າມະນຸດ.

### ກ່ອງຂໍ້ມູນ: ຕົວຢ່າງ (ການກໍ່ການຮ້າຍ / ຂໍ້ຂັດແຍ່ງດ້ານອາວຸດ)

ຕອນທີ່ A ມີອາຍຸ 13 ປີ, ທ້າວ A ໄດ້ຖືກກຸ່ມຕິດອາວຸດລັກພາຕົວຈາກໝູ່ບ້ານຂອງລາວ. ລາວໄດ້ ເຂົ້າຮ່ວມໃນກິດຈະກຳຕ່າງໆ ນັບແຕ່ປະຕິບັດຕາມຄຳສັ່ງຂອງຜູ້ບັນຊາການ, ຄວບຄຸມ ແລະ ບາງຄັ້ງກໍທຳຮ້າຍບຸກຄົນອື່ນທີ່ຖືກຈັບຕົວໂດຍກຸ່ມປະກອບອາວຸດ. ເດັກອີກຄົນໜຶ່ງເຊິ່ງແມ່ນ B ອາຍຸ 16 ປີໃນເວລາທີ່ຖືກຈັບຕົວໄປພ້ອມກັບ A. ເບື້ອງຕົ້ນ ລາວເຮັດໜ້າທີ່ເປັນຜູ້ຊ່ວຍຜູ້ບັນຊາການລະດັບສູງ. ຕໍ່ມາ ລາວໄດ້ຮັບບົດບາດທີ່ສູງຂຶ້ນດ້ວຍການຂ້ານັກໂທດ, ລາວໄດ້ເຮັດໜ້າທີ່ໃຫຍ່ຂຶ້ນ ດ້ວຍການບຸກໂຈມຕີກຸ່ມເປົ້າໝາຍ. ລາວຍັງໄດ້ຂົ່ມຂືນເດັກຍິງບາງຄົນ ທີ່ຖືກຈັບຕົວໂດຍກຸ່ມດັ່ງກ່າວຢ່າງໂຫດຮ້າຍ. ພາຍຫຼັງທີ່ໃຊ້ຊີວິດໃນທິດທາງນີ້ ເປັນເວລາສາມປີ, ກຸ່ມນີ້ກໍໄດ້ຖືກຈັບຕົວ.

*ການນຳໃຊ້ຫຼັກການບໍ່ລົງໂທດ:* ເຈົ້າໜ້າທີ່ຮັບຮູ້ວ່າ A ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (ໂດຍການຖືກຈັດຫາ ແລະ ລັກພາຕົວ ເພື່ອຈຸດປະສົງຂອງການຂູດຮີດ) ລວມທັງ ເປັນຜູ້ຖືກເຄາະຮ້າຍທີ່ຖືກລະເມີດສິດທິມະນຸດຢ່າງຮ້າຍແຮງ. A ໄດ້ຮັບການເບິ່ງແຍງໂດຍໜ່ວຍງານປົກປ້ອງເດັກ ໂດຍມີມຸມມອງໃນການຟື້ນຟູຄືນ, ການກັບຄືນສັງຄົມ ແລະ ກັບຄືນຫາຄອບຄົວລາວ.[110]

ເຖິງວ່າ B ຈະຖືກຮັບຮູ້ວ່າເປັນເດັກທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແຕ່ໃນເວລາທີ່ລາວຖືກຈັບຕົວ ລາວມີອາຍຸ 18 ປີ. ຢ່າງໃດກໍຕາມ, ເຈົ້າໜ້າທີ່ ມີມຸມມອງທີ່ແຕກຕ່າງກ່ຽວກັບສະພາບການຂອງລາວ ຕໍ່ກັບຄວາມຜິດທີ່ລາວໄດ້ມີສ່ວນຮ່ວມກະທຳ. ເຖິງວ່າເຂົາເຈົ້າຈະຮັບຮູ້ວ່າ ການປ້ອງກັນຈາກການບີບບັງຄັບ ແລະ ສະພາວະຄວາມຈຳເປັນ ເຊິ່ງຕ້ອງໄດ້ມີ ການຄຳນຶງເຖິງບໍລິບົດທີ່ລາວຖືກຄ້າມະນຸດ, ເຂົາເຈົ້າພິຈາລະນາວ່າ ອາຊະຍາກຳບາງຢ່າງທີ່ລາວໄດ້ກະທຳ ບໍ່ໄດ້ກ່ຽວຂ້ອງກັບສະພາບການທີ່ລາວຖືກຄ້າມະນຸດ. ອາຊະຍາກຳບາງຢ່າງທີ່ B ໄດ້ກະທຳ ຫຼື ລວມທັງ ການຂົ່ມຂືນເດັກຍິງ ຢ່າງໂຫດຮ້າຍ – ສາມາດຫຼີກລ້ຽງໄດ້ ແລະ ບໍ່ຄວນໃຫ້ເກີດຂຶ້ນໄດ້ ຕໍ່ກັບຜົນທີ່ມີການຂົ່ມຂູ່ຕໍ່ລາວ. ດ້ວຍເຫດນັ້ນ, ລາວຕ້ອງມີຄວາມຮັບຜິດຊອບທາງອາຍາຕໍ່ກັບຄວາມຜິດເຫຼົ່ານັ້ນ.[111]

109 ປຶ້ມຄູ່ມືວ່າດ້ວຍການການຟື້ນຟູຄືນດ້ານຍຸຕິທຳ (ເບິ່ງສະບັບທີ 2, UNODC, 2020)

110 ເບິ່ງມະຕິຂອງສະພາຄວາມໝັ້ນຄົງ 2427 (2018),, ນໍາໃຊ້ການປະຕິບັດຕໍ່ເດັກ ທີ່ກ່ຽວຂ້ອງ ຫຼື ຖືກກ່າວຫາວ່າກ່ຽວຂ້ອງກັບກຸ່ມປະກອບອາວຸດທີ່ບໍ່ແມ່ນກຸ່ມຂອງລັດຖະບານ ລວມທັງ ບຸກຄົນທີ່ກະທຳ ການກໍ່ການຮ້າຍ

111 ເບິ່ງທີ່ຕົວຢ່າງ, ກໍລະນີ The Prosecutor v Dominic Ongwen ICC-02/04-01/15 ກ່ຽວກັບອະດີດທະຫານເດັກ ທີ່ພົບວ່າມີຄວາມຜິດ ໂດຍສານອາຍາສາກົນ ໃນປີ 2020 ຕໍ່ກັບ ອາຊະຍາກຳ 61 ຢ່າງ ຕໍ່ກັບມະນຸດສະທຳ ແລະ ສົງຄາມທາງອາຊະຍາກຳ ໃນປະເທດ ອູການດາ ລະຫວ່າງ ເດືອນ ກໍລະກົດ 2002 ແລະ ທັນວາ 2005

### ຄຳແນະນຳຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກ

ເດັກທີ່ຖືກກັກຂັງ ເຊິ່ງກ່ຽວຂ້ອງກັບກຸ່ມປະກອບອາວຸດ ລວມທັງ ກຸ່ມກໍ່ການຮ້າຍ, ຄວນຖືກຮັບຮູ້ວ່າເປັນຜູ້ຖືກເຄາະຮ້າຍ ຈາກການລະເມີດກົດໝາຍວ່າດ້ວຍມະນຸດສະທຳ ແລະ ກົດໝາຍວ່າດ້ວຍສິດທິມະນຸດ ຢ່າງຮ້າຍແຮງ. ການຟື້ນຟູຄືນ, ການກັບຄືນສູ່ສັງຄົມ ແລະ ການກັບຄືນສູ່ຄອບຄົວ ຄວນຖືເປັນບູລິມະສິດຫຼັກ, ແຕ່ບໍ່ແມ່ນການລົງໂທດ. ໂດຍການຢໍ້າຄືນກ່ຽວກັບມະຕິຂອງສະພາຄວາມໝັ້ນຄົງ ເລກທີ 2388 (2017), ທຸກໆລັດ ຄວນຫຼີກລ້ຽງການນຳໃຊ້ການກັກຂັງທາງບໍລິຫານ ແກ່ເດັກ ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງ ເດັກທີ່ກ່ຽວຂ້ອງ ຫຼື ຖືກຫາວ່າກ່ຽວຂ້ອງກັບກຸ່ມປະກອບອາວຸດ ທີ່ບໍ່ແມ່ນຂອງລັດ. ຂັ້ນຕອນມາດຕະຖານການປະຕິບັດງານຄວນຖືກຮັບຮອງ ເພື່ອຮັບປະກັນການສົ່ງມອບ ເດັກທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງດ້ານອາວຸດ ຫຼື ກຸ່ມປະກອບອາວຸດ ໃຫ້ແກ່ໜ່ວຍງານທີ່ໃຫ້ການປົກປ້ອງເດັກ ຢ່າງທັນການ. [112]

112 ແຫຼ່ງຂໍ້ມູນ: ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດ: ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, Siobhán Mullaly, UN Doc. A/HRC/47/34 (ວັນທີ 17 ພຶດສະພາ 2021, [63]

# ພາກທີ 5

# ການນຳໃຊ້ຫຼັກການບໍ່ລົງໂທດ ໃນ ເວລາທີ່ຜູ້ຖືກເຄາະຮ້າຍຖືກຕັດສິນລົງໂທດ

## ພາກທີ 5. ການນຳໃຊ້ຫຼັກການບໍ່ລົງໂທດ ໃນເວລາທີ່ຜູ້ຖືກເຄາະຮ້າຍຖືກຕັດສິນລົງໂທດ

ໃນກໍລະນີທີ່ມາດຕະການປ້ອງກັນການບໍ່ລົງໂທດ ຫາກບໍ່ສາມາດປົກປ້ອງຜູ້ຖືກເຄາະຮ້າຍຈາກການດຳເນີນຄະດີ ແລະ ຕັດສິນລົງໂທດໄດ້ແລ້ວ, ເຊິ່ງອາດຈະມີໂອກາດທີ່ຈະປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດເພີ່ມເຕີມ ໃນຂັ້ນຕອນພິພາກສາໂທດ. ກໍລະນີທີ່ຜູ້ຖືກເຄາະຮ້າຍ ຖືກຕັດສິນລົງໂທດໂດຍບໍ່ຖືກຕ້ອງ ເຊິ່ງຂັດກັບຫຼັກການບໍ່ລົງໂທດນັ້ນ, ເຂົາເຈົ້າຕ້ອງມີສິດເຂົ້າເຖິງການປຽວຢາ ລວມທັງ ຄ່າປົວແປງຈິດໃຈ ແລະ ຄ່າຊົດເຊີຍຈາກການຕັດສິນໂດຍບໍ່ຖືກຕ້ອງ ທີ່ລັດບໍ່ສາມາດໃຫ້ການປົກປ້ອງສິດທິຂອງເຂົາເຈົ້າ.

ທຸກໆຄົນ – ລວມທັງ ຜູ້ທີ່ຖືກສານຕັດສິນ ມີສິດທິມະນຸດທີ່ລັດຕ້ອງຍຶດໝັ້ນ. ຜູ້ຖືກເຄາະຮ້າຍທີ່ໄດ້ຮັບຜົນກະທົບ ຈາກການຕັດສິນລົງໂທດ ອັນຍາວນານຫຼາຍທັງທີ່ຮັບໂທດແລ້ວ. ການບັນທຶກທາງອາຍາ ຫຼື ການລົງໂທດທາງບໍລິຫານ ລວມທັງ ຄວາມຜິດທີ່ເບົາບາງ ສາມາດສ້າງເປັນອຸປະສັກຕໍ່ກັບການຟື້ນຟູ ແລະ ການກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍ. ການບັນທຶກປະຫວັດທາງອາຍາ ສຳລັບອາຊະຍາກຳທີ່ເປັນຜົນຈາກການຄ້າມະນຸດນັ້ນ ສາມາດສ້າງ ອຸປະສັກແກ່ຜູ້ຖືກເຄາະຮ້າຍໃນການເຂົ້າເຖິງຄ່າຊົດເຊີຍ.[113] ການກະທຳດັ່ງກ່າວ ສາມາດເປັນໄພອັນຕະລາຍອັນຮ້າຍແຮງ ແກ່ການຂໍລີ້ໄພ ຫຼື ການຮຽກຮ້ອງການເດີນທາງ ແລະ ອາໄສຢູ່. ເຂົາເຈົ້າອາດຖືກປະຕິເສດການເຂົ້າທີ່ພັກອາໄສ, ການສຶກສາ ແລະ ໂອກາດໃນການຈ້າງງານ. ບັນທຶກປະຫວັດທາງອາຍາ ອາດຈະເປັນວິທີການທີ່ບໍ່ສາມາດຂໍເງິນກູ້ ຫຼື ໃບອະນຸຍາດ ຫຼື ຄວາມໝັ້ນຄົງທາງສັງຄົມ ຫຼື ອາດຈະເປັນສິ່ງທ້າທາຍໃນການຂໍເບິ່ງແຍງລ້ຽງດູລູກຂອງຕົນ. ຄວາມຈິງຂໍ້ນີ້ ເປັນສິ່ງສຳຄັນທີ່ຈຳເປັນໃນການລຶບລ້າງ, ຍົກເລີກ ຫຼື ປິດລັບປະຫວັດທາງອາຍາ.

ຄຳແນະນຳລຸ່ມນີ້ ສະເໜີໃຫ້ການສະໜັບສະໜູນລັດ ເພື່ອສ້າງຄວາມເຂັ້ມແຂງດ້ານຄວາມສາມາດຂອງເຂົາເຈົ້າໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດເພີ່ມເຕີມ ແລະ ສະໜອງໃຫ້ມີການປຽວຢາ ແກ່ຜູ້ຖືກເຄາະຮ້າຍ ທີ່ຖືກຕັດສິນລົງໂທດໂດຍບໍ່ຖືກຕ້ອງ.

## [12] ຫຼີກລ້ຽງ ຫຼື ຫຼຸດຜ່ອນການຕັດສິນລົງໂທດ ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

ສະມາຊິກຝ່າຍຕຸລາການ ສາມາດຢຸດຕິການດຳເນີນຄະດີ, ປ່ອຍຕົວຜູ້ຖືກເຄາະຮ້າຍ ຫຼື ກໍລະນີສຸດທ້າຍ ຫຼຸດຜ່ອນໂທດ ໃຫ້ແກ່ຜູ້ຖືກເຄາະຮ້າຍທີ່ຖືກຕັດສິນນັ້ນ. ການຫຼີກລ້ຽງ ຫຼື ຫຼຸດຜ່ອນໂທດ ບໍ່ໄດ້ເປັນການປົກປ້ອງຜູ້ຖືກເຄາະຮ້າຍ ຈາກປະສົບການທີ່ຖືກລົງໂທດທາງອາຍາ. ການຈັບຕົວ, ການດຳເນີນຄະດີ ແລະ ການຕັດສິນ ຄວນໄດ້ຮັບການປົກປ້ອງໃນສານຂັ້ນຕົ້ນ. ການຫຼຸດຜ່ອນໂທດພຽງຢ່າງດຽວ ບໍ່ໄດ້ໝາຍເຖິງການປະຕິບັດພັນທະຂອງລັດ ໃນການປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດ ແຕ່ຍັງເປັນສິ່ງສຳຄັນສຸດທ້າຍໃນການປ້ອງກັນທີ່ສາມາດເຮັດໄດ້.

### ພິຈາລະນາວ່າລະບຽບການຕ່າງໆທີ່ກ່ຽວຂ້ອງກັບການຫຼຸດຜ່ອນໂທດ ສາມາດບັນເທົາທຸກຈາກການບໍ່ລົງໂທດແນວໃດ

ລະບຽບການທີ່ກ່ຽວຂ້ອງກັບການຫຼຸດຜ່ອນໂທດ ຈະເປັນເຄື່ອງມືທີ່ເປັນປະໂຫຍດໃນການບັນເທົາທຸກ ໃຫ້ແກ່ຜູ້ຖືກເຄາະຮ້າຍບາງຄົນຈາກການລົງໂທດ ໃນກໍລະນີທີ່ເຂົາເຈົ້າບໍ່ໄດ້ຮັບການປົກປ້ອງຈາກການຕັດສິນ.[114] ສະມາຊິກຂອງຝ່າຍຕຸລາການ ຄວນມີມາດຕະການຕໍ່ກັບກົດລະບຽບທີ່ອະນຸຍາດໃຫ້ເຂົາເຈົ້າບໍ່ລົງໂທດຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ເຖິງວ່າເຂົາເຈົ້າຈະຖືກຕັດສິນວ່າມີຄວາມຮັບຜິດຊອບກໍຕາມ. ໃນຂອບເຂດສິດອຳນາດອື່ນໆ, ລະບຽບທົ່ວໄປສາມາດນຳໃຊ້ ເພື່ອສະທ້ອນເຖິງຄວາມເໝາະສົມທີ່ຕຳນິຜູ້ກະທຳຜິດຕໍ່ກັບການລົງໂທດນັ້ນ.

### ຮັບປະກັນວ່າ ການລົງໂທດໄດ້ສະທ້ອນໃຫ້ເຫັນເຖິງຄວາມຜິດຂອງຜູ້ຖືກເຄາະຮ້າຍ–ຜູ້ກະທຳຜິດ

ກໍລະນີທີ່ຜູ້ຖືກຄ້າມະນຸດ ພົບວ່າມີຄວາມຜິດທາງອາຍາ, ການຕັດສິນລົງໂທດ ຕ້ອງສະທ້ອນໃຫ້ເຖິງລະດັບຄວາມຮັບຜິດ ຊອບຂອງຜູ້ຖືກເຄາະຮ້າຍ–ຜູ້ກະທຳຜິດ ແລະ ຄວາມຮ້າຍແຮງທາງອາຍາທີ່ເຂົາເຈົ້າໄດ້ກະທຳ. ສະມາຊິກຂອງຝ່າຍຕຸລາການ ຄວນມີຄວາມສາມາດໃນການວິເຄາະຄວາມຜິດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊິ່ງເປັນຜູ້ທີ່ກະທຳຜິດ ໂດຍມີຄວາມເຂົ້າໃຈກ່ຽວກັບຄວາມເຊື່ອມໂຍງລະຫວ່າງຄວາມຜິດ ແລະ ການຄ້າມະນຸດຂອງເຂົາເຈົ້າ.

ໃນການກຳນົດລະດັບຄວາມຜິດໃນສະຖານະການດັ່ງກ່າວ, ເຊິ່ງມີຄວາມສົມເຫດສົມຜົນທີ່ສັນນິຖານວ່າ ການເຊື່ອມໂຍງ ທີ່ເຂັ້ມແຂງຂຶ້ນລະຫວ່າງ ການກະທຳຜິດ ແລະ ການຄ້າມະນຸດ, ລະດັບຄວາມຜິດຂອງບຸກຄົນດັ່ງກ່າວກໍຈະຫນ້ອຍລົງ. ສະມາຊິກຝ່າຍຕຸລາການ ຄວນໄດ້ຮັບ

---

113 ກົນໄກການສົ່ງຕໍ່ລະດັບຊາດ: ຄວາມພະຍາຍາມຮ່ວມກັນ ເພື່ອປົກປ້ອງສິດທິຂອງຜູ້ຖືກຄ້າມະນຸດ (ສະບັບທີ 2), OSCE, ODIHR, 2022), ໜ້າທີ່.233.

114 ຄຳແນະນຳກ່ຽວກັບບັນຫາການຕອບໂຕ້ຄວາມຍຸຕິທຳທາງອາຍາທີ່ເໝາະສົມຕໍ່ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດຍ້ອນຖືກຄ້າມະນຸດ: ເອກະສານຄວາມເປັນມາ ກະກຽມໂດຍ ກອງເລຂາ ຄະນະປະຕິບັດງານຕ້ານການຄ້າມະນຸດ, ວຽນນາ ວັນທີ 10 ແລະ 11 ກັນຍາ 2020, UN Doc. CTOC/COP/WG.4/2020/2 (ວັນທີ 15 ມິຖຸນາ 2020), ວັກທີ 46.

ການຊຸກຍູ້ໃຫ້ມີການສອບຖາມຕໍ່ກັບອັກຄະຕິຂອງຕົນເອງ ແລະ ການສັນນິຖານກ່ຽວກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຄວາມຜິດຂອງເຂົາເຈົ້າເພື່ອໃຫ້ການຕັດສິນຂອງເຂົາເຈົ້າເປັນທຳ ແລະ ຍຸຕິທຳ. ເຂົາເຈົ້າຄວນສ້າງຄວາມຄຸ້ນເຄີຍໃຫ້ແກ່ຕົນເອງ ຕໍ່ກັບສະຖານະການໃນການຫຼຸດຜ່ອນ ທີ່ອາດຈະນຳໃຊ້ໃນສະຖານະການທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດກ່ຽວຂ້ອງກັບຄວາມຜິດນັ້ນ.[115]

### ກ່ອງຂໍ້ມູນ: ຕົວຢ່າງ (ການຄ້າຢາເສບຕິດ)

ນາງ A ເປັນແມ່ລ້ຽງດ່ຽວທີ່ມີອາຍຸຍັງນ້ອຍ, ເຊິ່ງເປັນສິ່ງທ້າທາຍໃນການສະໜັບສະໜູນລູກຊາຍ ແລະ ແມ່ທີ່ອາຍຸຫຼາຍຂຶ້ນ. ລາວໄດ້ຫຼົງມັກຮັກກັບຊາຍໜຸ່ມທີ່ຮັ່ງມີ ແລະ ມີສະເໜ່ຈາກຕ່າງປະເທດ ຜູ້ທີ່ມັກຈະເຂົ້າມາໃນເມືອງ ຂອງລາວ ເພື່ອເຮັດທຸລະກິດນຳເຂົ້າ/ສົ່ງອອກ. ພາຍຫຼັງທີ່ພົບກັນເປັນເວລາຫຼາຍເດືອນ ຕອນທີ່ລາວເຂົ້າມາໃນເມືອງ, ຝ່າຍຊາຍ ໄດ້ຊື້ປີ້ຍົນໃຫ້ລາວ ເພື່ອມາຢາມລາວເປັນເວລາໜຶ່ງອາທິດ. ນາງ A ຮູ້ສຶກຕື່ນເຕັ້ນທີ່ຈະໄປຢ້ຽມຢາມຝ່າຍຊາຍ ຢູ່ໃນເມືອງທີ່ລາວຢູ່ເປັນຄັ້ງທຳອິດ. ຝ່າຍຊາຍ ໄດ້ຂໍໃຫ້ລາວ ໄປເອົາສິ່ງຂອງບາງຢ່າງຈາກເພື່ອນຮ່ວມງານລາວ ໃນລະຫວ່າງທາງທີ່ໄປສະໜາມບິນ ແລະ ນຳເອົາສິ່ງຂອງດັ່ງກ່າວມາໃຫ້ຝ່າຍຊາຍ. ນາງ A ປະຕິບັດຕາມການຮ້ອງຂໍ. ພາຍຫຼັງທີ່ຍົນລົງໃນເມືອງຂອງຝ່າຍຊາຍ, ລາວຖືກກັກຕົວໂດຍເຈົ້າໜ້າທີ່ ທີ່ພົບເຫັນຢາເສບຕິດໃນກະເປົາເດີນທາງຂອງ ລາວ. ລາວຖືກຈັບຕົວໃນສະຖານຄ້າຂາຍໂຄເຄນ.

*__ການນຳໃຊ້ຫຼັກການບໍ່ລົງໂທດ:__* ພະນັກງານໄອຍະການ ຮຽກຮ້ອງໃຫ້ສານຍົກເລີກການຕັດສິນ ນາງ A ບົນພື້ນຖານ ຫຼັກການບໍ່ລົງໂທດ. ຜູ້ພິພາກສາ ຮັບຮູ້ວ່າ ນາງ A ຖືກຄ້າມະນຸດ ເພື່ອບັງຄັບໃຫ້ກະທຳຜິດທາງອາຍາ, ລາວຮູ້ວ່ານິຕິກຳພາຍໃນ ບໍ່ໄດ້ຮັບຮູ້ເຖິງການບັງຄັບໃຫ້ກະທຳຜິດທາງອາຍາ ເພື່ອຈຸດປະສົງຂອງການຄ້າມະນຸດ ແລະ ຂໍ້ກຳນົດຫຼັກການບໍ່ລົງໂທດ ຈຳກັດການປົກປ້ອງຜູ້ຖືກເຄາະຮ້າຍຈາກການລົງໂທດຕໍ່ກັບຄວາມຜິດກ່ຽວກັບການເຂົ້າ–ອອກເມືອງ ແລະ ການເປັນໂສເພນີ. ຕໍ່ກັບເຫດການນີ້, ຜູ້ພິພາກສາ ໄດ້ຕັດສິນລົງໂທດນາງ A ດ້ວຍຄວາມບໍ່ເຕັມໃຈ. ເຖິງຢ່າງໃດກໍຕາມ ຜູ້ພິພາກສາ ໄດ້ຫຼຸດຜ່ອນໂທດໃຫ້ແກ່ ນາງ A ບົນພື້ນຖານສະພາບແວດລ້ອມຂອງ A ແລະ ຕັດສິນຕັດອິດສະລະພາບ ໃນໄລຍະເວລາສັ້ນສຸດ ແລະ ພາກໂທດໄວ້.

## [13] ສະໜອງການປິ່ນປົວແກ່ຜູ້ຖືກເຄາະຮ້າຍ ຕໍ່ກັບການລົງໂທດທີ່ບໍ່ຖືກຕ້ອງ

ຄວາມຫຼົ້ມເຫຼວຂອງເຈົ້າໜ້າທີ່ ໃນການນຳໃຊ້ຫຼັກການບໍ່ລົງໂທດຕໍ່ການປົກປ້ອງຜູ້ຖືກເຄາະຮ້າຍ ຈາການຕັດສິນລົງໂທດທີ່ບໍ່ຖືກຕ້ອງ ຫຼື ການລົງໂທດທີ່ເປັນການລະເມີດສິດທິມະນຸດຂອງຜູ້ຖືກເຄາະຮ້າຍ. ຜູ້ຖືກເຄາະຮ້າຍ ມີສິດໄດ້ຮັບການປິ່ນປົວ ແລະ ສາມາດບັງຄັບປະຕິບັດໄດ້ຕໍ່ກັບການລະເມີດກັບສິດທິຂອງເຂົາເຈົ້າທັງໃນກົດໝາຍສາກົນ ແລະ ຕາມທີ່ກຳນົດໄວ້ໃນມາດຕາ 5 ຂອງຖະແຫຼງການອາຊຽນວ່າດ້ວຍສິດທິມະນຸດ. ຫຼັກການກວດສອບຄວາມຖືກຕ້ອງຕາມກົດໝາຍ ຮຽກຮ້ອງໃຫ້ລັດ ນຳໃຊ້ມາດຕະການທີ່ມີປະສິດທິພາບເພື່ອໃຫ້ການປິ່ນປົວ ຕໍ່ກັບຄວາມຫຼົ້ມເຫຼວ ໃນການຍົກເລີກ ຫຼື ລຶບລ້າງຄຳຕັດສິນ, ການປິດລັບການບັນທຶກປະຫວັດ ທາງອາຍາ ແລະ ການຍົກເລີກການລົງໂທດທີ່ບໍ່ຖືກຕ້ອງ (ລວມທັງໂທດປັບໃໝ) ທີ່ເກີດຂຶ້ນບົນພື້ນຖານການຕັດສິນ ທາງບໍລິຫານ, ການເຂົ້າ–ອອກເມືອງ, ທາງແພ່ງ, ທາງອາຍາ ຫຼື ອື່ນໆ.

### ຄົ້ນຄ້ວາເພື່ອຊອກຫາໂອກາດທີ່ມີຢູ່ ໃຫ້ແກ່ຜູ້ຖືກເຄາະຮ້າຍໃນການເຂົ້າເຖິງການປິ່ນປົວ ຈາກການລົງໂທດທີ່ບໍ່ຖືກຕ້ອງ

ເຊັ່ນດຽວກັບຜູ້ມີສິດອື່ນໆ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີສິດໄດ້ຮັບຄ່າຊົດເຊີຍສຳລັບການຕັດສິນລົງໂທດ ທີ່ບໍ່ຖືກຕ້ອງ ຫຼື ຄວາມອະຍຸຕິທຳນັ້ນ.[116] ບັນດາປະເທດສະມາຊິກອາຊຽນຄວນຮັບປະກັນສິດໃນການຂໍອຸທອນ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຜູ້ທີ່ຖືກຕັດສິນໂດຍບໍ່ຖືກຕ້ອງ ເຊິ່ງຂັດກັບຫຼັກການບໍ່ລົງໂທດ. ຕົວຢ່າງ, ນິຕິກຳຂອງປະເທດຟີລິປິນ ທີ່ອະນຸຍາດໃຫ້ສິດໄດ້ຮັບຄ່າຊົດເຊີຍແກ່ກຸ່ມຄົນຕ່າງໆ ລວມທັງ ຜູ້ທີ່ຖືກຫາ, ຕັດສິນ ແລະ ຕັດອິດສະລະພາບຢ່າງບໍ່ເປັນທຳ.[117] ນິຕິກຳຂອງ ສປປ ລາວ ອະນຸຍາດໃຫ້ສານຕັດສິນຍົກເລີກ ແລະ

115 ຕົວຢ່າງ: ມາດຕາ 51 ຂອງປະມວນກົດໝາຍອາຍາຂອງຫວຽດນາມ ກຳນົດການຫຼຸດຜ່ອນຂໍ້ເທັດຈິງທີ່ອາດຈະກ່ຽວຂ້ອງ ລວມທັງ ກໍລະນີທີ່ ອາຊະຍາກຳເກີດຂຶ້ນພາຍໃຕ້ການຍຸຍົງ, ຂົ່ມຂູ່ ຫຼື ເນື່ອງຈາກຜູ້ກະທຳຜິດບໍ່ມີຄວາມຮັບຮູ້. ເຊັ່ນດຽວກັບ ການຫຼຸດຜ່ອນຕາມສະພາບແວດລ້ອມ ທີ່ກຳນົດໄວ້ໃນມາດຕາ 9 ກົດໝາຍວ່າດ້ວຍການຮັບມືກັບການລະເມີດດ້ານການປົກຄອງ

116 ICCPR, ມາດຕາ14(6); ຖະແຫຼງການອາຊຽນວ່າດ້ວຍສິດທິມະນຸດ, ມາດຕາ 5

117 ເບິ່ງທີ່ຟີລິບປິນ (ວັນທີ 30 ມີນາ 1992), ກົດໝາຍວ່າດ້ວຍສາທາລະນະ ເລກທີ 7309 (ກົດໝາຍວ່າດ້ວຍການສ້າງຕັ້ງຄະນະບໍລິຫານເພື່ອຮຽກຮ້ອງ ພາຍໃຕ້ກະຊວງຍຸຕິທຳ ສຳລັບຜູ້ຖືກເຄາະຮ້າຍ ທີ່ຖືກກັກຂັງ ຫຼື ລົງໂທດຕັດອິດສະລະພາບໂດຍບໍ່ເປັນທຳ ແລະ ຜູ້ຖືກເຄາະຮ້າຍຈາກການລະເມີດອາຊະຍາກຳທີ່ຮຸນແຮງ ແລະ ເພື່ອຈຸດປະສົງອື່ນໆ) ເພື່ອໃຫ້ສິດແກ່ບຸກຄົນດັ່ງກ່າວ ໃນການຮ້ອງຂໍເອົາຄ່າຊົດເຊີຍ: ຕໍ່ກັບການຖືກຫາ, ການຕັດສິນ ແລະ ຕັດອິດສະລະພາບທີ່ບໍ່ເປັນທຳ ແລະ ການລົງໂທດທາງຮ່າງກາຍ; ຫຼື ບຸກຄົນທີ່ຖືກັກຂັງ ແລະ ປ່ອຍຕົວໂດຍບໍ່ເປັນທຳ ຈາກການຖືກຕັ້ງຂໍຫາ; ບຸກຄົນທີ່ຖືກກັກຂັງຈາກເຈົ້າໜ້າທີ ໂດຍພະລະການ; ຫຼື ບຸກຄົນທີ່ເປັນຜູ້ຖືກເຄາະຮ້າຍຈາກອາຊະຍາກຳທີຮ້າຍແຮງ ລວມທັງ ການຂົ່ມຂືນ ແລະ ການກະຄວາມຜິດທີເກີດຈາກຄວາມອາຄາດພະຍາບາດ; ສິ່ງຜົນໃຫ້ເສຍຊີວິດ ຫຼື ບາດເຈັບດ້ານຮ່າງກາຍ ແລະ/ຫຼື ຈິດໃຈຢ່າງຮ້າຍແຮງ, ຂາດຄວາມສາມາດດ້ານການປະພຶດ ຫຼື ພິການຖາວອນ; ເປັນບ້າ, ການຫຼູລູກ, ຄວາມບອບຊ້ຳດ້ານຈິດໃຈຢ່າງຮຸນແຮງ ຫຼື ກະທຳຜິດກ່ຽວກັບການທໍລະມານ, ຄວາມໂຫດຮ້າຍ ຫຼື ປ່າເຖື່ອນ...

ແກ້ໄຂຄຳຕັດສິນຂອງສານ ດ້ວຍເຫດຜົນອັນສະເພາະເຈາະຈົງ.[118]

ຄວນມີການກຳນົດອຸປະສັກສະເພາະເຈາະຈົງທີ່ຜູ້ຖືກເຄາະຮ້າຍໄດ້ປະເຊີນໃນການເຂົ້າເຖິງຊ່ອງທາງດ້ານກົດໝາຍ ແລະ ເພື່ອໃຫ້ເອົາຊະນະຜູ້ປະສົກດັ່ງກ່າວ. ການປະເມີນທີ່ສຳຄັນຕໍ່ກັບອຸປະສັກເຫຼົ່ານັ້ນ ຄວນກວມເອົາອຸປະສັກທີ່ກ່ຽວຂ້ອງ ກັບເຫດຜົນຂອງການຈຳແນກ ບໍ່ວ່າຈະກ່ຽວຂ້ອງກັບສັນຊາດ, ສະຖານະ, ຄວາມພິການ, ພາສາ, ປະເພດຂອງການ ຄ້າມະນຸດ, ຫຼື ເຫດຜົນອື່ນໆ. ຄວນມີການປະເມີນເຖິງຂອບເຂດການລົງໂທດຜູ້ຖືກເຄາະຮ້າຍ ທີ່ເປັນອຸປະສັກ ໃນການເຂົ້າເຖິງຄວາມຍຸຕິທຳ. ອຸປະສັກເຫຼົ່ານັ້ນ ອາດເປັນຜົນຕໍ່ການບັນທຶກປະຫວັດທາງອາຍາທີ່ສົ່ງຜົນໃຫ້ເຂົາເຈົ້າມີສິ່ງທ້າທາຍ ໃນການເຂົ້າເຖິງການປຽວຢາ, ຫຼື ຫ້າມເດີນທາງ ຕາມທີ່ກຳນົດຂຶ້ນ ເຊິ່ງເປັນການລະເມີດການເຂົ້າ–ອອກເມືອງ ເຮັດໃຫ້ຜູ້ຖືກເຄາະຮ້າຍບໍ່ສາມາດເດີນທາງ ເພື່ອເຂົ້າເຖິງຊ່ອງທາງການຊົດເຊີຍໄດ້. ອຸປະສັກນັ້ນ ອາດຈະສົ່ງຜົນໃຫ້ຜູ້ຖືກເຄາະຮ້າຍ ທີ່ຖືກຮັບຮູ້ວ່າເປັນຜູ້ຖືກເຄາະຮ້າຍໃນປະເທດອາຊຽນອື່ນ ບໍ່ສາມາດຖືກຮັບຮູ້ໄດ້ໃນປະເທດອື່ນໄດ້.

ຄວນມີກົນໄກການຮ້ອງທຸກ ສຳລັບຜູ້ຖືກເຄາະຮ້າຍ ທີ່ຖືກລົງໂທດໂດຍບໍ່ຖືກຕ້ອງ ເຊິ່ງຂັດກັບຫຼັກການບໍ່ລົງໂທດ. ຄວນມີການສ້າງຕັ້ງກອງທຶນ ຫຼື ດັດປັບ ເພື່ອໃຫ້ຜູ້ຖືກເຄາະຮ້າຍສາມາດເຂົ້າເຖິງໄດ້ ຕໍ່ກັບຜູ້ຖືກເຄາະຮ້າຍ ທີ່ຖືກລະເມີດສິດທິຂອງຕົນ ຜ່ານການລົງໂທດທີ່ບໍ່ຖືກຕ້ອງ.[119] ຄວນມີຊ່ອງທາງການປຽວຢາແກ່ຜູ້ຖືກເຄາະຮ້າຍ ທີ່ຖືກລົງໂທດໂດຍບໍ່ຖືກຕ້ອງ, ໂດຍບໍ່ມີການຈຳແນກຜູ້ຖືກເຄາະຮ້າຍ ທີ່ໄດ້ຮັບຜົນກະທົບຈາກ ການລົງໂທດໂດຍບໍ່ຖືກຕ້ອງ ບໍ່ວ່າຈະເປັນຜົນມາຈາກການຖືກເນລະເທດ, ກັກຂັງ, ສົ່ງກັບຄືນ ຫຼື ຖືກຕັດສິນ.

**ກ່ອງຂໍ້ມູນ: ຕົວຢ່າງ (ການຄ້າຢາເສບຕິດ)**

ທ້າວ A ອາຍຸ 19 ປີ ລາວເປັນຄົນພິການທີ່ຕ້ອງໄດ້ນັ່ງລໍ້ຍູ້. ລາວບໍ່ມີວຽກເຮັດເປັນເວລາຫຼາຍເດືອນ ແລະ ມີຂໍ້ຫຍຸ້ງຍາກໃນດູແລແມ່ທີ່ມີອາຍຸຫຼາຍແລ້ວ. ກຸ່ມຄ້າຂາຍຢາເສບຕິດໃນທ້ອງຖິ່ນ ໄດ້ຊວນໃຫ້ລາວໄປຂາຍຢາເສບຕິດ, ເຂົາເຈົ້າບອກລາວວ່າ ຖ້າລາວບໍ່ຂາຍຢາເສບຕິດໃຫ້ເຂົາເຈົ້າ, ເຂົາເຈົ້າຈະໃຫ້ແມ່ລາວເປັນຄົນຂາຍແທນ. ເຂົາເຈົ້າບອກລາວວ່າ ລາວຈະປະສົບຜົນສຳເລັດໃນການຄ້າຂາຍຢາເສບຕິດເນື່ອງຈາກເຈົ້າໜ້າທີ່ຈະບໍ່ສົງໄສ ບຸກຄົນ ທີ່ນັ່ງລໍ້ຍູ້ວ່າເປັນຄົນຂາຍຢາເສບຕິດ. ທ້າວ A ໄດ້ເປີເຊັນຈາກຜົນປະໂຫຍດທີ່ລາວຂາຍຢາເສບຕິດຕາມທ້ອງຖະໜົນ. ມື້ໜຶ່ງ, ລາວໄດ້ຂາຍຢາໃຫ້ຕຳຫຼວດນອກເຄື່ອງແບບ ເຊິ່ງເປັນຄົນທີ່ຈັບຕົວລາວ.

*ການນຳໃຊ້ຫຼັກການບໍ່ລົງໂທດ:* ໄດ້ມີການສະເໜີຫຼັກຖານໃນການໄຕ່ສວນຄະດີຂອງ ທ້າວ A ລວມທັງ ຄຳໃຫ້ການຂອງເຈົ້າໜ້າທີ່ຕຳຫຼວດນອກເຄື່ອງແບບ, ຢາເສບຕິດທີ່ຕຳຫຼວດໄດ້ຊື້ ແລະ ເງິນທີ່ຖືກຍຶດຈາກການຂາຍຢາເສບຕິດຂອງທ້າວ A ພາຍຫຼັງທີ່ໄດ້ມີການຊື້ຢາ, ເຊິ່ງພິສູດວ່າ A ໄດ້ຂາຍຢາເສບຕິດທີ່ຜິດກົດໝາຍ. ລາວຖືກຕັດສິນໃຫ້ຢູ່ໃນຄຸກເປັນເວລາຫຼາຍປີ. ໃນຊ່ວງເດືອນທຳອິດໃນການຖືກຄຸມຂັງ, ທ້າວ A ຕ້ອງໄດ້ມີການກວດສຸຂະພາບກັບທ່ານໝໍ. ໃນເວລາສົນທະນາກັນ ລະຫວ່າງ A ແລະ ທ່ານໝໍ, ທ່ານໝໍ ກັງວົນວ່າ A ອາດຈະຖືກຄ້າມະນຸດ ເພື່ອໃຫ້ກະທຳຜິດທາງອາຍາ ສົ່ງຜົນໃຫ້ຖືກຕັດສິນລົງໂທດ. ເຈົ້າໜ້າທີ່ ທີ່ກ່ຽວຂ້ອງກຳນົດຕົວ A ວ່າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ຖືກຈັດຫາມາເພື່ອໃຫ້ກະທຳຜິດທາງອາຍາ ດ້ວຍວິທີການຂົ່ມຂູ່ຕໍ່ແມ່ລາວ ແລະ ສວຍໃຊ້ອຳນາດຂົ່ມເຫັງລາວ. ຄະດີດັ່ງກ່າວ ໄດ້ມີການຍື່ນຂໍອຸທອນ. ສານອຸທອນ ໄດ້ຍົກເລີກຄະດີຂອງ A ບົນພື້ນຖານຫຼັກຖານກ່ຽວກັບສະຖານະຂອງລາວໃນຖານະຜູ້ຖືກເຄາະຮ້າຍ ແລະ ມີຄຳສັ່ງໃຫ້ມີການຈ່າຍຄ່າປົວແປງຈິດໃຈກ່ຽວກັບການຕັດສິນໂດຍບໍ່ຖືກຕ້ອງໃຫ້ແກ່ A.

118 ກົດໝາຍວ່າດ້ວຍການດຳເນີນຄະດີອາຍາຂອງ ສປປ ລາວ ໃຫ້ສິດໃນການອຸທອນ ແລະ ຮ້ອງຂໍກ່ຽວກັບຄຳຕັດສິນຂອງສານ (ມາດຕາ 214). ມາດຕາ 223 ອະນຸຍາດໃຫ້ມີການຍົກເລີກ ຫຼື ດັດແກ້ຄຳຕັດສິນ ບົນພື້ນຖານດັ່ງຕໍ່ໄປນີ້: 1. ການສືບສວນ–ສອບສວນ ຫຼື ການພິຈາລະນາຄະດີຍັງບໍ່ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ; 2. ເຫດຜົນຂອງສານ ບໍ່ສອດຄ່ອງກັບຂໍ້ເທັດຈິງຂອງຄະດີ; 3. ການຕັດສິນຂອງລົງໂທດຍັງບໍ່ເໝາະສົມກັບລັກສະນະ, ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມ ແລະ ລັກສະນະຂອງຜູ້ກະທຳຜິດ. 4. ມີການລະເມີດຂັ້ນຕອນການດຳເນີນຄະດີອາຍາ ຫຼື ນຳໃຊ້ປະມວນກົດໝາຍອາຍາ ໂດຍບໍ່ຖືກຕ້ອງ

119 ຈຸດທີ 3 ຂອງຖະແຫຼງການອາຊຽນ ວ່າດ້ວຍການສ້າງຄວາມເຂັ້ມແຂງ ການຮ່ວມມື ເພື່ອປົກປ້ອງ ແລະ ຊ່ວຍເຫຼືອພະຍານ ແລະ ຜູ້ຖືກເຄາະຮ້າຍໃນອາຊະຍາກຳຂ້າມຊາດ (ວັນທີ 21 ສິງຫາ 2023) ຊຸກຍູ້ໃຫ້ບັນດາປະເທດສະມາຊິກອາຊຽນ "ສ້າງຂັ້ນຕອນ ການເຂົ້າເຖິງຄ່າຊົດເຊີຍ ແລະ ຄ່າປຽວຢາດ້ານຈິດໃຈແກ່ຜູ້ຖືກເຄາະຮ້າຍທາງອາຊະຍາກຳ ລວມທັງ ອາຊະຍາກຳຂ້າມຊາດ ແລະ ເພື່ອໃຫ້ມູມມອງ ແລະ ຄວາມກັງວົນຂອງຜູ້ຖືກເຄາະຮ້າຍ ໄດ້ຖືກນຳສະເໜີ ແລະ ພິຈາລະນາ ໃນຂັ້ນຕອນການດຳເນີນຄະດີ ຢ່າງເໝາະສົມ."

## ຄົ້ນຄວ້າຊອກຫາໂອກາດ ໃນການຍົກເລີກ, ລຶບລ້າງ ແລະ ປິດຄະດີ ຄຳຕັດສິນຂອງຜູ້ຖືກເຄາະຮ້າຍ

ສະມາຊິກຝ່າຍຕຸລາການ ແລະ ຜູ້ປະຕິບັດຕົວຈິງດ້ານຍຸຕິທຳທາງອາຍາ ຄວນສ້າງຄວາມຄຸ້ນເຄີຍກັບກົດໝາຍວ່າດ້ວຍການຍົກເລີກ/ກົດໝາຍວ່າດ້ວຍອາກາເຕີ (vacatur) ແລະ ສະພາບແວດລ້ອມທີ່ຜູ້ຖືກເຄາະຮ້າຍອາດຈະນຳໃຊ້. ເຂົາເຈົ້າຕ້ອງເຂົ້າໃຈຂະບວນການ ເພື່ອນຳໃຊ້ທາງເລືອກໃນການຍົກເລີກ (ຕັດສິນຄະດີຄືນໃໝ່), ລຶບລ້າງ (ຍົກເລີກຄຳຕັດສິນ ຈາກການບັນທຶກປະຫວັດທາງອາຍາ) ຫຼື ປິດຄະດີ (ຮຽກຮ້ອງໃຫ້ຕ້ອງມີຄຳສັ່ງຂອງສານເພື່ອຂໍເບິ່ງຄຳຕັດສິນ) ຄຳຕັດສິນທີ່ສົ່ງໃຫ້ຜູ້ຖືກເຄາະຮ້າຍໂດຍມີການປຽວຢາທີ່ມີປະສິດທິພາບ. ຜູ້ຊ່ຽວຊານດ້ານກົດໝາຍ ມີບົດບາດສຳຄັນໃນການສະໜັບສະໜູນຜູ້ຖືກເຄາະຮ້າຍ ໃນການຍື່ນການຮ້ອງຂໍຕໍ່ສານ ເພື່ອໃຫ້ຍົກເລີກຄຳຕັດສິນ, ແລະ ຄວນເພີ່ມຄວາມສາມາດຂອງເຂົາເຈົ້າໃນການຮ້ອງຂໍການປຽວຢາໃຫ້ແກ່ຜູ້ຖືກເຄາະຮ້າຍ ລວມທັງ ຮ້ອງຂໍຂ້າມຊາຍແດນ ໂດຍຜ່ານການຮ່ວມມືສາກົນ.

ໜ່ວຍງານຕ້ານການຄ້າມະນຸດ ແລະ ສະຖາບັນສິດທິມະນຸດຫ່ງຊາດ (ບ່ອນທີ່ມີຢູ່) ຄວນເບິ່ງນິຕິກຳກ່ຽວກັບການຍົກເລີກ/ກົດໝາຍວ່າດ້ວຍອາກາເຕີ ໃນຂອບເຂດສິດອຳນາດຂອງປະເທດຕົນ. ເຂົາເຈົ້າຄວນກຳນົດວ່າ ຄຳຕັດສິນຂອງສານ ທີ່ພິກປີ້ນຄຳຕັດສິນໃນຂອບເຂດອຳນາດຕົນ ໄດ້ໃຫ້ສິດແກ່ຜູ້ຖືກເຄາະຮ້າຍ ໃນການລະບຸວ່າ ເຂົາເຈົ້າບໍ່ໄດ້ຖືກຕັ້ງຂໍ້ກ່າວຫາ ຫຼື ຕັດສິນລົງໂທດ ຫຼື ສົ່ງຜົນໃຫ້ຍົກເລີກການຕັ້ງຂໍ້ກ່າວຫາໃນການບັນທຶກປະຫວັດຂອງຜູ້ຖືກເຄາະຮ້າຍ ແຕ່ຄຳຕັດສິນຍັງຢູ່.[120]

ໜ່ວຍງານເຫຼົ່ານີ້ ຄວນກຳນົດຂໍ້ຈຳກັດ ແລະ ອຸປະສັກຕ່າງໆ ທີ່ເກີດຂຶ້ນໃນໂອກາດທີ່ຈະຍົກເລີກ, ລຶບລ້າງ ຫຼື ປິດການບັນທຶກປະຫວັດອາຊະຍາກຳ ທີ່ຈະສົ່ງຜົນຕໍ່ຫຼັກການບໍ່ລົງໂທດແກ່ຜູ້ຖືກເຄາະຮ້າຍ ທີ່ມີຜົນບັງຄັບຢ່າງເຕັມສ່ວນ. ຕົວຢ່າງ, ບາງຢ່າງອາດຈະນຳໃຊ້ໄດ້ສະເພາະຄວາມຜິດໃດໜຶ່ງ (ເຊັ່ນຄວາມຜິດກ່ຽວກັບການເຂົ້າ–ອອກເມືອງ ຫຼື ການເປັນໂສເພນີ) ແຕ່ບໍ່ສາມາດນຳໃຊ້ໄດ້ກັບອາຊະຍາກຳອື່ນ ທີ່ຜູ້ຖືກເຄາະຮ້າຍໄດ້ກະທຳ ເຊິ່ງເປັນຜົນຈາກການ ຖືກຄ້າມະນຸດ. ສານຄວນໄດ້ຮັບການຊຸກຍູ້ໃຫ້ນຳໃຊ້ການຕີຄວາມໝາຍຂອງກົດໝາຍວ່າດ້ວຍອາກາເຕີ ຢ່າງກວ້າງຂວາງ ໃນບໍລິບົດທີ່ຜູ້ກະທຳຜິດໄດ້ມີສ່ວນຮ່ວມນຳ ໃນຖານະທີ່ເປັນຜູ້ຖືກເຄາະຮ້າຍ.

## ກຳນົດ ແລະ ແກ້ໄຂອຸປະສັກຕ່າງໆ ທີ່ຜູ້ຖືກເຄາະຮ້າຍປະເຊີນ ເມື່ອມີການລຶບລ້າງຄຳຕັດສິນ

ໜ່ວຍງານຕ້ານການຄ້າມະນຸດ ແລະ ສະຖາບັນສິດທິມະນຸດແຫ່ງຊາດ ຄວນກຳນົດ ແລະ ແກ້ໄຂນິຕິກຳ, ຂັ້ນຕອນ ແລະ ອຸປະສັກໃນພາກປະຕິບັດຕົວຈິງ ທີ່ຜູ້ຖືກເຄາະຮ້າຍໄດ້ປະເຊີນໃນການຍົກເລີກ ຫຼື ລຶບລ້າງການບັນທຶກປະຫວັດອາຊະ ຍາກຳ. ຄວນມີການພິຈາລະນາ ຂໍການສະໜັບສະໜູນຈາກພາກສ່ວນທີ່ບໍ່ແມ່ນໜ່ວຍງານລັດ ລວມທັງ ອົງການຈັດຕັ້ງ ສາກົນທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ ໃນການກຳນົດ ແລະ ແກ້ໄຂອຸປະສັກເຫຼົ່ານີ້.

ຮັບປະກັນການເຂົ້າເຖິງການປຽວຢາ ເຊິ່ງອາດຈະຮຽກຮ້ອງໃຫ້ບັນດາປະເທດສະມາຊິກອາຊຽນຈັດສັນງົບປະມານທີ່ພຽງພໍ ໃຫ້ສານ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອາກາເຕີ ລວມທັງ ໃຫ້ການຊ່ວຍເຫຼືອດ້ານກົດໝາຍ ເພື່ອຫຼຸດຜ່ອນ ພາລະຂອງຜູ້ຖືກເຄາະຮ້າຍໃນການພິສູດວ່າ ຄຳຕັດສິນບໍ່ຖືກຕ້ອງ.[121]

ເຊິ່ງມີຄວາມຈຳເປັນທີ່ຕ້ອງມີມາດຕະການ ເພື່ອລຶບລ້າງອຸປະສັກທີ່ມີການຈຳແນກ ທີ່ຜູ້ຖືກເຄາະຮ້າຍບາງຄົນອາດປະເຊີນຢູ່ ໃນການເຂົ້າເຖິງການປຽວຢາ. ຕົວຢ່າງ ຂໍ້ມູນກ່ຽວກັບການປຽວຢາ ພາຍຫຼັງຄຳຕັດສິນ ຄວນສື່ສານໃນພາສາ ທີ່ຜູ້ຖືກເຄາະຮ້າຍທີ່ຖືກຕັດສິນນັ້ນ ສາມາດເຂົ້າໃຈໄດ້. ຂໍ້ມູນຂ່າວສານນັ້ນ ຕ້ອງໄດ້ມີການສື່ສານ ແລະ ມີຂະບວນການ ຈັດຕັ້ງປະຕິບັດໃນລັກສະນະທີ່ເປັນມິດກັບເດັກ ແລະ ສາມາດເຂົ້າເຖິງເດັກ ແລະ ໄວໜຸ່ມ ແລະ ຕ້ອງຮວມເອົາກຸ່ມຄົນທີ່ມີຄວາມພິການ ໂດຍສອດຄ່ອງກັບຂໍ້ກຳນົດໃນກົດໝາຍສາກົນ ທີ່ກ່ຽວຂ້ອງກັບການເຂົ້າເຖິງຄວາມຍຸຕິທຳ ແລະ ການປຽວຢາທີ່ມີປະສິດທິພາບ.

120 ຄຳແນະນຳກ່ຽວກັບບັນຫາການຕອບໂຕ້ຄວາມຍຸຕິທຳທາງອາຍາທີ່ເໝາະສົມຕໍ່ຜູ້ຖືກເຄາະຮ້າຍ ທີ່ຖືກບັງຄັບໃຫ້ກະທຳຜິດຍ້ອນຖືກຄ້າມະນຸດ: ເອກະສານຄວາມເປັນມາ ກະກຽມໂດຍ ກອງເລຂາ ຄະນະປະຕິບັດງານຕ້ານການຄ້າມະນຸດ, ວຽນນາ ວັນທີ 10 ແລະ 11 ກັນຍາ 2020, UN Doc. CTOC/COP/WG.4/2020/2 (ວັນທີ 15 ມິຖຸນາ 2020), ວັກທີ 50.

121 ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດ: ບົດລາຍງານຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ , Siobhán Mullaly, UN Doc. A/HRC/47/34 (ວັນທີ 17 ພຶດສະພາ 2021), ວັກທີ 50.

### ຄຳແນະນຳຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ

ໃນເວລາທີ່ເຈົ້າໜ້າທີ່ພາຍໃນປະເທດ ບໍ່ສາມາດນຳໃຊ້ຫຼັກການບໍ່ລົງໂທດ ແລະ ມີຄຳຕັດສິນ ຫຼື ການລົງໂທດຜູ້ຖືກຄ້າມະນຸດ ຫຼັກການກວດສອບຄວາມຖືກຕ້ອງຕາມກົດໝາຍ ຮຽກຮ້ອງໃຫ້ລັດຢຽວຢາຕໍ່ກັບຄວາມບໍ່ອາດສາມາດດັ່ງກ່າວ. ການຮັບປະກັນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຢ່າງເຕັມສ່ວນ ແລະ ມີປະສິດທິພາບ ເຊິ່ງຮຽກຮ້ອງໃຫ້ມີຂໍ້ກຳນົດ ໃນການລຶບລ້າງ ຫຼື ປິດປະຫວັດການບັນທຶກທາງອາຍາທັງໝົດທີ່ກ່ຽວຂ້ອງ ແລະ ບັນເທົາທຸກຕໍ່ກັບການລົງໂທດທີ່ເກີດຂຶ້ນ ລວມທັງ ການປັບໃໝ ຫຼື ການລົງໂທດທາງບໍລິຫານອື່ນໆ. ການບັນເທົາທຸກດັ່ງກ່າວ ຄວນຈະມີໃນນິຕິກຳ ແລະ ມາດຕະການອັນຈຳເປັນອື່ນໆ ແລະ ໄດ້ຮັບການສະໜັບສະໜູນໂດຍຜ່ານການຊ່ວຍເຫຼືອທາງດ້ານກົດໝາຍ ເພື່ອຫຼີກລ້ຽງພັນທະໃນການກວດສອບທາງດ້ານກົດໝາຍທີ່ເກີດຂຶ້ນ ແກ່ຜູ້ທີ່ຖືກຄ້າມະນຸດ ເພື່ອໃຫ້ສາມາດໄດ້ຮັບການຟື້ນຟູຢ່າງເຕັມສ່ວນ.

ລັດ ຄວນຮັບປະກັນວ່າການຕັດສິນຜູ້ຖືກຄ້າມະນຸດ ທີ່ມີຜົນມາຈາກຄວາມບໍ່ສາມາດນຳໃຊ້ຫຼັກການບໍ່ໂທດ ຫຼື ຈາກຂໍ້ສົງໄສທີ່ຜູ້ຖືກຄ້າມະນຸດ ໄດ້ມີສ່ວນກ່ຽວຂ້ອງກັບຄວາມຜິດກ່ຽວກັບການຄ້າມະນຸດ ຈະບໍ່ສົ່ງຜົນໃຫ້ມີການປະຕິເສດ ໃນການຂໍອະນຸຍາດດ້ານທີ່ຢູ່ອາໄສ ຫຼື ໃນໄລຍະເວລາຟື້ນຟູ ແລະ ທົບທວນຄືນ, ປະຕິເສດຄວາມໝັ້ນຄົງທາງສັງຄົມ ຫຼື ຜົນປະໂຫຍດອື່ນໆ, ຈຳກັດການເຂົ້າເຖິງການຈ້າງງານ, ການສຶກສາ ຫຼື ຈຳກັດການເຂົ້າເຖິງການຊົດເຊີຍ.[122]

122 ແຫຼ່ງຂໍ້ມູນ: ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດ: ບົດລາຍງານຂອງຜູ້ລາຍງານພິເສດ ກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ , Siobhán Mullaly, UN Doc. A/HRC/47/34 (ວັນທີ 17 ພຶດສະພາ 2021), [65-66]

## ພາກທີ 6

# ການຕິດຕາມ ແລະ ການລາຍງານ ການຈັດຕັ້ງປະຕິບັດຫຼັກການ ບໍ່ລົງໂທດ

## ພາກທີ 6. ການຕິດຕາມ ແລະ ການລາຍງານການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ

ໃນລະດັບພາກພື້ນ, ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນວ່າດ້ວຍກາຊະຍາກຳຂ້າມຊາດ (SOMTC) ເປັນໜ່ວຍງານປະສານງານ ຕໍ່ກັບຄວາມພະຍາຍາມເພື່ອເຮັດໃຫ້ຫຼັກການບໍ່ລົງໂທດມີຜົນບັງຄັບໃຊ້ໃນກົດໝາຍ, ນະໂຍບາຍ ແລະ ພາກປະຕິບັດຕົວຂອງຂອງບັນດາປະເທດສະມາຊິກອາຊຽນ. SOMTC ຍັງມີໜ້າທີ່ຮັບຜິດຊອບ ລາຍງານການຈັດຕັ້ງປະຕິບັດສົນທິສັນຍາ ACTIP ຕໍ່ກອງປະຊຸມລັດຖະມົນຕີອາຊຽນວ່າດ້ວຍອາຊະຍາກຳຂ້າມຊາດ (AMMTC). ຕາມທີ່ກຳນົດໄວ້ໃນສົນທິສັນຍາ ACTIP:

**ມາດຕາ 24**
**ການຕິດຕາມ, ການທົບທວນ ແລະ ການລາຍງານ**

1. ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນວ່າດ້ວຍກາຊະຍາກຳຂ້າມຊາດ (SOMTC) ຈະຮັບຜິດຊອບໃນການສົ່ງເສີມ, ຕິດຕາມ, ທົບທວນ ແລະ ລາຍງານ ເປັນໄລຍະ ຕໍ່ກອງປະຊຸມລັດຖະມົນຕີອາຊຽນ ວ່າດ້ວຍອາຊະຍາກຳຂ້າມຊາດ (AMMTC) ໃນການຈັດຕັ້ງສົນທິສັນຍາສະບັບນີ້ ຢ່າງມີປະສິດທິພາບ
2. ກອງເລຂາທິການອາຊຽນ ຈະໃຫ້ການສະໜັບສະໜູນໃນການຊີ້ນຳ ແລະ ປະສານງານ ການຈັດຕັ້ງປະຕິບັດສົນທິສັນຍານີ້ ແລະ ຊ່ວຍ SOMTC ໃນທຸກຂົງເຂດທີ່ຕິດພັນກັບວຽກງານດັ່ງກ່າວ.

SOMTC ຄວນຄົ້ນຄ້ວາໂອກາດໃນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ໃນວຽກງານການຕິດຕາມ, ທົບທວນ ແລະ ລາຍງານຂອງຕົນ ລວມທັງ ຜ່ານແຜນວຽກໂບໂຮ ວ່າດ້ວຍການຕ້ານການຄ້າມະນຸດ 2.0 (Bohol TIP Work Plan 2.0). AICHR ສາມາດສະໜັບສະໜູນ SOMTC ໃນວຽກງານການຕິດຕາມ, ທົບທວນ ແລະ ລາຍງານ ດ້ວຍການຮັບປະກັນວ່າ ມີການພິຈາລະນາສິດທິມະນຸດ ທີ່ໄດ້ເຊື່ອມສານເຂົ້າໃນເງື່ອນໄຂການຕິດຕາມ ຢ່າງມີປະສິດທິພາບ ຫຼື ລວມທັງ ທີ່ກ່ຽວຂ້ອງໃນມາດຕາ 14(7) ຂອງສົນທິສັນຍາ ACTIP ແລະ ວິທີການຕິດຕາມ ຂອງຕົນ ຕາມມາດຕະຖານສິດທິມະນຸດ.

## [14]ເຊື່ອມສານເອົາການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ເຂົ້າໃນກົນໄກການຕິດຕາມລະດັບຊາດ

### ພັດທະນາຕົວຊີ້ວັດ ເພື່ອວັດແທກການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ

> ບັນດາປະເທດສະມາຊິກອາຊຽນຄວນຖືກແນະນຳວ່າ ກົນໄກລະດັບຊາດ ເພື່ອການຕິດຕາມການຕອບໂຕ້ການຄ້າມະນຸດ ມີຄວາມຊັດເຈນ ໂດຍຮວມເອົາການຕິດຕາມການຈັດຕັ້ງປະຕິບັດຕາມມາດຕາ 14(7) ຂອງສົນທິສັນຍາ ACTIP.

ແຜນວຽກໂບໂຮວ່າດ້ວຍຕ້ານການຄ້າມະນຸດ ສະບັບ 2.0 ແນະນຳໃຫ້ມີຕົວຊີ້ວັດທີ່ເປັນໄປໄດ້ ເພື່ອວັດແທກຜົນສຳເລັດ ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ:

- ຈຳນວນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ໄດ້ຮັບຜົນປະໂຫຍດຈາກຫຼັກການບໍ່ລົງໂທດ
- ຈຳນວນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໄດ້ຮັບການກຳນົດຕົວໃນສະຖານທີ່ກັກຕົວຂອງການກວດຄົນເຂົ້າ–ອອກເມືອງ ແລະ ສົ່ງຕໍ່ອອກຈາກສະຖານທີ່ດັ່ງກ່າວ ໄປຍັງສູນພັກເຊົາ ຫຼື ຮູບແບບທີ່ພັກເຊົາອື່ນໆ ທີ່ເໝາະສົມສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ

ລັດ ຄວນພັດທະນາຕົວຊີ້ວັດເພີ່ມເຕີມ ໂດຍການປຶກສາຫາລືກັບຜູ້ບັງຄັບໃຊ້ກົດໝາຍ, ພະນັກງານໄອຍະການ, ທະນາຍຄວາມທີ່ໃຫ້ການປົກປ້ອງ, ສະມາຊິກຝ່າຍຕຸລາການ, ອົງການຈັດຕັ້ງທາງສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ. ຕົວຊີ້ວັດຄວນອອກແບບເພື່ອວັດແທກ ຄວາມພະຍາຍາມຂອງລັດ ເຊິ່ງລວມມີ ແຕ່ບໍ່ຈຳກັດ:

- ຈັດສັນງົບປະມານ ແລະ ບຸກຄະລາກອນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ໂດຍສອດຄ່ອງກັບຄຳແນະນຳນີ້
- ຮັບຮອງກົດໝາຍສະບັບໃໝ່ ແລະ ນະໂຍບາຍຕ່າງໆ ທີ່ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງປະຕິບັດ ຫຼັກການບໍ່ລົງໂທດ
- ເສີ່ງເສີມການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ
- ສ້າງຄວາມສາມາດໃຫ້ແກ່ເຈົ້າໜ້າທີ່ດ່ານໜ້າ ໃນການນຳໃຊ້ຫຼັກການບໍ່ລົງໂທດ ລວມທັງ ກຳນົດຕົວຊີ້ວັດປັດຈຸບັນໃຫ້ແກ່ເຂົາເຈົ້າ ເພື່ອກັ່ນກອງຜູ້ຖືກເຄາະຮ້າຍ ຜູ້ທີ່ອາດຈະມີສ່ວນກ່ຽວຂ້ອງ ກັບການກະທຳທີ່ຜິດກົດໝາຍ
- ຫັນປ່ຽນການສັນນິຖານ ຜູ້ຖືກເຄາະຮ້າຍຈາກຊ່ອງທາງຍຸຕິທຳທາງອາຍາ ໄປສູ່ແນວທາງການປົກປ້ອງ

- ສ້າງຄວາມສາມາດໃຫ້ແກ່ຜູ້ປະຕິບັດຕົວຈິງດ້ານຍຸຕິທຳທາງອາຍາ ເພື່ອນຳໃຊ້ຫຼັກການບໍ່ລົງໂທດ ລວມທັງ ການເຊື່ອມສານເອົາຫຼັກການບໍ່ລົງໂທດເຂົ້າໃນຫຼັກສູດຝຶກອົບຮົມ
- ເພີ່ມຈຳນວນຕົວເລກຄຳຕັດສິນຂອງສານ ແລະ ຝ່າຍບໍລິຫານ ທີ່ອະນຸຍາດໃຫ້ນຳໃຊ້ຫຼັກການບໍ່ລົງໂທດ ແກ່ຜູ້ທີ່ຖືກສັນນິຖານວ່າເປັນຜູ້ຖືກເຄາະຮ້າຍ

ຕົວຊີ້ວັດຄວນສະເພາະເຈາະຈົງ, ວັດແທກໄດ້, ສາມາດບັນລຸໄດ້, ມີຄວາມກ່ຽວຂ້ອງ ແລະ ມີກອບເວລາ. ການພັດທະນາຕົວຊີ້ວັດ ຄວນໄດ້ຮັບຂໍ້ມູນເລິກເຊິ່ງຈາກລັດ ແລະ ໜ່ວຍງານທີ່ບໍ່ແມ່ນລັດ ລວມທັງ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຈຳເປັນຕ້ອງມີກົນໄກການເກັບກຳຄຳເຫັນຂອງເຂົາເຈົ້າ.

## ການເກັບກຳ, ປົກປ້ອງ, ສັງລວມ ແລະ ວິເຄາະຂໍ້ມູນ ກ່ຽວກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ

ໜ່ວຍງານຕ້ານການຄ້າມະນຸດ ຄວນກຳນົດວ່າຈະມີການເກັບກຳຂໍ້ມູນ, ປົກປ້ອງ, ສັງລວມ ແລະ ວິເຄາະຂໍ້ມູນ ດ້ານປະລິມານ ແລະ ຄຸນນະພາບແນວໃດ ເພື່ອໃຫ້ສອດຄ່ອງກັບສິດທິຄວາມເປັນສ່ວນຕົວ. ໜ່ວຍງານທີ່ມີສິດອຳນາດ ຂອງລັດ ຄວນກຳນົດວິທີການນຳເອົາຂໍ້ມູນເປັນຂໍ້ມູນລວມສູນ ແລະ ວິເຄາະໄດ້ ເພື່ອກຳນົດວ່າຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດ ຈະໄດ້ຮັບການປົກປ້ອງຈາກການຄ້າມະນຸດແນວໃດ ແລະບຸກຄົນທີ່ຖືກລົງໂທດໂດຍບໍ່ຖືກຕ້ອງນັ້ນ ຈະສາມາດເຂົ້າເຖິງການຊົດເຊີຍ ຫຼື ບໍ່. ເຂົາເຈົ້າຄວນພິຈາລະນາແຫຼ່ງຂໍ້ມູນອື່ນ ທີ່ສາມາດໃຫ້ການສະໜັບສະໜູນ ໜ່ວຍງານຕິດຕາມ ເພື່ອກຳນົດຂອບເຂດທີ່ຫຼັກການບໍ່ລົງໂທດ ໄດ້ຖືກນຳໃຊ້ ຫຼື ບໍ່ໄດ້ຖືກນຳໃຊ້ ໃນພາກປະຕິບັດຕົວຈິງ ໃນຂອບເຂດສິດອຳນາດຂອງປະເທດຕົນ. ການພິຈາລະນາຄວນໃຫ້ກວມເຖິງການບໍ່ລົງໂທດໃນສຳນວນຄະດີ ເພື່ອບັນທຶກວ່າ ຫຼັກການບໍ່ລົງໂທດໄດ້ຖືກນຳໃຊ້ ຫຼື ບໍ່ ຕໍ່ກັບຄະດີດັ່ງກ່າວ ແລະ ຄຳຕັດສິນໄດ້ອີງໃສ່ກົດໝາຍໃດ ເປັນພື້ນຖານ.

ນອກເໜືອຈາກຂໍ້ມູນດ້ານປະລິມານ, ລັດຄວນມີຂໍ້ມູນດ້ານຄຸນນະພາບ. ຄວນລວມເອົາຂໍ້ມູນດ້ານປະລິມານທີ່ແບ່ງປັນໄດ້ ເພື່ອຜົນປະໂຫຍດຂອງຜູ້ປະຕິບັດຕົວຈິງ ພາຍໃນລັດ ແລະ ບ່ອນອື່ນໆ, ເຊິ່ງຄວນເປັນຂໍ້ມູນກ່ຽວກັບສິ່ງທ້າທາຍ ທີ່ລັດປະເຊີນຢູ່ໃນການປະຕິບັດພັນທະໃນຫຼັກການບໍ່ລົງໂທດ ລວມທັງ ການປະຕິບັດທີ່ເປັນຕົວແບບທີ່ດີ ແລະ ບົດຮຽນຈາກການພັດທະນາດ້ານນິຕິກຳ. ເຊິ່ງເປັນປະໂຫຍດແກ່ລັດ ໃນການຮວບຮວມຂໍ້ມູນກ່ຽວກັບການກຳນົດຕົວ ແລະ ປະເພດຂອງການກະທຳທີ່ຜິດກົດໝາຍ ທີ່ຜູ້ຖືກເຄາະຮ້າຍໄດ້ມີສ່ວນພົວພັນ ໃນເວລາທີ່ເຂົາເຈົ້າຖືກຄ້າມະນຸດ. ບົດຮຽນດັ່ງກ່າວ ສາມາດເປັນບົດຮຽນທີ່ມີປະໂຫຍດ ແລະ ສິ່ງທ້າທາຍທີ່ຖືກກຳນົດຂຶ້ນ ແລະ ຖືກແກ້ໄຂ ໂດຍຜ່ານການເກັບຂໍ້ມູນດ້ານຄຸນນະພາບ ກ່ຽວກັບການນຳໃຊ້ຫຼັກການບໍ່ລົງໂທດແກ່ຜູ້ຖືກເຄາະຮ້າຍ ທີ່ຢູ່ໃນທີ່ປະຊຸມສານ ແລະ/ຫຼື ໃນຄວາມຜິດທີ່ຖືກຕັດສິນແລ້ວ.

## ນຳໃຊ້ວິທີການຈາກຫຼາຍພາກສ່ວນທີ່ກ່ຽວຂ້ອງ ໃນການຕິດຕາມການຈັດຕັ້ງປະຕິບັດ

ໜ່ວຍງານຕ້ານການຄ້າມະນຸດລະດັບຊາດ ແລະ ບ່ອນອື່ນໆທີ່ມີຢູ່, ສະຖາບັນສິດທິມະນຸດແຫ່ງຊາດ ມີບົດບາດສຳຄັນ ໃນການຕິດຕາມຫຼັກການບໍ່ລົງໂທດ. ເຂົາເຈົ້າຄວນຈະເຮັດໃຫ້ເຈົ້າໜ້າທີ່ລັດມີຄວາມຮັບຜິດຊອບ ຕໍ່ກັບການຈັດຕັ້ງປະຕິບັດທີ່ບໍ່ສາມາດນຳໃຊ້ຫຼັກການບໍ່ລົງໂທດໃນການຕັດສິນໃຈໃດໜຶ່ງ ຕໍ່ກັບການຈັບຕົວ, ກັກຂັງ, ເນລະເທດ, ດຳເນີນຄະດີ ແລະ ຕັດສິນລົງໂທດຜູ້ຖືກເຄາະຮ້າຍ. ສະຖາບັນສິດທິມະນຸດແຫ່ງຊາດ ຄວນຕິດຕາມຂະບວນການກຳນົດຕົວ ລວມທັງ ການໄຕ່ສວນຜູ້ຖືກເຄາະຮ້າຍ ທີ່ຖືກດຳເນີນຄະດີສຳລັບການກະທຳທີ່ຜິດກົດໝາຍທີ່ເຂົາເຈົ້າໄດ້ມີສ່ວນພົວພັນ. ເຂົາເຈົ້າຄວນກຳນົດ ພິຈາລະນາຂະບວນການຂອງສານ ຕໍ່ກັບມາດຖານດ້ານສິດທິມະນຸດ ແລະ ມາດຕະການທີ່ຈຳເປັນ ເພື່ອເຮັດໃຫ້ຫຼັກການບໍ່ລົງໂທດທີ່ມີປະສິດທິພາບ. ເຂົາເຈົ້າຄວນສ້າງລະບົບ ທີ່ອະນຸຍາດໃຫ້ພາກສ່ວນທີ່ກ່ຽວຂ້ອງອື່ນໆ – ລວມທັງ ຜູ້ຖືກເຄາະຮ້າຍ – ໄດ້ມີຄຳເຫັນ ຕໍ່ກັບກົນໄກການຕິດຕາມລະດັບຊາດ ໂດຍປາສະຈາກຄວາມຢ້ານກົວທີ່ຈະຖືກຂົ່ມຂູ່.

ໜ່ວຍງານທີ່ບໍ່ແມ່ນພາກລັດ ລວມທັງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມ ມີບົດບາດສຳຄັນຕໍ່ການສະໜັບສະໜູນໜ່ວຍງານຕ້ານການຄ້າມະນຸດ ແລະ ສະຖາບັນດ້ານສິດທິມະນຸດແຫ່ງຊາດ ໃນການຕິດຕາມການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດໃນພາກປະຕິບັດຕົວຈິງ. ຕົວຢ່າງ ເຂົາເຈົ້າສາມາດຊ່ວຍໜ່ວຍງານ ຂອງລັດ ໃນການກຳນົດຕົວຊີ້ວັດ ແລະ ຂະບວນການຕິດຕາມທີ່ອີງໃສ່ສິດທິມະນຸດ. ເຂົາເຈົ້າຍັງສາມາດສະໜັບ ສະໜູນລັດ ໃນການເຊື່ອມສານເອົາຄວາມຄິດເຫັນ ແລະ ປະສົບການຂອງຜູ້ຖືກເຄາະຮ້າຍ ເພື່ອອອກແບບ ກົນໄກການຕິດຕາມ. ສິ່ງທີ່ສຳຄັນ, ໜ່ວຍງານທີ່ບໍ່ແມ່ນພາກລັດ ແລະ ອົງການຈັດຕັ້ງທາງສັງຄົມ ອາດຈະສາມາດ ມີຄວາມເປັນເອກະລາດ ແລະ ໂປ່ງໃສ ໃນການຕິດຕາມການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຂອງລັດ. ການຕິດຕາມ ທີ່ເປັນເອກະລາດ ສາມາດສະໜັບສະໜູນຜູ້ຊ່ຽວຊານ ແລະ ຈຸດປະສົງການວິເຄາະວ່າ ລັດໄດ້ປະຕິບັດຕາມພັນທະຂອງຕົນ ຄືແນວໃດ. ຂໍ້ມູນແບບເລິກເຊິ່ງທີ່ໄດ້ຮັບຜ່ານການຕິດຕາມທີ່ເປັນເອກະລາດ ຈະເປັນປະໂຫຍດຫຼາຍກວ່າ ຂໍ້ມູນທີ່ເກີດຂຶ້ນໃນເວລາລັດຕິດຕາມກິດຈະກຳຂອງຕົນເອງ.

## [15] ການລາຍງານການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ

ການວັດແທກຜົນການຈັດຕັ້ງປະຕິບັດ ຈະບໍ່ມີຄຸນຄ່າຈົນກວ່າຜົນຂອງການຮຽນຮູ້ນັ້ນ ໄດ້ມີການລາຍງານ ແລະ ໄດ້ຈັດຕັ້ງປະຕິບັດ ເພື່ອສ້າງຄວາມເຂັ້ມແຂງດ້ານການຮ່ວມມື. ທີ່ສຳຄັນ, ການລາຍງານຄວນຈະມີຜົນນຳໄປສູ່ການປະຕິບັດ ເພື່ອແກ້ໄຂຂໍ້ຜິດພາດຕ່າງໆ. ລັດຄວນຖືກແນະນຳໃຫ້ລົງທຶນດ້ານການເງິນ, ບຸກຄະລາກອນ ແລະ ຊັບພະຍາກອນອື່ນໆ ເຂົ້າໃນການສ້າງ ຄວາມເຂັ້ມແຂງການນຳໃຊ້ຫຼັກການບໍ່ລົງໂທດ ອີງຕາມຂໍ້ມູນແບບລົງເລິກ ໂດຍຜ່ານການລາຍງານ. ບັນດາປະເທດສະມາຊິກອາຊຽນຄວນສະໜັບສະໜູນຄວາມພະຍາຍາມ ໃນການລາຍງານການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ໃນທົ່ວພາກພື້ນອາຊຽນ.

### ການລາຍງານການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຕໍ່ SOMTC

ກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນວ່າດ້ວຍອາຊະຍາກຳຂ້າມຊາດ (SOMTC) ມີຄວາມຮັບຜິດຊອບໃນການຕິດຕາມ ການຈັດຕັ້ງປະຕິບັດສົນທິສັນຍາທີ່ມີປະສິດທິພາບ ແລະ ລາຍງານເປັນແຕ່ໄລຍະ ໃຫ້ແກ່ກອງປະຊຸມລັດຖະມົນອາຊຽນ ວ່າດ້ວຍອາຊະຍາກຳຂ້າມຊາດ (AMMTC) ແລະ ການຈັດຕັ້ງປະຕິບັດຂອງຕົນ.[123]

ບັນດາປະເທດສະມາຊິກອາຊຽນຄວນຮີບຮ້ອນແຕ່ງຕັ້ງຜູ້ຕາງໜ້າໃນລະດັບຊາດກ່ຽວກັບສົນທິສັນຍາ ACTIP ໂດຍສອດຄ່ອງກັບຂອບເຂດໜ້າທີ່ ທີ່ໄດ້ຕົກລົງກັນໃນກອງປະຊຸມລັດຖະມົນອາຊຽນວ່າດ້ວຍອາຊະຍາກຳຂ້າມຊາດ (AMMTC) ປີ 2022.[124] ຜູ້ຕາງໜ້າລະດັບຊາດກ່ຽວກັບສົນທິສັນຍາ ACTIP ຄວນມີໜ້າທີ່ໃນການສົ່ງເສີມ, ຕິດຕາມ, ທົບທວນ ແລະ ລາຍງານໃຫ້ແກ່ SOMTC ກ່ຽວກັບການຈັດຕັ້ງປະຕິບັດມາດຕາ 14(7) ກ່ຽວກັບຫຼັກການບໍ່ລົງໂທດ. ຕໍ່ກັບຄວາມສາມາດດັ່ງກ່າວ, ຜູ້ຕາງໜ້າລະດັບຊາດກ່ຽວກັບສົນທິສັນຍາ ACTIP ສາມາດເກັບກຳ ແລະ ສັງລວມຂໍ້ມູນ ແລະ ການປະຕິບັດທີ່ດີ ໃນການນຳໃຊ້ຫຼັກການບໍ່ລົງໂທດ.

ບັນດາປະເທດສະມາຊິກອາຊຽນ ຄວນມີການລາຍງານການຈັດຕັ້ງປະຕິບັດກິດຈະກຳ / ແຜນງານ ກ່ຽວກັບການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ຕໍ່ກຸ່ມເຮັດວຽກສະເພາະກິດວ່າດ້ວຍການຕ້ານການຄ້າມະນຸດ (ກຸ່ມເຮັດວຽກສະເພາະກິດ SOMTC ກ່ຽວກັບການຕ້ານການຄ້າມະນຸດ).[125] ກຸ່ມເຮັດວຽກສະເພາະກິດ SOMTC ກ່ຽວກັບການຕ້ານການຄ້າມະນຸດ ມີໜ້າທີ່ຮັບເອົາບົດລາຍງານປະຈຳປີຈາກບັນດາປະເທດສະມາຊິກອາຊຽນທີ່ເຂົ້າຮ່ວມໃນ ແຜນວຽກໂບໂຮວ່າດ້ວຍການຕ້ານການຄ້າມະນຸດ ສະບັບ 2.0

### ພັດທະນາ ແລະ ນຳໃຊ້ວິທີການ ທີ່ເປັນມາດຕະຖານ ໃນການລາຍງານຫຼັກການບໍ່ລົງໂທດ

ກຸ່ມເຮັດວຽກສະເພາະກິດ SOMTC ກ່ຽວກັບການຕ້ານການຄ້າມະນຸດ ຄວນພັດທະນາຕົວແບບມາດຕະຖານການລາຍງານ ໂດຍສອດຄ່ອງກັບ ກອບວຽກການຕິດຕາມ, ປະເມີນຜົນ, ລາຍງານ ແລະ ການຮຽນຮູ້ຂອງຕົນ (MERL). ຮູບແບບ (template) ຄວນມີການອອກແບບໂດຍກວມເອົາການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ແລະ ມີການເຜີຍແຜ່ໃນລະດັບຊາດ. AICHR ສາມາດສະໜອງຄວາມຊ່ຽວຊານດ້ານສິດທິມະນຸດ ໃນການອອກແບບ ແລະ ພັດທະນາ ຕົວແບບດັ່ງກ່າວ ແລະ ສະໜັບສະໜູນການນຳໃຊ້ ເພື່ອທົບທວນການປະຕິບັດຕົວຈິງຂອງລັດສະມາຊິກອາຊຽນ. ຄວນມີການນຳໃຊ້ວິທີການລະຫວ່າງຂະແໜງການຕ່າງໆ ໃນການກຳນົດ ແລະ ພັດທະນາຄຳແນະນຳ ເພື່ອປັບປຸງຫຼັກການບໍ່ລົງໂທດໃນລະດັບຊາດ.

### ເຜີຍແຜ່ການລາຍງານ ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ

ຄວາມພະຍາຍາມ ໃນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ຄວນມີຄວາມໂປ່ງໃສ. ຜົນການຕິດຕາມ ຄວນຖືກແນະນຳໃຫ້ເຜີຍແຜ່ ຕໍ່ກັບຜົນສຳເລັດ, ສິ່ງທ້າທາຍ ແລະ ການປະຕິບັດທີ່ເປັນຕົວແບບທີ່ດີຂອງບັນດາປະເທດສະມາຊິກອາຊຽນໃນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ເພື່ອໃຫ້ລັດອື່ນໆໃນພາກພື້ນ ແລະ ນອກເໜືອຈາກພາກພື້ນ ສາມາດຮຽນຮູ້ ແລະ ຖອດຖອນບົດຮຽນໄດ້.

123 ມາດຕາ 24 ສົນທິສັນຍາ ACTIP

124 ເບິ່ງທີ່ ຂອບເຂດສິດ ແລະ ໜ້າທີ່ຂອງຕົວແທນລະດັບຊາດໃນການຈັດຕັ້ງປະຕິບັດສົນທິສັນຍາອາຊຽນວ່າດ້ວຍການຕ້ານການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ (ສົນທິສັນຍາ ACTIP) ຕົວແທນລະດັບຊາດກ່ຽວກັບສົນທິສັນຍາ ACTIP, ຮັບຮອງເອົາ ໂດຍ AMMTC ຄັ້ງທີ 16 ວັນທີ 21 ກັນຍາ 2022.

125 ແຜນວຽກໂບໂຮ ສະບັບ 2.0, B.1.4.

# ເອກະສານຊ້ອນທ້າຍ

## ເອກະສານຊ້ອນທ້າຍ

## ເອກະສານຊ້ອນທ້າຍ 1: ຂໍ້ກຳນົດທາງກົດໝາຍກ່ຽວກັບການບໍ່ລົງໂທດໃນລັດສະມາຊິກອາຊຽນ

| | |
|---|---|
| ປະເທດບຣູໄນ ດາຣູຊາລຳ<br><br>(ສະເພາະ ຄວາມຜິດ ກ່ຽວກັບການເຂົ້າ–ອອກເມືອງ ແລະ ກ່ຽວກັບເອກະສານ) | ຜູ້ຖືກຄ້າມະນຸດ ຈະບໍ່ມີຄວາມຮັບຜິດຊອບໃນການຖືກດຳເນີນຄະດີອາຍາ ທີ່ກ່ຽວຂ້ອງກັບ –<br>(a) ການເຂົ້າປະເທດບຣູໄນໂດຍບໍ່ຖືກຕ້ອງຕາມກົດໝາຍ;<br>(b) ອາໄສຢູ່ໃນປະເທດບຣູໄນຢ່າງຜິດກົດໝາຍ ຫຼື<br>(c) ການຈັດຫາ ຫຼື ການຄອບຄອງເອກະສານການເດີນທາງໂດຍບໍ່ຖືກ ຕ້ອງຕາມກົດໝາຍ ຫຼື ເອກະສານລະບຸຕົວຕົນ ຫຼື ສິ່ງທີ່ໄດ້ຮັບມາ ເພື່ອຈຸດປະສົງການເຂົ້າປະເທດບຣູໄນ, ເຊິ່ງການກະທຳດັ່ງກ່າວ ເປັນຜົນສະທ້ອນຈາກຄວາມຜິດໃນສະຖານການຄ້າມະນຸດ ທີ່ຖືກກ່າວຫາວ່າໄດ້ກະທຳ ຫຼື ໄດ້ກະທຳຜິດ<br><br>ມາດຕາ 47, *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ, ໝວດທີ 230* |
| ກຳປູເຈຍ | ບໍ່ມີຂໍ້ກຳນົດທີ່ຊັດເຈນ ກ່ຽວກັບການບໍ່ລົງໂທດ |
| ອິນໂດເນເຊຍ | ຜູ້ຖືກເຄາະຮ້າຍ ທີ່ກະທຳຜິດທາງອາຍາ ທີ່ຢູ່ພາຍໃຕ້ການບັງຄັບຂອງຜູ້ກະທຳຜິດ ຕາມກົດ ໝາຍວ່າດ້ວຍອາຍາ ຈະບໍ່ມີຄວາມຮັບຜິດຊອບທາງອາຍາ<br><br>ມາດຕາ 18, *ກົດໝາຍ ເລກທີ 21 ກົດໝາຍວ່າດ້ວຍອາຍາກ່ຽວກັບການລຶບລ້າງການຄ້າມະນຸດ, 2007* |
| ສປປ ລາວ<br><br>(ສະເພາະ ຄວາມຜິດກ່ຽວກັບການເຂົ້າ-ອອກເມືອງ ແລະ ການເປັນໂສເພນີ) | ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ມີສິດດັ່ງຕໍ່ໄປນີ້: [...] 7. ຖືກຍົກເວັ້ນທີ່ຈະບໍ່ມີຄວາມຮັບຜິດຊອບທາງອາຍາ ແລະ ບໍ່ຖືກກັກຂັງໃນສະຖານການເຂົ້າ–ອອກເມືອງ ຜິດກົດໝາຍ ແລະ ການເປັນໂສເພນີ.<br><br>ມາດຕາ 39, *ກົດໝາຍສະບັບທີ 21 ການລຶບລ້າງອາຊະຍາກຳ ກ່ຽວກັບການຄ້າມະນຸດ, 2007* |
| ມາເລເຊຍ<br><br>(ສະເພາະ ຄວາມຜິດກ່ຽວກັບການເຂົ້າ–ອອກເມືອງ ແລະ ເອກະສານ) | ຜູ້ຖືກຄ້າມະນຸດ ຈະບໍ່ມີຄວາມຮັບຜິດຊອບຕໍ່ກັບການດຳເນີນຄະດີອາຍາ ກ່ຽວກັບ:<br>(a) ການເຂົ້າປະເທດປາຍທາງ ຫຼື ປະເທດທາງຜ່ານ ທີ່ຜິດກົດໝາຍ;<br>(b) ໄລຍະເວລາການອາໄສຢູ່ໃນປະເທດທີ່ຜິດກົດໝາຍ ໃນປະເທດປາຍທາງ ຫຼື ປະເທດທາງຜ່ານ; ຫຼື<br>(c) ການຈັດຫາ ຫຼື ຄອບຄອງເອກະສານປອມກ່ຽວກັບການເດີນທາງ ຫຼື ເອກະສານລະບຸຕົວຕົນ ທີ່ເຂົາເຈົ້າໄດ້ຮັບ ຫຼື ທີ່ເຂົາເຈົ້າມີ ເພື່ອຈຸດປະສົງການເຂົ້າປະເທດ ປາຍທາງ ຫຼື ປະເທດທາງຜ່ານ, ເຊິ່ງການກະທຳດັ່ງກ່າວ ເປັນຜົນສະທ້ອນໂດຍກົງຈາກການ ຄ້າມະນຸດ ທີ່ຖືກກ່າວຫາວ່າກະທຳຜິດ ຫຼື ໄດ້ກະທຳຜິດ<br><br>ມາດຕາ 25. *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ແລະ ຕ້ານການລັກລອບເຂົ້າ-ອອກເມືອງຂອງຜູ້ເຄື່ອນຍ້າຍຖິ່ນຖານ, 2007* |
| ມຽນມາ<br><br>(ຄວາມຜິດກ່ຽວກັບການຄ້າມະນຸດ, ການເຂົ້າ, ອອກ, ຜ່ານເມືອງ ທີ່ຜິດກົດໝາຍ, ການເຮັດວຽກທີ່ຜິດກົດໝາຍ ແລະ ຄວາມຜິດກ່ຽວເອກະ ສານ) | 16. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກປະຕິບັດດ້ວຍການຈັບຕົວ, ກັກຂັງ ຫຼື ລົງໂທດ ພາຍໃຕ້ການຄ້າມະນຸດ ທີ່ກ່ຽວຂ້ອງກັບການກະທຳດັ່ງລຸ່ມນີ້:<br>(a) ການມີສ່ວນຮ່ວມຂອງຜູ້ຖືກເຄາະຮ້າຍຕາມການຍິນຍອມ ຫຼື ບໍ່ຍິນຍອມຂອງເຂົາເຈົ້າ<br>(b) ການເຂົ້າ, ຜ່ານ ຫຼື ອອກປະເທດໂດຍຜິດກົດໝາຍ, ການອາໄສຢູ່ ຫຼື ເຮັດວຽກໃນຕ່າງປະເທດໂດຍຜິດກົດໝາຍ<br>(c) ການໄດ້ມາ ຫຼື ຄອບຄອງຫຼັກຖານກ່ຽວກັບເອກະສານການເດີນທາງປອມ ຫຼື ເອກະສານປອມ |

| | |
|---|---|
| ມຽນມາ (ຕໍ່) | 17. ໃນສະຖານະການທີ່ພົບເຫັນວ່າຜູ້ຖືກເຄາະຮ້າຍມີສ່ວນຮ່ວມກັບອາຊະຍາກຳ ຕາມທີ່ກຳນົດໄວ້ໃນກົດໝາຍທີ່ມີຢູ່ ເຊິ່ງກ່ຽວຂ້ອງກັບການຄ້າມະນຸດ ນຳໄປສູ່ການເອົາຄວາມຜິດກັບເຂົາເຈົ້າ, ສະມາຊິກເຈົ້າໜ້າທີ່ຕຳຫຼວດທີ່ບັງຄັບໃຊ້ກົດໝາຍ, ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນ ຕ້ອງຂໍການອະນຸມັດຈາກໜ່ວຍງານຂັ້ນສູນກາງ ໂດຍຜ່ານຄະນະກຳມະການທີ່ເຮັດວຽກສະເພາະກິດທີ່ກ່ຽວຂ້ອງ<br><br>*ກົດໝາຍວ່າດ້ວຍການປ້ອງກັນ ແລະ ສະກັດກັ້ນການຄ້າມະນຸດ (ກົດໝາຍສະບັບເລກທີ 41/2022)* |
| ຟີລິບປິນ | ຜູ້ຖືກຄ້າມະນຸດ ຕ້ອງຖືກຮັບຮູ້ໃນຖານະຜູ້ຖືກເຄາະຮ້າຍທີ່ຖືກກະທຳ ຫຼື ກະທຳການຈາກການຄ້າມະນຸດ ແລະ ການກະທຳດັ່ງກ່າວ ຕ້ອງບໍ່ຖືກລົງໂທດທາງອາຍາຕໍ່ກັບກະທຳທີ່ຜິດກົດໝາຍທີ່ເປັນຜົນໂດຍກົງ ຫຼື ເຫດການ ຫຼື ທີ່ກ່ຽວຂ້ອງກັບການຖືກຄ້າມະນຸດ ຕາມການກະທຳຂອງການຄ້າມະນຸດທີ່ກຳນົດໄວ້ໃນກົດໝາຍ ຫຼື ຕາມຄຳສັ່ງຂອງຜູ້ຄ້າມະນຸດກ່ຽວກັບການກະທຳດັ່ງກ່າວ. ຕໍ່ກັບບັນຫານີ້, ຄວາມຍິນຍອມຂອງຜູ້ຖືກເຄາະຮ້າຍຕໍ່ກັບເຈດຕະນາ ການຂູດຮີດຕາມທີ່ກຳນົດໄວ້ໃນກົດໝາຍສະບັບນີ້ ຈະບໍ່ມີຄວາມກ່ຽວຂ້ອງ.<br>"ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເພື່ອຈຸດປະສົງຂອງການເປັນໂສເພນີ ຕາມທີ່ກຳນົດໄວ້ໃນມາດຕາ 4 ຂອງກົດໝາຍສະບັບນີ້ ບໍ່ໄດ້ລະບຸໄວ້ໃນມາດຕາ 202 ຂອງປະມວນກົດໝາຍອາຍາສະບັບປັບປຸງ ແລະ ດ້ວຍເຫດນັ້ນ, ຈະບໍ່ຖືກດຳເນີນຄະດີ, ປັບໃໝ ຫຼື ລົງໂທດທາງອາຍາໃດໆຕາມກົດໝາຍສະບັບດັ່ງກ່າວ."<br><br>ມາດຕາ 17, *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ (RA No. 9208) ປີ 2003, ແລະ ປັບປຸງໂດຍການຜັນຂະຫຍາຍກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ສະບັບປີ 2012* (RA 10364) |
| ສິງກະໂປ | ບໍ່ມີຂໍ້ກຳນົດທີ່ຊັດເຈນ ກ່ຽວກັບການບໍ່ລົງໂທດ |
| ປະເທດໄທ<br><br>(ສະເພາະ ຄວາມຜິດກ່ຽວກັບການເຂົ້າ-ອອກເມືອງ, ຄວາມຜິດດ້ານເອກະສານ ແລະ ການເປັນໂສເພນີ) | ເວັ້ນແຕ່ ລັດຖະມົນຕີກະຊວງຍຸຕິທຳ ອະນຸຍາດຢ່າງເປັນລາຍລັກອັກສອນ, ຫ້າມເຈົ້າໜ້າທີ່ສືບສວນ-ສອບສວນ ດຳເນີນຄະດີອາຍາຕໍ່ກັບຜູ້ຖືກເຄາະຮ້າຍຈາກ ການຄ້າມະນຸດ ສຳລັບຄວາມຜິດໃນການເຂົ້າມາ, ອອກໄປ ຫຼື ອາໄສຢູ່ໃນຣາຊະອານາຈັກ ໂດຍບໍ່ໄດ້ຮັບອະນຸຍາດຕາມກົດໝາຍວ່າດ້ວຍການເຂົ້າ-ອອກເມືອງ, ການໃຫ້ຂໍ້ມູນໂດຍບໍ່ຖືກຕ້ອງແກ່ເຈົ້າໜ້າທີ່, ການປອມແປງ ຫຼື ນຳໃຊ້ເອກະສານເດີນທາງປອມ ພາຍໃຕ້ປະມວນກົດໝາຍອາຍາ, ຄວາມຜິດພາຍໃຕ້ກົດໝາຍວ່າດ້ວຍການປ້ອງກັນ ແລະ ສະກັດກັ້ນການຄ້າປະເວນີ ໂດຍສະເພາະການຕິດຕໍ່, ການຊັກຊວນ, ການແນະນຳ ແລະ ຊັກຊວນບຸກຄົນ ເພື່ອຈຸດປະສົງຂອງການຄ້າປະເວນີ ແລະ ການຮວມກຸ່ມກັນໃນສະຖານທີ່ຄ້າປະເວນີ ເພື່ອຈຸດປະສົງຂອງການຄ້າປະເວນີ ຫຼື ຄວາມຜິດໃນສະຖານການເປັນຄົນຕ່າງດ້າວ ທີ່ເຮັດວຽກໂດຍບໍ່ໄດ້ຮັບອະນຸຍາດ ພາຍໃຕ້ກົດໝາຍການເຮັດວຽກຂອງຄົນຕ່າງດ້າວ.<br><br>ມາດຕາ 42, *ກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ພສ 2551* (2008) |
| ຫວຽດນາມ | ອີງຕາມ ກໍລະນີສະເພາະ ແລະ ຂໍ້ກຳນົດກົດໝາຍທີ່ກ່ຽວຂ້ອງ, ຜູ້ຖືກເຄາະຮ້າຍ ທີ່ກະທຳຜິດກົດໝາຍ ທີ່ເປັນຜົນໂດຍກົງຈາກການຄ້າມະນຸດ ອາດຈະບໍ່ຖືກດຳເນີນ ຄະດີອາຍາທາງບໍລິຫານ ຫຼື ທາງອາຍາ ຕໍ່ກັບການກະທຳດັ່ງກ່າວ.<br><br>ມາດຕາ 4(5). *ກົດໝາຍສະບັບເລກທີ. 53/2024/QH15 ກ່ຽວກັບການສະກັດກັ້ນ ແລະ ຕ້ານການຄ້າມະນຸດ* ເຊິ່ງໄດ້ຮັບການຮັບຮອງ ວັນທີ 28 ພະຈິກ 2024 ຈະມີຜົນບັງຄັບໃຊ້ ວັນທີ 1 ກໍລະກົດ 2025 |

## ເອກະສານຊ້ອນທ້າຍ 2: ຂໍ້ກຳນົດດ້ານນະໂຍບາຍກ່ຽວກັບຫຼັກການບໍ່ລົງໂທດ ໃນບັນດາປະເທດສະມາຊິກອາຊຽນ

| | |
|---|---|
| ປະເທດບຣູໄນ ດາຣູຊາລຳ | *ແຜນປະຕິບັດງານແຫ່ງຊາດວ່າດ້ວຍການຕ້ານການຄ້າມະນຸດ* (2020 - 2024)<br><br>*ມາດຕະຖານການປະຕິບັດງານແຫ່ງຊາດ ສຳລັບວຽກງານຕ້ານການຄ້າມະນຸດ* (2021)<br><br>ເອກະສານທັງສອງສະບັບນີ້ ບໍ່ສາມາດກຳນົດໄດ້ວ່າ ຫຼັກການບໍ່ລົງໂທດໄດ້ຖືກກຳນົດໄວ້ ຫຼື ບໍ່ |
| ກຳປູເຈຍ | *ຄູ່ມືລະດັບຊາດ ວ່າດ້ວຍແບບຟອມ ແລະ ຂັ້ນຕອນ ສຳລັບການກຳນົດຕົວຜູ້ຖືກເຄາະຮ້າຍ ເພື່ອໃຫ້ການບໍລິການທີ່ເໝາະສົມ* (2015).<br><br>"ໃນລະຫວ່າງຂັ້ນຕອນ [ການກຳນົດຕົວເບື້ອງຕົ້ນ] ຄົນຕ່າງປະເທດທີ່ຖືກກຳນົດຕົວ ວ່າເປັນຜູ້ຖືກເຄາະຮ້າຍ ຈະບໍ່ຖືກກັກຂັງ ຫຼື ຕັ້ງຂໍ້ກ່າວຫາ ໃນສະຖານການເຂົ້າ–ອອກເມືອງ ແລະ/ຫຼື ການເປັນໂສເພນີ. ເຂົາເຈົ້າຄວນໄດ້ຮັບການຊ່ວຍເຫຼືອດ້ານສູນພັກເຊົາ ແລະ ການປົກປ້ອງ ໃນເວລາທີ່ລໍຖ້າຂັ້ນຕອນການສົ່ງກັບຄືນປະເທດ." (2.C, 2)<br><br>*ຂໍ້ຕົກລົງວ່າດ້ວຍຄູ່ມືກ່ຽວກັບການປົກປ້ອງສິດທິຂອງເດັກ ທີ່ເປັນຜູ້ຖືກເຄາະຮ້າຍ ຈາກການຄ້າມະນຸດຂອງຣາຊະອານາຈັກກຳປູເຈຍ* (NCCT, 20 ທັນວາ 2007):<br>ເດັກທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເປັນຜູ້ຖືກເຄາະຮ້າຍທີ່ຖືກລະເມີດ ສິດທິມະນຸດ. ເຂົາເຈົ້າບໍ່ຄວນຖືກປະຕິບັດຄືກັບຜູ້ກະທຳຜິດ ຫຼື ຖືກກະທຳ ຫຼື ຂົ່ມຂູ່ ຈາກການລົງໂທດທາງອາຍາ ຕໍ່ກັບຄວາມຜິດໃດໜຶ່ງທີ່ກ່ຽວຂ້ອງກັບສະຖານະການຂອງເຂົາເຈົ້າໃນຖານະທີ່ເປັນເດັກທີ່ຖືກຄ້າມະນຸດ. (ມາດຕາ 4, 2.3(a))<br><br>*ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການສະກັດກັ້ນ ການຄ້າມະນຸດ ແລະ ການຂູດຮີດທາງເພດ* (ສະບັບແປພາສາໂດຍບໍ່ເປັນທາງການຈາກ UNIAP ປີ 2008) ຄຳແນະນຳທົ່ວໄປ:<br>(4) ໂສເພນີ ຄວນພິຈາລະນາວ່າເປັນຜູ້ຖືກເຄາະຮ້າຍ ທີ່ຖືກຈັດຫາໃຫ້ກາຍເປັນໂສເພນີ. ໂສເພນີບໍ່ແມ່ນອາຊະຍາກຳ; ສະນັ້ນ, ບຸກຄົນທີ່ເປັນໂສເພນີບໍ່ຄວນຖືກລົງໂທດ ໃນຖານະຜູ້ກະທຳຜິດຕາມນິຕິກຳສະບັບໃໝ່.<br><br>*ນະໂຍບາຍ ແລະ ມາດຕະຖານຂັ້ນຕ່ຳ ສຳລັບການປົກປ້ອງສິດ ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ* (ກະຊວງວ່າດ້ວຍສັງຄົມ, ນັກຮົບເກົ່າ ແລະ ການຟື້ນຟູໄວໜຸ່ມ, 2009):<br>"ພວກເຮົາຮູ້ວ່າຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແມ່ນຜູ້ຖືກເຄາະຮ້າຍຈາກອາຊະຍາກຳ ຂ້າມຊາດ ແລະ ບໍ່ແມ່ນແຮງງານເຄື່ອນຍ້າຍທີ່ຜິດກົດໝາຍ ເຖິງວ່າເລື່ອງຂອງເຂົາເຈົ້າ ຈະມີລັກສະນະຄ້າຍກັບການເຄື່ອນຍ້າຍແຮງງານທີ່ຜິດກົດໝາຍ. ເຂົາເຈົ້າບໍ່ແມ່ນອາຊະຍາກອນ ແຕ່ເຂົາເຈົ້າແມ່ນບຸກຄົນທີ່ມີສິດທີ່ຈະໄດ້ຮັບການເຄົາລົບ, ມີຄວາມຍຸຕິທຳ ແລະ ມີການກຳນົດການວາງແຜນອະນາຄົດ ໂດຍປາສະຈາກການຈຳແນກ." (ໜ້າທີ 1) |
| ອິນໂດເນເຊຍ | *ແຜນປະຕິບັດງານແຫ່ງຊາດວ່າດ້ວຍການລຶບລ້າງການຄ້າມະນຸດ* (2015 – 2019) ບໍ່ໄດ້ກ່າວເຖິງຫຼັກການບໍ່ລົງໂທດ<br><br>*ແຜນປະຕິບັດງານແຫ່ງຊາດວ່າດ້ວຍການລຶບລ້າງການຄ້າມະນຸດ* (2020 – 2024) ບໍ່ໄດ້ກ່າວເຖິງຫຼັກການບໍ່ລົງໂທດ |
| ສປປ ລາວ | *ຄູ່ມືວ່າດ້ວຍການປົກປ້ອງ, ການຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ* (ກະຊວງປ້ອງກັນຄວາມສະຫງົບ, ກອງເລຂາຄະນະກຳມະການລະດັບຊາດ ວ່າດ້ວຍການຕ້ານການຄ້າມະນຸດ, 2020) ບໍ່ໄດ້ກ່າວເຖິງ ຫຼັກການບໍ່ລົງໂທດ |
| ມາເລເຊຍ | *ແຜນປະຕິບັດງານແຫ່ງຊາດວ່າດ້ວຍການລຶບລ້າງການຄ້າມະນຸດ* 2021-2025 ບໍ່ໄດ້ກ່າວເຖິງຫຼັກການບໍ່ລົງໂທດ |

| | |
|---|---|
| ມຽນມາ | ແຜນປະຕິບັດງານແຫ່ງຊາດ ຫ້າປີ ຄັ້ງທີ 4 ຂອງມຽນມາ ວ່າດ້ວຍການຕ້ານການຄ້າມະນຸດ (2022-2026) ບໍ່ໄດ້ກ່າວເຖິງ ຫຼັກການບໍ່ລົງໂທດ<br><br>ເຖິງຢ່າງໃດກໍຕາມ, ໃນການຈັດຕັ້ງປະຕິບັດ ແຜນວຽກປະຈໍາປີຂອງ NPA ປີ 2024, ໄດ້ມີການປະຕິບັດ ແຜນງານວ່າດ້ວຍການສ້າງຄວາມຮັບຮູ້ກ່ຽວກັບຫຼັກການບໍ່ລົງໂທດ. ນອກນັ້ນ, ກິດຈະກໍາກ່ຽວກັບຫຼັກການບໍ່ລົງໂທດ ຍັງຖືກກໍານົດໃນແຜນວຽກປະຈໍາປີ ສໍາລັບປີ 2025 ແລະ ປີ 2026. |
| ຟີລິບປິນ | *ຄູ່ມືວ່າດ້ວຍການປົກປ້ອງສິດທິຂອງແມ່ຍິງທີ່ຖືກຄ້າມະນຸດ* (ຄະນະກໍາມາທິການແມ່ຍິງຂອງຟີລິບປິນ ປະສານງານກັບ ໜ່ວຍງານຕ້ານການຄ້າມະນຸດ (IACAT) 2013):<br>"ແມ່ຍິງທີ່ຖືກຄ້າມະນຸດ ຄວນຖືກປະຕິບັດໃນຖານະຜູ້ຖືກເຄາະຮ້າຍ ບໍ່ແມ່ນ ຜູ້ກະທໍາຜິດ" (5.3.8.1.1.)<br><br>ຄູ່ມືວ່າດ້ວຍລະບົບການສົ່ງຕໍ່ ທີ່ກ່ຽວຂ້ອງກັບຄະດີຄ້າມະນຸດ ທີ່ຮັບຮອງໂດຍ ໜ່ວຍງານຕ້ານການຄ້າມະນຸດ (IACAT) ວັນທີ 2 ມິນາ 2017 ໂດຍຜ່ານມະຕິ ເລກທີ 006, ປະຈໍາປີ 2017 ລະບຸວ່າຜູ້ຖືກຄ້າມະນຸດ ມີສິດທີ່ຈະ:<br>"ບໍ່ຖືເປັນຄະດີອາຍາ (ຫຼື ຕັ້ງຂໍ້ກ່າວຫາ ຫຼື ລົງໂທດ) ສໍາລັບການມີສ່ວນຮ່ວມໃນການກະທໍາ ທີ່ຜິດກົດໝາຍໃນລະຫວ່າງປະສົບການຖືກຄ້າມະນຸດຂອງເຂົາເຈົ້າ." |
| ສິງກະໂປ | *ວິທີການລະດັບຊາດວ່າດ້ວຍການຕ້ານການຄ້າມະນຸດ* 2016 – 2026 (ຄະນະສະເພາະກິດລະຫວ່າງໜ່ວຍງານ ເພື່ອຕ້ານການຄ້າມະນຸດຂອງສິງກະໂປ)<br><br>ຕໍ່ກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ: "ເຂົາເຈົ້າບໍ່ຄວນຖືກດໍາເນີນຄະດີຕໍ່ກັບການລະເມີດກົດໝາຍວ່າດ້ວຍການຈ້າງງານ ແລະ/ຫຼື ກົດໝາຍວ່າດ້ວຍການເຂົ້າ–ອອກເມືອງ, ຫຼື ການກະທໍາໃດໆ ທີ່ເຂົາເຈົ້າມີສ່ວນຮ່ວມ ທີ່ເປັນຜົນສະທ້ອນໂດຍກົງຈາກການທີ່ເຂົາເຈົ້າຖືກຄ້າມະນຸດ." |
| ໄທ | *ແຜນປະຕິບັດງານວ່າດ້ວຍການປ້ອງກັນ ແລະ ແກ້ໄຂບັນຫາການຄ້າມະນຸດ ເພື່ອສະໜັບສະໜູນຍຸດທະສາດດ້ານຄວາມໝັ້ນຄົງແຫ່ງຊາດ* (2018 – 2037) ຂອງກະຊວງພັດທະນາ ແລະ ສະຫວັດດີການສັງຄົມ (MSDHS) ເຊິ່ງບໍ່ໄດ້ກ່າວເຖິງຫຼັກການບໍ່ລົງໂທດ |
| ຫວຽດນາມ | *ມາດຕະຖານຂັ້ນຕໍ່າ ຕໍ່ກັບຂໍ້ກໍານົດການບໍລິການຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ* (ກະຊວງແຮງງານ ແລະ ສັງຄົມ, 2011); ແລະ *ແຜນປະຕິບັດງານແຫ່ງຊາດວ່າດ້ວຍການຕ້ານການຄ້າມະນຸດ* 2016-2020 ແລະ *ແຜນງານແຫ່ງຊາດວ່າດ້ວຍການຕ້ານການຄ້າມະນຸດ ໃນໄລຍະເວລາປີ 2021–2025 ໂດຍມີວິໄສທັດເຖິງປີ 2030* ເຊິ່ງບໍ່ໄດ້ກ່າວເຖິງຫຼັກການບໍ່ລົງໂທດ |

## ເອກະສານຊ້ອນທ້າຍ 3: ຂໍ້ຕົກລົງສອງຝ່າຍ ແລະ ຂໍ້ຕົກລົງໃນລະດັບພາກພື້ນທີ່ກ່ຽວຂ້ອງກັບການບໍ່ລົງໂທດ

| ຂໍ້ຕົກລົງ | ຄູ່ພາຄີ | ຂໍ້ກຳນົດການບໍ່ລົງໂທດ |
|---|---|---|
| ການຮ່ວມມືລະຫວ່າງລັດຖະມົນຕີໃນປະເທດລຸ່ມແມ່ນ້ຳຂອງວ່າດ້ວຍການຕ້ານການຄ້າມະນຸດ (COMMIT)<br>ບົດບັນທຶກຄວາມເຂົ້າໃຈ ວ່າດ້ວຍການຮ່ວມມືເພື່ອຕ້ານການຄ້າມະ ນຸດໃນປະເທດລຸ່ມແມ່ນ້ຳຂອງ (2004) | ກຳປູເຈຍ<br>ຈີນ<br>ສປປ ລາວ<br>ມຽນມາ<br>ໄທ<br>ຫວຽດນາມ | III. ໃນຂົງເຂດການປົກປ້ອງ, ການຟື້ນຟູ ແລະ ການກັບຄືນສູ່ສັງຄົມ:<br>16. ຮັບປະກັນວ່າຜູ້ຖືກເຄາະຮ້າຍ ໄດ້ຮັບການກຳນົດຕົວ ໃນຖານະຜູ້ຖືກເຄາະຮ້າຍ ໂດຍທີ່ຈະບໍ່ຖືກກັກຕົວໃນສະຖານທີ່ກວດຄົນເຂົ້າ–ອອກເມືອງ ໂດຍເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ |
| ຂໍ້ຕົກລົງລະຫວ່າງລັດຖະບານຂອງປະເທດກຳປູເຈຍ ແລະ ລັດຖະບານຂອງປະເທດສັງຄົມນິຍົມຫວຽດນາມ ກ່ຽວກັບການຮ່ວມມືສອງຝ່າຍ ເພື່ອລຶບລ້າງການຄ້າແມ່ຍິງ ແລະເດັກ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະ ນຸດ (2005) | ກຳປູເຈຍ<br>ຫວຽດນາມ | ມາດຕາ 2. ຄູ່ພາຄີຮັບຮູ້ວ່າ ຕົວຢ່າງຈຸດປະສົງຂອງການຄ້າມະນຸດ ຕໍ່ແມ່ຍິງ ແລະ ເດັກ ລວມມີ ແຕ່ບໍ່ຈຳກັດ, ດັ່ງລຸ່ມນີ້:<br>10. ການນຳໃຊ້ໃນກິດຈະກຳທາງອາຍາ.<br><br>ມາດຕາ 5. ບຸກຄົນທີ່ຖືກຄ້າມະນຸດ ຈະພິຈາລະນາວ່າເປັນຜູ້ຖືກເຄາະຮ້າຍ ແລະ ບໍ່ແມ່ນຜູ້ລະເມີດ ຫຼື ຜູ້ກະທຳຜິດ ຕໍ່ກົດໝາຍວ່າດ້ວຍການເຂົ້າ–ອອກເມືອງ ນອກນັ້ນ,<br><br>1. ຜູ້ຖືກຄ້າມະນຸດທີ່ເປັນແມ່ຍິງ ແລະ ເດັກ ຈະບໍ່ຖືກຕັ້ງຂໍ້ກ່າວຫາ ແລະ ດຳເນີນຄະດີໃນສະຖານການເຂົ້າ-ອອກເມືອງ ແລະ ການເປັນໂສເພນີ<br>2. ຜູ້ຖືກຄ້າມະນຸດ ທີ່ເປັນແມ່ຍິງ ແລະ ເດັກ ຈະບໍ່ຖືກກັກຂັງໃນສະຖານທີ່ກັກຂັງການເຂົ້າ–ອອກເມືອງ ໃນເວລາທີ່ລໍຖ້າຂະບວນການສົ່ງກັບຄືນປະເທດຢ່າງເປັນ ທາງການ. ເຂົາເຈົ້າຄວນຢູ່ໃນການຄຸ້ມຄອງ ດູແລຂອງໜ່ວຍງານທີ່ມີສິດອຳນາດຂອງຄູ່ ພາຄີ. ຕ້ອງຈັດຫາສູນປົກປ້ອງໃຫ້ແກ່ຜູ້ຖືກ ເຄາະຮ້າຍຕາມກົດໝາຍຂອງແຕ່ລະລັດ. |
| ຂໍ້ຕົກລົງລະຫວ່າງລັດຖະບານແຫ່ງຣາຊະ ອານາຈັກໄທ ແລະ ລັດຖະບານຂອງປະເທດສັງຄົມນິຍົມຫວຽດນາມ ວ່າດ້ວຍການຮ່ວມມືສອງຝ່າຍ ເພື່ອລຶບລ້າງການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກ ແລະການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ (2008) | ໄທ<br>ຫວຽດນາມ | ມາດຕາ 6. "ແມ່ຍິງ ແລະ ເດັກທີ່ຖືກຄ້າມະນຸດ ຄວນພິຈາລະນາວ່າເປັນຜູ້ຖືກເຄາະຮ້າຍ, ແຕ່ບໍ່ແມ່ນຜູ້ລະເມີດ ຫຼື ຜູ້ກະທຳຜິດ ຕໍ່ກົດໝາຍວ່າດ້ວຍການເຂົ້າ–ອອກເມືອງ<br>ນອກນັ້ນ, ນອກນັ້ນ,<br>1. ຜູ້ຖືກຄ້າມະນຸດ ທີ່ເປັນແມ່ຍິງ ແລະ ເດັກ ຈະບໍ່ຖືກດຳເນີນຄະດີໃນສະຖານການ ເຂົ້າ-ອອກເມືອງ ແລະ ການເປັນໂສເພນີ<br>2. ຜູ້ຖືກຄ້າມະນຸດ ທີ່ເປັນແມ່ຍິງ ແລະ ເດັກ ຈະບໍ່ຖືກກັກຂັງໃນສະຖານທີ່ກັກຂັງການເຂົ້າ–ອອກເມືອງ ໃນເວລາທີ່ລໍຖ້າຂະບວນການສົ່ງກັບຄືນປະເທດ ແຕ່ເຂົາເຈົ້າຄວນຢູ່ໃນການຄຸ້ມຄອງດູແລຂອງ ກະຊວງປ້ອງກັນຄວາມສະຫງົບ (ຫວຽດນາມ) ຫຼື ກະຊວງພັດທະນາສັງຄົມ ແລະ ຄວາມໝັ້ນຄົງຂອງມະນຸດ (ໄທ) ແລະ ຕ້ອງຈັດຫາສູນປົກປ້ອງໃຫ້ແກ່ຜູ້ຖືກເຄາະ ຮ້າຍ ຕາມກົດໝາຍຂອງແຕ່ລະປະເທດ. |

| | | |
|---|---|---|
| ບົດບັນທຶກຄວາມດ້ວຍຄວາມເຂົ້າໃຈລະຫວ່າງ ລັດຖະບານແຫ່ງຣາຊະອານາຈັກໄທ ແລະ ລັດຖະບານຂອງສະຫະພາບມຽນມາ ວ່າດ້ວຍການຮ່ວມມື ເພື່ອຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກ (2009) | ມຽນມາ<br>ໄທ | ມາດຕາ 8. ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະພິຈາລະນາວ່າເປັນຜູ້ຖືກເຄາະຮ້າຍ ທາງອາຊະຍາກຳ, ແຕ່ບໍ່ແມ່ນຜູ້ລະເມີດ ຫຼື ຜູ້ກະທຳຜິດ<br>ນອກນັ້ນ,<br>(a) ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກດຳເນີນຄະດີໂດຍປະເທດຄູ່ພາຄີ ສຳລັບການເຂົ້າ ຫຼື ອອກຈາກປະເທດ ແລະ ສຳລັບຄວາມຜິດທີ່ເກີດຂຶ້ນ ທີ່ເປັນຜົນສະທ້ອນໂດຍກົງຈາກການຄ້າມະນຸດ;<br>(b) ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະບໍ່ຖືກກັກຂັງ ໃນສູນກັກຂັງຄົນເຂົ້າ–ອອກເມືອງ ຫຼື ໜ່ວຍງານບັງຄັບໃຊ້ກົດໝາຍ ໃນເວລາລໍຖ້າການສົ່ງກັບຄືນປະເທດ, ແຕ່ຕ້ອງຢູ່ໃນການຄຸ້ມຄອງດູແລຂອງກົມສັງຄົມສົງເຄາະ(ມຽນມາ) ແລະ ກົມພັດທະນາ ແລະ ສະຫວັດດີການສັງຄົມ (ໄທ), ຫຼື ສູນພັກເຊົາຊົ່ວຄາວ. ຕ້ອງຈັດຫາສູນພັກເຊົາ ແລະ ການປົກປ້ອງໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕາມກົດໝາຍ ແລະ ນະໂຍບາຍຂອງປະເທດຄູ່ພາຄີ |
| ບົດບັນທຶກຄວາມດ້ວຍຄວາມເຂົ້າໃຈ ລະຫວ່າງລັດຖະບານຂອງສະຫະພາບມຽນ ມາ ແລະ ລັດຖະບານຂອງປະເທດສາທາ ລະນະລັດປະຊາຊົນຈີນ ວ່າການການສ້າງຄວາມເຂັ້ມແຂງດ້ານການຮ່ວມມື ເພື່ອຕ້ານການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກ (2009) | ມຽນມາ<br>ຈີນ | ມາດຕາ 5: ຄູ່ພາຄີທັງສອງຕ້ອງນຳໃຊ້ມາດຕະການທີ່ເໝາະສົມ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເຊິ່ງຕ້ອງຖືກປະຕິບັດໃນຖານະຜູ້ຖືກເຄາະຮ້າຍຈາກພຶດຕິທຳທາງອາຍາ ຫຼາຍກວ່າຈະເປັນຜູ້ກະທຳຜິດ ຫຼື ຜູ້ຖືກຫາໃນຄະດີອາຍາ.<br>ນອກນັ້ນ,<br>1. ບໍ່ວ່າ ຈະເປັນພາຄີໃດ ຕ້ອງບໍ່ລົງໂທດຜູ້ຖືກເຄາະຮ້າຍສຳລັບການເຂົ້າ ຫຼື ອອກເມືອງ ຈາກຂອບເຂດດິນແດນຕົນ ຫຼື ຄວາມຜິດອື່ນໆ ທີ່ເກີດຂຶ້ນ ເຊິ່ງເປັນຜົນໂດຍກົງຈາກການຄ້າມະນຸດ<br>2. ບຸກຄົນທີ່ຖືກກຳນົດຕົວວ່າເປັນຜູ້ຖືກເຄາະ ຮ້າຍ ຈະບໍ່ຖືກເນລະເທດກັບຄືນ ໂດຍການຖືກສົ່ງຕົວກັບຄືນຢ່າງເປັນທາງການ ໂດຍທັນທີ |
| ຂໍ້ຕົກລົງລະຫວ່າງລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານຂອງປະເທດສັງຄົມນິຍົມ ຫວຽດນາມ ວ່າດ້ວຍການຮ່ວມມືເພື່ອຕ້ານ ແລະ ສະກັດກັ້ນການຄ້າມະນຸດ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ (2010) | ສປປ ລາວ<br>ຫວຽດນາມ | ມາດຕາ 4(1)(b) “ຄູ່ພາຄີຈະນຳໃຊ້ມາດຕະການທີ່ເໝາະສົມ ເພື່ອປົກປ້ອງຜູ້ຖືກເຄາະຮ້າຍ. ໜ່ວຍງານທີ່ມີສິດອຳນາດຂອງຄູ່ພາຄີຕ້ອງຮັບປະກັນວ່າຜູ້ຖືກເຄາະຮ້າຍ ມີຄວາມປອດໄພ ດັ່ງນີ້: ໄດ້ຮັບການປະຕິບັດຢ່າງເທົ່າທຽມ ແລະ ໄດ້ຮັບການຊ່ວຍເຫຼືອທາງດ້ານກົດໝາຍ; ບໍ່ຖືກກັກຂັງ ແລະ/ຫຼື ລົງໂທດໃນສະຖານການເຂົ້າ–ອອກເມືອງ ຫຼື ຄວາມຜິດອື່ນໆ ທີ່ກ່ຽວຂ້ອງທາງບໍລິຫານ.” |
| ຂໍ້ຕົກລົງລະຫວ່າງ ລັດຖະບານຂອງປະເທດສັງຄົມນິຍົມຫວຽດນາມ ແລະ ລັດຖະບານຂອງ ສາທາລະນະລັດ ປະຊາຊົນຈີນ ກ່ຽວກັບການສ້າງຄວາມເຂັ້ມແຂງ ດ້ານການຮ່ວມມື ເພື່ອຕ້ານ ແລະ ປ້ອງກັນການຄ້າມະນຸດ (2010) | ຫວຽດນາມ<br>ຈີນ | ມາດຕາ 2:<br>ຄູ່ພາຄີຕ້ອງນຳໃຊ້ມາດຕະການທີ່ເໝາະສົມ ເພື່ອປົກປ້ອງຄວາມປອດໄພສ່ວນບຸກຄົນຂອງຜູ້ຖືກ ເຄາະຮ້າຍ.<br>A. ຄູ່ພາຄີຕ້ອງ ຕ້ອງບໍ່ລົງໂທດຜູ້ຖືກເຄາະຮ້າຍ ຕໍ່ກັບການເຂົ້າ (ອອກ) ຈາກເຂດດິນແດນຂອງຕົນ ຫຼື ການກະທຳທີ່ຜິດກົດໝາຍອື່ນ ທີ່ເປັນຜົນໂດຍທັນທີຈາກການຄ້າມະນຸດ. |

| | | |
|---|---|---|
| ບົດບັນທຶກຄວາມເຂົ້າໃຈລະຫວ່າງ ລັດຖະບານຂອງຣາຊະອານາຈັກກໍາປູເຈຍ ແລະ ລັດຖະບານຂອງ ຣະຊະອານາຈັກໄທ ວ່າດ້ວຍການຮ່ວມມືສອງຝ່າຍ ເພື່ອລຶບລ້າງການຄ້າມະນຸດ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ (2014) | ກໍາປູເຈຍ<br>ໄທ | ພາກທີ IV ມາດຕາ 6: ຜູ້ຖືກຄ້າມະນຸດ ຄວນພິຈາລະນາວ່າເປັນຜູ້ຖືກເຄາະຮ້າຍ, ແຕ່ບໍ່ແມ່ນຜູ້ລະເມີດ ຫຼື ຜູ້ກະທໍາຜິດ ກົດໝາຍວ່າດ້ວຍການເຂົ້າ–ອອກເມືອງ. ນອກນັ້ນ,<br>(a) ຜູ້ຖືກຄ້າມະນຸດ ຈະບໍ່ຖືກດໍາເນີນຄະດີ ໃນການເຂົ້າປະເທດໂດຍຜິດກົດໝາຍ<br>(b) ຜູ້ຖືກຄ້າມະນຸດ ຈະບໍ່ຖືກກັກຂັງໃນສູກກັກຂັງ ການກວດຄົນເຂົ້າ–ອອກເມືອງ ໃນເວລາລໍຖ້າຂະບວນການສົ່ງກັບຄືນປະເທດຢ່າງເປັນທາງການ, ແຕ່ຄວນຢູ່ພາຍໃຕ້ການເບິ່ງແຍງດູແລຂອງກະຊວງສັງຄົມ, ນັກຮົບເກົ່າ ແລະ ການຟື້ນຟູໄວໜຸ່ມ (ກໍາປູເຈຍ) ຫຼື ກົມພັດທະນາ ແລະ ສະຫວັດດີການສັງຄົມ (ໄທ) ແລະ ຄວນຈັດໃຫ້ມີສູນພັກເຊົາແກ່ຜູ້ຖືກເຄາະຮ້າຍ ຕາມນະໂຍບາຍຂອງແຕ່ລະປະເທດ. |
| ຂໍ້ຕົກລົງລະຫວ່າງ ລັດຖະບານຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ສາທາລະນະລັດ ປະຊາຊົນຈີນ ວ່າດ້ວຍການຮ່ວມມື ໃນການປ້ອງກັນ ແລະ ຕ້ານການຄ້າມະນຸດ (2014) | ສປປ ລາວ<br>ຈີນ | ມາດຕາ 4: ຄູ່ພາຄີທັງສອງ ຕ້ອງນໍາໃຊ້ມາດຕະການທີ່ເໝາະສົມເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນຂົງເຂດລຸ່ມນີ້:<br>1. ຄູ່ພາຄີທັງສອງ ຕ້ອງບໍ່ລົງໂທດຜູ້ຖືກເຄາະຮ້າຍ ໃນສະຖານການເຂົ້າ ຫຼື ອອກຈາກຂອບເຂດດິນແດນຂອງປະເທດຕົນ; ຫຼື ຄວາມຜິດໃດໜຶ່ງທີ່ເກີດຂຶ້ນ ຈາກຜົນໂດຍກົງຈາກການຄ້າມະນຸດ. |
| ຄູ່ມືແນະນໍາຂອງ COMMIT ວ່າດ້ວຍການກໍານົດຕົວ ແລະ ກົນໄກການສົ່ງຕໍ່: ຄໍາແນະນໍາທົ່ວໄປ ສໍາລັບພາກພື້ນລຸ່ມແມ່ນໍ້າຂອງ (2016) | ກໍາປູເຈຍ<br>ຈີນ<br>ສປປ ລາວ<br>ມຽນມາ<br>ໄທ<br>ຫວຽດນາມ | “ຜູ້ຖືກຄ້າມະນຸດ, ບໍ່ວ່າໃນສະພາບແວດລ້ອມໃດໜຶ່ງ, ບໍ່ຄວນດໍາເນີນຄະດີ ສໍາລັບການລະເມີດ ກົດໝາຍວ່າດ້ວຍການເຂົ້າ–ອອກເມືອງ ຫຼື ການກະທໍາທີ່ເຂົາເຈົ້າ ມີສ່ວນກ່ຽວຂ້ອງ ທີ່ເປັນຜົນສະທ້ອນໂດຍກົງຈາກສະພາບການທີ່ຖືກຄ້າ ມະນຸດ ຫຼື ຖືກກັກຂັງ” |

## ເອກະສານຊ້ອນທ້າຍ 4: ຄູ່ມືການປະຕິບັດທີ່ເປັນຕົວແບບທີ່ດີຂອງສາກົນ

ຄໍາແນະນໍາລຸ່ມນີ້ ແມ່ນໄດ້ດຶງອອກມາຈາກແຫຼ່ງຂໍ້ມູນສະບັບຕົ້ນ.

### ຄໍາແນະນໍາຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ, ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ [126]

53. ລັດ ຄວນໃຫ້ສັດຕະຍາບັນ ແລະ ຈັດຕັ້ງປະຕິບັດກົດໝາຍສາກົນທີ່ກ່ຽວຂ້ອງທັງໝົດ ທີ່ຫ້າມການຄ້າມະນຸດ ແລະ ໃຫ້ສິດກ່ຽວກັບການບໍ່ໃຫ້ລົງໂທດ ລວມທັງ ສົນທິສັນຍາອົງການ ILO ວ່າດ້ວຍການບັງຄັບໃຊ້ແຮງງານ, 1930 (ເລກທີ.29)

54. ລັດຄວນຮັບຮອງເອົານິຕິກໍາ, ນະໂຍບາຍ, ການບໍລິຫານ ແລະ ມາດຕະການອື່ນໆ ທີ່ເໝາະສົມ ເພື່ອຮັບປະກັນການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດແກ່ຜູ້ຖືກເຄາະຮ້າຍ ຢ່າງມີປະສິດທິພາບ ແລະ ຄວນຈະ:
(a) ນໍາສະເໜີຂໍ້ກໍານົດສະເພາະໃນນິຕິກໍາພາຍໃນ ເພື່ອບໍ່ໃຫ້ມີການລົງໂທດແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ;
(b) ຮັບຮອງເອົາຄູ່ມືການດໍາເນີນຄະດີ ເພື່ອອໍານວຍຄວາມສະດວກ ການນໍາໃຊ້ຫຼັກການບໍ່ລົງໂທດໃຫ້ມີຄວາມສອດຄ່ອງ ແລະ ເປັນລະບົບໃນຄະດີຄ້າມະນຸດທຸກຄະດີ;
(c) ຮັບຮອງເອົາລາຍການຄວາມຜິດຕ່າງໆ ທີ່ເກີດຂຶ້ນແບບກວ້າງຂວາງ (open-ended) ແລະ ບໍ່ມີການຄວບຄຸມ ເຊິ່ງເກີດຂຶ້ນເລື້ອຍໆກ່ຽວກັບການຄ້າມະນຸດ ເຊິ່ງຄວນຈະມີການເຜີຍແຜ່ ລວມທັງ ປະກອບເຂົ້າໃນການຝຶກອົບຮົມ ແລະ ຄໍາແນະນໍາທີ່ເຜີຍແຜ່ໃຫ້ແກ່ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍທັງໝົດ ແລະ ທຸກໆຄົນ ທີ່ຄິດວ່າຈະມີການຕິດຕໍ່ ກັບຜູ້ຖືກຄ້າມະນຸດ

55. ຫຼັກການບໍ່ລົງໂທດ ຄວນນໍາໃຊ້ :
(a) ໂດຍໜ່ວຍງານພາຍໃນປະເທດທັງໝົດ ລວມທັງ ຕໍາຫຼວດ, ເຈົ້າໜ້າທີ່ກວດຄົນເຂົ້າ–ອອກເມືອງ ແລະ ເຈົ້າໜ້າທີ່ຊາຍແດນ, ຜູ້ກວດກາແຮງງານ ແລະ ໜ່ວຍງານບັງຄັບໃຊ້ກົດໝາຍອື່ນໆ ຫຼື ເຈົ້າໜ້າທີ່ລັດ ແລະ ເຂົາເຈົ້າຄວນໄດ້ຮັບການຝຶກອົບຮົມ ແລະ ມີຄຸນສົມບັດໃນການກໍານົດຕົວບຸກຄົນທີ່ອາດຈະເປັນຜູ້ຖືກເຄາະຮ້າຍ;
(b) ທັນທີ ທີ່ມີເຫດຜົນທີ່ສົມເຫດສົມຜົນ ທີ່ເຊື່ອວ່າບຸກຄົນໃດໜຶ່ງ ໄດ້ຖືກຄ້າມະນຸດ ຫຼື ທັນທີ ທີ່ບຸກຄົນນັ້ນຖືກຄ້າມະນຸດ ຫຼື ຜູ້ຕາງໜ້າທາງດ້ານກົດໝາຍຂອງເຂົາເຈົ້າ, ໄດ້ຍົກການປ້ອງກັນການຄ້າມະນຸດ ເພື່ອໃຫ້ຜູ້ຖືກເຄາະຮ້າຍໄດ້ຮັບການປົກປ້ອງທີ່ມີປະສິດທິພາບ ແລະ ເຕັມສ່ວນ.

56. ລັດ ມີຄວາມຈໍາເປັນ ເພື່ອຮັບປະກັນວ່າ ມີການກໍານົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໂດຍທັນທີ ແລະ ມີປະສິດທິພາບ. ການຊ່ວຍເຫຼືອທາງດ້ານກົດໝາຍ ຄວນມີໃຫ້ຕະຫຼອດໄລຍະຂອງຂັ້ນຕອນການກໍານົດຕົວ, ເພື່ອຮັບປະກັນການກໍານົດຕົວໃນເບື້ອງຕົ້ນ, ການສົ່ງຕໍ່ເພື່ອຂໍການຊ່ວຍເຫຼືອ ແລະ ປົກປ້ອງ ແລະ ຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດຢ່າງມີປະສິດທິພາບ.

57. ລັດຕ່າງໆ ຕ້ອງຮັບປະກັນວ່າ ຫຼັກການບໍ່ລົງໂທດ ແມ່ນຖືກນໍາໃຊ້ກັບ:
(a) ການຄ້າມະນຸດທຸກຮູບແບບ ລວມທັງ ການຄ້າມະນຸດເພື່ອຈຸດປະສົງການຂູດຮີດທາງເພດ, ແຮງງານ ແລະ ບັງຄັບໃຫ້ກະທໍາຜິດທາງອາຍາ; ລວມທັງ ການຄ້າມະນຸດພາຍໃນ ແລະ ລະຫວ່າງປະເທດ
(b) ທຸກໆການກະທໍາທີ່ຜິດກົດໝາຍ ທີ່ເຮັດໂດຍຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ເປັນຜົນກະທົບໂດຍກົງຈາກສະຖານະການຖືກຄ້າມະນຸດນັ້ນ ໂດຍບໍ່ກ່ຽວຂ້ອງກັບຄວາມຮ້າຍແຮງ ຫຼື ຄວາມຮຸນແຮງຈາກການກະທໍາຜິດດັ່ງກ່າວ.
(c) ຄວາມຜິດທາງອາຍາ, ທາງແພ່ງ, ທາງປົກຄອງ ແລະ ການເຂົ້າ–ອອກເມືອງ ລວມທັງ ການລົງໂທດຮູບແບບອື່ນໆ ເຊັ່ນ ການຖືກຖອນສັນຊາດ ໂດຍບໍ່ຖືກຕ້ອງ, ຖືກປະເສດການຊ່ວຍເຫຼືອຈາກກົງສູນ ຫຼື ການຖືກເນລະເທດກັບ, ການຖືກແຍກອອກຈາກສະຖານະພາບການອົບພະຍົບ ຫຼື ຮູບແບບການປົກປ້ອງລະຫວ່າງປະເທດອື່ນໆ ແລະ ຖືກແຍກຈາກຄອບຄົວ
(d) ສະຖານະການໃດໜຶ່ງ ທີ່ຖືກຈໍາກັດດ້ານອິດສະລະພາບ, ລວມທັງ ການກັກຂັງໃນສະຖານທີ່ເຂົ້າ–ອອກເມືອງ ແລະ ການກັກຂັງເພື່ອລໍຖ້າເຄື່ອນຍ້າຍ ຫຼື ສົ່ງຕົວກັບຄືນປະເທດ.

58. ການຮັບຮູ້ວ່າການຄ້າມະນຸດ ແມ່ນການລະເມີດສິດທິມະນຸດຢ່າງຮ້າຍແຮງ, ການນໍາໃຊ້ຫຼັກການບໍ່ລົງໂທດ ບໍ່ຄວນເປັນເງື່ອນໄຂໃນການກໍານົດຕົວຜູ້ຖືກເຄາະຮ້າຍຢ່າງເປັນທາງການ ຫຼື ການດໍາເນີນຄະດີຕໍ່ຜູ້ຖືກຫາ ທີ່ເປັນຜູ້ຄ້າມະນຸດ. ການນໍາໃຊ້ຫຼັກການບໍ່ລົງໂທດ ບໍ່ຄວນເປັນເງື່ອນໄຂ ໃນການຮ່ວມມືຂອງຜູ້ຖືກເຄາະຮ້າຍ ໃນການດໍາເນີນຄະດີອາຍາ.

---

126 ຄໍາແນະນໍາເຫຼົ່ານີ້ ໄດ້ຖືກຍົກມາຈາກ ບົດລາຍງານຂອງຜູ້ລາຍງານພິເສດກ່ຽວກັບການຄ້າມະນຸດ ໂດຍສະເພາະແມ່ຍິງ ແລະ ເດັກນ້ອຍ, Siobhán Mullally, ການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ UN Doc. A/HRC/47/34, ວັນທີ 17 ພຶດສະພາ 2021. ເຂົາເຈົ້າຍັງລວມເອົາທັງໝົດຂອງຄໍາແນະນໍາອາຊຽນ

59. ເພື່ອຮັບປະກັນໃຫ້ມີຄວາມສອດຄ່ອງກັບຫຼັກການບໍ່ລົງໂທດ, ຜູ້ທີ່ຖືກສັນນິຖານ ຫຼື ຖືກກຳນົດຕົວວ່າເປັນຜູ້ຖືກເຄາະຮ້າຍທຸກຄົນ ຕ້ອງຖືກໂຍກຍ້າຍອອກຈາກສະຖານທີ່ກັກຂັງ ຫຼື ໃນສະຖານະການໃດໜຶ່ງທີ່ເປັນການຈຳກັດເສລີພາບ ໂດຍທັນທີ ແລະ ຕ້ອງໃຫ້ການປົກປ້ອງ ແລະ ຊ່ວຍເຫຼືອ.

60. ຫຼັກການບໍ່ລົງໂທດ ຕ້ອງໄດ້ຖືກນຳໃຊ້ໂດຍປາສະຈາກການຈຳແນກ ຕໍ່ກັບຜູ້ຖືກເຄາະຮ້າຍທຸກຄົນ ລວມທັງ ບຸກຄົນທີ່ຖືກຄ້າມະນຸດ ທີ່ຊອກຫາການລີ້ໄພ ຫຼື ຮູບແບບອື່ນໆຂອງການປົກປ້ອງລະຫວ່າງປະເທດ

61. ລັດ ຕ້ອງຮັບປະກັນການປົກປ້ອງດ້ານກົດໝາຍ ແລະ ຄວາມສະເໝີພາບຕໍ່ໜ້າກົດໝາຍ ຢ່າງເທົ່າທຽມກັນ ໃນມາດຕະການຕ້ານການຄ້າມະນຸດທຸກອັນ, ລວມທັງ ຮັບປະກັນການນຳໃຊ້ຫຼັກການບໍ່ລົງໂທດທີ່ມີປະສິດທິພາບ ສຳລັບຜູ້ຖືກເຄາະຮ້າຍທີ່ມີຄວາມພິການ. ລັດຕ້ອງນຳໃຊ້ທຸກຂັ້ນຕອນທີ່ເໝາະສົມ ເພື່ອຮັບປະກັນບໍ່ໃຫ້ມີການຈຳແນກ ບົນພື້ນຖານຂອງຄວາມພິການ ແລະ ຮັບປະກັນໃຫ້ມີການອຳນວຍຄວາມສະດວກທີ່ສົມເຫດສົມຜົນ ລວມທັງ ຂໍ້ກຳນົດດ້ານຂັ້ນຕອນໃນການຈັດຫາທີ່ພັກເຊົາທີ່ເໝາະສົມ, ລວມທັງ ຂັ້ນຕອນ ແລະ ທີ່ພັກອາໄສທີ່ເໝາະສົມກັບອາຍຸ ເພື່ອຮັບປະກັນການເຂົ້າເຖິງຄວາມຍຸຕິທຳຢ່າງມີປະສິດທິພາບ ແລະ ການເຂົ້າຮ່ວມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ມີຄວາມພິການໃນການດຳເນີນຄະດີທັງໝົດ ລວມທັງ ຂັ້ນຕອນການກຳນົດຕົວ ແລະ ການສືບສວນ-ສອບສວນ ແລະ ຂັ້ນຕອນເບື້ອງຕົ້ນອື່ນໆ.

62. ລັດຄວນຮັບປະກັນວ່າເດັກທີ່ເປັນຜູ້ຖືກເຄາະຮ້າຍ ຕໍ່ກັບການກະທຳທີ່ຜິດກົດໝາຍ ທີ່ກ່ຽວຂ້ອງກັບການຖືກຄ້າມະ ນຸດນັ້ນ. ກໍລະນີທີ່ອາຍຸຂອງຜູ້ຖືກເຄາະຮ້າຍບໍ່ແນ່ນອນ ແລະ ມີເຫດຜົນທີ່ເຊື່ອໄດ້ວ່າຜູ້ຖືກເຄາະຮ້າຍເປັນເດັກ, ເຂົາເຈົ້າຄວນຖືກສັນນິຖານວ່າເປັນເດັກ ແລະ ມີມາດຕະການປົກປ້ອງພິເສດ ໂດຍລໍຖ້າການກຳນົດອາຍຸຂອງເຂົາເຈົ້າ. ເມື່ອຄວາມສຳພັນລະຫວ່າງ ການກະທຳຄວາມຜິດ ແລະ ສະຖານະຂອງເດັກໄດ້ມີການສັນນິຖານ ຫຼື ກຳນົດຕົວຜູ້ຖືກເຄາະ ຮ້າຍ, ການພົວພັນນັ້ນ ຕ້ອງໄດ້ຮັບການຍອມຮັບວ່າມີຄວາມຈຳເປັນ ແລະ ພື້ນຖານທີ່ພຽງພໍໃນການບໍ່ສືບຕໍ່ດຳເນີນຄະດີ ຫຼື ຍົກເລີກຄຳຕັດສິນທີ່ໄດ້ຕັດສິນໄປແລ້ວ ລວມທັງ ປ່ອຍຕົວເດັກອອກຈາກສະຖານທີ່ກັກຕົວໂດຍທັນທີ. ໂດຍເຄົາລົບຕໍ່ເດັກ, ບໍ່ຈຳເປັນຕ້ອງມີການກຳນົດວິທີການ ເພື່ອກຳນົດສະຖານະຂອງເຂົາເຈົ້າໃນຖານະທີ່ເປັນຜູ້ຖືກເຄາະຮ້າຍ ທີ່ເປັນເດັກ, ບໍ່ຈຳເປັນຕ້ອງນຳໃຊ້ຮູບແບບການບັງຄັບ.

63. ເດັກທີ່ຖືກກັກຂັງ ທີ່ມີຄວາມກ່ຽວຂ້ອງກັບກຸ່ມປະກອບອາວຸດ ລວມທັງ ກຸ່ມກໍ່ການຮ້າຍ ຄວນຖືກຮັບຮູ້ວ່າ ເປັນຜູ້ຖືກເຄາະຮ້າຍທີ່ຖືກລະເມີດສິດທິມະນຸດຢ່າງຮ້າຍແຮງ ແລະ ກົດໝາຍວ່າດ້ວຍມະນຸດສະທຳ. ການຟື້ນຟູ, ການກັບຄືນສູ່ສັງຄົມ ແລະ ກັບຄືນຫາຄອບຄົວ ຄວນເປັນບູລິມະສິດຫຼັກ, ບໍ່ແມ່ນການລົງໂທດ. ການຄຳນຶງເຖິງມະຕິຂອງສະພາຄວາມໝັ້ນຄົງ 2388 (2017), ທຸກໆລັດ ຄວນຍົກເວັ້ນ ການກັກຂັງທາງບໍລິຫານຕໍ່ກັບເດັກ ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມທັງ ເດັກທີ່ມີຄວາມກ່ຽວຂ້ອງ ຫຼື ຖືກຫາວ່າກ່ຽວຂ້ອງກັບກຸ່ມປະກອບອາວຸດທີ່ບໍ່ແມ່ນຂອງລັດ, ລວມທັງ ບຸກຄົນທີ່ໄດ້ກະທຳຜິດກ່ຽວກັບການກໍ່ການຮ້າຍ. ຄວນມີການຮັບຮອງເອົາຂັ້ນຕອນມາດຕະຖານການປະຕິບັດງານ ເພື່ອຮັບປະກັນການສົ່ງມອບເດັກ ທີ່ກ່ຽວຂ້ອງກັບກຸ່ມປະກອບອາວຸດ ຫຼື ມີຂໍ້ຂັດແຍ່ງກ່ຽວກັບການຕິດອາວຸດ ໃຫ້ແກ່ ໜ່ວຍງານທີ່ໃຫ້ການປົກປ້ອງພົນລະເມືອງທີ່ເປັນເດັກ ຢ່າງທັນການ.

64. ເພື່ອຮັບປະກັນ ໃຫ້ມີຄວາມສອດຄ່ອງກັບການນຳໃຊ້ຫຼັກການບໍ່ລົງໂທດໃນການດຳເນີນຄະດີ, ລັດຄວນຮັບປະກັນວ່າ:
(a) ພະນັກງານໄອຍະການ ມີໜ້າທີ່ໃນການຢຸດຕິການດຳເນີນຄະດີ ຕໍ່ກັບຜູ້ຖືກຄ້າມະນຸດ ກ່ຽວກັບຄວາມຜິດທັງໝົດທີ່ໄດ້ກະທຳ ເຊິ່ງເປັນຜົນສະທ້ອນໂດຍກົງຈາກສະພາບການຂອງເຂົາເຈົ້າໃນຖານະຜູ້ຖືກຄ້າມະນຸດ. ຖ້າໜ່ວຍງານດຳເນີນຄະດີ ບໍ່ສາມາດປະຕິບັດໜ້າທີ່ໄດ້, ສານພາຍໃນປະເທດ ຄວນມີອຳນາດໃນການສັ່ງຢຸດຕິການດຳເນີນຄະດີ ບົນພື້ນຖານເຫດຜົນການລະເມີດຂະບວນການ ຫຼື ພະນັກງານໄອຍະການອາດຈະລະເມີດພັນທະຕໍ່ກັບຫຼັກການບໍ່ລົງໂທດ;
(b) ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ແລະ ພະນັກງານໄອຍະການທຸກຄົນ ຄວນໄດ້ຮັບການຝຶກອົບຮົມຢ່າງເຕັມທີ່ ເພື່ອກຳນົດຕົວບຸກຄົນທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ແລະ ທີ່ກ່ຽວຂ້ອງກັບຄວາມຜິດກ່ຽວກັບການຄ້າມະນຸດ ແລະ ອອກຄຳສັ່ງ, ຫຼື ຮ້ອງຂໍ ການຢຸດຕິການດຳເນີນຄະດີ ໃນຂັ້ນຕອນທຳອິດ ເທົ່າທີ່ເປັນໄປໄດ້

65. ໃນກໍລະນີທີ່ໜ່ວຍງານພາຍໃນ ບໍ່ສາມາດນຳໃຊ້ຫຼັກການບໍ່ລົງໂທດ ແລະ ມີການຕັດສິນ ຫຼື ລົງໂທດຜູ້ຖືກຄ້າມະນຸດ, ເຊິ່ງຮຽກຮ້ອງໃຫ້ມີການກວດສອບຄວາມຖືກຕ້ອງຕາມກົດໝາຍ ເພື່ອໃຫ້ລັດແກ້ໄຂຄວາມຫຼົ້ມເຫຼວດັ່ງກ່າວ. ຮັບປະກັນວ່າການຈັດຕັ້ງປະຕິບັດຫຼັກການບໍ່ລົງໂທດ ທີ່ມີປະສິດທິພາບ ແລະ ເຕັມສ່ວນ ຈຳເປັນຕ້ອງມີຂໍ້ກຳນົດໃນ ການລຶບລ້າງ ຫຼື ປິດຄະດີທັງໝົດ ທີ່ກ່ຽວຂ້ອງກັບການບັນທຶກປະຫວັດທາງອາຍາ ແລະ ຕ້ອງມີການບັນເທົາທຸກ ຕໍ່ກັບການລົງໂທດໃດໜຶ່ງທີ່ເກີດຂຶ້ນ, ລວມທັງ ໂທດປັບໃໝ ຫຼື ໂທດທາງບໍລິຫານ. ການບັນເທົາທຸກດັ່ງກ່າວ ຄວນກຳນົດໃນນິຕິກຳ ແລະ ມາດຕະການອື່ນໆທີ່ຈຳເປັນ ແລະ ໂດຍການສະໜັບສະໜູນຜ່ານການຊ່ວຍເຫຼືອທາງ ດ້ານກົດໝາຍ ເພື່ອຫຼີກລ້ຽງພັນທະໃນການພິສູດຂອງຜູ້ຖືກຄ້າມະນຸດ ແລະ ໃຫ້ເຂົາເຈົ້າສາມາດເຂົ້າເຖິງການຟື້ນຟູ ໄດ້ຢ່າງເຕັມສ່ວນ.

66. ລັດຄວນຮັບປະກັນວ່າ ການຕັດສິລົງໂທດຜູ້ຖືກຄ້າມະນຸດ ທີ່ເປັນຜົນຈາກຄວາມບໍ່ສາມາດນຳໃຊ້ຫຼັກການບໍ່ລົງໂທດ ຫຼື ຈາກຄວາມສົງໄສວ່າຜູ້ຖືກຄ້າມະນຸດ ມີສ່ວນກ່ຽວຂ້ອງກັບການຄ້າມະນຸດ – ຄວາມຜິດທີ່ກ່ຽວຂ້ອງນັ້ນ ຈະບໍ່ສົ່ງຜົນຕໍ່ກັບການຖືກປະຕິບັດໃນການອະນຸຍາດດ້ານທີ່ພັກອາໄສ ຫຼື ການຟື້ນຟູຄືນ ຫຼື ໄລຍະການສະທ້ອນຄືນ, ປະຕິເສດຕໍ່ກັບຄວາມໝັ້ນຄົງທາງສັງຄົມ ຫຼື ຜົນປະໂຫຍດອື່ນໆ, ຂໍ້ຈຳກັດໃນການເຂົ້າເຖິງການຈ້າງງານ ຫຼື ການສຶກສາ ຫຼື ຂໍ້ຈຳກັດໃນການເຂົ້າເຖິງຄ່າຊົດເຊີຍ.

67. ໃນໄລຍະທີ່ຍັງບໍ່ທັນມີການຈັດຕັ້ງປະຕິບັດຂໍ້ກຳນົດທາງດ້ານກົດໝາຍ ສະເພາະກ່ຽວກັບການບໍ່ລົງໂທດ, ລັດຄວນປະຕິບັດຕາມພັນທະຂອງຕົນຕໍ່ກັບຫຼັກການບໍ່ລົງໂທດ ດ້ວຍການຕີຄວາມບັນທັດຖານຂອງກົດໝາຍພາຍໃນ ທີ່ມີຢູ່, ລວມທັງ ການປ້ອງກັນຈາກການຂົ່ມຂູ່ ຫຼື ຂໍ້ຄິດເຫັນທີ່ຈຳເປັນ, ຂໍ້ກຳນົດທົ່ວໄປ ໃນການຍົກເວັ້ນ ຄວາມຮັບຜິດຊອບ. ລັດຄວນຮັບປະກັນວ່າ ການປ້ອງກັນເຫຼົ່ານັ້ນ ໄດ້ມີການດັດປັບໃຫ້ເຂົ້າກັບບໍລິບົດຂອງການຄ້າມະນຸດ, ຮັບຮູ້ຮູບແບບປະສົບການທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຖືກບັງຄັບທີ່ແນບນຽນ ລວມທັງ ການນສວາຍໃຊ້ສະຖານະຄວາມສ່ຽງທີ່ຈະຖືກລະເມີດບຸກຄົນອື່ນ ແລະ ທຸກໆວິທີການແມ່ນກຳນົດໄວ້ໃນຄຳນິຍາມການຄ້າມະນຸດ.

## ມະຕິຂອງສະພາຄວາມໝັ້ນຄົງ S/RES/2388 (2017)

17. ຮຽກຮ້ອງ ໃຫ້ລັດສະມາຊິກປະເມີນສະຖານະການຂອງບຸກຄົນທີ່ຖືກປ່ອຍຕົວຈາກກຸ່ມປະກອບອາວຸດ ຫຼື ກຸ່ມກໍ່ການຮ້າຍຢ່າງຮອບດ້ານ ເພື່ອໃຫ້ສາມາດກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທັນທີ, ປະຕິບັດຕໍ່ເຂົາເຈົ້າໃນຖານະຜູ້ຖືກເຄາະຮ້າຍຈາກອາຊະຍາກຳ ແລະ ພິຈາລະນາ ໂດຍສອດຄ່ອງກັບນິຕິກຳພາຍໃນ, ບໍ່ດຳເນີນຄະດີ ຫຼື ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈາກການກະທຳທີ່ຜິດກົດໝາຍທີ່ເຂົາເຈົ້າກະທຳ ເຊິ່ງເປັນຜົນໂດຍກົງ ຈາກການຄ້າມະນຸດ.

## ຫຼັກການແນະນຳຂອງອົງການສະຫະປະຊາຊາດ ແລະ ຄູ່ມືວ່າດ້ວຍການຄ້າມະນຸດ ແລະ ສິດທິມະນຸດ

*ຫຼັກການ 7*

ຜູ້ຖືກຄ້າມະນຸດ ຕ້ອງບໍ່ຖືກກັກຂັງ, ຕັ້ງຂໍ້ກ່າວຫາ ຫຼື ດຳເນີນຄະດີສຳລັບການເຂົ້າປະເທດຜິດກົດໝາຍ ຫຼື ອາໄສຢູ່ໃນປະເທດທາງຜ່ານ ແລະ ປະເທດປາຍທາງໂດຍຜິດກົດໝາຍ ຫຼື ການມີສ່ວນຮ່ວມໃນການກະທຳທີ່ຜິດກົດໝາຍ ເຊິ່ງຂອບເຂດການມີສ່ວນຮ່ວມນັ້ນ ເປັນຜົນສະທ້ອນໂດຍກົງຈາກສະຖານະການຂອງເຂົາເຈົ້າໃນຖານະຜູ້ຖືກຄ້າມະນຸດ.

*ຄຳແນະນຳ 4: ຮັບປະກັນວ່າ ມີກອບກົດໝາຍທີ່ພຽງພໍ*

ການທີ່ບໍ່ມີນິຕິກຳສະເພາະ ແລະ/ຫຼື ພຽງພໍກ່ຽວກັບການຄ້າມະນຸດໃນລະດັບປະເທດ ເຊິ່ງໄດ້ຖືກກຳນົດວ່າເປັນອຸປະສັກອັນໃຫຍ່ຫຼວງໃນການຕ້ານການຄ້າມະນຸດ. ມີຄວາມຈຳເປັນຕ້ອງຮຽກຮ້ອງໃຫ້ມີຄຳນິຍາມທາງກົດໝາຍ, ຂັ້ນຕອນ ແລະ ການຮ່ວມມື ທີ່ເປັນເອກະພາບກັນ ໃນລະດັບຊາດ ແລະ ພາກພື້ນ ໂດຍສອດຄ່ອງກັບມາດຕະຖານສາກົນ. ການພັດທະນາກອບກົດໝາຍທີ່ເໝາະສົມ ທີ່ມີຄວາມສອດຄ່ອງກັບມາດຕະຖານ ແລະ ກົດໝາຍລະຫວ່າງປະເທດທີ່ກ່ຽວຂ້ອງ ຈະເຮັດໃຫ້ມີບົດບາດທີ່ສຳຄັນໃນການປ້ອງກັນຈາກການຄ້າມະນຸດ ແລະ ການຂູດຮີດທີ່ກ່ຽວຂ້ອງ.

ລັດຄວນພິຈາລະນາ:
5. ຮັບປະກັນວ່ານິຕິກຳການປ້ອງກັນຜູ້ຖືກຄ້າມະນຸດຈາກການຖືກດຳເນີນຄະດີ, ຖືກກັກຂັງ ແລະ ຖືກລົງໂທດຈາກການເຂົ້າເມືອງ ຫຼື ອາໄສຢູ່ ຫຼື ການກະທຳທີ່ເຂົາເຈົ້າມີ ສ່ວນຮ່ວມ ເຊິ່ງເປັນຜົນສະທ້ອນໂດຍກົງຈາກສະພາບການຂອງເຂົາເຈົ້າ ໃນຖານະຜູ້ຖືກຄ້າມະນຸດ.

*ຄຳແນະນຳ 5: ຮັບປະກັນວ່າມີການຕອບໂຕ້ທີ່ພຽງພໍໃນການບັງຄັບໃຊ້ກົດໝາຍ*

ເຖິງຈະມີຫຼັກຖານສະແດງໃຫ້ເຫັນວ່າ ການຄ້າມະນຸດໄດ້ເພີ່ມຂຶ້ນໃນທົ່ວພາກພື້ນຂອງໂລກ, ແຕ່ມີຜູ້ຄ້າມະນຸດຈຳນວນໜ້ອຍທີ່ຖືກຈັບຕົວ. ການບັງຄັບໃຊ້ກົດໝາຍທີ່ມີປະສິດທິພາບເພີ່ມຂຶ້ນ ຈະຫຼຸດຜ່ອນແຮງຈູງໃຈຂອງຜູ້ຄ້າມະນຸດ ແລະ ມີຜົນກະທົບໂດຍກົງຕໍ່ກັບຄວາມຕ້ອງການ. ການຕອບໂຕ້ການບັງຄັບໃຊ້ກົດໝາຍທີ່ພຽງພໍຕໍ່ກັບການຄ້າມະນຸດ ແມ່ນຂຶ້ນກັບການຮ່ວມມືຂອງຜູ້ຖືກຄ້າມະນຸດ ແລະ ພະຍານຜູ້ອື່ນໆ. ໃນຫຼາຍໆກໍລະນີ, ບຸກຄົນມີຄວາມລັງເລໃຈ ຫຼື ບໍ່ສາມາດລາຍງານກ່ຽວກັບຜູ້ຄ້າມະນຸດ ຫຼື ເປັນພະຍານໄດ້ ເນື່ອງຈາກເຂົາເຈົ້າຂາດຄວາມໝັ້ນໃຈຕໍ່ເຈົ້າໜ້າທີ່ຕຳຫຼວດ ແລະ ລະບົບຕຸລາການ ແລະ/ຫຼື ເນື່ອງຈາກບໍ່ມີກົນໄກການປົກປ້ອງທີ່ມີປະສິດທິພາບ. ບັນຫາດັ່ງກ່າວ ຍິ່ງເພີ່ມທະວີຂຶ້ນ ເມື່ອເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ມີສ່ວນກ່ຽວຂ້ອງ ຫຼື ສົມຮູ້ຮ່ວມຄິດ ໃນການຄ້າມະນຸດ. ຈຳເປັນຕ້ອງມີມາດຕະການທີ່ເຂັ້ມແຂງ ເພື່ອຮັບປະກັນວ່າການ ມີສ່ວນຮ່ວມດັ່ງກ່າວໄດ້ມີການສືບສວນ–ສອບສວນ, ດຳເນີນຄະດີ ແລະ ລົງໂທດ. ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຕ້ອງມີຄວາມຕື່ນຕົວຕໍ່ກັບຂໍ້ກຳນົດທີ່ສຳຄັນທີ່ສຸດ ເພື່ອຮັບປະກັນຄວາມປອດໄພຂອງຜູ້ຖືກຄ້າມະນຸດ. ຄວາມຮັບຜິດຊອບນີ້ ແມ່ນເປັນຂອງເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ບໍ່ສາມາດຍົກເລີກໄດ້.

ລັດ ແລະ, ໃນກໍລະນີທີ່ເປັນໄປໄດ້, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຄວນພິຈາລະນາ:
5. ຮັບປະກັນວ່າຜູ້ຄ້າມະນຸດ ແມ່ນ ແລະ ຈະຍັງເປັນຈຸດສຸມຂອງຍຸດທະສາດໃນການຕ້ານການຄ້າມະນຸດ ແລະ ຄວາມພະຍາຍາມໃນການບັງຄັບໃຊ້ກົດໝາຍ ທີ່ຈະບໍ່ເຮັດໃຫ້ຜູ້ຖືກເຄາະຮ້າຍ ມີຄວາມສ່ຽງທີ່ຈະຖືກລົງໂທດຕໍ່ຄວາມຜິດທີ່ກະໄດ້ກະທຳ ທີ່ເປັນຜົນສະທ້ອນໂດຍກົງຈາກສະຖານະການເຂົາເຈົ້າ.

*ຄຳແນະນຳ 8: ມາດຕະການພິເສດ ສຳລັບການປົກປ້ອງ ແລະ ສະໜັບສະໜູນຜູ້ຖືກເຄາະຮ້າຍທີ່ເປັນເດັກ*

ໄພອັນຕະລາຍຈາກຮ່າງກາຍ, ຈິດໃຈ ແລະ ຈິດຕະວິທະຍາ ທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເປັນເດັກທີ່ໄດ້ຮັບ ແລະ ຄວາມສ່ຽງຂອງເຂົາເຈົ້າ ທີ່ເພີ່ມຂຶ້ນຈາກການຂູດຮີດ ຮຽກຮ້ອງໃຫ້ເຂົາເຈົ້າຕ້ອງຖືກແຍກອອກຈາກຜູ້ຖືກເຄາະຮ້າຍທີ່ເປັນຜູ້ໃຫຍ່ ຕາມທີ່ກຳນົດໄວ້ໃນກົດໝາຍ, ນະໂຍບາຍ, ແຜນງານຕ່າງໆ ແລະ ກິດຈະກຳຕ່າງໆ. ຜົນປະໂຫຍດສູງສຸດຂອງເດັກ ຕ້ອງໄດ້ຮັບການພິຈາລະນາເບື້ອງຕົ້ນ ເພື່ອເຮັດ ໜ້າທີ່ທຸກອັນກ່ຽວກັບຜູ້ຖືກເຄາະຮ້າຍທີ່ເປັນເດັກ, ບໍ່ວ່າຈະເປັນການປະຕິບັດໂດຍພາກລັດ ແລະ ສະຖາບັນສະຫວັດດີການສັງຄົມຂອງເອກະຊົນ, ສານ ແລະ ອົງການບໍລິຫານ ແລະ ໜ່ວຍງານນິຕິບັນຍັດ. ຜູ້ຖືກເຄາະຮ້າຍທີ່ເປັນເດັກ ຄວນໄດ້ຮັບການປົກປ້ອງ ແລະ ຊ່ວຍ ເຫຼືອທີ່ເໝາະສົມ ແລະ ຄວນພິຈາລະນາຢ່າງເຕັມສ່ວນຕໍ່ກັບຄວາມຕ້ອງການອັນຈຳເປັນ ແລະ ສິດທິພິເສດຂອງຜູ້ຖືກເຄາະຮ້າຍ.

ລັດ, ແລະ ໃນກໍລະນີທີ່ເປັນໄປໄດ້, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ຄວນພິຈາລະນາ ເພີ່ມເຕີມ ຕໍ່ກັບມາດຕະການທີ່ກຳນົດໄວ້ໃນຄຳແນະນຳ 6:

3. ຮັບປະກັນວ່າເດັກທີ່ເປັນຜູ້ຖືກເຄາະຮ້າຍຈະບໍ່ຖືກດຳເນີນຄະດີອາຍາ ຫຼື ລົງໂທດ ຕໍ່ກັບຄວາມຜິດທີ່ກ່ຽວຂ້ອງກັບສະພາບການຂອງເຂົາເຈົ້າໃນຖານະຜູ້ຖືກຄ້າມະນຸດ.

*ສົນທິສັນຍາວ່າດ້ວຍການຕ້ານການຄ້າມະນຸດ (ສົນທິສັນຍາຂອງສະພາເອີຣົບ ຊຸດເລກທີ 197)*

> ມາດຕາ 26
>
> ແຕ່ລະລັດພາຄີ ຈະ, ໂດຍສອດຄ່ອງກັບຫຼັກການພື້ນຖານຂອງລະບົບກົດໝາຍປະເທດຕົນ, ກໍານົດຄວາມເປັນໄປໄດ້ທີ່ຈະບໍ່ລົງໂທດທາງອາຍາແກ່ຜູ້ຖືກເຄາະຮ້າຍ ທີ່ມີສ່ວນຮ່ວມ ພົວພັນໃນກິດຈະກໍາທີ່ຜິດກົດໝາຍ, ໃນຂອບເຂດທີ່ເຂົາເຈົ້າຖືກບັງຄັບໃຫ້ກະທໍານັ້ນ

**ຄໍາສັ່ງຂອງສະພາສະຫະພາບເອີຣົບ (EU) 2024/1712 ແລະ ຄໍາສັ່ງຂອງສະຫະພາບເອີຣົບ ສະບັບປັບປຸງເລກທີ 2011/36/EU ລົງວັນທີ ວັນທີ 13 ມິຖຸນາ 2024 ວ່າດ້ວຍການປ້ອງກັນ ແລະ ຕ້ານການຄ້າມະນຸດ ແລະ ປົກປ້ອງຜູ້ຖືກເຄາະຮ້າຍ ໄດ້ປ່ຽນແທນມາດຕາ 8 ຂອງຄໍາສັ່ງ EU 2011/36/EU ວ່າດ້ວຍການຄ້າມະນຸດ (ຄໍາສັ່ງຂອງສະຫະພາບເອີຣົບ) [127]**

> *ບໍ່ດໍາເນີນຄະດີ ຫຼື ບໍ່ລົງໂທດທາງອາຍາແກ່ຜູ້ຖືກເຄາະຮ້າຍ*
>
> ລັດສະມາຊິກ ຄວນຈະ, ໂດຍສອດຄ່ອງກັບພື້ນຖານຫຼັກການຂອງ ລະບົບ ກົດໝາຍພາຍໃນປະເທດຕົນ, ຄວນມີມາດຕະການທີ່ຈໍາເປັນ ເພື່ອຮັບປະກັນວ່າ ໜ່ວຍງານທີ່ມີສິດອໍານາດລະດັບຊາດ ມີສິດທີ່ຈະບໍ່ດໍາເນີນຄະດີ ຫຼື ລົງໂທດທາງອາຍາແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສໍາລັບການ ມີສ່ວນຮ່ວມທາງອາຍາ ຫຼື ການກະທໍາທີ່ຜິດກົດໝາຍອື່ນໆ ທີ່ເຂົາເຈົ້າບັງຄັບໃຫ້ກະທໍາ ເນື່ອງຈາກຜົນສະທ້ອນໂດຍກົງຈາກການ ຖືກກະທໍາ ຕາມທີ່ກໍານົດໄວ້ໃນມາດຕາ 2.

**ສານສິດທິມະນຸດຂອງສະຫະພາບເອີຣົບ ຄະດີຂອງ V.C.L ແລະ A.N. v ສະຫະຣາຊະອານາຈັກ (ອັງກິດ) (ຄໍາຮ້ອງເລກທີ 77587/12 ແລະ 74603/12) ຄໍາຕັດສິນຂອງສານ ສະຕຣາເບີສ (Strasbourg) ວັນທີ 16 ກຸມພາ 2021**

*ບົດສະຫຼຸບຄະດີ:* ເຈົ້າໜ້າທີ່ຕໍາຫຼວດຂອງສະຫະຣາຊະອານາຈັກອັງກິດ ພົບເຫັນເດັກນ້ອຍຄົນຫວຽດນາມສອງຄົນ ທີ່ເຮັດວຽກໃນຟາມທີ່ປູກກັນຊາ. ເຂົາເຈົ້າຖືກຈັບ ແລະ ຕັ້ງຂໍ້ກ່າວຫາກ່ຽວກັບຄວາມຜິດທີ່ຕິດພັນກັບຢາເສບຕິດ ແລະ ຮັບສາລະພາບຄວາມຜິດຕາມຄໍາແນະນໍາຂອງຜູ້ຕາງໜ້າທາງດ້ານກົດໝາຍຂອງເຂົາເຈົ້າ ແລະ ຖືກຕັດສິນລົງໂທດ. ໜ່ວຍງານທີ່ມີສິດອໍານາດຮັບຮູ້ວ່າເຂົາເຈົ້າເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແຕ່ໜ່ວຍງານຂອງພະນັກງານໄອຍະການ ໄດ້ຕັດສິນໃຈທີ່ຈະດໍາເນີນຄະດີຕໍ່ເຂົາເຈົ້າ ແລະ ສະຫຼຸບວ່າເຂົາເຈົ້າບໍ່ແມ່ນຜູ້ຖືກເຄາະຮ້າຍ. ສານອຸທອນ ເຫັນວ່າການຕັດສິນໃນການດໍາເນີນຄະດີຕໍ່ເຂົາເຈົ້າແມ່ນມີຄວາມຖືກຕ້ອງ. ຄະດີດັ່ງກ່າວຖືກສົ່ງໄປ ສານສິດທິມະນຸດຂອງສະຫະພາບເອີຣົບ, ຄະດີອີງຕາມມາດຕາ 4 (ຫ້າມບັງຄັບໃຊ້ແຮງງານ) ແລະ ມາດຕາ 6(1) (ສິດໃນການໄດ້ຮັບການໄຕ່ສວນຄະດີທີ່ເປັນທໍາ) ຂອງສົນທິສັນຍາສະຫະພາບເອີຣົບວ່າດ້ວຍສິດທິມະນຸດ, ໄດ້ຮ້ອງຮຽນວ່າ ເຈົ້າໜ້າທີ່ມີຄວາມຫຼົ້ມເຫຼວໃນການປົກປ້ອງເຂົາເຈົ້າ ຕາມທີ່ຖືກຄ້າມະນຸດ ແລະ ຫຼົ້ມເຫຼວ ໃນການສືບສວນ-ສອບສວນຢ່າງພຽງພໍ ຕໍ່ກັບການຄ້າມະນຸດ ລວມທັງ ການໄຕ່ສວນຄະດີ ກໍບໍ່ມີຄວາມເປັນທໍາ.

***ຕໍ່ກັບ ມາດຕາ 4 (ຫ້າມບັງຄັບໃຊ້ແຮງງານ):*** ສານສິດທິມະນຸດຂອງສະຫະພາບເອີຣົບ ເຫັນວ່າ ກົດໝາຍ ລະຫວ່າງປະເທດ ບໍ່ໄດ້ຄຸ້ມຄອງຈາກການຖືກດໍາເນີນຄະດີ, ແຕ່ລັດດັ່ງກ່າວກໍ່ບໍ່ສາມາດດໍາເນີນຄະດີໄດ້ ຫາກເຫັນວ່າມີການບັງຄັບໃຫ້ກະທໍາຄວາມຜິດ. ການຕັດສິນໃຈໃນການດໍາເນີນຄະດີດັ່ງກ່າວ ແມ່ນຂັດກັບພັນທະຂອງຕົນໃນການປະຕິບັດມາດຕະການ ເພື່ອປົກປ້ອງຜູ້ຖືກຮ້ອງຟ້ອງ ກໍລະນີທີ່ມີຄວາມສົງໄສທີ່ເຊື່ອຖືໄດ້ວ່າເຂົາເຈົ້າຖືກຄ້າມະນຸດ. ໃນເມື່ອມີຂໍ້ສົງໄສເກີດຂຶ້ນ, ຄວນມີການປະເມີນທີ່ເໝາະສົມ ໂດຍບຸກຄົນທີ່ມີຄຸນສົມບັດເງື່ອນໄຂຄົບຖ້ວນ. ການຕັດສິນໃຈ ເພື່ອດໍາເນີນຄະດີຕ້ອງປະຕິບັດຕາມການປະເມີນດັ່ງກ່າວເທົ່ານັ້ນ, ໂດຍສະເພາະ ກໍລະນີທີ່ບຸກຄົນດັ່ງກ່າວ ເປັນເດັກ. ພະນັກງານໄອຍະການ ຕ້ອງມີເຫດຜົນທີ່ຊັດເຈນໂດຍສອດຄ່ອງກັບກົດໝາຍລະຫວ່າງປະເທດ ຫາກບໍ່ເຫັນດີຕາມການປະເມີນດັ່ງກ່າວ. ຂໍ້ມູນຄວາມຈິງທີ່ຜູ້ຖືກຮ້ອງຟ້ອງ ໄດ້ຖືກພົບເຫັນໃນຟາມທີ່ປູກກັນຊາ ໃນເວລາທີ່ເຂົາເຈົ້າເປັນເດັກ ຄວນເປັນຂໍ້ສົງໄສທີ່ເຊື່ອຖືໄດ້ວ່າເຂົາເຈົ້າເປັນຜູ້ຖືກເຄາະຮ້າຍ ແຕ່ບໍ່ແມ່ນການຕັ້ງຂໍ້ກ່າວຫາແກ່ຜູ້ຖືກຮ້ອງຟ້ອງແທນ. ການດໍາເນີນຄະດີຂອງພະນັກງານໄອຍະການບໍ່ໄດ້ໃຫ້ເຫັນຜົນທີ່ຊັດເຈນທີ່ສອດຄ່ອງກັບຄໍານິຍາມຂອງການຄ້າມະນຸດ ເຊິ່ງແຕກຕ່າງໄປຈາກການຕັດສິນໃຈຂອງໜ່ວຍງານທີ່ມີສິດອໍານາດ.

127 "ລັດສະມາຊິກ ຕ້ອງ, ອີງຕາມພື້ນຖານລະບົບກົດໝາຍພາຍໃນຂອງຕົນ, ນໍາໃຊ້ມາດຕະການທີ່ຈໍາເປັນເພື່ອຮັບປະກັນວ່າ ໜ່ວຍງານທີ່ມີສິດອໍານາດພາຍໃນ ມີສິດທີ່ຈະບໍ່ດໍາເນີນຄະດີ ຫຼື ບໍ່ລົງໂທດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ກ່ຽວຂ້ອງກັບການກະທໍາຜິດທາງອາຍາ ທີ່ເຂົາເຈົ້າຖືກບັງຄັບໃຫ້ປະຕິບັດ ເຊິ່ງເປັນຜົນສະທ້ອນໂດຍກົງຈາກການກະທໍາໃດໜຶ່ງ ທີ່ອ້າງໃນມາດຕາ 2 [ສະຖານະຂອງຜູ້ຖືກເຄາະຮ້າຍ]."

*ມາດຕາ 6(1) (ສິດ ການໄຕ່ສວນຄະດີທີ່ເປັນທຳ):* ສານຂອງສະຫະພາບເອີຣົບ ຕ້ອງໄດ້ກຳນົດວ່າ ສະຫະຣາຊະອານາຈັກ ອັງກິດມີຄວາມຫຼົ້ມເຫຼວໃນການຮັບຮູ້ ຜູ້ຖືກຮ້ອງຟ້ອງ ໃນຖານະຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ເຊິ່ງເປັນບັນຫາທີ່ເກີດ ຂຶ້ນພາຍໃຕ້ສົນທິສັນຍາຂອງສະຫະພາບເອີຣົບວ່າດ້ວຍສິດທິມະນຸດ. ສານຍັງເຫັນວ່າ ຜູ້ຖືກຮ້ອງຟ້ອງ ຮັບສາລະພາບ ໂດຍບໍ່ໄດ້ຮັບຮູ້ເຖິງຂໍ້ມູນຄວາມຈິງຢ່າງເຕັມສ່ວນ. ການຂາດການປະເມີນທີ່ວ່າ ເຂົາເຈົ້າເປັນຜູ້ຖືກເຄາະຮ້າຍ ມີຄວາມເປັນ ໄປໄດ້ທີ່ປ້ອງກັນເຂົາເຈົ້າ ຈາກຫຼັກຖານຄວາມປອດໄພ ທີ່ຈະຊ່ວຍໃຫ້ເຂົາເຈົ້າແກ້ຕ່າງ ຫຼື ປ້ອງກັນຕົນເອງ. ສານອຸທອນ ບໍ່ໄດ້ແກ້ໄຂ ຄວາມບໍ່ເປັນທຳນີ້, ເນື່ອງການພິຈາລະນາແມ່ນໄດ້ຈຳກັດພຽງແຕ່ວ່າ ມີການລະເມີດຂະບວນ ການ ແລະ ເອື່ອຍອີງໃສ່ສະເພາະຂໍ້ມູນຄວາມຈິງ ເຊິ່ງບໍ່ໄດ້ມີໃນຄຳນິຍາມຂອງການຄ້າມະນຸດ ທີ່ເປັນປັດໄຈຫຼັກທີ່ຍອມຮັບໄດ້ ຂອງສາກົນ. ການດຳເນີນຄະດີ ຍັງບໍ່ມີຄວາມເປັນທຳ ແລະ ລະເມີດສິດຂອງຜູ້ຖືກຮ້ອງຟ້ອງ ຕໍ່ກັບສິດໃນການໄຕ່ສວນ ຄະດີທີ່ເປັນທຳ. ສານ ໄດ້ສັ່ງໃຫ້ສະຫະຣາຊະອານາຈັກ ຈ່າຍເງິນຈຳນວນ 25,000 ເອີໂຣ ໃຫ້ແຕ່ລະຄົນຕໍ່ກັບຄວາມເສຍຫາຍ ທີ່ບໍ່ແມ່ນຄ່າເສຍຫາຍທາງດ້ານການເງິນ ແລະ ສັ່ງໃຫ້ຈ່າຍອີກ 20,000 ເອີໂຣໃຫ້ແຕ່ລະຄົນ ສຳລັບມູນຄ່າ ແລະ ຄ່າໃຊ້ຈ່າຍຕ່າງໆ.[128]

ຂໍ້ມູນນີ້ ແມ່ນດຶງມາຈາກຄຳຕັດສິນຂອງສານ:

> 158. ມີຄວາມຊັດເຈນແລ້ວວ່າ ບໍ່ມີຂໍ້ຫ້າມທົ່ວໄປກ່ຽວກັບການດຳເນີນຄະດີ ຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ສາມາດຕີຄວາມໄດ້ຈາກສົນທິສັນຍາ ວ່າດ້ວຍການຕ້ານການຄ້າມະນຸດ ຫຼື ກົດໝາຍສາກົນອື່ນໆ. ຕົວຈິງແລ້ວ, ຂໍ້ກຳນົດ "ການບໍ່ລົງໂທດ" ໃນມາດຕາ 26 ຂອງສົນທິສັນຍາວ່າດ້ວຍການຕ້ານການຄ້າມະນຸດ, ມາດຕາ 6 ຂອງຄຳສັ່ງວ່າດ້ວຍຕ້ານການຄ້າມະນຸດ ແລະ ມາດຕາ 4 ແລະ 2 ຂອງສົນທິສັນຍາ ILO ວ່າດ້ວຍການບັງຄັບໃຊ້ແຮງງານ ປີ 2014 (ສາມາດເບິ່ງໄດ້ທີ່ ວັກ 103, 106 ແລະ 98 ຂ້າງເທິງ) ທຸກມາດຕາແມ່ນກຳນົດສອງເງື່ອນໄຂທີ່ສຳຄັນ: ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຕ້ອງຖືກບັງຄັບໃຫ້ກະທຳຜິດທາງອາຍາ ແລະ ໃນກໍລະນີທີ່ເປັນຄະດີ, ໜ່ວຍງານທີ່ມີສິດອຳນາດພາຍໃນປະເທດ ຕ້ອງມີສິດ, ແຕ່ບໍ່ແມ່ນພັນທະ, ໃນການຕັດສິນໃຈທີ່ຈະບໍ່ດຳເນີນຄະດີ. ໃນຂະນະ ທີ່ການບັງຄັບ ບໍ່ໄດ້ປາກົດວ່າຈະມີຄວາມຈຳເປັນໃນການນຳເອົາເດັກ ມາຢູ່ພາຍໃຕ້ຂອບເຂດ ບໍ່ວ່າຈະເປັນມາດຕາ 26 ຂອງສົນທິສັນຍາວ່າດ້ວຍການຕ້ານການຄ້າມະນຸດ ຫຼື ມາດຕາ 6 ຂອງຄຳສັ່ງວ່າດ້ວຍການຕ້ານການຄ້າມະນຸດ ບໍ່ມີສິ່ງໃດທີ່ນອນໃນກົດໝາຍທັງສອງ ທີ່ສາມາດຕີຄວາມໝາຍວ່າ ຫ້າມການດຳເນີນຄະດີຕໍ່ເດັກທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນທຸກສະພາບແວດລ້ອມ.
>
> 159. ເຖິງຢ່າງໃດກໍຕາມ, ສານ ພິຈາລະນາ ດຳເນີນຄະດີຜູ້ຖືກເຄາະຮ້າຍ, ຫຼື ຜູ້ທີ່ອາດຈະ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃນບາງສະຖານະການເຊິ່ງຂັດກັບໜ້າທີ່ຂອງລັດ ຕໍ່ກັບມາດຕະການ ການປະຕິບັດງານເພື່ອປົກປ້ອງເຂົາເຈົ້າ ໃນກໍລະນີທີ່ເຂົາເຈົ້າ ຮັບຮູ້ ຫຼື ອາດຈະຊອກຮັບຮູ້ສະພາບແວດລ້ອມ ທີ່ເກີດຄວາມສົງໄສທີ່ມີຄວາມໜ້າເຊື່ອຖືໄດ້ວ່າ ບຸກຄົນໃດໜຶ່ງຖືກຄ້າມະນຸດ. ໃນມຸມມອງຂອງສານ, ໜ້າທີ່ຕໍ່ກັບມາດຕະການ ໃນການປະຕິບັດງານ ພາຍໃຕ້ ມາດຕາ 4 ຂອງສົນທິສັນຍາ ມີເປົ້າໝາຍຢູ່ສອງຫຼັກການ: ເພື່ອປົກປ້ອງຜູ້ຖືກເຄາະຮ້າຍຈາກໄພອັນຕະລາຍເພີ່ມເຕີມ; ແລະ ເພື່ອດຳນວຍຄວາມສະດວກໃນການຟື້ນຟູເຂົາເຈົ້າ. ເຊິ່ງເປັນຄວາມຈິງແນ່ນອນທີ່ວ່າ ການດຳເນີນຄະດີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈະສົ່ງຜົນກະທົບຂອງກັບການຟື້ນຟູດ້ານຮ່າງກາຍ, ຈິດໃຈ ແລະ ສັງຄົມຂອງເຂົາເຈົ້າ ແລະ ອາດຈະເຮັດໃຫ້ເຂົາເຈົ້າ ສ່ຽງທີ່ ຈະຖືກຄ້າມະນຸດໄດ້ອີກໃນອະນາຄົດ. ມັນບໍ່ສະເພາະແຕ່ວ່າເຂົາເຈົ້າ ຕ້ອງຜ່ານຄວາມຫຍຸ້ງຍາກໃນການດຳເນີນຄະດີທາອາຍາ ແຕ່ການຖືກຕັດສິນຄວາມຜິດ ທາງອາຍາ ອາດສ້າງອຸປະສັກໃຫ້ແກ່ເຂົາເຈົ້າ ໃນການກັບຄືນເຂົ້າສູ່ສັງຄົມອີກ. ນອກນັ້ນ, ການກັກຂັງ ອາດຂັດຂວາງການເຂົ້າເຖິງການບໍລິການ ແລະ ການສະໜັບສະໜູນ ທີ່ກຳນົດໄວ້ໃນສົນທິສັນຍາວ່າດ້ວຍການຕ້ານການຄ້າມະນຸດ.

128 ເບິ່ງທີ່ V.C.L and A.N v The United Kingdom (ຄຳຮ້ອງເລກທີ. 77587/12 ແລະ 74603/12), ສັງລວມປົດຂ່າວ summary ECHR 058 (2021) 16.02.2021

160. ເພື່ອເຮັດໃຫ້ການດຳເນີນຄະດີຕໍ່ຜູ້ຖືກເຄາະຮ້າຍ ຫຼື ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສະແດງໃຫ້ເຫັນເຖິງການເຄົາລົບ ອິດສະລະພາບຂອງເຂົາເຈົ້າ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 4, ການກຳນົດຕົວເບື້ອງຕົ້ນ ແມ່ນເປັນປັດໄຈຫຼັກທີ່ສຳຄັນ, ທັນທີ່ ທີ່ເຈົ້າໜ້າທີ່ຮັບຮູ້, ຫຼື ຄວນຮັບຮູ້ ສະຖານະການ ທີ່ມີຄວາມສົງໄສເຊື່ອຖືໄດ້ວ່າ ບຸກຄົນທີ່ຖືກສົງໄສ ວ່າກະທຳຜິດທາງອາຍາ ອາດຈະຖືກຄ້າມະນຸດ ຫຼື ຖືກຂູດຮີດ ເຂົາເຈົ້າຄວນໄດ້ຮັບການປະເມີນຢ່າງຮີບດ່ວນ ຈາກບຸກຄົນທີ່ໄດ້ຮັບການຝຶກອົບຮົມ ແລະ ມີຄວາມສາມາດຮັບມືກັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ. ການປະເມີນຄວນອີງໃສ່ເງື່ອນໄຂການກຳນົດຕົວໃນອານຸສັນຍາ ປາເລໂມ ແລະ ສົນທິສັນຍາວ່າດ້ວຍການຕ້ານການຄ້າມະນຸດ (ຄື ບຸກຄົນນັ້ນໄດ້ຖືກຈັດຫາ, ຂົນສົ່ງ, ສົ່ງຕໍ່, ຮັບເອົາ ຫຼື ລີ້ຊ່ອນ ດ້ວຍວິທີການບັງຄັບຂົ່ມຂູ່ ຫຼື ຮູບແບບບັງຄັບອື່ນໆ ເພື່ອຈຸດປະສົງຂອງການຂູດຮີດ) ໂດຍຄຳນຶງເຖິງຂໍ້ຂໍ້ມູນຄວາມຈິງທີ່ວ່າ ການບັງຄັບຂົ່ມຂູ່ ແລະ/ຫຼື ການບີບບັງຄັບ ແມ່ນບໍ່ຈຳເປັນ ໃນກໍລະນີທີ່ບຸກຄົນດັ່ງກ່າວເປັນເດັກ.

161. ຍິ່ງໄປກວ່ານັ້ນ, ເນື່ອງຈາກສະຖານະຂອງບຸກຄົນ ທີ່ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ອາດສົ່ງຜົນກະທົບ ຕໍ່ກັບການມີຫຼັກຖານທີ່ພຽງພໍ ເພື່ອດຳເນີນຄະດີ ແລະ ຂຶ້ນກັບວ່າມັນມີປະໂຫຍດແກ່ສາທາລະນະທີ່ຈະກະທຳ ຫຼື ບໍ່, ທຸກການຕັດສິນໃຈວ່າຈະດຳເນີນຄະດີຕໍ່ຜູ້ທີ່ອາດຈະເປັນຜູ້ຖືກເຄາະຮ້າຍ ຫຼື ບໍ່ນັ້ນ, ເທົ່າທີ່ຈະເປັນໄປໄດ້ – ໃນກໍລະນີທີ່ການປະເມີນການຄ້າມະນຸດ ໄດ້ຖືກປະເມີນໂດຍບຸກຄົນທີ່ມີຄວາມສາມາດເທົ່ານັ້ນ. ສິ່ງນີ້ຍິ່ງມີຄວາມສຳຄັນເປັນຢ່າງຍິ່ງ ຖ້າກ່ຽວກັບພັນກັບເດັກ. ສານຮັບຮູ້ວ່າ ເດັກແມ່ນມີຄວາມສ່ຽງສູງ, ມາດຕະການທີ່ຖືກນຳໃຊ້ໂດຍລັດ ເພື່ອປົກປ້ອງເຂົາເຈົ້າຈາກການກະທຳທີ່ລະເມີດ ແມ່ນນອນໃນຂອບເຂດມາດຕາ 3 ແລະ ມາດຕາ 8 ຄວນມີຜົນສັກສິດ ລວມທັງມີຂັ້ນຕອນທີ່ສົມເຫດສົມຜົນ ເພື່ອປ້ອງກັນ ການປະຕິບັດທີ່ບໍ່ເໝາະສົມ ທີ່ເຈົ້າໜ້າທີ່ມີ, ຫຼື ຄວນມີ, ມີຄວາມຮູ້ ແລະ ການສະກັດກັ້ນທີ່ມີປະສິດທິຜົນຕໍ່ກັບການລະເມີດຕໍ່ກຽດສັກສີຂອງບຸກຄົນຢ່າງຮ້າຍແຮງ (ເບິ່ງທີ່ຕົວຢ່າງ, Söderman v. Sweden [GC], ເລກທີ 5786/08, § 81, ECHR 2013; M.P ແລະ ອື່ນໆ ຕໍ່ກັບ ບຸລກາເຣຍ (Bulgaria), ເລກທີ 22457/08, ແລະ 108 ວັນທີ 15 ພະຈິກ 2011; ແລະ Z ແລະ ອື່ນໆ ຕໍ່ກັບ ສະຫະຣາຊະອານາຈັກອັງກິດ [GC] ເລກທີ 29392/95, ແລະ 73, ECHR 2001-V). ມາດຕະການດັ່ງກ່າວ ຄວນມີເປົ້າໝາຍ ເພື່ອຮັບປະກັນການເຄົາລົບກຽດສັກສີຂອງມະນຸດ ແລະ ປົກປ້ອງຜົນປະໂຫຍດສູງສຸດຂອງເດັກ (ເບິ່ງທີ່ Söderman ອ້າງອີງຂ້າງເທິງ ແລະ 81.) ນັບແຕ່ການຄ້າມະນຸດເປັນໄພຂົ່ມຂູ່ຕໍ່ກັບກຽດສັກສີຂອງມະນຸດ ແລະ ອິດສະລະພາບພື້ນຖານຂອງຜູ້ຖືກເຄາະຮ້າຍ (ເບິ່ງ Rantsev ອ້າງອີງຂ້າງເທິງ ແລະ 282), ເລື່ອງດຽວກັນນີ້ ແມ່ນມາດຕະການແຫ່ງຄວາມຈິງ ເພື່ອປົກປ້ອງ ຕໍ່ການກະທຳດັ່ງກ່າວ ເຊິ່ງນອນໃນຂອບເຂດມາດຕາ 4 ຂອງສົນທິສັນຍາ.

162. ເມື່ອມີການປະເມີນການຄ້າມະນຸດ ໂດຍບຸກຄົນທີ່ມີຄຸນສົມບັດແລ້ວ, ການຕັດສິນໃຈທີ່ຈະດຳເນີນຄະດີໃດໆ ຄວນນຳເອົາການປະເມີນນັ້ນມາພິຈາລະນາດ້ວຍ. ໃນຂະນະທີ່ພະນັກງານໄອຍະການ ອາດຈະບໍ່ມີຜົນຜູກມັດຕາມຂໍ້ມູນທີ່ພົບເຫັນ ຕໍ່ກັບການປະເມີນການຄ້າມະນຸດ, ພະນັກງານໄອຍະການຄວນມີເຫດຜົນທີ່ຊັດເຈນ ທີ່ສອດຄ່ອງກັບຄຳນິຍາມຂອງການຄ້າມະນຸດ ຕາມທີ່ກຳນົດໄວ້ໃນສົນທິສັນຍາປາເລໂມ ແລະ ສົນທິສັນຍາວ່າດ້ວຍການຕ້ານການຄ້າມະນຸດ ຕໍ່ກັບການປະຕິເສດບໍ່ເຫັນດີດັ່ງກ່າວ.

## ເອກະສານຊ້ອນທ້າຍ 5: ຕົວຢ່າງຂອງຄວາມຜິດ ທີ່ມີການນໍາໃຊ້ຫຼັກການບໍ່ລົງໂທດ

ຕົວຢ່າງຂອງຄວາມຜິດ ທີ່ມີການນໍາໃຊ້ຫຼັກການບໍ່ລົງໂທດ ມີດັ່ງລຸ່ມນີ້. ລາຍການລຸ່ມນີ້ ແມ່ນບໍ່ໄດ້ກວມເອົາຄວາມຜິດທັງໝົດ; ຫຼັກການບໍ່ລົງໂທດ ນໍາໃຊ້ທຸກໆຄວາມຜິດທີ່ຜູ້ຖືກເຄາະຮ້າຍອາດຈະກະທໍາ ທີ່ເປັນຜົນໂດຍກົງຈາກການຖືກຄ້າມະນຸດ.

### ສະຖານະຄວາມຜິດ (ຄວາມຜິດທາງບໍລິຫານ ແລະ ຄວາມຜິດທາງອາຍາ)

- ການເຂົ້າ–ອອກເມືອງ (ຄວາມຜິດທາງອາຍາ, ທາງບໍລິຫານ ແລະ ທາງແພ່ງ)
  - ການເຂົ້າເມືອງ ທີ່ຜິດກົດໝາຍ
  - ສະຖານະແຮງງານທີ່ຜິດກົດໝາຍ
  - ສະຖານະຜູ້ຍ້າຍຖິ່ນຖານທີ່ຜິດກົດໝາຍ
  - ການອາໄສຢູ່ໂດຍຜິດກົດໝາຍ
  - ບໍ່ມີເອກະສານ
  - ການອະນຸຍາດ / ໃບອະນຸຍາດ ທີ່ຜິດກົດໝາຍ
- ການນໍາໃຊ້ ຫຼື ຄອບຄອງ ເອກະສານປອມ ຫຼື ປອມເອກະສານລະບຸຕົວຕົນ
- ການປອມແປງເອກະສານ ຫຼື ຄອບຄອງເອກະສານ ການລະບຸຕົວຕົນທີ່ຜິດກົດໝາຍ
- ຄວາມຜິດອື່ນໆ

### ຄວາມຜິດທາງອາຍາອື່ນໆ

- ຄວາມຜິດທີ່ກ່ຽວກັບທາດເຫຼົ້າ
- ການຂໍທານ
- ການປະພຶດໂດຍບໍ່ຖືກຕ້ອງຕາມກົດໝາຍ
- ການລັກກະເປົາເງິນ
- ການຄອບຄອງຢາເສບຕິດ
- ການເປັນໂສເພນີ / ການຊັກຊວນ
- ຄວາມຜິດກ່ຽວກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ສິນລະທໍາຂອງສາທາລະນະ / ຄວາມບໍ່ດີງາມ
- ການຂາຍສິນຄ້າປອມ
- ການລັກເຄື່ອງຕາມຮ້ານຄ້າ
- ການນໍາໃຊ້ຢາເສບຕິດ
- ພະເນຈອນ
- ການທໍາຮ້າຍຮ່າງກາຍ (ຕົວຢ່າງ ເພື່ອຫຼົບໜີຈາກສະພາບການຄ້າມະນຸດ)
- ການໂຈລະກໍາ
- ການສໍ້ໂກງບັດເຄຣດິດ
- ອາຊະຍາກໍາທີ່ເປີດໃຫ້ນໍາໃຊ້ອິນເຕີເນັດ ເພື່ອກໍ່ອາຊະຍາກໍາ
- ອາຊະຍາກໍາທາງອິນເຕີເນັດ
- ການຄອບຄອງຢາເສບຕິດ
- ການຜະລິດຢາເສບຕິດ ຫຼື ປູກພືດເພື່ອຜະລິດຢາເສບຕິດ (ຕົວຢ່າງ ໃນຟາມທີ່ປູກກັນຊາ ແລະ ໃນຫ້ອງແລັບເພື່ອຜະລິດຢາ)
- ການຄ້າຂາຍ ຫຼື ຂົນສົ່ງຢາເສບຕິດ
- ການລັກເອົາຂໍ້ມູນສ່ວນບຸກຄົນ
- ການຄາດຕະກໍາ ຫຼື ຄາດຕະກໍາບຸກຄົນອື່ນ ໂດຍບໍ່ເຈດຕະນາ
- ການຟອກເງິນໂດຍຜ່ານການນໍາໃຊ້ສະກຸນເງິນຄຣິບໂຕ ໂດຍບໍ່ຖືກຕ້ອງຕາມກົດໝາຍ
- ການບໍລິຈາກອະໄວຍະວະຂອງຮ່າງກາຍ ໂດຍບໍ່ຖືກຕ້ອງ, ການສະເໜີ ຫຼື ຮັບເອົາຜົນປະໂຫຍດທາງການເງິນ ເພື່ອແລກປ່ຽນກັບອະໄວຍະວະຂອງຮ່າງກາຍ
- ການເຂົ້າຮ່ວມກຸ່ມປະກອບອາວຸດ
- ການສໍ້ໂກງທາງໂທລະຄົມ
- ການສໍ້ໂກງປະກັນສັງຄົມ ຫຼື ຜົນປະໂຫຍດຂອງສັງຄົມ
- ການກໍ່ການຮ້າຍ
- ການຄ້າມະນຸດ (ມັກເປັນຜົນຈາກຜູ້ຖືກເຄາະຮ້າຍ ກາຍເປັນຜູ້ຄ້າມະນຸດ ຫຼື ອາດຈະມີສ່ວນກ່ຽວຂ້ອງກັບການຈັດຫາ ຫຼື ຂູດຮີດຜູ້ຖືກເຄາະຮ້າຍອື່ນໆ).
- ອື່ນໆ